

# ທີ່ດິນ ກັບ ສິດທິມະນຸດ

# ມາດຕະຖານ ແລະ ວິທີການນຳເອົາໄປໃຊ້

"ເອກະສານທີ່ເປັນພາສາລາວນີ້ແມ່ນໄດ້ແປມາຈາກເອກະສານຕົ້ນສະບັບທີ່ເປັນພາສາອັງກິດຂອງອົງການສະຫະປະຊາຊາດ. ການແປເອກະສານ ສະບັບພາສາລາວນີ້ແມ່ນບໍ່ໄດ້ເປັນທາງການ, ແຕ່ແປ ເພື່ອການນຳໃຊ້ເຂົ້າໃນກິດຈະກຳວຽກງານຂອງຄະນະກຳມາທິການກົດໝາຍສາກົນເຊິ່ງໄດ້ຮັບທຶນຊ່ວຍເຫຼືອຈາກສຳນັກງານວ່າດ້ວຍສະຫະພັນເສືອຈັກກະພົບ ແລະ ວຽກງານການຕ່າງປະເທດຂອງລາດຊະອານາຈັກອັງກິດ ".

**ໝາຍເຫດ**

ການສ້າງ ແລະ ການນຳສະເໜີຂໍ້ມູນຕ່າງໆໃນເອກະສານຫົວນີ້ບໍ່ແມ່ນເພື່ອສະແດງແນວຄວາມຄິດສະເພາະໃນນາມຂອງສຳນັກງານເລຂາທິການໃຫຍ່ຂອງ ສປຊ ທີ່ຈະກ່ຽວຂ້ອງກັບສະຖານະພາບທາງກົດໝາຍຂອງປະເທດ ໃດໜຶ່ງ, ອານາເຂດໃດໜຶ່ງ, ເມືອງ ຫຼື ຂົງເຂດໃດໜຶ່ງ, ຫຼືວ່າ ກ່ຽວກັບອຳນາດຂອງເຈົ້າໜ້າທີ່ໃດໜຶ່ງ, ຫຼື ກ່ຽວຂ້ອງ ທາງດ້ານການແບ່ງປັນອານາເຂດ ຫຼື ພົມແດນໃດໆ.

ສັນຍາລັກເອກະສານຂອງສະຫະປະຊາຊາດແມ່ນປະກອບດ້ວຍຕົວອັກສອນຂຽນແບບຕົວພິມໃຫຍ່ທີ່ມີຮູບສັນຍາລັກຢູ່ນຳ. ການນຳໃຊ້ເອກະສານທີ່ມີສັນຍາລັກທີ່ກ່າວມານີ້ແມ່ນໝາຍເຖິງການນຳໃຊ້ເອກະສານຂອງອົງການ ສປຊ.

HR/PUB/15/5/Add.1
© 2015 United Nations
All worldwide rights reserved

ຮູບໜ້າປົກ: ຮູບ ສປຊ / Martine Perret
ຮູບຢູ່ຂ້າງໃນເອກະສານ: ຮູບ ສປຊ / Lucien Rajaonina; ຮູບ ສປຊ / Eskinder Debebe; ຮູບ ສປຊ / Kibae Park; ແລະ ຮູບ ສປຊ / Martine Perret.

## ສາລະບານ


ວິທີການນຳໃຊ້ເອກະສານສະບັບນີ້..........IV

ພາກສະເໜີ.......... 1

I. ສະຖານະພາບຂອງທີ່ດິນພາຍໃຕ້ກົດໝາຍສາກົນ.......... .... 3

II. ຄວາມໝາຍ ແລະ ແນວຄວາມຄິດທີ່ກ່ຽວຂ້ອງກັບບັນຫາທີ່ດິນຕ່າງໆ.......... 6

III. ເອກະສານສະຫຼຸບສັງລວມ.......... .......... .. 9

ກ. ຫຼັກການຄວາມສະເໝີພາບ ແລະ ການບໍ່ໃຫ້**ຈຳ**ແນກ.......... ..........10

ຂ. ລະບຽບກົດໝາຍ.......... .......... ..... 16

ຄ. ສິດທີໃນດ້ານການມີອາຫານທີ່ພຽງພໍ.......... ..........19

ງ. ສິດທີໃນດ້ານການມີທີ່ຢູ່ອາໃສທີ່ເໝາະສົມ.......... .......... 23

ຈ. ສິດທີໃນດ້ານການໄດ້ຮັບການປິ່ນປົວທີ່ມີປະສິດທິພາບ.......... .......... .27

ສ. ສິດທີໃນເສລີພາບໃນການຍົກຍ້າຍ ແລະ ຕັ້ງຖິ່ນຖານ.......... .......... .31

ຊ. ສິດເສລີພາບໃນການສະແດງຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມ..........34

ຍ. ສິດເສລີພາບໃນການເຊື່ອຖືສາດສະໜາ.......... ......... . ..........37

ດ. ສິດທີໃນດ້ານຂໍ້ມູນຂ່າວສານ.......... ......... . .......... 40

ຕ. ສິດທີໃນການມີຊີວິດຢູ່ລອດ.......... ......... . ..........44

ຖ. ສິດທີໃນການມີສ່ວນຮ່ວມ.......... ......... ...........47

ທ. ສິດທີໃນການຄອບຄອງຊັບສິນ.......... ......... . .......... 53

ນ. ສິດໃນການຮັບຮູ້ຄວາມເປັນເອກະລາດຂອງຕົນເອງ.......... .......... ..57

ບ. ສິດໃນການມີສ່ວນຮ່ວມໃນດ້ານວັດທະນາທຳ.......... ......... ..........60

ປ. ສິດທີໃນການໄດ້ຮັບນ້ຳດື່ມທີ່ສະອາດ ແລະ ມີສຸກຂະອະນາໄມ.......... ...... 65

ຜ. ສິດທິຂອງຄົນພື້ນເມືອງໃນທີ່ດິນ, ອານາເຂດ, ແລະ ຊັບພະຍາກອນດັ້ງເດີມຕ່າງໆຊຶ່ງລວມມີທັງນ້ຳ.....68

ຝ. ສິດທິຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດໃນບັນຫາທີ່ດິນ.......... ... 73

ພ. ການປົກປ້ອງສິດໃນບັນຫາການຖືກຈຳກັດສິດທີ່ກ່ຽວເນື່ອງກັບຜົນປະໂຫຍດສ່ວນລວມ.......... 77

ຟ. ຄວາມຮັບຜິດຊອບຂອງບັນດາວິສະຫະກິດທາງທຸລະກິດ ກັບ ສິດ ແລະ ພັນທະຂອງລັດ.......... 81

ມ. ກົດໝາຍອາຍາ ແລະ ກົດໝາຍມະນຸດສະທຳສາກົນ... .......... ......... ... 85

IV. ຄູ່ມື ແລະ ບັນນານຸກົມທີ່ຖືກຄັດເລືອກມາ.......... 93

# ວິທີການນຳເອົາໄປໃຊ້

ເອກະສານຄູ່ທີ່ທາງກົດໝາຍສະບັບນີ້ແມ່ນຖືກສ້າງຂື້ນມາຈາກຜົນງານສ່ວນໜຶ່ງຂອງອົງການ OHCHR ກ່ຽວກັບເລື່ອງທີ່ດິນ ແລະ ບັນຫາສິດທິມະນຸດ. ວັດຖຸປະສົງຫຼັກໃນການສ້າງເອກະສານນີ້ແມ່ນເພື່ອເປັນຄູ່ມືໃນການນຳໃຊ້ທີ່ເປັນມິດ ແລະ ມີຄວາມກະທັດຣັດກ່ຽວກັບມາດຕະຖານທາງກົດໝາຍສາກົນທີ່ສຳຄັນ, ເອກະສານສະບັບນີ້ລວມມີກົດໝາຍສິດທິມະນຸດສາກົນ, ກົດໝາຍມະນຸດສະທຳສາກົນ, ແລະ ກົດໝາຍອາຍາສາກົນ, ບັນດາກົດໝາຍເຫຼົ່ານີ້ແມ່ນລວບລວມມາເພື່ອໃຫ້ຜູ້ທີ່ເຮັດພາລະກິດທາງດ້ານບັນຫາທີ່ດິນໄດ້ຮັບຮູ້ ແລະ ເຂົ້າໃຈເຖິງບັນດາມາດຕະຖານ ຕ່າງໆທີ່ມີໃນຄູ່ມືນີ້ແມ່ນສາມາດເອົາໄປນຳໃຊ້ໃນວຽກງານຂອງຕົນໄດ້.

ຄູ່ມືນີ້ແມ່ນເລີ່ມຕົ້ນດ້ວຍການນຳສະເໜີພາບລວມກ່ຽວກັບມາດຕະຖານທາງກົດໝາຍສາກົນທີ່ສຳຄັນ ແລະ ກ່ຽວຂ້ອງກັບບັນຫາທີ່ດິນ ແລະ ສິດທິມະນຸດ. ໃນພາກສະເໜີແມ່ນມີທັງບົດສະຫຼຸບຕ່າງໆທີ່ສະແດງໃຫ້ເຫັນການເຊື່ອມຕໍ່ລະຫວ່າງມາດຕະຖານຂອງສິດທິມະນຸດສາກົນ ແລະ ບັນຫາທີ່ດິນ, ແລະ ມີຕົວຢ່າງຕ່າງໆຂອງການເຕີຍນຳເອົາບັນດາມາດຕະຖານທາງສິດທິມະນຸດກັບ ບັນຫາທີ່ດິນໄປນຳໃຊ້ຢ່າງມີປະສິດທິຜົນມາແລ້ວ. ເອກະສານແຕ່ລະຢ່າງສາມາດເອົາໄປສຶກສາໄດ້ສະເພາະໃນແຕ່ລະດ້ານ, ຫຼືວ່ານຳໄປສຶກສາຮ່ວມກັບເອກະສານອື່ນໆກໍໄດ້ຄືກັນ. ຫຼັກການທີ່ຈະນຳເອົາໄປໃຊ້ນັ້ນແມ່ນມີຄວາມແຕກຕ່າງກັນເພາະມັນຈະຂື້ນຢູ່ກັບບັນຫາທີ່ກ່ຽວຂ້ອງໃດໜຶ່ງເທົ່ານັ້ນ.

**ແຕ່ລະເອກະສານຄັດຫຍໍ້ແມ່ນຈະມີ:**

- ເນື້ອໃນທີ່ສະເໜີໃຫ້ເຫັນພາບທີ່ກ່ຽວຂ້ອງລະຫວ່າງບັນຫາ ແລະ ຫຼັກການທີ່ກ່ຽວຂ້ອງ;
- ຫຼັກການສາກົນທີ່ສຳຄັນ ແລະ ສາມາດນຳເອົາໄປໃຊ້ກ່ຽວຂ້ອງກັນກັບບັນຫາທີ່ດິນ
- ຕົວຢ່າງຂອງການນຳໃຊ້ຫຼັກການ ແລະ ໄດ້ຮັບການຕີຄວາມໝາຍຈາກ ສປຊ ແລະ ກົນໄກສິດທິມະນຸດ
- ຕົວຢ່າງຂອງຫຼັກການຂອງກົດໝາຍດ້ານສິດທິມະນຸດຢູ່ພາຍໃນ, ພາກພື້ນ ແລະ ສາກົນ
- ຂໍ້ມູນທີ່ກ່ຽວຂ້ອງກັບຫຼັກການສາກົນ ແລະ ຄູ່ມືທີ່ກ່ຽວຂ້ອງທີ່ໄດ້ຮັບການພັດທະນາຈາກກົນໄກສິດທິມະນຸດ ສປຊ ຫຼື ໄດ້ຮັບການຮັບຮອງຈາກອົງກອນຕ່າງໆພາຍໃນອົງການ ສປຊ

ເອກະສານສະບັບນີ້ແມ່ນໄດ້ມາຈາກການສຶກສາຄົ້ນຄົ້ວເຄື່ອງມືໃນເອກະສານທາງດ້ານກົດໝາຍລະດັບສາກົນ ແລະ ພາກພື້ນ, ແລະ ຖືກຄັດມາຈາກບົດຄວາມການຕີຄວາມໝາຍ ແລະ ການນຳໃຊ້ບັນດາມາດຕະການທາງກົດໝາຍສິດທິມະນຸດຕ່າງໆຂອງ ສປຊ, ພ້ອມດຽວກັນນີ້ ເນື້ອໃນທີ່ມີໃນເອກະສານສະບັບນີ້ຍັງໄດ້ຄັດມາຈາກຫຼັກການທາງກົດ ໝາຍຂອງອົງກອນສິດທິມະນຸດຕ່າງໆໃນພາກພື້ນ ແລະ ສາກົນອີກດ້ວຍ.

ຂໍ້ມູນທີ່ມີໃນເອກະສານສະບັບນີ້ແມ່ນຍັງມີຫຼາຍຢ່າງທີ່ຕ້ອງໄດ້ສຶກສາຕື່ມ. ບັນດາມາດຕະຖານຫຼັກການຕ່າງໆທີ່ມີໃນນີ້ແມ່ນອາດບໍ່ໄດ້ຄົບທຸກຢ່າງ ແລະ ມັນຈຳເປັນຕ້ອງໄດ້ສຶກສາຫາຂໍ້ມູນເພີ່ມເພື່ອເອົາຂໍ້ມູນຕ່າງໆທີ່ສຳຄັນທີ່ຈະ ໄດ້ຈາກການສຶກຄົ້ນຄົ້ວນັ້ນເຂົ້າໃສ່ເພີ່ມເຕີມອີກ.

ຄູ່ມືສະບັບນີ້ຄວນເອົາໄປສຶກສາເພີ່ມຮ່ວມກັບເອກະສານສະບັບອື່ນໆທີ່ກ່ຽວຂ້ອງ, ຄຳແນະນຳ ແລະ ເຄື່ອງມືຕ່າງໆທີ່ກ່ຽວຂ້ອງແມ່ນສາມາດເອົາໄດ້ຕື່ມທີ່: OHCHR, available at: www.ohchr.org.

ຖ້າຫາກມີຄ□າເຫັນແນະນ□າຫຼືຄ□າສອບຖາມກ່ຽວກັບເອກະສານສະບັບນີ້ແມ່ນສາມາດຕິດຕໍ່ໄດ້ທີ່Bghazi@ohchr.org

# ບົດສະເໜີ

## ທີ່ດິນບໍ່ແມ່ນເປັນພຽງວັດຖຸສິ່ງຂອງ
## ແຕ່ມັນມີຄວາມໝາຍສຳຄັນສຳລັບສິດທິມະນຸດຫຼາຍຢ່າງ

ການເຂົ້າຫາ, ການນຳໃຊ້ທີ່ດິນ ແລະ ການຄອບຄອງທີ່ດິນແມ່ນມີສ່ວນກ່ຽວພັບກັບຄວາມຢູ່ດີມີສຸກໃນດ້ານສິດທິມະນຸດ ຫຼາຍຢ່າງ. ຄວາມຂັດແຍ່ງກ່ຽວກັບທີ່ດິນແມ່ນເປັນສາຍເຫດຂອງການລະເມີດສິດທິມະນຸດຫຼາຍຢ່າງ. ສິ່ງທີ່ສຳຄັນກໍແມ່ນ ຂອບເຂດສິດໃນການບໍລິຫານຈັດການທີ່ດິນແມ່ນມັນກ່ຽວຂ້ອງໂດຍຕົງກັບຫຼາຍໆແງ່ມູມຂອງການພັດທະນາທາງເສດຖະກິດສັງຄົມ, ການສ້າງຄວາມສະຫງົບ, ແລະ ການຊ່ວຍເຫຼືອທາງມະນຸດສະທຳ ກໍຄືການປ້ອງກັນໄພພິບັດ ແລະ ການຟຽວຢາຕ່າງໆ.

ໃນແຕ່ລະປີຈະມີຄົນຈຳນວນຫຼວງຫຼາຍທີ່ຖືກບີບບັງຄັບ ຫຼື ຖືກຂັບໄລ່ອອກຈາກທີ່ດິນທີ່ເຄີຍຢູ່ ເພາະເນື່ອງມາຈາກການຂະຫຍາຍຕົວຂອງການພັດທະນາ ຫຼື ມີບັນດາໂຄງການຂະໜາດໃຫຍ່ເຂົ້າມາ, ເຊັ່ນ: ບັນຫາການສ້າງເຂື່ອນ, ອຸດສະຫະກຳບໍ່ແຮ່, ການຂຸດຄົ້ນ ຫຼື ການສ້າງສະຖານທີ່ເກັບນ້ຳມັນ ແລະ ອາຍແກ໊ດ. ໃນຫຼາຍໆປະເທດ ການຂະຫຍາຍການຜະລິດທາງດ້ານກະສິກຳໄດ້ພາໃຫ້ເກີດປະກົດການບີບບັງຄັບໃຫ້ອອກຈາກທີ່ດິນ, ເກີດການຍົກຍ້າຍ ແລະ ກໍໃຫ້ເກີດຄວາມບໍ່ໝັ້ນຄົງທາງດ້ານອາຫານໃນທ້ອງຖິ່ນ, ປະກົດການທີ່ກ່າວມານີ້ໄດ້ນຳໄປສູ່ປະກົດການອົບພະຍົບຈາກຊົນນະບົດໄປສູ່ຕົວເມືອງ ແລະ ກໍນຳໄປສູ່ຄວາມວຸ້ນວາຍໃນ ການຍາດແຍ່ງທີ່ດິນ ແລະ ທີ່ຢູ່ອາໃສໃນຕົວເມືອງ. ປະກົດການທີ່ເກີດຂື້ນເຫຼົ່ານັ້ນແມ່ນມີສ່ວນພົວພັນກັບບັນຫາການລະເມີດສິດທິມະນຸດກັບຊຸມຊົນທີ່ໄດ້ຮັບຜົນກະທົບຕ່າງໆ, ແລະ ບັນຫາທີ່ວ່ານີ້ແມ່ນຈະມີສະພາບໜັກຂື້ນໄປເລື່ອຍໆ. ບັນດາໂຄງການພັດທະນາຕ່າງໆໃນຕົວເມືອງແມ່ນໄດ້ເຮັດໃຫ້ຄວາມຂາດໂຕນທາງດ້ານເສດຖະກິດສັງຄົມໃນຕົວເມືອງ ແລະ ເຮັດໃຫ້ທີ່ດິນ ແລະ ເຮືອນຢູ່ມີລາຄາແພງຂື້ນ ແລະ ທີ່ຢູ່ອາໃສຂອງຄົນທີ່ມີລາຍໄດ້ຕ່ຳກໍຈະຄ່ອຍຫາຍສາບສູນໄປນຳ. ມາດຕະການເພື່ອປົກປ້ອງສິ່ງແລດລ້ອມກໍເປັນອີກອັນໜຶ່ງທີ່ເຂົ້າມາໃນຊ່ວງທີ່ມີຄວາມຂັດແຍ່ງທາງດ້ານຜົນປະໂຫຍດ ແລະ ບັນຫາສິດທິຂອງປະຊາກອນທີ່ອາໃສທີ່ດິນເພື່ອຄວາມຢູ່ລອດ ແລະ ເພື່ອການທຳມາຫາກິນ. ໃນເວລາດຽວກັນ, ຄວາມລົ້ມເຫຼວໃນການປ້ອງກັນ ແລະ ຫຼຸດຜ່ອນບັນຫາສະພາບແວດລ້ອມເຊື່ອມໂຊມ ແລະ ບັນຫາຜົນກະທົບຕ່າງໆຈາກການປ່ຽນແປງຂອງສະພາບອາກາດນັ້ນ ມັນອາດນຳໄປສູ່ບັນຫາການເຂົ້າເຖິງທີ່ດິນໄດ້ໜ້ອຍລົງ, ໂດຍສະເພາະແມ່ນສຳລັບກຸ່ມຄົນທີ່ດ້ອຍໂອກາດ. ນອກຈາກນີ້, ທີ່ດິນຍັງຖືວ່າເປັນປັດໃຈທີ່ສຳຄັນທີ່ພາໃຫ້ເກີດຄວາມຂັດແຍ່ງ ແລະ ເກີດບັນຫາຕ່າງໆຕາມມາ. ບັນຫາການຍາດແຍ່ງທີ່ດິນເປັນສາຍເຫດຂອງຄວາມຂັດແຍ່ງຕ່າງໆ ແລະ ເປັນບັນຫາຂອງການ ຊົດເຊີຍຄ່າທີ່ຢູ່ອາໃສ, ຄ່າທີ່ດິນ ແລະ ບັນຫາຂອງສິດໃນຊັບສົມບັດຂອງຜູ້ອົບພະຍົບ ແລະ ຜູ້ທີ່ບໍ່ມີທີ່ຢູ່ອາໃສພາຍໃນ ທີ່ກັບຄືນມາພາຍຫຼັງຄວາມວຸ້ນວາຍຕ່າງໆໄດ້ສິ້ນສຸດລົງ, ແລະສິ່ງທີ່ວ່າມານີ້ແມ່ນເປັນສ່ວນໜຶ່ງທີ່ສຳຄັນກ່ຽວກັບການສ້າງຄວາມສະຫງົບໃນສັງຄົມ.

ບັນຫາຄວາມໝັ້ນຄົງທາງດ້ານສະບຽງອາຫານ, ສະພາບອາກາດທີ່ມີການປ່ຽນແປງ, ການຂະຫຍາຍຂອງຕົວເມືອງທີ່ວ່ອງໄວ, ແລະ ບັນຫານຳໃຊ້ຊັບພະຍາກອນທຳມະຊາດແບບບໍ່ມີຄວາມຍືນຍົງໃນທົ່ວໂລກທີ່ມີທ່າອ່ຽງເພີ່ມຂື້ນ ແມ່ນພາໃຫ້ເກີດມີການທົບທວນຄືນເຖິງວິທີການນຳໃຊ້, ການຄຸ້ມຄອງ, ແລະ ການບໍລິຫານຈັດການທີ່ດິນທີ່ຖືກຕ້ອງ. ນອກຈາກນັ້ນ ມາຮອດປະຈຸບັນນີ້ ມັນຍັງບໍ່ທັນມີການວິເຄາະຢ່າງເປັນລະບົບເພື່ອຫາທາງອອກໃນການນຳໃຊ້ບັນດາຫຼັກການສິດທິມະນຸດຕ່າງໆເຂົ້າໃນການບໍລິຫານຈັດການທີ່ດິນ ເພື່ອວ່າການນຳໃຊ້ຫຼັກການດັ່ງກ່າວຈະສາມາດຊ່ວຍໃນການປົກປ້ອງ ແລະ ສົ່ງເສີມສິດທິມະນຸດ. ດັ່ງນັ້ນ, ເອກະສານຄູ່ມືສະບັບນີ້ ແລະ ບັນດາເອກະສານທີ່ກ່ຽວຂ້ອງອື່ນໆທີ່ສຳນັກງານຂ້າຫລວງໃຫຍ່ເປັນຜູ້ສ້າງຂື້ນມານັ້ນແມ່ນມີຈຸດປະສົງໃນການສົ່ງເສີມຄວາມເຂົ້າໃຈໃນເລື່ອງທີ່ກ່ຽວຂ້ອງກັບບັນຫາທີ່ດິນໃນມູມມອງດ້ານສິດທິມະນຸດ.

## I. ຫຼັກການຕ່າງໆກ່ຽວກັບທີ່ດິນຕາມກົດໝາຍສາກົນ

ຕາມປົກກະຕິແລ້ວ ກົດໝາຍ, ນະໂຍບາຍ ແລະ ລະບຽບພາສີອາກອນພາຍໃນຕ່າງໆ ແມ່ນເປັນພື້ນຖານໃນການຕັດ ສິນກ່ຽວກັບການນຳໃຊ້ທີ່ດິນ, ການຄຸ້ມຄອງ, ແລະ ການໂອນທີ່ດິນ. ການມີໃບຕາດິນຄອບຄອງຂອງສ່ວນບຸກຄົນນັ້ນ ແມ່ນເປັນການຢືນຢັນເຖິງສະຖານະພາບຂອງຜູ້ຄອບຄອງທີ່ແທ້ຈິງ. ເຖິງຢ່າງໃດກໍ່ດີ, ໃນເມື່ອກົດໝາຍບໍ່ສາມາດຢັ້ງຢືນ ສະຖານະການຄອບຄອງທີ່ດິນຕາມກົດໝາຍໄດ້ ແຕ່ໄດ້ຮັບຮູ້ພຽງທາງປະເພນີ ຫຼື ການສືບສິດຄອບຄອງເທົ່ານັ້ນເຊັ່ນ: (ສິດໃນການຄອບຄອງຂອງຄົນພື້ນເມືອງ ຫຼື ສິດໃນການນຳໃຊ້ທີ່ດິນຂອງຊຸມຊົນຊາວອົບພະຍົບ) ເຊິ່ງລວມໄປເຖິງການ ອອກໜັງສືຢັ້ງຢືນທີ່ດິນໃຫ້ສ່ວນບຸກຄົນ ແມ່ນອາດເປັນການສ້າງບັນຫາໃຫ້ແກ່ການເຂົ້າເຖິງ ແລະ ການຄຸບຄອງທີ່ດິນຂອງຜູ້ ທີ່ອາໃສທີ່ດິນດັ່ງກ່າວໃນການທຳມາຫາກິນ.[1]

ໃນບາງປະເທດ, ກົດໝາຍພາຍໃນແມ່ນສາມາດຢືນຢັນການຄອບຄອງທີ່ດິນໄດ້ໃນຫຼາຍຮູບແບບເຊັ່ນ: ສິດໃນການຄອບຄອງທີ່ດິນຕອນໃດໜຶ່ງ, ຫຼື ສິດໃນການໂອນກຳມະສິດໃນການຄອບຄອງທີ່ດິນ (ການໄດ້ສິດເປັນເຈົ້າຂອງທີ່ດິນນັ້ນແມ່ນມີຂະບວນການຮັບຮູ້ຕາມກົດໝາຍເຊິ່ງໄດ້ກຳນົດໄລຍະເວລາການຄຸ້ມຄອງນຳໃຊ້ທີ່ດິນ ແລະ ມີລະບຽບການອື່ນໆ). ໃນກົດໝາຍພາຍໃນຂອງບາງປະເທດແມ່ນໄດ້ຮັບຮູ້ການຄອບຄອງທີ່ດິນໄວ້ໃນຫຼາຍຮູບແບບໃຫ້ແກ່ບຸກຄົນ ຫຼື ກຸ່ມຄົນ. ດັ່ງນັ້ນ ກຸ່ມຄົນດັ່ງກ່າວແມ່ນຈະມີທາງເລືອກຕ່າງໆໃນການຄອບຄອງທີ່ດິນ ແລະ ຄອບຄອງຊັບສິນຕ່າງໆ ເຊິ່ງລວມໄປເຖິງສິດໃນ ການໂອນສິດໃນການຄອບຄອງສິ່ງຕ່າງໆຕາມກົດໝາຍໄດ້. ຢູ່ໃນຫຼາຍໆປະເທດ, ເຂົາເຈົ້າແມ່ນມີລະບົບການລົງທະບຽນ ການໄດ້ສິດຄອບຄອງທີ່ດິນໄວ້ໃນຫຼາຍຮູບແບບ. ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ, ລະບົບການໃຫ້ສິດຄອບຄອງທີ່ດິນນັ້ນ ແມ່ນຖືກສ້າງຂຶ້ນມາໃນຫຼາຍຮູບແບບ, ຫຼາຍຫຼັກການ, ຫຼາຍກົດໝາຍ, ຫຼາຍຮີດຄອງປະເພນີ, ຫຼາຍເງື່ອນໄຂ, ແລະ ຫຼາຍຂໍ້ກຳນົດ. ແນວໃດກໍ່ຕາມ, ບັນດາສິດທິໃນການຄອບຄອງທີ່ດິນທີ່ກ່າວມານີ້ ແມ່ນບໍ່ໄດ້ກ່ຽວກັບການໄດ້ສິດຈາກ ຫຼັກການສິດທິມະນຸດ ຫຼື ສິດທີ່ຈະໄດ້ຮັບການຄອບຄອງຊັບສິນຂອງຕົນແບບຕາຍໂຕ.

ເຖິງວ່າໃນປະຈຸບັນບໍ່ໄດ້ມີຫຼັກການໃດທີ່ໃຫ້ຄວາມຈະແຈ້ງກ່ຽວກັບສິດໃນທີ່ດິນພາຍໃຕ້ກົດໝາຍສິດທິມະນຸດສາກົນກໍ່ຕາມ, ແຕ່ມັນກໍ່ມີຫຼາຍຂໍ້ກຳນົດພາຍໃຕ້ກົນໄກສິດທິມະນຸດສາກົນຫຼາຍຢ່າງທີ່ກ່ຽວພັນກັບບັນຫາທີ່ດິນທີ່ອາດສາມາດນຳໄປໃຊ້ເປັນຫຼັກການພື້ນຖານທາງດ້ານສິດທິມະນຸດໄດ້. ຫຼັກການທີ່ມັນຈະກ່ຽວຂ້ອງກັບເລື່ອງທີ່ດິນກໍ່ແມ່ນເລື່ອງສິດທິໃນດ້ານອາຫານການກິນ, ສິດທິໃນຄວາມເທົ່າທຽມລະຫວ່າງຍິງ-ຊາຍ, ແລະ ຫຼັກການໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ທີ່ບໍ່ມີທີ່ຢູ່ອາໃສພາຍໃນ ກໍ່ຄືເລື່ອງທີ່ກ່ຽວກັບສິດຂອງຄົນພື້ນເມືອງ ແລະ ສາຍສຳພັນລະຫວ່າງຄົນພື້ນເມືອງກັບທີ່ດິນ ແລະ ເຂດແດນ ຂອງເຂົາເຈົ້າທີ່ມີມາແຕ່ດັ້ງເດີມ. ບັນດາອົງກອນກວດກາສິດທິມະນຸດຂອງ ສປຊ ແລະ ຜູ້ທີ່ຮັບຜິດຊອບໃນກົນ ໄກພິເສດໄດ້ລາຍງານບັນຫາທີ່ດິນທີ່ມັນກ່ຽວພັນກັບເລື່ອງສິດທິຕ່າງໆ ເຊິ່ງລວມມີຫຼັກການຫ້າມຈຳແນກ ແລະ ບັນດາສິດທິ ໃນດ້ານການມີທີ່ຢູ່ອາໃສ, ມີອາຫານ, ແລະ ມີນ້ຳກິນທີ່ພຽງພໍ, ສິດໃນດ້ານສຸກຂະພາບ, ສິດໃນການມີວຽກເຮັດ, ສິດເສລີພາບ ໃນການປາກເວົ້າ ແລະ ສະແດງຄວາມຄິດເຫັນ, ສິດໃນການຂໍຮັບຮູ້ຄວາມເປັນເອກະລາດ, ແລະ ບັນດາສິດທິຕ່າງໆ ທີ່ກ່ຽວກັບການມີສ່ວນຮ່ວມໃນວຽກງານສາທາລະນະ ແລະ ກິດຈະກຳດ້ານວັດທະນາທຳຕ່າງໆ.[2]

ອີງຕາມກົນໄກສິດທິມະນຸດພາກພື້ນ, ກົນໄກໃນພາກພື້ນ ເຊິ່ງລວມມີຄະນະກຳມະທິການສິດທິມະນຸດຂອງຄົນໃນອັບຝຣິກາ, ຄະນະກຳມະທິການສິດທິມະນຸດ ແລະ ສານສິດທິມະນຸດລະຫວ່າງລັດໃນທະວີບອາເມລິກາ, ແລະ ສານສິດທິມະນຸດໃນຢູໂຣບ ກໍ່ຄືຄະນະກຳມະທິການສິດທິທາງສັງຄົມໃນຢູໂຣບ ແມ່ນໄດ້ດຳເນີນການແກ້ໄຂບັນຫາຄວາມຂັດແຍ່ງທາງດ້ານທີ່ດິນໂດຍການນຳໃຊ້ບັນດາຫຼັກການຂໍ້ກຳນົດຕ່າງໆທີ່ກ່ຽວຂ້ອງກັບສິດທິທາງການເມືອງ, ສັງຄົມ ແລະ ວັດທະນະທຳ, ໃນນັ້ນມັນລວມມີບັນດາສິດທິຕ່າງໆຂອງຄົນພື້ນເມືອງ ແລະ ຄົນຊົນເຜົ່າ.

---

[1] Report of the Special Rapporteur on the right to food (A/65/281)

[2] See chap. IV below.

ນອກນີ້, ກົດໝາຍມະນຸດສະທຳສາກົນຍັງມີບາງຫຼັກການທີ່ກ່ຽວຂ້ອງກັບບັນຫາທີ່ດິນເຊັ່ນກັນ, ຕົວຢ່າງ: ໃນຫຼັກການຫ້າມມີການໂຈມຕີສະຖານທີ່ ຫຼື ທຳລາຍສິ່ງຕ່າງໆທີ່ຈຳເປັນສຳລັບການດຳລົງຊີບຂອງພົນລະເຮືອນ ແລະ ຄວາມຮັບຜິດຊອບຂອງກອງກຳລັງທີ່ເຂົ້າຍຶດຄອງອານາເຂດໃດໜຶ່ງ. ການທຳລາຍສິ່ງຕ່າງໆ ແລະ ຊັບສິນຕ່າງໆທີ່ກ່າວມານີ້ແມ່ນຈະຕົກໃນ ຂໍ້ຫາເປັນອາດສະຍາກຳສົງຄາມ.

ບັນດາຫຼັກການທີ່ກ່ຽວຂ້ອງກັບຜູ້ລີ້ໄພ ແລະ ຜູ້ທີ່ບໍ່ມີທີ່ຢູ່ອາໃສແມ່ນໄດ້ຖືກຮັບຮູ້ໃນດ້ານສິດທິຂອງການມີທີ່ຢູ່ອາໃສ, ສິດໃນທີ່ດິນ, ແລະ ໃນຊັບສິນຕ່າງໆ, ຫຼັກການທີ່ກ່າວມານີ້ແມ່ນໄດ້ເນັ້ນໃຫ້ເຫັນຄວາມ**ສຳ**ຄັນຂອງສິດເຫຼົ່ານັ້ນວ່າ ມັນມີຄວາມ ສຳຄັນຫຼາຍໃນດ້ານຄວາມໝັ້ນຄົງໃນໄລຍະຍາວ, ດ້ານຄວາມສະຫງົບ, ດ້ານການພັດທະນາທາງເສດຖະກິດ ແລະ ຄວາມຍຸຕິທຳ. ຕົວຢ່າງ: ສົນທິສັນຍາ 1951 ທີ່ກ່ຽວຂ້ອງກັບສະຖານະພາບຂອງຜູ້ອົບພະຍົບແມ່ນໄດ້ລວມເອົາບັນດາຫຼັກການ ສິດທິຂອງຜູ້ອົບພະຍົບໃນດ້ານທີ່ຢູ່ອາໃສ, ດ້ານຊັບສິນ, ການມີບ້ານຢູ່, ແລະ ເສລີພາບໃນການຍົກຍ້າຍໄປມາ.

ແນວໃດກໍ່ດີ ເຖິງວ່າຈະມີຫຼັກການທີ່ກ່ຽວຂ້ອງກັບທີ່ດິນ ແລະ ສິດທິມະນຸດໃນກົດໝາຍສິ່ງແລດລ້ອມສາກົນກໍ່ຕາມ, ແຕ່ວ່າໃນຕົວຈິງແມ່ນຍັງມີຄວາມຕື່ນຕົວທີ່ແຜ່ຫຼາຍກ່ຽວກັບການມີສະພາບແລດລ້ອມທີ່ປອດໄພ, ທີ່ເປັນມິດ ແລະ ມີຄວາມໝັ້ນຄົງ ເຊິ່ງວ່າທີ່ດິນໄດ້ກາຍເປັນປັດໃຈພື້ນຖານທີ່ສຳຄັນໃນການສ້າງຄວາມຜາສຸກໃນດ້ານສິດທິມະນຸດ. ໃນການປຶກສາຫາລືກ່ຽວກັບກົດໝາຍສິ່ງແວດລ້ອມແມ່ນຍັງໄດ້ຮັບຮູ້ວ່າບາງລັກການສິດທິທີ່ສຳຄັນ ໂດຍສະເພາະໃນດ້ານການການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມໃນການຕັດສິນໃຈ, ແລະ ການເຂົ້າເຖິງຄວາມຍຸຕິທຳໃນມູມມອງດ້ານສິ່ງແວດລ້ອມນັ້ນແມ່ນມີຄວາມສຳຄັນຫຼາຍຕໍ່ກັບຂະບວນການຕັດສິນໃຈທາງສິ່ງແວດລ້ອມທີ່ດີ.

ການປຶກສາຫາລືຍັງສືບຕໍ່ດຳເນີນໃນເລື່ອງທີ່ກ່ຽວກັບສິດໃນດ້ານການມີສະພາບແວດລ້ອມທີ່ປອດໄພ ແລະ ເປັນມິດເພື່ອໃຫ້ເອົາມາເປັນສິດທິສະເພາະດ້ານ. ນອກນີ້ທາງສະພາສິດທິມະນຸດຍັງໄດ້ຄົ້ນພົບວ່າການປ່ຽນແປງທາງສະພາບອາກາດແມ່ນໄດ້ມີຜົນກະທົບຕໍ່ຄວາມຢູ່ດີມີສຸກໃນມູນຂອງສິດທິມະນຸດອີກດ້ວຍ.

ສະຫຼຸບແລ້ວ, ເຖິງວ່າຈະບໍ່ມີຫຼັກການສິດທິມະນຸດໃດທີ່ໄດ້ເນັ້ນລາຍລະອຽດກ່ຽວກັບບັນຫາທີ່ດິນກັບສິດທິມະນຸດກໍ່ຕາມ, ແຕ່ຍັງມີຫຼັກການສິດທິມະນຸດສາກົນ ແລະ ກົດໝາຍສິ່ງແວດລ້ອມສາກົນອື່ນໆໄດ້ກຳນົດຫຼັກການທີ່ກ່ຽວຂ້ອງກັບບັນຫາທີ່ດິນໄວ້ຢ່າງກວ້າງຂວາງ.

ແນວໃດກໍ່ດີ, ເອກະສານຄູ່ມືສະບັບນີ້ແມ່ນໄດ້ສ້າງອອກມາໂດຍມີທັງຫຼັກການທີ່ມີຂໍ້ຜູກມັດ ແລະ ບໍ່ໄດ້ມີຂໍ້ຜູກມັດທາງກົດໝາຍນຳກັນ. ສົນທິສັນຍາຕ່າງໆແມ່ນມີບາງອັນຖືກເອີ້ນວ່າຂໍ້ກຳນົດລະຫວ່າງປະເທດ, ສົນທິສັນຍາ ຫຼື ກົດບັດຕ່າງໆແມ່ນຈະມີຂໍ້ຜູກມັດທາງດ້ານກົດໝາຍກັບລັດພາຄີທີ່ໄດ້ໃຫ້ສັດຕະຍາບັນໄປແລ້ວ. ນອກນີ້, ຍັງມີບັນດາຮ່າງກົດໝາຍຕ່າງໆທີ່ຖືວ່າເປັນແຫຼ່ງທີ່ມາຂອງກົດໝາຍສາກົນທີ່ສຳຄັນເຊັ່ນ: ຖະແຫຼງການ, ຄູ່ມື ແລະ ລະບຽບການມາດຕະຖານຕ່າງໆທີ່ໄດ້ຖືກຮັບຮອງຈາກອົງການລະຫວ່າງປະເທດ. ໃນຂະນະທີ່ບໍ່ທັນມີສະຖານະເປັນຂໍ້ຜູກມັດທາງກົດໝາຍໄດ້, ບັນດາຮ່າງເອກະສານຕ່າງໆທີ່ກ່າວມານັ້ນແມ່ນມາສາມາດໃຫ້ຫຼັກການທີ່ມີຄຸນຄ່າກ່ຽວກັບການຕີຄວາມໝາຍຂໍ້ກຳນົດທີ່ມີຂໍ້ຜູກມັດ ຫຼື ໃຫ້ປະໂຫຍດໃນການສຶກສາກ່ຍວກັບຫຼັກການຕ່າງໆທີ່ມີ ຫຼື ເອົາໄປຊ່ວຍໃນການພັດທະນາກົນໄກທີ່ມີຂໍ້ຜູກມັດທາງກົດໝາຍໄດ້ເຊັ່ນ: ບັນດາຫຼັກການທີ່ຖືກສ້າງຂື້ນມາພາຍໃຕ້ກົດໝາຍປະເພນີລະຫວ່າງປະເທດ. ນອກນີ້ ບັນດາຫຼັກການທີ່ກ່າວມານັ້ນແມ່ນຍັງສາມາດໃຊ້ແທນເປັນການຕົກລົງທີ່ເປັນເອກະສັນຂອງບັນດາລັດ ແລະ ອົງການທີ່ກ່ຽວຂ້ອງຕ່າງໆ. ໃນເອະສານສະບັບນີແມ່ນໄດ້ລວບລວມເອົາຫຼາຍຫຼັກການທາງກົດໝາຍທີ່ໄດ້ຮັບການຮັບຮອງຢ່າງກວ້າງຂວາງຄື: ຖະແຫຼງການກ່ຽວກັບນັກເຄື່ອນໄຫວປົກປ້ອງສິດທິມະນຸດ, (1998), ຖະແຫຼງການ ສປຊ ກ່ຽວກັບສິດທິຂອງຄົນພື້ນເມືອງ (2007), ແລະ ຫຼັກການຄູ່ມືກ່ຽວກັບສິດທິມະນຸດ ກັບ ການເຮັດທຸລະກິດ (2011).

# II. ຄວາມໝາຍຂອງຄຳສັບ ແລະ ແນວຄວາມຄິດທີ່ກ່ຽວຂ້ອງກັບເລື່ອງທີ່ດິນ

ໃນສະພາບການຫຼາຍຢ່າງທີ່ເກີດຂື້ນ, ບັນຫາສິດທິມະນຸດສ່ວນໃຫຍ່ແລ້ວແມ່ນຈະກ່ຽວຂ້ອງກັບການຄອບຄອງທີ່ດິນ. "ບັນຫາທີ່ດິນ" ເປັນບັນຫາທີ່ກ່ຽວຂ້ອງກັບສິດທິມະນຸດທີ່ມັນອາດ ຢູ່ເໜືອຄວາມສາມາດທີ່ຈະບໍລິຫານຈັດການ ໂດຍຜ່ານທາງການປົກປ້ອງທາງສິ່ງແວດລ້ອມ ແລະ ການເຂົ້າ ເຖິງຊັບ ພະຍາກອນທຳມະຊາດທີ່ມັນພົວພັນກັບທີ່ດິນໄປພ້ອມໆກັນເຊັ່ນ: (ນ້ຳ, ບໍ່ແຮ່, ນ້ຳມັນ, ປ່າໄມ້, ແລະ ການປະມົງ). ແຕ່ຢ່າງໃດກໍ່ດີ, ເຖິງວ່າຄູ່ມືສະບັບນີ້ພະຍາຍາມທີ່ຈະສ້າງໃຫ້ມັນກວມເອົາ ຫຼາຍດ້ານທີ່ກ່າວມານັ້ນໃຫ້ໄດ້ຫຼາຍທີ່ສຸດ, ແຕ່ວ່າສິ່ງທີ່ມີໃນຄູ່ມືນີ້ ກໍ່ບໍ່ສາມາດທຳການວິເຄາະໄດ້ຢ່າງລະອຽດທຸກຢ່າງໄດ້.

ການບໍລິຫານຄຸ້ມຄອງທີ່ດິນແມ່ນເປັນເລື່ອງທີ່ຫຍຸ້ງຍາກສັບສົນ ແລະ ມັນຂື້ນຢູ່ກັບບັນດາກົດໝາຍ ແລະ ນະໂຍບາຍພາຍໃນຂອງແຕ່ລະປະເທດ. ລະບົບການໃຫ້ຄອບຄອງທີ່ດິນລະດັບຊາດ ແລະ ທ້ອງຖິ່ນຕ່າງໆນັ້ນແມ່ນຖືກສ້າງຂື້ນມາໃນຫຼາຍຮູບແບບບໍ່ວ່າຈະເປັນໃນຕົວກົດໝາຍ, ຮີດຄອງ, ລະບຽບຫຼັກການ, ຄວາມຮັບຮູ້ ແລະ ຂໍ້ກຳນົດຕ່າງໆທີ່ມີ, ບາງຄັ້ງສິ່ງຕ່າງໆທີ່ກ່າວມານີ້ກໍ່ແມ່ນມີບາງຢ່າງຂັດກັນ ແລະ ທັບຊ້ອນກັນ. ຂັ້ນຕອນການເຂົ້າເຖິງ, ການນຳໃຊ້, ການຄຸ້ມຄອງ, ແລະ ກ່ຽວໂອນກຳມະສິດທີ່ດິນແມ່ນມີຫຼາຍຢ່າງກ່ຽວຂ້ອງກັນກັບເລື່ອງການເຄົາລົບ, ການປົກປ້ອງ, ແລະ ການປະຕິບັດຕາມຫຼັກການສິດທິມະນຸດ.

ໃນເລື່ອງການຄອບຄອງທີ່ດິນນັ້ນແມ່ນບໍ່ມີຫຼັກການໃດ ຫຼື ນິຍາມໃດທີ່ໃຫ້ການອະທິບາຍຢ່າງຈະແຈ້ງສົມບູນ. ແຕ່ສຳລັບຄູ່ມືສະບັບນີ້ແມ່ນມີບາງນິຍາມ ແລະ ຄຳສັບທີ່ໄດ້ຖືກນຳເອົາມາໃຊ້ຄື:

- ການຄອບຄອງທີ່ດິນຕາມຄວາມໝາຍແລ້ວແມ່ນສາຍສຳພັນລະຫວ່າງບຸກຄົນ, ກຸ່ມຄົນ, ຫຼື ນິຕິບຸກຄົນທີ່ໄດ້ມີສິດນຳໃຊ້ທີ່ດິນຕອນດັ່ງກ່າວ, ຄວາມໝາຍທີ່ກ່າວມານີ້ອາດຈະມີໃນກົດໝາຍ ຫຼື ຕາມຮີດຄອງປະເພນີກໍ່ເປັນໄດ້. ຕາມຄວາມໝາຍທີ່ກ່າວ, ການຄອບຄອງທີ່ດິນນັ້ນແມ່ນ ເລື່ອງຂອງຜູ້ທີ່ມີສິດນຳໃຊ້ທີ່ດິນນັ້ນຕາມຄວາມຕ້ອງການບໍ່ວ່າຊິເປັນດ້ານໄລຍະເວລາ ແລະ ວິທີການນຳໃຊ້ທີ່ຕ້ອງການກໍ່ຕາມ.

**ຕົວຢ່າງຂອງການນຳໃຊ້ທີ່ດິນ.**

ບັນດາປະເພດການນຳໃຊ້ທີ່ດິນຕ່າງໆແມ່ນສາມາດເອົາມາຈັດເຂົ້າກັນເປັນສາມປະເພດໄດ້, ແຕ່ບາງຄັ້ງກໍ່ມີບາງອັນທີ່ທັບຊ້ອນກັນຄື:

**1. ການນຳໃຊ້ທີ່ດິນເພື່ອວັດຖຸປະສົງລວມ:**

* ການ**ນຳ**ໃຊ້ທີ່ດິນເພື່ອການຢູ່ອາໃສ: ສຳລັບການສ້າງບ້ານ ແລະ ການຕັ້ງຖິ່ນຖານ;

* ການ**ນຳ**ໃຊ້ທີ່ດິນເຂົ້າໃນດ້ານວັດທະນາທຳ, ສາດສະໜາ ແລະ ຮີດຄອງຕ່າງໆ: ສຳລັບການນຳໃຊ້ທາງດ້ານວັດທະນາ ທຳເຊັ່ນ: (ດິນຂອງບັນພະບູລຸດ ແລະ ຂອງຄົນພື້ນເມືອງ, ດິນໃນ ເຂດສັກສິດ, ສະຖາບັນທາງສາດສະໜາ, ດິນໃນເຂດປ່າຊ້າ ແລະ ອື່ນໆ)

* ການນຳໃຊ້ທີ່ດິນເຂົ້າໃນວຽກງານລັດ: ສຳລັບກິດຈຳກຳຂອງລັດ (ສ້າງຫໍປະຊຸມ, ສະຖານີຕຳຫຼວດ ແລະ ຄ່າຍທະຫານຕ່າງໆ)

* ການ**ນຳ**ໃຊ້ທີ່ດິນເພື່ອການບໍລິການ (ເປັນໄດ້ທັງເອກະຊົນ/ລັດຖະບານ): ສ້າງໂຮງຮຽນ, ໂຮງໝໍ, ສູນເພື່ອສຸຂະພາບ, ໂຄງລ່າງເສດຖະກິດ (ທົ່ນທາງ, ສາຍທາງລົດໄຟ, ສະຖານີໄຟຟ້າ, ສະຖານທີ່ເກັບນ້ຳ ແລະ ສະຖານສຸຂະອະນາໄມຕ່າງໆ)

* **ນຳ**ໃຊ້ທີ່ດິນເພື່ອສ້າງສະຖານທີ່ພັກຜ່ອນຕ່າງໆ: ເພື່ອການພັກຜ່ອນ ແລະ ບັນເທີງ (ສວນສາທາ, ສູນກິລາ ແລະ ອື່ນໆ)

* ການ**ນຳ**ໃຊ້ທີ່ດິນເພື່ອຮັກສາສິ່ງແລດລ້ອມ: ເຂດປ່າສະຫງວນ, ສວນອານຸລັກຕ່າງໆ.

**2. ການນຳໃຊ້ທີ່ດິນເພື່ອວັດຖຸປະສົງທີ່ໄດ້ປະໂຫຍດ:**

* ການ**ນຳ**ໃຊ້ທີ່ດິນເພື່ອການຄ້າຂາຍ: ສ້າງຮ້ານຄ້າ, ທະນາຄານ, ບໍລິສັດຕ່າງໆ

* ການ**ນຳ**ໃຊ້ທີ່ດິນໃນດ້ານອຸດສະຫະກຳ: ສ້າງ ໂຮງງານ ສະຖານີຕ່າງໆ, ການຂຸດຄົ້ນບໍ່ແຮ່

* ການ**ນຳ**ໃຊ້ທີ່ດິນໃນດ້ານກະສິກຳ: ປູກຝັງລ້ຽງສັດອື່ນໆ

**3. ການນຳໃຊ້ທີ່ດິນເພື່ອວັດຖຸປະສົງຂອງສ່ວນບຸກ ຄົນ/ເອກະຊົນ:**

* ເປັນທີ່ຢູ່ອາໃສ ແລະ ເປັນຊັບສິນສ່ວນບຸກຄົນ

* ການ**ນຳ**ໃຊ້ທີ່ດິນເພື່ອເປັນແຫຼ່ງທຶນ (ເປັນຊັບສິນ, ເປັນຫຼັກຊັບຄ້ຳປະກັນ).

ການເປັນເຈົ້າຂອງ/ມີໃບຕາດິນທີ່ເປັນທາງການທີ່ຖືກຮັບຮູ້ທາງກົດໝາຍພາຍໃນແມ່ນມີຄວາມໝາຍຫຼາຍກ່ວາຄໍາວ່າຮູບແບບການຄອບຄອງທີ່ດິນ. ທັດສະນະຄະຕິກ່ຽວກັບການຄອບຄອງທີ່ດິນນັ້ນແມ່ນມີຄວາມໝາຍກວ້າງຂວາງເຊິ່ງມັນລວມມີການເຊົ່າທີ່ດິນ, ການປົກປັກຮັກສາ, ການນໍາໃຊ້ທີ່ດິນທົ່ວໄປ, ການຄອບຄອງຂອງຄົນພື້ນເມືອງ, ການນໍາໃຊ້ທີ່ດິນຕາມລະດູການເຊັ່ນ: (ທົ່ງພຽງທີ່ໃຊ້ລ້ຽງສັດແບບເຄື່ອນທີ່), ຫຼື ການນໍາໃຊ້ທີ່ດິນເພື່ອການເກັບຮັກສາຊັບສິນຕ່າງໆເຊັ່ນ: (ເກັບນໍ້າ, ເກັບຟືນ, ປູກໝາກໄມ້).

- ການເຂົ້າເຖິງ, ການນໍາໃຊ້, ແລະ ການຄຸ້ມຄອງທີ່ດິນ ແມ່ນໝາຍເຖິງປັດໃຈຕ່າງໆໃນການຄອບຄອງທີ່ດິນ. ການເຂົ້າເຖິງ ແລະ ການນໍາໃຊ້ທີ່ດິນແມ່ນການໄດ້ຮັບໂອກາດຊົ່ວຄາວ ຫຼື ຖາວອນໃນການນໍາໃຊ້ ແລະ/ຫຼື ໃນການຄອບຄອງທີ່ດິນເພື່ອການສ້າງທີ່ຢູ່ອາໃສ, ດໍາເນີນການຜະລິດຕ່າງໆ, ນໍາໃຊ້ທີ່ດິນຕາມຊັບພະຍາກອນທີ່ມີ, ຫຼື ນໍາໃຊ້ທີ່ດິນເພື່ອຄວາມສ້າງສັນໃນດ້ານວັດທະນາທໍາ, ສາດສະໜາ, ແລະ ດ້ານອື່ນໆ. ການຄຸ້ມຄອງທີ່ດິນໝາຍເຖິງຄວາມສາມາດໃນການຕັດສິນໃຈທີ່ຈະນໍາໃຊ້ທີ່ດິນຕາມຄວາມຕ້ອງການ, ຊິມອບໃຫ້ໃຜນໍາໃຊ້, ແລະ ຈະໃຊ້ມັນແນວໃດ.
- ຄວາມໝັ້ນຄົງຂອງການຄອບຄອງທີ່ດິນແມ່ນໝາຍເຖິງບັນດາສາຍສໍາພັນທີ່ກ່ຽວຂ້ອງກັບການມີທີ່ຢູ່ອາໃສໃນທີ່ດິນ, ໄດ້ຮັບການຍັ້ງຢືນຕາມກົດໝາຍ ແລະ ຮີດຄອງ ຫຼື ໄດ້ຮັບການຈັດແບ່ງໃຫ້ແບບບໍ່ເປັນທາງການ ແລະ ອື່ນໆ ທີ່ສາມາດໃຫ້ສິດທິແກ່ຜູ້ໃດໜຶ່ງໄດ້ຢູ່ອາໃສໃນທີ່ດິນດັ່ງກ່າວຢ່າງໝັ້ນຄົງ, ມີຄວາມສະຫງົບ, ແລະ ຢ່າງມີກຽດສັກສີ.[3]
- ເຖິງຢ່າງໃດກໍ່ດີ, ຄວາມໝັ້ນຄົງໃນທີ່ດິນແມ່ນໝາຍເຖິງຄວາມເປັນຈິງທີ່ໄດ້ຮັບການຮັບຮອງ ແລະ ໄດ້ຮັບການປົກປ້ອງໃນດ້ານສິດທີ່ມີຕໍ່ທີ່ດິນ ໂດຍສະເພາະໃນກໍລະນີທີ່ເກີດມີບັນຫາໃນທີ່ດິນ.[4] ຢ່າງໜ້ອຍສຸດ, ຄວາມໝັ້ນຄົງໃນທີ່ດິນກໍ່ແມ່ນຄວນໃຫ້ການປົກປ້ອງຜູ້ທີ່ເປັນເຈົ້າຂອງ/ຜູ້ທີ່ນໍາໃຊ້ໃຫ້ປາດສະຈາກການຖືກບີບບັງຄັບຕ່າງໆ[5] ຈາກການລ່ວງລະເມີດ ແລະ ຈາກການຂົ່ມຂູ່ອື່ນໆທີ່ກ່ຽວຂ້ອງກັບທີ່ດິນບໍ່ວ່າຈະເປັນການຄອບຄອງປະເພດໃດກໍ່ຕາມ. ໃນມູມມອງທີ່ ກ່າວມານີ້, ຄວາມໝັ້ນຄົງໃນທີ່ດິນແມ່ນຖືເປັນລະດັບຂອງຄວາມເຊື່ອໝັ້ນຂອງບຸກຄົນ, ຂອງກຸ່ມຄົນໃນການນໍາໃຊ້ ແລະ ຮັກສາທີ່ດິນ. ຂໍ້ມູນທີ່ກ່າວມາທັງໝົດນີ້ແມ່ນທີ່ມາຂອງຄວາມຜາສຸກໃນມູມຂອງສິດທິມະນຸດຄື:
- (ກ). ບໍ່ມີໃຜຈະຖືກຕັດແຍກອອກຈາກການເຂົ້າຫາ, ການນໍາໃຊ້ແລະການຄຸ້ມຄອງທີ່ດິນຂອງຕົນໂດຍບໍ່ມີເຫດຜົນ, ໂດຍບໍ່ໄດ້ປະຕິບັດໄປຕາມຫຼັກການກົດຫມາຍພາຍໃນແລະສາກົນ.
- (ຂ). ການຄອບຄອງທີ່ດິນຕາມກົດຫມາຍເຖິງວ່າໃນກົດຫມາຍບໍ່ໄດ້ກໍານົດໃນການອອກໃບຕາດິນໃຫ້, ແຕ່ສິດໃນການຄອບຄອງເປັນເຈົ້າຂອງທີ່ດິນນັ້ນແມ່ນອາດໄດ້ມາຈາກຮີດຄອງ, ຈາກສິ່ງທີ່ເຄີຍປະຕິບັດກັນມາແຕ່ດັ້ງເດີມແລະຮູບແບບອື່ນໆ.
- (ຄ.) ຕ້ອງມີມາດຕະການແກ້ໄຂທີ່ມີປະສິດຕິພາບໃນກໍລະນີທີ່ມີຂໍ້ຂັດແຍ່ງທີ່ດິນເກີດຂຶ້ນຫຼື ແກ້ໄຂການຮ້ອງຟ້ອງກ່ຽວກັບການເປັນເຈົ້າຂອງທີ່ດິນ, ນອກນັ້ນຕ້ອງມີກົນໄກແກ້ໄຂບັນຫາຕ່າງໆລວມເຖິງແກ້ໄຂການລະເມີດສິດໃນທີ່ດິນ.
- ໃນກໍລະນີທີ່ການຄອບຄອງທີ່ດິນໄດ້ມາໃນຮູບແບບບໍ່ເປັນທາງການ (ໄດ້ມາຈາກການຕັ້ງຖິ່ນຖານແບບບໍ່ໄດ້ເປັນທາງການ) ນັ້ນກໍ່ບໍ່ໄດ້ຫມາຍຄວາມວ່າຜູ້ທີ່ອາໃສໃນທີ່ດິນຕອນດັ່ງກ່າວຈະບໍ່ມີສິດໃນການຄຸ້ມຄອງປົກປັກຮັກສາທີ່ດິນດັ່ງກ່າວເລີຍ..

[3] Guiding principles on security of tenure for the urban poor in the report of the Special Rapporteur on adequate housing (A/HRC/25/54, chaps. II and III).
[4] Food and Agriculture Organization of the United Nations (FAO), "Land tenure and rural development", FAO Land Tenure Studies, No. 3, para. 3.31.
[5] Forced evictions can be broadly defined as "the permanent or temporary removal against the will of individuals, families and/or communities from the homes and/or land which they occupy, without the provision of, and access to, appropriate forms of legal or other protection" (Committee on Economic, Social and Cultural Rights, general comment No. 7 (1997) on the right to adequate housing: forced evictions).

# III. ເອກະສານສັງລວມ

ໃນພາກຕໍ່ໄປແມ່ນຈະ**ນໍາ**ສະເໜີເອກະສານສັງລວມກ່ຽວກັບຫຼັກການຕ່າງໆທີ່ກ່ຽວຂ້ອງລະຫວ່າງສິດທິມະນຸດກັບຫຼັກການຕ່າງໆທາງກົດໝາຍ ແລະ ບັນຫາທີ່ດິນ, ຈາກນັ້ນແມ່ນຈະມີຕົວຢ່າງກ່ຽວກັບການນໍາໃຊ້ຫຼັກການ ທີ່ກ່າວມານັ້ນໃນວົງຈອນບັນຫາທີ່ດິນ.

ໃນແຕ່ລະເອກະສານສັງລວມແມ່ນປະກອບມີ:

- ບັນທັດການນໍາສະເໜີກ່ຽວກັບສະພາບການທີ່ເກີດຂຶ້ນທີ່ສາມາດນໍາເອົາຫຼັກການຕ່າງໆໄປໃຊ້ໄດ້
- ບົດສະຫຼຸບຂອງຂໍ້ກໍານົດທີ່ສໍາຄັນຕ່າງໆຂອງຫຼັກການສາກົນທີ່ອາດຈະມີຂໍ້ຜູກມັດ ຫຼື ບໍ່ມີທາງກົດໝາຍ, ແຕ່ຫຼັກການເລົ່ານັ້ນແມ່ນເອົາມາຈາກຕົ້ນສະບັບແຫຼ່ງຕ່າງໆ.

  ມີຕົວຢ່າງກ່ຽວກັບວິທີທີ່ເອົາຫຼັກການຕ່າງໆໄປນໍາໃຊ້ແລະໄດ້ຮັບການຕີຄວາມໝາຍຈາກອົງການ ສປຊ ແລະ ກົນໄກສິດທິມະນຸດສາກົນ;[6]

  ມີຕົວຢ່າງຂອງຄະດີທາງກົດໝາຍຈາກພາຍໃນ, ພາກພື້ນ ແລະ ສາກົນ;[7]
- ມີຂໍ້ມູນທີ່ກ່ຽວຂ້ອງກັບບັນດາຫຼັກການສາກົນ ແລະ ຄູ່ມືຕ່າງໆທີ່ໄດ້ຖືກຮັບຮອງ ແລະ ການພັດທະນາມາຈາກກົນໄກສິດທິມະນຸດຂອງອົງການ ສປຊ ຫຼື ອົງການອື່ນໃນເຄືອຂ່າຍຂອງ ສປຊ;[8]

### ໝາຍເຫດ: ບົດສະຫຼຸບຂອງຂໍ້ກໍານົດທີ່ສໍາຄັນຕ່າງໆ

ບົດສະຫຼຸບຂອງຂໍ້ກໍານົດທີ່ສໍາຄັນຈາກກົນໄກສາກົນແມ່ນໄດ້ລວບລວມເອົາຫຼັກການທີ່ສໍາຄັນກ່ຽວຂ້ອງ ແລະ ບັນດາມາດຕາທີ່ມີໃນກົນໄກສາກົນຕ່າງໆມາເພື່ອສ້າງຄວາມສະດວກໃນການຊອກຫາແຫຼ່ງທີ່ມາຂອງຂໍ້ມູນ. ຢ່າງໃດກໍ່ດີ, ເນື້ອໃນລະອຽດຂອງແຕ່ລະຂໍ້ກໍານົດ ກໍ່ຄືບັນດາຂໍ້ຈໍາກັດ ແລະ ເງື່ອນໄຂຕ່າງໆທີ່ມີໃນຄູ່ມືນີ້ ແມ່ນອາດຈະໃຫ້ຂໍ້ມູນບໍ່ພຽງພໍ. ດັ່ງນັ້ນ, ຄູ່ມືສະບັບນີ້ແມ່ນ ຂໍແນະນໍາໃຫ້ຜູ້ອ່ານ ຫຼື ຜູ້ທີ່ຈະເອົາໄປນໍາໃຊ້ນັ້ນແມ່ນຕ້ອງໄດ້ສຶກສາເພີ່ມເຕີມຈາກເອກະສານຕົ້ນສະບັບໄປນໍາ.

**ແຫຼ່ງຂອງຂໍ້ມູນເພີ່ມເຕີມ**

- ເອກະສານທາງການຕ່າງໆຂອງ ສປຊ ທີ່ໃຊ້ໃນບົດສະຫຼຸບສັງລວມນີ້ເຊັ່ນ: ບົດລາຍງານຂອງກົນໄກພິເສດ ຫຼື ບົດສະຫຼຸບສັງເກດການຂອງອົງກອນສິດທິມະນຸດ ແມ່ນສາມາດເອົາໄດເພີ່ມເຕີມທີ່ເວບໄຊ (http://documents.un.org).
- ຄໍາແນະນໍາທົ່ວໄປຫຼືຄໍາເຫັນຕ່າງໆຂອງອົງກອນສິດທິມະນຸດແມ່ນສາມາດເອົາໄດເພີ່ມທີ່ www.ohchr.org/EN/HRBodies/Pages/TBGeneralComments.aspx.

**ແຫຼ່ງອື່ນໆທີ່ໜ້າສົນໃຈ**

- ເອກະສານຊອບທາຍສິດທິມະນຸດສາກົນ: http://uhri.ohchr.org/
- ຫຼັກກົດໝາຍອົງກອນສິດທິມະນຸດ: http://juris.ohchr.org/
- ອົງກອນສິດທິມະນຸດ: http://tbinternet.ohchr.org/_layouts/treatybodyexternal/TBSearch.aspx?Lang=en

---

[6] The United Nations human rights mechanisms include:
- * The Human Rights Council and the mandates it has established, including:
  - o Special procedure mandate holders (such as special rapporteurs, independent experts, working groups on specific issues or on countries);
  - o The Advisory Committee;
  - o The universal periodic review;
- Treaty bodies established under United Nations human rights treaties.

For more information on these human rights bodies, refer to: www.ohchr.org/en/hrbodies/Pages/HumanRightsBodies.aspx.

[7] *Land and Human Rights: Annotated Compilation of Case Law* (United Nations publication, HR/PUB/15/5) provides more comprehensive references to these and other cases relevant to land and human rights.

[8] See chap. IV below.

# ບົດສະຫຼຸບສັງລວມ
# ກ. ການບໍ່ຈໍາແນກ ແລະ ຄວາມສະເໝີພາບ
## ບົດນໍາສະເໜີ

ມີຫຼາຍໆກໍລະນີ, ການເຂົ້າເຖິງ, ການນໍາໃຊ້ ແລະ ການຄວບຄອງທີ່ດິນແມ່ນໄດ້ຖືກປະຕິເສດເນື່ອງຈາກມີບັນຫາການຈໍາແນກເກີດຂື້ນ.

ສໍາລັບຜູ້ຍິງໃນຫຼາຍໆປະເທດແລ້ວ, ການຈໍາແນກໃນການແຕ່ງງານ, ການສືບທອດມູນມໍລະດົກ, ຄວາມສາມາດດ້ານກົດໝາຍ ຫຼື ການເຂົ້າຫາຊັບສິນທາງການເງິນ ແລະ ຊັບສິນອື່ນໆແມ່ນເປັນບັນຫາທີ່ຫຍຸ້ງຍາກຫຼາຍ. ດັ່ງນັ້ນບັນດາຜູ້ຍິງເຫຼົ່ານັ້ນຈຶ່ງຂາດຄວາມໝັ້ນຄົງໃນການຄອບຄອງທີ່ດິນເນື່ອງມາຈາກບັນຫາທາງການຈໍາແນກທາງເພດທີ່ມີໃນຊີວິດວິດປະຈໍາວັນເຊິ່ງມັນໄດ້ກະທົບໃສ່ການດໍາລົງຊີວິດຂອງພວກເຂົາເຊັ່ນ: ໃນດ້ານຄອບຄົວທີ່ອາດພາໄປສູ່ບັນຫາການຢ່າຮ້າງ, ການເສຍຊີວິດ, ຫຼື ເກີດການແຕ່ງງານໃໝ່ຂອງຄູ່ຜົວເມຍເປັນຕົ້ນ. ມີຕົວຢ່າງການສຶກສາທີ່ໄດ້ເຜີຍໃຫ້ເຫັນວ່າຜູ້ຍິງທີ່ມີສິດໄດ້ຄອບຄອງທີ່ດິນ ຫຼື ມີທີ່ຢູ່ອາໃສແມ່ນມີໂອກາດໃນການຕັດສິນໃຈໃນການຊອກວຽກເຮັດວຽກທໍາ ຫຼື ມີການເຂົ້າເຖິງລະບົບສາທາລະນະສຸກໄດ້ດີກ່ວາຜູ້ຍິງທີ່ບໍ່ມີສິດໃນການຄອບຄອງທີ່ດິນ ຫຼື ມີທີ່ຢູ່ອາໃສເລີຍ.[9]

ບັນຫາການຈໍາແນກທີ່ມັນຝັງເລິກເຊັ່ນ: ການຈໍາແນກທາງຊົນຊັ້ນແມ່ນມັນໄດ້ເປັນອຸປະສັກໃນການຂັດຂວາງການເຂົ້າຫາສິດຜົນປະໂຫຍດຈາກການນໍາໃຊ້ທີ່ດິນ.[10] ການທີ່ບໍ່ໄດ້ຖືກຮັບຮູ້ສິດໃນການຄອບຄອງທີ່ດິນ ແມ່ນຈະຖືກວ່າເປັນບັນຫາຂອງການຈໍາແນກ ແລະ ກົດກັນຄົນທີ່ບໍ່ມີທີ່ດິນໃນການເຂົ້າຫາການບໍລິການທາງສັງຄົມ ແລະ ການຕັ້ງຖິ່ນຖານຕ່າງໆ. ຕົວຢ່າງ: ຜູ້ທີ່ອາໃສຢູ່ໃນທີ່ດິນທີ່ບໍ່ໄດ້ຖືກຮັບຮູ້ເປັນທາງການແມ່ນຈະຖືກປະຕິເສດສິດ

"ໃນປະເທດຄາເມລູນແມ່ນບໍ່ມີຂໍ້ກໍານົດທາງກົດໝາຍໃດແກ່ຜູ້ຍິງໃນການມີສິດຄອບຄອງຊັບສິນຕ່າງໆ. ອີງຕາມກົດແຫ່ງຮີດຄອງ, ຜູ້ຍິງແມ່ນບໍ່ສາມາດສືບທອດທີ່ດິນ, ແຕ່ວ່າຜູ້ຍິງຈະໄດ້ສ່ວນແບ່ງທີ່ດິນຈາກສາມີທີ່ແຕ່ງງານນໍາຢູ່ນອກຊຸມຊົນຂອງຕົນເທົ່ານັ້ນ. ແຕ່ວ່າໃນກໍລະນີທີ່ສາມີຕາຍ, ຊັບສິນທີ່ດິນກໍ່ຕ້ອງຕົກເປັນຂອງຄອບຄົວຂອງສາມີທີ່ ແຕ່ງງານນໍານັ້ນຄືເກົ່າ."

---

*ທີ່ມາຂໍ້ມູນ*: Report of the Special Rapporteur on violence against women (E/CN.4/2000/68/Add.5), para. 14.

"ຄະນະກໍາມະທິການສິດທິມະນຸດສະແດງຄວາມເປັນຫ່ວງວ່າການເຂົ້າເຖິງສິດທີ່ກໍານົດໃນສົນທິສັນຍາສາກົນວ່າດ້ວຍສິດທິທາງດ້ານການເມືອງ ແລະ ພົນລະເຮືອນນັ້ນອາດຖືກກີດກັ້ນຈາກອໍານາດຂອງເຈົ້າໜ້າທີ່ໃນຊຸມຊົນຢູ່ໃນເມືອງ Flanders, ກ່ຽວກັບບັນຫາການຊື້ທີ່ດິນໃນຊຸມຊົນ, ການເຂົ້າເຖິງການບໍລິການສັງຄົມ ແລະ ທີ່ຢູ່ອາໃສຕ່າງໆເຊິ່ງໄດ້ມີການວາງເງື່ອນໄຂວ່າຕ້ອງສາມາດເວົ້າ ຫຼື ຮຽນພາສາຊາວດັດສ ເທົ່ານັ້ນທີ່ສາມາດຊື້ ຫຼື ມາຢູ່ໃນຊຸມຊົນດັ່ງກ່າວໄດ້. ການປະຕິບັດນີ້ແມ່ນເປັນການຈໍາແນກຄົນທີ່ມີຄວາມຕ່າງໃນສັງຄົມ."

---

*ທີ່ມາຂອງຂໍ້ມູນ*: Concluding observations of the Human Rights Committee on Belgium (CCPR/C/BEL/CO/5), para. 10.

"ການຍົກຍ້າຍຖິ່ນຖານຂອງຄົນຈໍານວນຫຼາຍ ແລະ ຂາດທີ່ຢູ່ອາໃສແມ່ນຈະເປັນສາຍເຫດຂອງຄວາມຂັດແຍ່ງໃນທີ່ດິນ, ມີຫຼາຍໆທ່ານທີ່ໄດ້ໃຫ້ຄໍາເຫັນໄວ້ວ່າການຈັດແບ່ງທີ່ດິນຕາມຮີດຄອງປະເພນີທີ່ປະຕິບັດຕາມຜູ້ນໍາທາງສາດສະໜາໂດຍສະເພາະແມ່ນຖ້າມີການແບ່ງປັນທີ່ດິນແບບບໍ່ມີຄວາມໂປ່ງໃສແລ້ວ, ບັນຫາດັ່ງກ່າວແມ່ນອາດນໍາໄປສູ່ການຂັດແຍ່ງດ້ານການຈໍາແນກຕໍ່ກັບກຸ່ມຄົນບາງກຸ່ມໃນຊຸມຊົນທີ່ບໍ່ມີອໍານາດໃນການຕໍ່ລອງເຊັ່ນ: ຜູ້ຍິງທີ່ເດີນທາງກັບຄືນສູ່ທ້ອງຖິ່ນ ແລະ ເດັກກໍ່າພ້າເປັນຕົ້ນ."

*ທີ່ມາຂອງຂໍ້ມູນ*: Report of the Representative of the Secretary-General on the human rights of internally displaced persons: Mission to the Sudan (E/CN.4/2006/71/Add.6), para. 47.

---

[9] See Hema Swaminathan, Rahul Lahoti and Suchitra J. Y., "Women's property, mobility, and decisionmaking: Evidence from rural Karnataka, India", Discussion Paper, No. 01188 (Washington, D.C., International Food Policy Research Institute, June 2012). Available from www.ifpri.org/sites/default/files/publications/ifpridp01188.pdf.

[10] Jeetendra P. Aryal and Stein T. Holden, "Caste discrimination, land reforms and land market performance in Nepal", Centre for Land Tenure Studies Working Paper, No. 01/11 (Ås, Norwegian University of Life Sciences, June 2011). Available from: www.umb.no/statisk/clts/papers/CLTS_WP1_2011.pdf.

ໃນການເຂົ້າຫາຄວາມປອດໄພໃນສັງຄົມ, ເຂົ້າຫາລະບົບການສຶກສາ ແລະ ສາທາ ອັນເນື່ອງມາຈາກເຂົາເຈົ້າບໍ່ສາມາດຂໍລົງທະບຽນເປັນພົນລະເມືອງໄດ້.[11]

ຕາມທີ່ທາງນັກລາຍງານພິເສດເຄີຍໄດ້ລາຍງານທີ່ຜ່ານມາກ່ຽວກັບການມີທີ່ຢູ່ອາໃສທີ່ພໍພຽງ "ຄວາມປອດໄພໃນສັງຄົມແມ່ນມີຄວາມສໍາຄັນຕໍ່ການຮັບປະກັນກຽດສັກສີຄວາມເປັນຄົນ ແລະ ຄວາມຜາສຸກດ້ານສິດທິມະນຸດໃນເວລາທີ່ໄດ້ປະເຊີນໜ້າກັບບັນຫາການຖືກປະຕິເສດຮັບຮູ້ໃນທີ່ຢູ່ອາໃສ." ໃນບາງຄັ້ງ ຜູ້ທີ່ບໍ່ມີທີ່ຢູ່ອາໃສ ຫຼື ບຸກຄົນທີ່ບໍ່ໄດ້ລົງທະບຽນທີ່ຢູ່ອາໃສແມ່ນບໍ່ສາມາດເຂົ້າເຖິງການບໍລິການທາງສັງຄົມເຖິງແມ່ນວ່າຈະມີບາງເງື່ອນໄຂກໍ່ຕາມ ຫຼື ມີອຸປະສັກທາງລາດສະການບາງຢ່າງ. ອຸປະສັກທີ່ກ່າວມານີ້ກໍໃຫ້ເກີດການຈໍາແນກກ່ຽວກັບພື້ນຖານໃນການຄອບຄອງທີ່ດິນ. ດັ່ງນັ້ນ ລັດທີ່ກ່ຽວຂ້ອງຄວນຈະເຮັດທຸກວິທີທາງໃນການແກ້ໄຂບັນຫາທີ່ເກີດຂື້ນໂດຍສະເພາະຕໍ່ກັບຜູທີ່ບໍ່ມີບ້ານ ຫຼື ບໍ່ມີຖານະໃນການເຂົ້າສູ່ລະບົບການບໍລິການທາງສັງໄດ້ຢ່າງເຕັມທີ່, ຕໍ່ກັບບັນຫານີ້ແມ່ນບໍ່ຄວນເລື່ອງການລົງທະບຽນທີ່ຢູ່ອາໃສເພື່ອມາເປັນເງື່ອນໄຂກີດກັ້ນການເຂົ້າສູ່ການບໍລິການທາງສັງຄົມຕ່າງໆ.[12]

## ບັນດາຫຼັກການສາກົນທີ່ສາມາດນໍາໃຊ້ເຂົ້າໃນບັນຫາທີ່ດິນ

ຕາມຫຼັກການສິດທິມະນຸດແລ້ວ ຈະບໍ່ມີໃຜຕົກຢູ່ໃນການຖືກຈໍາແນກບໍ່ວ່າດ້ານນິຕິໃນ ຫຼື ພຶດຕິໃນທີ່ກ່ຽວຂ້ອງໃນຄວາມມີອິດສະຫລະພາບ ຫຼື ການນໍາໃຊ້ສິດທິຕ່າງໆບົນພື້ນຖານເຊື້ອຊາດ, ສີຜິວ, ວັນນະ, ເພດ, ພາສາ, ຄວາມຄິດທາງການເມືອງ, ສັນຊາດ, ຊົນເຜົ່າ ຫຼື ທີ່ມາໃນສັງຄົມ, ຄວາມ ທຸກຍາກ, ຄວາມພິການ, ແຫຼ່ງກໍາເນີດ ແລະ ອື່ນໆ.

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 2, ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາ**ທໍາ** ມາດຕາ 2, ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 2 (1), ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບການຈໍາແນກທາງເຊື້ອຊາດ ມາຕດຕາ 1 (1), ແລະ ສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການ ມາດຕາ 5 (2)

ມະນຸດທຸກຄົນແມ່ນມີຄວາມເທົ່າທຽມກັນຕໍ່ໜ້າກົດໝາຍ ແລະ ຈະບໍ່ມີການຖືກຈໍາແນກໃດໆໃນການໄດ້ຮັບການປົກປ້ອງທາງກົດໝາຍ

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 7, ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 26, ສົນທິສັນຍາສາກົນວ່າດ້ວຍການ ລົບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງ ມາດຕາ 15

## ຄວາມສະເໝີພາບລະຫວ່າງຍິງ-ຊາຍ

ຍິງ-ຊາຍແມ່ນມີຄວາມສະເໝີພາບກັນໃນສິດທິມະນຸດທຸກດ້ານ.

ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທໍາ ມາດຕາ 3, ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 3, ສົນທິສັນຍາສາກົນວ່າດ້ວຍການ ລົບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງ ມາດຕາ 2 (a)

ລັດຖະບານທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີໃນການຮັບປະກັນຄວາມເທົ່າທຽມຂອງຄູ່ຜົວເມຍໃນການແຕ່ງງານ, ລະຫວ່າງການຢູ່ຮ່ວມກັນ ແລະ ໃນໄລຍະການແຍກກັນ.

ສົນທິສັນຍາສາກົນວ່າດ້ວຍສິດທິທາງ ການເມືອງ ແລະ ພົນລະເຮືອນ ມາດຕາ23 (4)

ລັດທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີໃນການລົບລ້າງທຸກຮູກການໃນການຈໍາແນກແມ່ຍິງໃນຊົນນະບົດ. ໃນກໍລະນີນີ້, ລັດທີ່ກ່ຽວຂ້ອງຕ້ອງຮັບປະກັນວ່າແມ່ຍິງໄດ້ຮັບສິດທິຄວາມສະເໝີພາບເທົ່າທຽມກັບຜູ້ຊາຍໃນດ້ານທີ່ດິນ ແລະ ການປະຕິຮູບທີ່ດິນ ກໍ່ຄື ໃນໂຄງການສ້າງທີ່ຢູ່ອາໃສໃນທີ່ດິນໃໝ່.

[11] Amnesty International, "Serbia urged to stop forced evictions of Roma", press release, 7 April 2011. Available from: www.amnesty.org/en/press-releases/2011/04/serbia-urged-stop-forced-evictions-roma/.
[12] A/HRC/25/54, para. 53.

(ສົນທິສັນຍາສາກົນວ່າດ້ວຍການ ລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ມາດຕາ 14 (2) (g))

ລັດທີ່ກ່ຽວຂ້ອງຕ່າງໆຕ້ອງອຳນວຍຄວາມສະດວກແກ່ແມ່ຍິງໃນດ້ານສິດທາງພົນລະເຮືອນ, ທາງກົດໝາຍ ໃຫ້ທຽບເທົ່າກັບເພດຊາຍ ແລະ ໃຫ້ໂອກາດໃນການສະແດງຄວາມສາມາດຕ່າງໆຢ່າງເທົ່າທຽມກັນ ໂດຍສະເພາະແມ່ນການໃຫ້ສິດທິເທົ່າທຽມກັບຜູ້ຊາຍ ໃນການເຮັດສັນຍາ ແລະ ມີສິດບໍລິຫານຈັດການກັບຊັບສິນ, ພ້ອມນັ້ນແມ່ຍິງ ຄວນໄດ້ຮັບຄວາມເທົ່າທຽມໃນທຸກຂັ້ນຕອນການດຳເນີນຄະດີໃນສານ ຫຼື ໃນເວລາພິຈາລະນາຄະດີ. ລັດທີ່ກ່ຽວຂ້ອງ ຕ້ອງເຮັດທຸກວິທີທາງເພື່ອລົບລ້າງການຈຳແນກຕໍ່ແມ່ຍິງບໍ່ວ່າຊິເປັນດ້ານຊີວິດຄອບຄົວ ແລະ ການແຕ່ງງານ. ຫຼັກການທີ່ກ່າວມານີ້, ລັດທີ່ກ່ຽວຂ້ອງຕ້ອງຮັບປະກັນສິດເທົ່າທຽມໃຫ້ແກ່ທັງຄູ່ຜົວເມຍໃນການຖືສິດຄອບຄອງທີ່ດິນ, ການຊື້ກິດຈະການຕ່າງໆ, ການຄຸ້ມຄອງ, ການນຳໃຊ້ ແລະ ການຂາຍຊັບສິນ.

ສົນທິສັນຍາສາກົນວ່າດ້ວຍການ ລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ມາດຕາ 15 (2 ແລະ 16 (1 (c) ແລະ (h)

## *ຂໍ້ຫ້າມໃນການຈຳແນກເຊື້ອຊາດ*

ລັດທີ່ກ່ຽວຂ້ອງຕ້ອງດຳເນີນການຫ້າມ ແລະ ລົບລ້າງທຸຮູບການຈຳແນກເຊື້ອຊາດ ແລະ ຕ້ອງຮັບປະກັນສິດໃຫ້ແກ່ທຸກຄົນໃຫ້ໄດ້ຄວາມເທົ່າທຽມຕໍ່ໜ້າກົດໝາຍ, ມີຄວາມຜາສຸກໃນການຄອບຄອງຊັບສິນຕ່າງໆໄດ້ແບບເປັນສ່ວນຕົວພ້ອມທັງມີສິດເປັນເຈົ້າຂອງຮ່ວມກັບຜູ້ອື່ນໆ, ມີສິດໃນການສືບທອດ ແລະ ສ້າງບ້ານຢູ່ອາໃສ.

ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບການຈຳແນກກເຊື້ອຊາດ ມາດຕາ 5 (d) ແລະ *5 (d) (v) and (vi), ແລະ (e) (iii))*

ຄົນພື້ນເມືອງ ແລະ ບຸກຄົນຕ່າງໆແມ່ນມີສິດເສລີພາບເທົ່າທຽມກັບຄົນອື່ນໆ ແລະ ມີສິດອິດສະຫຼະຈາກທຸກການຈຳແນກ, ມີສິດໃນການຮຽກຮ້ອງສິດໂດຍສະເພາະແມ່ນອີງຕາມພື້ນຖານຄວາມເປັນຄົນພື້ນເມືອງຂອງເຂົາເຈົ້າ

(ຖະແຫຼງການ ສປຊ ວ່າດ້ວຍສິດຂອງຄົນພື້ນເມືອງ ມາດຕາ 2, ສົນທິສັນຍາວ່າດ້ວຍຄົນພື້ນເມືອງ ແລະ ຄົນຊົນເຜົ່າໃນປະເທດເອກະລາດ (ເລກທີ 169), 1989, ອົງການແຮງງານສາກົນ ມາດຕາ (3)

## **ຕົວຢ່າງຂອງການນຳໃຊ້:**

ຫຼັກການວ່າດ້ວຍການຫ້າມຈຳແນກ ແລະ ຄວາມສະເໝີພາບເປັນປັດໃຈພື້ນຖານໃນການໃຊ້ສິດ ແລະ ມີຄວາມຜາສຸກກັບສິດທິມະນຸດເຊິ່ງລວມມີຜູ້ທີ່ກ່ຽວຂ້ອງກັບການເຂົ້າເຖິງ, ການນຳໃຊ້ ແລະ ການຄອບຄອງທີ່ດິນຕ່າງໆ.

ການຈຳແນກພາຍໃຕ້ກົດໝາຍສິດທິມະນຸດສາກົນໝາຍເຖິງການຕັດແຍກ, ການເອົາອອກ, ການຈຳກັດ, ຫຼື ການກີດຂວາງ ຫຼື ການກະທຳທີ່ແຕກຕ່າງອື່ນໆທີ່ເປັນພື້ນຖານຂັດກັບຂໍ້ຫ້າມການຈຳແນກທີ່ມີລັກສະນະເປັນທາງອ້ອມ ຫຼື ໂດຍກົງ ແລະ ມີຄວາມຕັ້ງໃຈ ຫຼື ມີວັດຖຸປະສົງໃນການທຳລາຍ ຫຼື ຂັດຂວາງການຮັບຮູ້, ການມີອິດສະຫລະ, ແລະ ຂັດຂວາງການນຳໃຊ້ສິດໃນຄວາມເທົ່າທຽມໃນດ້ານສິດທິມະນຸດ.[13]

ການສັງເກດລັກສະນະຂອງການຈຳແນກຕ້ອງເບິ່ງທັງດ້ານພຶດຕິໃນ ແລະ ອັດຕະໃນໄປພ້ອມກັນ. ການຈຳແນກທາງດ້ານພຶດຕິໃນແມ່ນມັນສະແດງອອກໃນເວລາທີ່ລັດຖະບານໄດ້ອອກລັດຖະທຳມະນູນ, ອອກກົດໝາຍ, ແລະ ນະໂຍບາຍຕ່າງໆທີ່ມີການຈຳແນກຕໍ່ບຸກຄົນ ຫຼື ກຸ່ມຄົນ. ຕາມຄຳເຫັນແນະນຳເລກທີ 20 (2009), ຄະນະກຳມະທິການສິດທິມະນຸດດ້ານສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳໄດ້ຍົກບັນຫາການຈຳແນກມາໂຍງໃສ່ເລື່ອງຂອງຊັບສິນຕ່າງໆນຳ.

[13] See Committee on Economic, Social and Cultural Rights, general comment No. 20 (2009) on non-discrimination in economic, social and cultural rights, para. 7.

– ເຊັ່ນ: ໜຶ່ງໃນຫຼາຍໆຂໍ້ຫ້າມທີ່ບໍ່ໃຫ້ມີການຈຳແນກ (ວັກ 25, ຄະນະ**ກຳ**ມະທິການໃຫ້ຄຳເຫັນໄວ້ໃນຄຳເຫັນນະນຳເລກທີ 15 (2002) ກ່ຽວກັບສິດໃນດ້ານນ້ຳວ່າຄວາມຜາສຸກໃນດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳເຊັ່ນ: ການເຂົ້າເຖິງການບໍການ ດ້ານນ້ຳ ແລະ ການປົກປ້ອງຈາກຖືກບັງຄັບໃຫ້ຍົກຍ້າຍ, ການເປັນເຈົ້າຂອງທີ່ດິນ ຫຼື ການຄອບຄອງ ຫຼື ຮູບການຄຸອງທີ່ດິນອື່ນໆ ຄວນບໍ່ຖືກຈຳກັດສະຖານະການຄອບຄອງທີ່ພາຍໃຕ້ເງື່ອນໄຂໃດໜຶ່ງເຊິ່ງລວມມີການຕັ້ງຖິ່ນຖານໃນທີ່ດິນໃດໜຶ່ງທີ່ບໍ່ໄດ້ຮັບອານຸຍາດ ທາງການເທື່ອ (ວັກທີ 16 (c).

ເຖິງຢ່າງໃດກໍ່ດີ, ການປ້ອງກັນ ຫຼື ການລົບລ້າງການຈຳແນກທີ່ມີລັກສະນະທາງການແມ່ນອາດເຮັດໃຫ້ມີການປ່ຽນແປງ ສະພາບຂອງບຸກຄົນ ຫຼື ກຸ່ມຄົນທີ່ເຄີຍຖືກຈຳແນກມາກ່ອນ ຫຼືວ່າ ມັນຈະຊ່ວຍຮັບປະກັນຄວາມເທົ່າທຽມໃນການຈັດຕັ້ງປະຕິບັດຢ່າງ ມີປະສິດຕິຜົນ. ໃນບົດຄຳເຫັນເລກທີ 20 (2009), ຄະນະກຳມະທິການສິດທິມະນຸດໃຫ້ຄຳເຫັນວ່າການດຳເນີນການຈັດຕັ້ງປະຕິບັດ ເພື່ອລົບລ້າງບັນຫາການຈຳແນກນັ້ນແມ່ນຈຳເປັນຕ້ອງ 'ໃສ່ໃຈເປັນພິເສດຕໍ່ກັບຜູ້ທີ່ເຄີຍຖືກລະເມີດ ແລະ ບັນຫາທີ່ກຳລັງເກີດຂຶ້ນ." ຕໍ່ກັບບັນຫານີ້ ລັດທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີທາງໃນການປ້ອງກັນ, ລົບລ້າງ, ແລະ ລຸດຜ່ອນເງື່ອນໄຂ ແລະ ຄຸນລັກສະນະທີ່ພາໃຫ້ເກີດ ຫຼື ເປັນສາຍເຫດຂອງການຈຳແນກທາງດ້ານພຶດຕິໃນ. ຕົວຢ່າງ: ຕ້ອງຮັບປະກັນວ່າທຸກຄົນແມ່ນມີຄວາມເທົ່າທຽມໃນການເຂົ້າເຖິງທີ່ຢູ່ ອາໃສທີ່ພຽງພໍ, ເຂົ້າເຖິງແຫຼ່ງນ້ຳ ແລະ ສຸຂະອານາໄມທີ່ມັນຈະຊ່ວຍໃນການກຳຈັດບັນຫາການຈຳແນກທີ່ມີຕໍ່ແມ່ຍິງ ແລະ ເດັກຍິງ, ແລະ ຜູ້ອື່ນໆທີ່ດຳລົງຊີວິດໃນເຂດຊົນນະບົດ ແລະ ໃນບ່ອນອື່ນໆແບບບໍ່ເປັນທາງການນັ້ນໄດ້ (ວັກທີ 8).

## ຄວາມສະເໝີພາບລະຫວ່າງຍິງ-ຊາຍ

ອົງກອນສິດທິມະນຸດ ສປຊ ໄດ້ຢືນຢັນເລື້ອຍໆກ່ຽວກັບສິດເທົ່າທຽມຂອງແມ່ຍິງໃນການເຂົ້າເຖິງ, ການນຳໃຊ້ ແລະ ການຄຸ້ມຄອງທີ່ ດິນ. ຕາມຄຳເຫັນເລກທີ່ 16 (2005) ກ່ຽວກັບສິດທີເທົ່າທຽມຂອງຍິງ-ຊາຍໃນດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ, ທາງຄະນະກຳມາທິການສິດທິມນຸດດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳກ່າວວ່າການຈັດຕັ້ງປະຕິບັດເພື່ອ ຄວາມເທົ່າທຽມ ດ້ານສິດທິເພື່ອໃຫ້ໄດ້ຕາມມາດຕະຖານຂອງການດຳລົງຊີວິດລະຫວ່າງຍິງ-ຊາຍນັ້ນແມ່ນຕ້ອງ 'ໃຫ້ສິດແກ່ແມ່ຍິງໃນ ການຄອບຄອງ, ການນຳໃຊ້ຫຼືວ່າການຄຸ້ມຄອງບ້ານຢູ່ອາໃສ, ຄຸ້ມຄອງທີ່ດິນແລະຊັບສິນຕ່າງໆໃຫ້ໄດ້ເທົ່າທຽມກັບເພດຊາຍ, ແມ່ຍິງກໍ່ຕ້ອງ ມີຄວາມ ສາມາດໃນການເຂົ້າເຖິງສິ່ງອຳນວຍຄວາມສະດວກຕ່າງໆທີ່ຈຳເປັນເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດ' (ວັກທີ 28). ໃນບົດ ຄຳເຫັນທົ່ວໄປເລກທີ 21 (1994) ກ່ຽວກັບຄວາມສະເໝີພາບໃນການແຕ່ງງານ ແລະ ໃນສາຍສຳພັນທາງຄອບຄົວ, ທາງຄະນະກຳມະທິການດ້ານການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງໄດ້ເນັ້ນບັນຫາທີ່ສຳຄັນວ່າມັນມີຄວາມກ່ຽວເນື່ອງກັບດ້ານຊັບ ສິນ 'ໃນຫຼາຍໆປະເທດທີ່ດຳເນີນໂຄງການປະຕິຮູບທີ່ດິນ ຫຼື ການຈັດແບ່ງທີ່ດິນຄືນໃໝ່ໃຫ້ແກ່ກຸ່ມຄົນທີ່ມີຄວາມແຕກຕ່າງດ້ານ ຊົນເຜົ່າ, ດ້ານສິດຂອງແມ່ຍິງ, ສະຖານະພາບການແຕ່ງງານ, ແມ່ນຕ້ອງໃຫ້ມີຄວາມເທົ່າທຽມໃນການໄດ້ທີ່ດິນຈາກປະຕິຮູບທີ່ດິນ ໂດຍໃຫ້ລະມັດລະວັງເບິ່ງເລື່ອງທີ່ອາດມີການການເອົາປຽບຈາກເພດຊາຍ' (ວັກທີ 27).

ການຖືກປະຕິເສດເສລີພາບທາງກົດໝາຍແມ່ນຈະເປັນອຸປະສັກກີດຂວາງຕໍ່ການຄອບຄອງທີ່ດິນຂອງແມ່ຍິງ. ຕາມຄຳເຫັນເລກທີ 21 (1994), ຄະນະ**ກຳ**ມະທິການໄດ້ຢືນຢັນວ່າ 'ໃນເມື່ອແມ່ຍິງບໍ່ສາມາດເຮັດສັນຍາໃດໆໄດ້ເລີຍ, ຫຼື ບໍ່ສາມາດເຂົ້າເຖິງການ ບໍລິການທາງການເງິນ, ຫຼື ສາມາດເຂົ້າເຖິງໄດ້ແຕ່ອາດມີລັກສະນະຈຳກັດໂດຍຕ້ອງໃຫ້ສາມີ ຫຼື ຜູ້ຊາຍໃນຄອບຄົວເປັນຄົນ ຄ້ຳປະ ກັນກ່ອນ, ໃນກໍລະນີນີ້ແມ່ນເພດຍິງກຳລັງຖືກປະຕິເສດສະຖານະພາບຕາມກົດໝາຍ' (ວັກທີ 7). ອີງຕາມການສັງເກດຂ້າງເທິງນີ້, ຄະນະ ກຳມະທິການຮຽກຮ້ອງວ່າ 'ທຸກລັດພາຄີທີ່ໃຫ້ການສະໜັບສະໜູນຕໍ່ຕ້ານປະກົດການຄວາມບໍ່ເທົ່າທຽມລະຫວ່າງຍິງຊາຍທີ່ເກີດຂຶ້ນໃນ ປະເທດ ແມ່ນໄດ້ມີຄວາມກ້າວໜ້າໃນການຈັດຕັ້ງປະຕິບັດສົນທິສັນຍາ ແລະ ມີທ່າທີໃນການຖອນຂໍ້ສະຫງວນຂອງຕົນໃນມາດຕາຕ່າງໆທີ່ ໃຫ້ໄວ້ (ວັກທີ 43) ແລະ ຍິນດີທີ່ຈະອອກກົດໝາຍ ແລະ ຈັດຕັ້ງປະຕິບັດນິຕິກຳຕ່າງໆທີ່ຈຳເປັນເພື່ອໃຫ້ໄດ້ຕາມວັດຖຸປະສົງຂອງສົນທິສັນ ຍາ (ວັກທີ 49) '. ມີຕົວຢ່າງ**ຄຳ**ເຫັນທີ່ຄ້າຍຄືກັນຕາມເອກະສານເລກທີ 28 (2000) ກ່ຽວກັບສິດທິຄວາມເທົ່າທຽມລະຫວ່າງຍິງຊາຍ ວ່າ 'ຄວາມສາມາດຂອງແມ່ຍິງໃນການເປັນເຈົ້າຂອງຊັບສິນ, ໃນການເຮັດສັນຍາ ຫຼື ໃນການນຳໃຊ້ສິດທາງດ້ານພົນ ລະເຮືອນແມ່ນບໍ່ຄວນຖືກຈຳກັດສະຖານະພາບຕາມຖານະຂອງການແຕ່ງງານ ຫຼື ຕາມວິທີຊີວິດທີ່ເຄີຍປະຕິບັດອື່ນໆ' (ວັກທີ 19).

ເພື່ອນຳເອົາຄູ່ມືຫຼັກການຕ່າງໆຂ້າງເທິງນີ້ໄປໃຊ້, ທາງຄະນະກຳມະທິການດ້ານການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງໄດ້ພິມເຜີຍແຜ່ຄຳແນະນຳຕ່າງໆໃຫ້ແກ່ລັດພາຄີໄດ້ຮັບຮູ້. ຕົວຢ່າງ: ໃນບົດຄຳເຫັນຈາກການສັງເກດການໃນປະເທດສີລັງກາ (2011), ຄະນະກຳມະທິການໄດ້ແນະນຳໃຫ້ "ດັດແກ້ບັນດາກົດໝາຍທີ່ກ່ຽວກັບການພັດທະນາທີ່ດິນໃຫ້ໄວຂຶ້ນ ເພື່ອຮັບປະກັນຄວາມຜາສຸກ ແລະ ການຄອບຄອງທີ່ດິນໃຫ້ເທົ່າທຽມລະຫວ່າງຄູ່ສາມີພັນລະຍາ ໂດຍສະເພາະໃນເວລາທີ່ລັດຖະບານໃຫ້ສິດໃນການຄອບຄອງທີ່ດິນຂອງຄູ່ທີ່ແຕ່ງງານກັນ."[14] ນອກນີ້ ທາງຄະນະກຳມະທິການຍັງໄດ້ເນັ້ນຄວາມສຳຄັນຂອງການມີວຽກເຮັດງານທຳຂອງແມ່ຍິງເພື່ອເປັນການຊ່ວຍໃນການຈຳກັດການຈຳແນກຕໍ່ແມ່ຍິງລົງ. ໃນບົດສະຫຼຸບສັງເກດການກ່ຽວກັບປະເທດແຊດ (2011), ທາງຄະນະກຳມະທິການໄດ້ຮຽກຮ້ອງໃຫ້ປະເທດແຊດ "ຕ້ອງດຳເນີນການສົ່ງເສີມຄວາມເທົ່າທຽມຍິງ-ຊາຍ ແລະ ໃຫ້ຖືເປັນບັນຫາສຳຄັນລະດັບຊາດ, ລັດຖະບານ ແລະ ໜ່ວຍງານໃນທ້ອງຖິ່ນຕ້ອງພາກັນສ້າງແນວທາງ", ແລະ ພັກດັນໃຫ້ລັດຖະບານ "ສ້າງຄວາມເຂັ້ມແຂງໃນການສົ່ງ ເສີມແມ່ຍິງໃນດ້ານເສດຖະກິດເພື່ອອຳນວຍຄວາມສະດວກໃນການຊອກວຽກເຮັດງານທຳ, ສາມາດເຂົ້າເຖິງການບໍລິການທາງ ການເງິນ,ການ ຄຸ້ມຄອງທີ່ດິນ ແລະ ຊັບສິນຕ່າງໆໃນຊີວິດປະ**ຈຳ**ວັນ."[15]

ກ່ຽວກັບຄວາມເທົ່າທຽມລະຫວ່າງຍິງຊາຍໃນດ້ານສິດຕໍ່ຊັບສິນ ແມ່ນສາມາດເບິ່ງໄດ້ທີ່ບົດສະຫຼຸບກ່ຽວກັບສິດໃນຊັບສິນໄດ້.

## ຄົນພື້ນເມືອງ ແລະ ຄົນຊົນເຜົ່າ

ກ່ຽວກັບຄົນພື້ນເມືອງ ແລະ ຄົນຊົນເຜົ່າ, ຕາມບົດລາຍງານສັງເກດການຕໍ່ປະເທດເຄນຢ້າ (2008), ຄະນະກຳມະທິການທາງເສດຖະກິດສັງຄົມ ແລະ ວັດທະນະທຳໄດ້ໃສ່ໃຈເປັນພິເສດກ່ຽວກັບໂອກາດເຂົ້າສູ່ການຄອບຄອງທີ່ດິນທີ່ມັນກະທົບຕໍ່ຄົນພື້ນເມືອງ ແລະ ຄົນຊົນເຜົ່າທີ່ອາໃສໃນເຂດຊົນນະບົດ, ທາງຄະນະກຳມະທິການໄດ້ຂໍໃຫ້ດຳເນີນການແກ້ໄຂບັນຫາດັ່ງກ່າວດ້ວຍການອອກນະໂຍບາຍແຫ່ງຊາດ ແລະ ຈັດຕັ້ງການກວດສອບບັນຫາການຈຳແນກໃນການຄອບຄອງທີ່ດິນ.[16] ຄະນະກຳມະທິການສິດທິມະນຸດຕາມບົດສະຫຼຸບສັງເກດການກ່ຽວກັບປະເທດສະວີເດັນ (2009) ແມ່ນໄດ້ສະແດງຄວາມເປັນຫວ່ງຕໍ່ກັບບັນຫາທີ່ມີການຈຳແນກທາງພຶດຕິໃນຕໍ່ຊາວຊາມີ້ ທີ່ເປັນຄົນພື້ນເມືອງໃນເຂດສະແກນດິນາວ້ຽເລື່ອງຄວາມຂັດແຍ່ງໃນກົດໝາຍຕັ້ງແຕ່ໃຫ້ມີການພິສູດເຖິງຄວາມ ເປັນເຈົ້າຂອງທີ່ດິນຂອງຊາວຊາມີ້, ແລະ ບັນຫາການຊ່ວຍເຫຼືອທາງກົດໝາຍທີ່ເລືອກປະຕິບັດ. ຜູ້ທີ່ຈະມີຄວາມສາມາດໃນການຮຽກຮ້ອງສິດໃນທີ່ດິນນັ້ນແມ່ນຕ້ອງກ່ຽວຂ້ອງກັບທີ່ດິນທີ່ເປັນຂອງຊາວຊາມີ້ ແລະ ຕ້ອງໄດ້ຮັບສິດອານຸຍາດ ໃນການຮຽກຮ້ອງ ເທົ່ານັ້ນ. ຕໍ່ກັບບັນຫານີ້ ທາງຄະນະກຳມະທິການໄດ້ໃຫ້ຄຳເຫັນວ່າປະເທດສະວີເດັນ "ຕ້ອງໃຫ້ສິດທາງດ້ານກົດ ໝາຍເຕັມທີ່ແກ່ໝູ່ບ້ານຊາວຊາມີ້ໃນການຮຽກຮ້ອງສິດໃນສານເພື່ອຕໍ່ສູ້ກ່ຽວກັບບັນຫາທີ່ດິນ ແລະ ສິດທິທາງກົດໝາຍ ພ້ອມທັງ ຕ້ອງອອກົດໝາຍທີ່ກ່ຽວຂ້ອງກັບການພິສູດໃນບັນຫາທີ່ດິນຂອງຊາວຊາມີ້ ແລະ ສິດທິທາງກົດໝາຍ ໂດຍສະເພາະແມ່ນໃນເຂດທີ່ພວກເຂົາອາໃສຢູ່".[17]

ສຳລັບຂໍ້ມູນເພີ່ມເຕີມແມ່ນໃຫ້ເບິ່ງເອກະສານສະຫຼຸບສັງລວມກ່ຽວກັບຄົນພື້ນເມືອງທີ່ມີສິດໃນທີ່ດິນດັ້ງເດີມ, ໃນເຂດແດນ ແລະ ຊັບສິນຕ່າງໆເຊິ່ງລວມທັງບັນຫາກ່ຽວກັບແຫຼ່ງນໍ້າ

**ແຫຼ່ງຂໍ້ມູນເພີ່ມ:**

ກົນໄກສິດທິມະນຸດ ສປຊ ໄດ້ໃຫ້ຄຳເຫັນກ່ຽວກັບບັນຫາການຖືກຈຳແນກໃນປະເທດໃດໜຶ່ງທີ່ມີຕໍ່ກຸ່ມຄົນໃນບັນຫາການຄອບຄອງທີ່ດິນ. ເອກະສາຄຳເຫັນ ດັ່ງກ່າວແມ່ນສາມາດເຂົ້າຫາໄດ້ທີ່ (http://uhri.ohchr.org/).

[14] CEDAW/C/LKA/CO/7, para. 39 (e).
[15] CEDAW/C/TCD/CO/1-4, para. 37.
[16] E/C.12/KEN/CO/1, para. 12.
[17] CCPR/C/SWE/CO/6, para. 21.

## ຄະດີຕົວຢ່າງ:

ປະເທດເຄັນຢ້າ, ສານອຸທອນທີ່ເມືອງເອວດໍເຣັດ: ຄະດີລະຫວ່າງ *Mary Rono* v. *Jane ກັບ William Rono* ການອຸທອນຄະດີແພ່ງເລກທີ 66 ປີ 2002 (29 ເດືອນ ເມສາ 2005). ໃນຄະດີນີ້ແມ່ນກ່ຽວກັບການສືບທອດມູນທີ່ດິນ ແລະ ກົດໝາຍຮີດຄອງປະເພນີ ກັບ ການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງກັບລູກສາວທີ່ໄດ້ຮັບມູນທີ່ດິນໜ້ອຍກວ່າລູກຊາຍເຊິ່ງຈະຖືເອົາຕາມພື້ນຖານທາງເພດ, ສານໄດ້ວິນິດໄສວ່າສິດທິມະນຸດຂັ້ນພື້ນຖານໂດຍສະເພາະໃນມາດຕາ 1 ຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງທີ່ປະເທດເຄັນຢ້າເປັນພາຄີນັ້ນ, ສົນທິສັນຍາແມ່ນມີບູລິມະສິດເໜືອກວ່າກົດໝາຍພາຍໃນ.[18]

### ຫຼັກການ ແລະ ຄູ່ມືແນະນໍາອື່ນໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານຄຸ້ມຄອງບັນຫາການຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ ໃນດ້ານຄວາມໝັ້ນຄົງທາງສະບຽງອາຫານປທ່ວງຊາດ (Rome, FAO, 2012), ຫຼັກການແນະນໍາ 3B, ຄູ່ມື 4.6, 5.3, 5.4, 6.1, 11.2, 15.3, 15.6, 17.3, 21.6, 25.3, 25.5, 25.7.
- ການມີອາຫານທີ່ພຽງພໍໃນດ້ານຄວາມໝັ້ນຄົງທາງສະບຽງອາຫານປທ່ວງຊາດ (Rome, FAO, 2005), ຄູ່ມື 2.5, 3.5, 4.2, 4.7, 8, 9, 10.8, 13.2, 14.3.

[18] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ

### ຂ. ລະບຽບກົດໝາຍ
### ບົດສະເໜີ

ລັດພາຄີ ແລະ ບັນດາຜູ້ທີ່ມີໜ້າທີ່ຮັບຜິດຊອບແມ່ນຕ້ອງໃຫ້ການເຄົາລົບ ແລະ ຈັດຕັ້ງປະຕິບັດກົດໝາຍໃຫ້ສອດຄ່ອງກັບຫຼັກການກົດໝາຍສິດທິມະນຸດສາກົນ. ໃນກໍລະນີທີ່ມີການລະເມີດກົດໝາຍ, ຜູ້ທີ່ຖືກ ລະເມີດແມ່ນຄວນມີສິດໃນການຮຽກຮ້ອງຄວາມເປັນທໍາກັບສານທີ່ມີຄວາມເອກະລາດ ແລະ ມີຄວາມສາມາດໃນການແກ້ໄຂ ຫຼື ສາມາດຮຽກຮ້ອງສິດກັບໜ່ວຍງານທີ່ສາມາດໃຫ້ ຄວາມເປັນທໍາ ແລະ ມີຄວາມທ່ຽງທໍາໄດ້. ໃນການຈັດການກັບບັນຫາທີ່ດິນກ່ຽວກັບຄວາມຂັດແຍ່ງໃນຂໍ້ກໍາ ນົດກົດໝາຍແມ່ນເກີດຂື້ນໄດ້ໃນຫຼາຍຮູບແບບ.

ສິ່ງທີ່ຄວນໃສ່ໃຈກໍ່ຄືວ່າບັນຫາການສໍ້ລາດບັງຫຼວງ, ການຂາດຄວາມໂປ່ງໃສໃນ (ການເວນຄືທີ່ດິນ, ການສ້າງ ໂຄງການພິເສດ ແລະ ການສ້າງຕົວເມືອງ, ຫຼື ການໃຫ້ລົງທຶນໃນທີ່ດິນ) ກໍ່ຄືການຈັດຕັ້ງປະຕິບັດກົດໝາຍ, ນະໂຍບາຍ ແລະ ໂຄງການຕ່າງໆທີ່ບໍ່ຈະແຈ້ງ ແມ່ນເປັນໜຶ່ງໃນບັນຫາຂອງການກີດຂວາງຄວາມມີປະສິດທິພາບຂອງການນໍາໃຊ້ຂໍ້ກໍານົດກົດໝາຍຕ່າງໆທີ່ມີ. ການບັງຄັບໃຫ້ຍົກຍ້າຍໂດຍບໍ່ໄດ້ໄປຕາມລະບຽບກົດໝາຍທີ່ສອດຄ່ອງກັບຫຼັກການສິດທິມະນຸດສາກົນນັ້ນກໍ່ຖືວ່າ ເປັນການລະເມີດຂໍ້ກໍານົດກົດໝາຍໄດ້.

> “ການເຂົ້າເຖິງທີ່ດິນໃນເຂດຊົນນະບົດແມ່ນສໍາຄັນຫຼາຍ. ຄວາມສໍາຄັນນີ້ແມ່ນມັນຕັດແຍກບັນຫາລະຫວ່າງການກົດໝາຍພາຍໃນທີ່ຮັບຮູ້ສິດຂອງຄົນໃນການຄອບຄອງທີ່ດິນພ້ອມທັງສ້າງຫຼັກຮັບປະກັນທີ່ຈະແຈ້ງກ່ຽວກັບການຄອບຄອງຊັບສິນໃດໜຶ່ງ, ແລະ ບັນຫາທີ່ກ່ຽວກັບການໄດ້ທີ່ດິນມາໃນຮູບແບບຕ່າງໆ ແລະ ບັນຫາຜູ້ທີ່ເຂົ້າມາຢູ່ອາໃສຈາກຂ້າງນອກບໍ່ວ່າຈະເປັນທີ່ດິນໃນເຂດຊົນນະບົດ ຫຼື ໃນຕົວເມືອງ. ໃນຍຸກການພັດທະນາທາງເສດຖະກິດໃນປະຈຸບັນທີ່ເຮັດໃຫ້ເກີດບັນຫາລາຄາທີ່ດິນສູງຂື້ນ ແລະ ມີການເກງກໍາໄລກັນເກີດຂື້ນ, ສະນັ້ນບັນຫາການຂັບໄລ່ຊຸມຊົນຕ່າງໆທີ່ເຄີຍດໍາລົງຊີວິດມາເປັນຫຼາຍໆປີຈຶ່ງເກີດຂື້ນເລື້ອຍໆ, ການຊົດເຊີຍຄ່າຍົກຍ້າຍກໍ່ບໍ່ສົມເຫດສົມຜົນເຊິ່ງເປົ້າໝາຍນັ້ນກໍ່ແມ່ນເພື່ອເຮັດໃຫ້ການພັດທະນາໂຄງການໃຫ້ໄດ້ຕາມວັດຖຸປະສົງ.
> ຕໍ່ກັບບັນຫາຂ້າງເທິງນີ້ ຂ້າພະເຈົ້າເອງແມ່ນມີຄວາມເປັນຫ່ວງວ່າສິ່ງທີ່ກ່າວມານີ້ມັນຈະເປັນການສ້າງບັນຫາໃຫ້ແກ່ຂໍ້ກໍານົດກົດໝາຍ ແລະ ເປັນການສ້າງຄວາມເສຍຫາຍໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນ.”
>
> *ອ້າງອີງຈາກ:* ບົດລາຍງານຂອງຜູ້ແທນພິເສດຂອງເລຂາທິການເພື່ອສິດທິມະນຸດໃນປະເທດກໍາປູເຈຍ (A/HRC/12/40), para. 17.

ການສ້າງກົດໝາຍທີ່ມີການປະສົມລະຫວ່າງຫຼັກການທາງກົດໝາຍ ແລະ ຫຼັກຮີດຄອງປະເພນີກ່ຽວກັບບັນຫາການຄອບຄອງທີ່ດິນທີ່ບໍ່ສອດຄ່ອງກັນແມ່ນມັນຈະເຮັດໃຫ້ເກີດບັນຫາຫຼາຍຢ່າງໃນຂໍ້ກໍານົດກົດໝາຍ. ຕົວຢ່າງ: ທີ່ດິນທີ່ຄົນລ້ຽງສັດເລ້ລ້ອນນໍາໃຊ້ຢູ່ນັ້ນແມ່ນ “ທີ່ດິນຫວ່າງເປົ່າ” ແລະ ມັນມີຊ່ອງວ່າງໃຫ້ຕົກເປັນເງື່ອນໄຂໃນການຖືກເວນຄືນ ແລະ ໃຫ້ສໍາປະທານແກ່ນັກລົງທຶນ ເຖິງວ່າທີ່ດິນຕອນດັ່ງກ່າວແມ່ນຄວນໃຫ້ເປັນບູລິມະສິດແກ່ຄົນລ້ຽງສັດແບບເລ້ລ້ອນຕາມຮີດຄອງປະເພນີກໍຕາມ.

### ຫຼັກການສາກົນທີ່ສາມາດນໍາໃຊ້ກັບບັນຫາທີ່ດິນ

ຕໍ່ກັບບັນຫາຂ້າງເທິງ, ລັດພາຄີຕ່າງໆແມ່ນຄວນໃຫ້ການເຄົາລົບ ແລະ ຮັບປະກັນວ່າທຸກຄົນທີ່ດໍາລົງຊີວິດໃນອານາເຂດຂອງຕົນແມ່ນມີສິດທາງ ກົດໝາຍໂດຍບໍ່ຕ້ອງມີການຈໍາແນກໃດໆ, ພ້ອມນັ້ນລັດທີ່ກ່ຽວຂ້ອງຕ້ອງອອກກົດໝາຍ ແລະ ມາດຕະການຕ່າງໆທີ່ເໝາະສົມເພື່ອ ຮັບປະກັນສິດຕ່າງໆທີ່ກ່າວມານັ້ນ.

ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 2, ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ ສັງຄົມ ແລະ ການເມືອງ ມາດຕາ 2

## ຂໍ້ຄິດເຫັນຕ່າງໆ

ໃນການອອກຂໍ້ກຳນົດກົດໝາຍຕ່າງໆແມ່ນຄວນໃຫ້ທຸກຄົນ, ສະຖາບັນ ແລະ ສຳນັກງານຕ່າງໆ, ພາກເອກະຊົນ ແລະ ລັດ, ລວມທັງໂຕລັດຖະບານເອງມີສ່ວນຮ່ວມໃນການສ້າງກົດໝາຍເພື່ອສົ່ງເສີມ, ເພື່ອການນຳໃຊ້ທີ່ເທົ່າທຽມ ແລະ ເພື່ອການພິພາກສາທີ່ເປັນເອກະລາດ, ພ້ອມທັງຕ້ອງໃຫ້ສອດຄ່ອງກັບກົນໄກ ແລະ ຫຼັກການສິດທິມະນຸດສາກົນນຳ. ເພື່ອຈະເຮັດໃຫ້ໄດ້ຕາມທີ່ກ່າວມານີ້, ມັນຈຳເປັນຕ້ອງມີມາດຕະການໃນການຮັບປະກັນຄວາມສັກສິດຂອງກົດໝາຍ, ຄວາມທ່ຽງທຳໃນການນຳໄຊ້ກົດໝາຍ, ການແຍກອຳນາດທາງບໍລິຫານ, ການມີສ່ວນຮ່ວມໃນການຕັດສິນໃຈ, ຄວາມແນ່ນອນທາງກົດໝາຍ, ການຫຼີກລ່ຽງການໃຊ້ອຳນາດເກີນຂອບເຂດ, ແລະ ຄວາມໂປ່ງໃສໃນຕົວກົດໝາຍ ແລະ ການຈັດຕັ້ງປະຕິບັດຕ່າງໆ.[19]

ຫຼາຍໆອົງກອນສິດທິມະນຸດແມ່ນໄດ້ອອກເອກະສານຄຳເຫັນແນະນຳຕ່າງໆໃຫ້ແກ່ລັດພາຄີທີ່ກ່ຽວຂ້ອງໃນດ້ານຫຼັກການຂອງລະບຽບກົດໝາຍຕາມມາດຕະການດັ່ງຕໍ່ໄປນີ້:

- ໃຫ້ສັດຕະຍາບັນ ແລະ ປະຕິບັດຕາມອົງກອນສິດທິມະນຸດສາກົນຕ່າງໆທີ່ກ່ຽວຂ້ອງ;[20]
- ຈັດຕັ້ງປະຕິບັດນິຕິກຳພາຍໃນທີ່ມີ[21] ຫຼື ອອກນິກຳ ຫຼື ມາດຕະການຕ່າງໆ[22] ທີ່ກ່ຽວຂ້ອງກັບທີ່ດິນ, ທີ່ສອດຄ່ອງກັບຫຼັກການສິດທິມະນຸດສາກົນຕາມພັນທະຂອງລັດພາທີ, ເຊັ່ນ: ພັນທະໃນການລົບລ້າງບັນຫາການຖືກຈຳແນກ;[23]
- ດັດແກ້ກົດໝາຍພາຍໃນທີ່ມີ, ດັດແກ້ອັນທີ່ມີຂໍ້ຂັດກັນກັບຫຼັກການສິດທິມະນຸດສາກົນທີ່ລັດຕ້ອງໄດ້ປະຕິບັດຕາມ;[24]
- ຮັບປະກັນວ່າຫຼັກກົດໝາຍຮີດຄອງປະເພນີແມ່ນໄດ້ຖືກບັນຈຸໃນກົດໝາຍກ່ຽວກັບລະບຽບການຄອບຄອງທີ່ດິນ, ເຊັ່ນ: ສິດໃນທີ່ດິນຂອງກຸ່ມຄົນ (ຄົນພື້ນເມືອງ);[25]
- ໃຫ້ເລື່ອນການສຳປະທານໄປກ່ອນຈົນກ່າວວ່າຈະມີການສຶກສາ ແລະ ປຶກສາຫາລືກ່ຽວກັບທີ່ດິນຕອນດັ່ງກ່າວກ່ອນເພື່ອເປັນການປົກປ້ອງສິດທິຂອງຄົນໃນຊຸມຊົນຈາກຜົນກະທົບຕ່າງໆ;[26]
- ໃຫ້ການຊ່ວຍເຫຼືອໃນກໍລະນີທີ່ເກີດການລະເມີດສິດທີ່ກ່ຽວກັບທີ່ດິນ[27] ແລະ ນຳໃຊ້ມາດຕະການຕ່າງໆເຂົ້າໃນການປົກປ້ອງຜູ້ທີ່ຮຽກຮ້ອງການຊ່ວຍເຫຼືອຈາກການຖືກລະເມີດ ແລະ ບັນຫາຕ່າງໆ;[28]
- ປັບປຸງລະບຽບການໃນການຮຽກຮ້ອງສິດການຄອບຄອງ ແລະ ໃຫ້ການຊ່ວຍເຫຼືອໂດຍລຸດບັນດາຂັ້ນຕອນທາງບໍລິຫານລົງ,[29] ດ້ວຍການຊ່ວຍເຫຼືອທາງກົດໝາຍ ແລະ ລຸດເງື່ອນໄຂບັນຫາການພິສູດທີ່ມາຂອງທີ່ດິນຕ່າງໆລົງ,[30] ຫຼື ໃຫ້ດຳເນີນການປຶກສາຫາລືກັບຊຸມຊົນ ພື້ນເມືອງກ່ຽວກັບໂຄງການທີ່ຈະໃຫ້ສຳປະທານ ຫຼື ທີ່ດິນທີ່ມີຄວາມຂັດແຍ່ງນັ້ນ;[31]
- ປະຕິບັດຕາມກົນໄກສິດທິມະນຸດສາກົນທີ່ລວມມີກົນໄກສິດທິມະນຸດພາກພື້ນ ແລະ ກົນໄກການກວດສອບຂອງ ILO .[32]

---

[19] The rule of law and transitional justice in conflict and post-conflict societies (S/2004/616), para. 6.
[20] Concluding observations of the Committee on Social, Economic and Cultural Rights on the Democratic Republic of the Congo (E/C.12/COD/CO/4) and of the Committee on the Elimination of Racial Discrimination on Argentina (CERD/C/ARG/CO/19-20), Chile (CERD/C/CHL/CO/15-18) and Finland (CERD/C/FIN/CO/19).
[21] Concluding observations of the Committee on Social, Economic and Cultural Rights on Cambodia (E/C.12/KHM/CO/1) and of the Committee on the Elimination of Racial Discrimination on the Philippines (CERD/C/PHL/CO/20).
[22] Concluding observations of the Committee on Economic, Social and Cultural Rights on the Democratic Republic of the Congo (E/C.12/COD/CO/4), of the Committee on the Elimination of Discrimination against Women on the United Republic of Tanzania (CEDAW/C/TZA/CO/6) and of the Committee on the Elimination of Racial Discrimination on Chile (CERD/C/CHL/CO/15-18), the Congo (CERD/C/COG/CO/9), Finland (CERD/C/FIN/CO/19) and Suriname (CERD/C/SUR/CO/12).
[23] Concluding observations of the Committee on the Elimination of Racial Discrimination on Colombia (CERD/C/COL/CO/14).
[24] Concluding observations of the Committee on the Elimination of Racial Discrimination on the Democratic Republic of the Congo (E/C.12/COD/CO/4) and Madagascar (E/C.12/MDG/CO/2).
[25] CERD/C/SUR/CO/12.
[26] E/C.12/COD/CO/4.
[27] CERD/C/COG/CO/9.
[28] CERD/C/PHL/CO/20.
[29] CERD/C/COL/CO/14and CERD/C/PHL/CO/20.
[30] CCPR/C/SWE/CO/6.
[31] Concluding observations of the Human Rights Committee on the United Republic of Tanzania (CCPR/C/TZA/CO/4).
[32] CERD/C/COL/CO/14.

## ຄະດີຕົວຢ່າງ

ປະເທດອັບຟຣິກາໃຕ້, ສານລັດຖະທຳມະນູນ: ຂະບວນການ *Abahlali BaseMjondolo SA ແລະ ອື່ນໆ ກັບ ເຈົ້າແຂວງ Kwazulu-Natal and ອື່ນໆ, ຄະດີ* CCT 12/09 [2009] ZACC ເລກທີ 31 (14 ຕຸລາ 2009). ບົດສັດຫຍໍ້ນີ້ໄດ້ທົບທວນບົດບັນຍັດໃນລັດຖະທຳມະນູນວ່າເຈົ້າໜ້າທີ່ລະດັບແຂວງແມ່ນມີສິດອຳ ນາດໃນການບັງຄັບໃຫ້ຄົນທີ່ອາ ໃສຢູ່ໃນທີ່ດິນທີ່ຍັງບໍ່ທັນໄດ້ຮັບອານຸຍາດເປັນທາງການເພື່ອໃຫ້ຍ້າຍອອກນອກເຂດດັ່ງກ່າວໄດ້ບໍ່. ຂະບວນການ bahlali BaseMjondolo ທີ່ເປັນຕົວແທນສິດ ແລະ ຜົນປະໂຫຍດຂອງຫຼາຍໆຄົນທີ່ດຳລົງຊີວິດໃນເຂດດັ່ງກ່າວໄດ້ອອກ ມາຄັດຄ້ານນິຕິກຳທີ່ກ່ຽວຂ້ອງ (“the Slums Act”) ວ່າມັນໃຊ້ບໍ່ໄດ້. ສານໄດ້ຕີຄວາມໝາຍໝວດທີ 16 ຂອງກົດໝາຍວ່າ ດ້ວຍຊຸມຊົນແອອັດ ຫຼື the Slums Act ວ່າມັນບໍ່ສອດຄ່ອງກັບລັດຖະທຳມະນູນ ແລະ ຍັງເປັນການຂັດກັບລະບຽບກົດ ໝາຍພາຍໃນອື່ນໆທີ່ອອກມາເພື່ອປົກປ້ອງ ສິດທິຂອງຄົນທີ່ອາໃສຢູ່ໃນທີ່ດິນທີ່ຍັງບໍ່ທັນໄດ້ໃຫ້ສິດຄອບຄອງເປັນ ທາງການເທື່ອ.[33]

### ຫຼັກການ ແລະ ຄຳແນະນຳອື່ນໆທີ່ກ່ຽວຂ້ອງ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບຂອງລັດຕໍ່ກັບບັນຫາການຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ໃນດ້ານຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດ (Rome, FAO, 2012), ຫຼັກການແນະນຳ 3B (7) and (9), ຄຳແນະນຳ 6.9, 12.12, 15.4.
- ການເວນຄືນທີ່ດິນ ແລະ ກສຍໃຫ້ສຳປະທານຂະໜາດໃຫຍ່: ເອກະສານຫຼັກການ ແລະ ມາດຕະການລະດັບນ້ອຍສຳລັບການແກ້ໄຂບັນຫາດ້ານສິດທິມະນຸດ[34] ຫຼັກການ 1, 2, 3, 7, 10, 11.
- ຫຼັກການພື້ນຖານ ແລະ ຄຳແນະນຳກ່ຽວກັບການບັງຄັບໃຫ້ອອກຈາກທີ່ດິນ ແລະ ການຂາດທີ່ຢູ່ອາໃສ[35] ວັກທີ. 6, 10, 11, 12, 21, 22, 24, 29.
- ຫຼັກການພື້ນຖານ ແລະ ຄຳແນະນຳຕ່າງໆກ່ຽວກັບສິດທິໃນການໄດ້ຮັບການຊ່ວຍເຫຼືອ ແລະ ການຊົດເຊີຍໃຫ້ແກ່ຜູ້ທີ່ຖືກລະເມີດສິດຢ່າງຮ້າຍແຮງທີ່ກ່ຽວຂ້ອງກັບກົດໝາຍສິດທິມະນຸດສາກົນ ແລະ ການລະເມີດຢ່າງຮ້າຍແຮງຕໍ່ກົດໝາຍມະນຸດສະທະສາກົນ ໝວດທີ I ແລະ II.[36]
- ຄູ່ມືອາສາເພື່ອສະໜັບສະໜູນສິດທິໃນດ້ານການມີອາຫານທີ່ພຽງພໍທີ່ກ່ຽວຂ້ອງກັບ ຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດ(Rome, FAO, 2005), ຄຳແນະນຳ 1.2, 8.1, 8.6, 8.10.

[33] See *Land and Human Rights: Annotated Compilation of Case Law.*
[34] Report of the Special Rapporteur on the right to food (A/HRC/13/33/Add.2), annex.
[35] Report of the Special Rapporteur on adequate housing (A/HRC/4/18), annex I.
[36] General Assembly resolution 60/147.

## ບົດສະຫຼຸບສັງລວມ
## ຄ. ສິດທິໃນດ້ານການມີອາຫານທີ່ພຽງພໍ
## ບົດສະເໜີ

ຄົນສ່ວນໃຫຍ່ໃນໂລກນີ້ທີ່ໄດ້ປະເຊີນກັບຄວາມອຶດຫິວນັ້ນ ແມ່ນກຸ່ມຄົນທີ່ມີທີ່ດິນຂະໜາດນ້ອຍ, ຄົນໃຊ້ງານທາງການ ກະເສດທີ່ບໍ່ມີທີ່ດິນເປັນຂອງຕົນເອງ, ຄົນລ້ຽງສັດພະເນຈອນ, ຊາວປະມົງພື້ນບ້ານ, ປະຊາກອນທີ່ອາໃສຢູ່ປ່າ ແລະ ສະມາຊິກຂອງຊຸມຊົນພື້ນເມືອງ. **ສໍາ**ລັບຄົນເຫຼົ່ານີ້ແລ້ວ, ການປູກຝັງ-ລ້ຽງສັດ, ປ່າໄມ້, ນໍ້າ, ການປະມົງ ແລະ ແຮ່ທາດເທິງໜ້າດິນ ແມ່ນຊັບພະຍາກອນທີ່ມີຄຸນຄ່າສໍາລັບການລ້ຽງຊີບຂອງເຂົາເຈົ້າ. ການເຂົ້າຫາ, ການນໍາໃຊ້ ແລະ ການຄຸ້ມຄອງ ທີ່ດິນ ແລະ ຊັບພະຍາກອນເຫຼົ່ານັ້ນແມ່ນມີຄວາມສໍາຄັນໃນການ ນໍາໃຊ້ສິດເພື່ອຄວາມຢູ່ດີກິນດີທີ່ພຽງພໍຂອງເຂົາເຈົ້າ, ໂດຍສະເພາະແມ່ນສິດໃນດ້ານການ ມີຫາຫານທີ່ພຽງພໍ.

ໃນດ້ານການເວນຄືນ ແລະ ການໃຫ້ເຊົ່າທີ່ດິນທີ່ຂະໜາດໃຫຍ່, "ລັດທີ່ກ່ຽວຂ້ອງຈະຕົກເປັນຜູ້ລະເມີດສິດທິມະນຸດຖ້າຫາກໄດ້ຂາຍ ຫຼື ໃຫ້ສໍາປະທານທີ່ດິນແກ່ຜູ້ລົງທຶນ (ບໍ່ວ່າຊິເປັນນັກ ລົງທຶນພາຍໃນ ແລະ ຕ່າງປະເທດ) ໃນທີ່ດິນທີ່ເປັນແຫຼ່ງ ທໍາມາຫາກິນອັນສໍາຄັນຂອງປະຊາຊົນ."

*ທີ່ມາຂໍ້ມູນ:*
ບົດລາຍງານຂອງນັກວາຍງານພິເສດກ່ຽວກັບສິດໃນດ້ານອາຫານ (A/HRC/13/33/Add.2), ວັກທີ 15.

ຄວາມກົດດັນໃນທີ່ດິນແມ່ນນັບມື້ນັບຫຼາຍຂື້ນ. ການຂະຫຍາຍຕົວຂອງພົນລະເມືອງ, ການສູນເສຍທີ່ດິນເນື່ອງຈາກບັນຫາທີ່ດິນເຊື່ອມໂຊມ, ນະໂຍບາຍທີ່ເນັ້ນການຜະລິດສິນຄ້າກະເສດສົ່ງອອກ, ຮູບແບບອຸດສະຫະກໍາຂະໜາດໃຫຍ່ດ້ານການຜະລິດພືດເສດຖະກິດ ແລະ ເຊື້ອເພີງຊີວະພາບ, ການສະແຫວງຫາຜົນປະໂຫຍດທີ່ເພີ່ມຂື້ນຂອງນັກລົງທຶນບໍ່ແຮ່ຈາກພາຍໃນ ແລະ ສາກົນ, ເຊື້ອໄຟຟອດຊີວ, ໄມ້ແລະຜະລິດຕະພັນອາຫານ, ແລະ ມາດຕະການທີ່ຮອງຮັບເພື່ອລຸດຜ່ອນການປ່ຽນແປງດ້ານອາກາດ ຫຼື ການຮັກສາສິ່ງແວດລ້ອມແມ່ນລ້ວນແລ້ວແຕ່ເປັນປັດໃຈທີ່ເຮັດໃຫ້ເກີດການຍາດແຍ່ງທີ່ດິນ. ທັງໝົດເຫຼົ່ານີ້, ການພັດທະນາທີ່ກ່າວມານັ້ນແມ່ນເປັນສາຍເຫດຂອງການຂັດຂວາງການເຂົ້າເຖິງ, ການນໍາໃຊ້ ແລະ ການຄອບຄອງທີ່ດິນຂອງຄົນທຸກຍາກ, ຂອງຄົນທີ່ດ້ອຍໂອກາດ ຫຼື ຄົນທີ່ມີຄວາມສ່ຽງ ແລະ ທ້າຍສຸດກໍ່ເຂົ້າມາຄອກງໍາຄວາມຜາສຸກໃນການໃຊ້ສິດໃນດ້ານອາຫານ.

### ຫຼັກການສາກົນທີ່ສາມາດໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດເທົ່າທຽມໃນການມີຊີວິດທີ່ພໍພຽງສໍາລັບຕົນເອງ ແລະ ຄອບຄົວເຊິ່ງລວມມີດ້ານອາຫານການກິນ.

*(ຖະແຫຼງການສິດທິມະນຸດສາກົນ ມາດຕາທີ່ 25, ສົນທິສັນຍາວ່າດ້ວຍສິດທິທາງເສດຖະກິດສັງຄົມ ແລະ ວັດທະນະ**ທໍາ** ມາດຕາ 11.1, ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ມາດຕາ 28.1*

ທຸກຄົນແມ່ນມີສິດພື້ນຖານທີ່ຈະບໍ່ຕົກຢູ່ໃນຄວາມອຶດຫິວ. ເພື່ອຮັບປະກັນສິດທີ່ກ່າວມານີ້, ລັດຖະບານ, ບຸກຄົນ ແລະ ອົງການຈັດຕັ້ງສາກົນແມ່ນຕ້ອງເຮັດທຸກວິທີທາງເພື່ອພັດທະນາວິທີໃນການຜະລິດ, ການສະຫງວນ ແລະ ການແຈກຈ່າຍອາຫານ, ພ້ອມທັງຕ້ອງພັດທະນາ ແລະ ປະຕິຮູບລະບົບການກະເສດເພື່ອເປັນການພັດທະນາທີ່ມີປະສິດຕິພາບ ແລະ ນໍາໃຊ້ຊັບພະຍາກອນທະມໍາຊາດຢ່າງຍືນຍົງ.

*(ສົນທິສັນຍາວ່າດ້ວຍສິດທິທາງເສດຖະກິດສັງຄົມ ແລະ ວັດທະນະທໍາ ມາດຕາ 11.2.*

*ທຸກຄົນແມ່ນມີສິດເທົ່າທຽມໃນດ້ານໂພສະນາການເຊິ່ງມັນເປັນສິ່ງທີ່ຄໍ້າປະກັນໃຫ້ຄົນເຮົາມີຄວາມຜາສຸກທີ່ສຸດໃນດ້ານການພັດທະນາສຸກຂະພາບ, ອາລົມຈິດ ແລະ ຄວາມສະຫຼາດ. ເພື່ອເປັນການສົ່ງເສີມສິດໃນດ້ານດັ່ງກ່າວ ແລະ ລົບລ້າງການຂາດອາຫານ, ລັດທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີເພື່ອປັບປຸງຂະບວນການໃນການຜະລິດ, ການແຈກຈ່າຍ ແລະ ການສະໜອງອາຫານ, ພ້ອມທັງຕ້ອງໃຫ້ການສົ່ງເສີມການຮ່ວມມືສາກົນເພື່ອເປັນການສະໜັບສະໜູນນະໂຍບາຍພາຍໃນທີ່ກ່ຽວຂ້ອງ.*

*(ອານຸສັນຍາເພີ່ມເຕີມຂອງສົນທິສັນຍາວ່າດ້ວຍສິດທິໃນດ້ານເສດຖະກິດສັງຄົມ ແລະ ວັດທະນາ**ທຳ, “**ອານຸສັນຍາ ຊາວະດໍ” ມາດຕາ 12)*[37]

ໃນດ້ານສິດທິການມີອາຫານທີ່ພຽງພໍ ແລະ ເຂົ້າເຖິງດ້ານໂພສະນາການ, ລັດທີ່ກ່ຽວຂ້ອງແມ່ນຕ້ອງຮັບປະກັນວ່າແມ່ຍິງຄວນໄດ້ຮັບສິດໃນດ້ານໂພສະນາການ ແລະ ອາຫານທີ່ພຽງພໍ. ຕໍ່ກັບບັນຫານີ້, ລັດທີ່ກ່ຽວຂ້ອງຕ້ອງພະຍາຍາມສ້າງມາດຕະການໃຫ້ແກ່ແມ່ຍິງທີ່ຈະເຮັດໃຫ້ເຂົາເຈົ້າສາມາດເຂົ້າເຖິງນໍ້າດື່ມທີ່ສະອາດ, ຊັບພະຍາກອນທີ່ເປັນເຊື້ອພືງ, ທີ່ດິນ, ແລະ ຂະບວນການໃນການຜະລິດອາຫານທີ່ມີໂພສະນາການ.

ອານຸສັນຍາຂອງກົດບັດແຫ່ງອັບຟຣິກກາວ່າດ້ວຍສິດທິຂອງຄົນອັບຟຣິກກາໂດຍເນັ້ນແມ່ຍິງໃນອັບຟຣິກກາ ມາດຕາທີ 15 (a))

## ຕົວຢ່າງຂອງການໃຊ້

ໃນເອກະສານຄຳເຫັນເລກທີ 12 (1999) ກ່ຽວກັບສິດທິໃນການມີອາຫານທີ່ພຽງພໍ, ຄະນະກຳມະທິການກ່ຽວກັບສິດທິທາງເສດຖະກິດສັງຄົມ ແລະ ວັດທະນາທຳໄດ້ເນັ້ນຄວາມເປັນໄປໄດ້ທີ່ຈະເປັນເງື່ອນໄຂພື້ນຖານໃນການປະຕິບັດສິດທິໃນດ້ານການມີອາຫານທີ່ພຽງພໍວ່າສິ່ງທີ່ກ່າວມານັ້ນແມ່ນມັນມີຄວາມໝາຍຫຼາຍຢ່າງບໍ່ວ່າຈະເປັນເລື່ອງການລ້ຽງຕົນເອງຂອງປະຊາຊົນໂດຍອາໃສທີ່ດິນທີ່ອຸດົມສົມບູນ ຫຼື ຊັບພະຍາກອນທຳມະຊາດອື່ນໆ, ຫຼື ມີລະບົບການການແຈກຢາຍ, ການຜະລິດ ແລະ ການຕະຫຼາດທີ່ເປັນລະບົບເຊິ່ງມັນສາມາດສະໜອງອາຫານຈາກບ່ອນຜະລິດໄປຫາບ່ອນທີ່ຕ້ອງການສະບຽງອາຫານດັ່ງກ່າວ (ວັກທີ 12).

ໃນຄຳເຫັນດຽວກັນ, ທາງຄະນະກຳມະທິການຍັງໄດ້ກ່າວວ່າສິດທິໃນດ້ານການມີອາຫານທີ່ພຽງພໍ "ແມ່ນບໍ່ສາມາດຕັດແຍກອອກຄວາມຍຸດຕິທຳໃນສັງຄົມ, ມັນຈຳເປັນຕ້ອງມີການອອກນະໂຍບາຍສິດທາງເສດຖະກິດສັງຄົມ ແລະ ວັດທະນະທຳ ບໍ່ວ່າໃນລະດັບສາກົນ ແລະ ພາຍໃນ, ຕັ້ງໜ້າລຸດຜ່ອນຄວາມທຸກຍາກ ແລະ ເຮັດໜ້າທີ່ດ້ານການໃຫ້ສິດແກ່ທຸກ ຄົນໃຫ້ສຳເລັດ" (ວັກ 4). ເພາະສະນັ້ນ ສິ່ງທີ່ກ່າວມານີ້ແມ່ນມີຄວາມສຳຄັນຫຼາຍທີ່ທັງກົດໝາຍ ແລະ ນະໂຍບາຍຈະເອົາບັນຫາການບໍລິຫານຈັດການທີ່ດິນເຂົ້າເປັນເນື້ອໃນທີ່ສຳຄັນເພື່ອສະແດງເຈດຈຳນົງໃນການປະຕິບັດຕາມພັນທະທີ່ມີກ່ຽວກັບສິດໃນດ້ານອາຫານ.

ໃນບົດລາຍງານຂອງນັກລາຍງານພິເສດດ້ານສິດໃນອາຫານໄດ້ລາຍງານກ່ຽວກັບບັນຫາການໃຫ້ເຊົ່າ ແລະ ເວນຄືນທີ່ດິນວ່າພັນທະຂອງລັດໃນດ້ານອາຫານໃນມູມມອງຂອງການຄອບຄອງທີ່ດິນໃນປະຈຸບັນຖືວ່າຖືກຈັດເຂົ້າໃນ "ເລື່ອງສິດໃນດ້ານອາຫານທີ່ຮຽກຮ້ອງໃຫ້ລັດທີ່ກ່ຽວຂ້ອງຕ້ອງບໍ່ສ້າງມາດຕະການທີ່ຈະເຮັດປະຊາຊົນບໍ່ສາມາດເຂົ້າເຖິງຊັບພະຍາກອນທີ່ດຸດົມສົມບູນ" (ເຊັ່ນວ່າທີ່ດິນ) "ເຊິ່ງທີ່ດິນທີ່ວ່ານີ້ມັນມີຄວາມສຳຄັນໃນການທຳມາຫາກິນຂອງປະຊາຊົນ (ພັນທະໃນການເຄົາລົບ), ນອກນີ້ທາງລັດຕ້ອງມີມາດຕະການໃນການສະກັດກັ້ນການບຸກລຸກທີ່ດິນຂອງພາກສ່ວນເອກະຊົນ (ພັນທະໃນການປົກປ້ອງ) ແລະ ຕ້ອງສ້າງເງື່ອນໄຂໃຫ້ປະຊາຊົນໃນການເຂົ້າຫາ ແລະ ນຳໃຊ້ຊັບພະຍາກອນ ແລະ ວິທີການຕ່າງໆໃນການທຳມາຫາກິນ ໃນຊີວິດປະຈຳວັນເຊິ່ງລວມມີຄວາມໝັ້ນຄົງດ້ານສະບຽງອາຫານ (ພັນທະໃນການຈັດຕັ້ງປະຕິບັດໃຫ້ສຳເລັດ)"[38]

ນັກລາຍງານພິເສດຍັງໄດ້ເວົ້າເພີ່ມເຕີມອີກວ່າ "ສຳລັບກຸ່ມຄົນທີ່ມີຄວາມສ່ຽງໃນປະຈຸບັນນັ້ນ, ມາດຕະການທີ່ກ່າວມາຂ້າງເທິງນັ້ນແມ່ນເປັນວິທີທີ່ຈະໃຫ້ການປົກປ້ອງປະຊາຊົນໃນການເຂົ້າເຖິງທີ່ດິນ, ນໍ້າ, ການປູກຝັງ ແລະ ລ້ຽງສັດ, ຫຼື ປ່າໄມ້, ທັງໝົດທີ່ວ່າມານັ້ນແມ່ນອາດເປັນຊັບພະຍາກອນທີ່ອຸດົມສົມບູນ ແລະ ສຳຄັນສຳລັບຊີວິດການເປັນຢູ່ທີ່ເໝາະສົມ. ໃນກໍລະນີທີ່ວ່າມານີ້, ສິດທິໃນດ້ານອາຫານອາດຈະເປັນຕົວເສີມໃນການຈັດຕັ້ງປະຕິບັດການປົກປ້ອງສິດໃນ

[37] The right to nutrition is also recognized under the Convention on the Elimination of All Forms of Discrimination against Women (art. 12.2), the Convention on the Rights of the Child (arts. 24.2 (c) and (e), and 27.3), the Convention on the Rights of Persons with Disabilities (art. 25 (f)), the African Charter on the Rights and Welfare of the Child (art. 14.2 (c), (d) and (h)) and the Protocol to the African Charter on Human and Peoples' Rights on the Rights of Women in Africa (art. 14.2 (b)).

[38] A/65/281, para. 2.

ຊັບສິນ ຫຼື ສາຍພົວພັນຂອງຄົນພື້ນເມືອງໃນທີ່ດິນ, ອານາເຂດ, ແລະ ຊັບພະຍາກອນຕ່າງໆ. ອີກດ້ານໜຶ່ງ, ຄົນທີ່ບໍ່ມີທີ່ດິນອາໃສຢູ່ແມ່ນເປັນສາຍເຫດຂອງການຕົກໃນຄວາມສ່ຽງຕ່າງໆ, ພັນທະຂອງລັດໃນດ້ານນີ້ແມ່ນ: ຕ້ອງສ້າງຄວາມເຂັ້ມແຂງໃນດ້ານການມີໂອກາດເຂົ້າເຖິງ, ການສ້າງໂອກາດເຊັ່ນວ່າຄວນມີໂຄງການແບ່ງປັນທີ່ດິນທີ່ອາດຊ່ວຍໃນການໄດ້ສິດໃນການເຂົ້າເຖິງຊັບສິນຕ່າງໆ. ການປະຕິບັດພັນທະຂອງລັດທີ່ວ່າມານີ້ຈະມີຄວາມຈະແຈ້ງກໍ່ຕໍ່ເມື່ອກຸ່ມຄົນໃດໜຶ່ງສາມາດເຂົ້າຫາຂະບວນການຜະລິດດ້ານສະບຽງອາຫານ ຫຼື ມີລາຍໄດ້ພຽງພໍໃນການຊື້ອາຫານທີ່ຕ້ອງການ, ທີ່ພຽງພໍ ແລະ ໄດ້ຕາມຄວາມຕ້ອງການໃນຊີວິດປະຈໍາວັນ".[39]

ເພື່ອເປັນການປົກປ້ອງ ແລະ ສົ່ງເສີມສິດໃນດ້ານອາຫານໃນມູມມອງຂອງການບໍລິຫານຈັດການທີ່ດິນ, ກົນໄກສິດທິມະນຸດ ສປຊ ແມ່ນໄດ້ອອກຄໍາແນະນໍາທີ່ເໝາະສົມໃຫ້ແກ່ບາງປະເທດທີ່ກ່ຽວຂ້ອງ. ຕົວຢ່າງ: ໃນບົດລາຍງານສັງເກດການປະເທດຄາເມລູນ (2012), ທາງຄະນະ**ກໍາ**ມະທິການສິດທິທາງເສດຖະກິດສັງຄົມ ແລະ ວັດທະນະທໍາໄດ້ໃຫ້ຄໍາເຫັນທີ່ໜ້າເປັນຫ່ວງດ້ານລາຄາສິນຄ້າທີ່ແພງຂຶ້ນ ແລະ ບັນຫາການຂາດສະບຽງອາຫານໃນບາງເວລາ ຫຼື ເກີດຂື້ນປະຈໍາ, ດັ່ງນັ້ນທາງຄະນະກໍາມະທິການຈຶ່ງຮຽກຮ້ອງໃຫ້ລັດຖະບານຕ້ອງແກ້ໄຂບັນຫາທີ່ກ່ຽວຂ້ອງເຊິ່ງລວມມີທັງການສ້າງຄວາມໝັ້ນຄົງໃນການຄອບຄອງທີ່ດິນເພື່ອນໍາໃຊ້ເຂົ້າໃນການຜະລິດສະບຽງອາຫານຂະໜາດນ້ອຍ.[40] ໃນບົດລາຍງານສັງເກດຫານໃນປະເທດເບີກີນ້າຟາໂຊ້ (2010), ຄະນະກໍາມະທິການສິດທິເດັກໄດ້ໃຫ້ຄໍາແນະນໍາດ້ານການຈັດຕັ້ງປະຕິບັດທີ່ເໝາະສົມເພື່ອຮັບປະກັນການເຂົ້າເຖິງທີ່ດິນຂອງຄອບຄົວທີ່ຫຼົບໜີມາຈາກຄວາມຂັດແຍ່ງ, ການດໍາເນີນການເຊັ່ນນີ້ແມ່ນເພື່ອຮັບປະກັນສິດໃນການມີອາຫານທີ່ພຽງພໍ.[41] ໃນບົດລາຍງານກ່ຽວກັບປະເທດບຣາຊິວ (2009), ນັກລາຍງານພິເສດກ່ຽວກັບສິດໃນດ້ານອາຫານໄດ້ກ່າວວ່າ, ປະກົດການ "ການຄອບຄອງທີ່ດິນທີ່ຜິດກົດໝາຍ", ແລະ "ການສໍ້ໂກງທີ່ດິນຂອງລັດຈາກພາກເອກະຊົນ", ທາງລັດຖະບານຄວນມີມາດຕະການທີ່ຈໍາເປັນ "ເພື່ອຕິດຕາມ ແລະ ຮັບປະກັນວ່າການລົງທະບຽນທີ່ດິນນັ້ນແມ່ນຕ້ອງຜ່ານຂະບວນການຂອງລັດແບບປະຕູດຽວ, ຈະແຈ້ງ ແລະ ເປັນໂຄງສ້າງທີ່ເຂັ້ມແຂງໃນການໃຫ້ສິດຄອບຄອງທີ່ດິນ, ໂດຍສະເພາະແມ່ນບັນດາບໍລິສັດທີ່ຄອບຄອງທີ່ດິນນັ້ນແມ່ນຄວນມີຄວາມຮັບຜິດຊອບຢ່າງເຕັມທີ່ຕໍ່ຊັບສິນຂອງສັງຄົມ, ເສຍພາສີອາກອນ ແລະ ຕ້ອງມີທຶນສໍາຮອງຕາມກົດໝາຍໃນແຕ່ລະກິດຈະການຕ່າງໆ". ນັກລາຍງານພິເສດຍັງມີຄໍາເຫັນອີກວ່າ "ລັດຖະບານຄວນຈະເລັ່ງດໍາເນີນການຈັດແບ່ງທີ່ດິນຕາມກົດໝາຍໃຫ້ແກ່ຄົນພື້ນເມືອງ, ກຸ່ມຄົນ Quilombola ແລະຊຸມຊົນດັ້ງເດີມອື່ນໆພ້ອມທັງ ນໍາໃຊ້ມາດຕະການຊົ່ວຄາວເພື່ອປົກປ້ອງຊຸມຊົນທີ່ກ່າວມານີ້ຈາກການຄອບຄອງທີ່ດິນທີ່ຜິດກົດໝາຍໃຫ້ໄດ້ດີກ່ວາເກົ່າ".[42]

**ຂໍ້ມູນເພີ່ມເຕີມ**

ຄໍາເຫັນແນະນໍາຕ່າງໆຂອງກົນໄກສິດທິມະນຸດກ່ຽວກັບປະເທດໃດໜຶ່ງແມ່ນສາມາດເອົາໄດ້ທີ່ (http://uhri.ohchr.org/).

[39] Ibid., para. 3.
[40] E/C.12/CMR/CO/2-3, para. 26.
[41] CRC/C/BFA/CO/3-4, para. 67.
[42] A/HRC/13/33/Add.6, paras. 20 and 51 (d).

## ຄະດີຕົວຢ່າງ:

**ຄະນະກຳມາທິການກ່ຽວກັບສິດຂອງຄົນອັບຟຣິກາ.** ສູນການຈັດຕັ້ງປະຕິບັດສິດທິທາງເສດຖະກິດ ແລະ ສັງຄົມ, ແລະ ສູນເພື່ອສິດທິທາງເສດຖະກິດ ແລະ ສັງຄົມ ກັບຄູ່ກໍລະນີ ປະເທດໄນຈີເລຍ, ເອກະສານເລກທີ 155/96 (27 ຕຸລາ 2001). ໃນຂໍ້ຂັດແຍ່ງນີ້ແມ່ນເລື່ອງການຖືກບີບບັງຄັບ ແລະ ການຮື້ທຳລາຍໃນທີ່ດິນຊາວ Ogoni ໃນເຂດສາມລ່ຽມໄນເຈີໂດຍລັດຖະບານ ( ເຈົ້າໜ້າທີ່ ແລະ ບໍລິສັດນ້ຳມັນຂອງລັດ) ແລະ ພາກເອກະຊົນ (ບໍລິສັດຂ້າມຊາດ). ຄະນະກຳມະທິການອັບຟຣິກາ ໄດ້ພົບວ່າການຮື້ທຳລາຍທີ່ດິນທາງການກະເສດຂອງຊຸມຊົນ ແລະ ບຸກຄົນທີ່ກະທຳໂດຍ ແລະ ຖືກເມີນເສີຍຈາກພາກລັດແມ່ນເປັນການລະເມີດພັນທະໃນການເຄົາລົບ ແລະ ປົກປ້ອງສິດທິອັບຊອບທຳໃນດ້ານອາຫານ ແລະ ດ້ານການມີທີ່ຢູ່ທີ່ພໍພຽງ.[43]

### ບັນດາຫຼັກການ ແລະ ຄຳແນະນຳອື່ນໆທີ່ກ່ຽວຂ້ອງ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບຂອງການຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ໃນດ້ານຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດ/ Rome, FAO, 2012).
- ການເວນຄືນ ແລະ ການໃຫ້ເຊົ່າທີ່ດິນທີ່ກວ້າງຂວາງ: ເອກະສານຫຼັກການ ແລະ ມາດຕະການເພື່ອແກ້ໄຂບັນຫາດ້ານສິດທິມະນຸດ / A/HRC/13/33/Add.2).
- ຄູ່ມືອາສາເພື່ອສະໜັບສະໜູນການຮັບຮອງສິດໃນການເຂົ້າເຖິງອາຫານທີ່ພໍພຽງໃນດ້ານຄວາມໝັ້ນຄົງໃນສະບຽງອາຫານແຫ່ງຊາດ (Rome, FAO, 2005), ຄຳແນະນຳ 8, ເນັ້ນ 8B ແລະ 8C.

[43] See *Land and Human Rights: Annotated Compilation of Case Law.*

ບົດສະຫຼຸບສັງລວມ

## ໑. ສິດໃນການມີບ້ານຢູ່ທີ່ພໍພຽງ

## ບົດສະເໜີ

ທີ່ດິນແມ່ນສ່ວນໜຶ່ງຂອງສິດໃນການມີບ້ານຢູ່ທີ່ພຽງພໍ. ການເຂົ້າເຖິງທີ່ດິນ ແລະ ຄວາມໝັ້ນຄົງໃນການຄອບຄອງທີ່ດິນແມ່ນມີຄວາມໝາຍວ່າສິດໃນການມີບ້ານຢູ່ໄດ້ຖືກຮັບຮອງແລ້ວ, ບໍ່ວ່າຈະເປັນເຂດຊົນນະບົດ ແລະ ຕົວເມືອງ.

ຄວາມກົດດັນໃນທີ່ດິນ ແລະ ຊັບສິນທີ່ເພີ່ມຂຶ້ນ, ການຂະຫຍາຍຕົວເມືອງ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດ, ສິ່ງທີ່ວ່າມານີ້ແມ່ນໄດ້ກະທົບຕໍ່ສິດຄອງຄົນທຸກຍາກໃນຊົນນະບົດ ແລະ ຕົວເມືອງ.

ໃນຕົວເມືອງ, ລາຄາທີ່ດິນທີ່ເພີ່ມຂຶ້ນ, ບັນຫາການເກັນກໍາໄລໃນຕະຫຼາດທີ່ເຂັ້ມຂົ້ນ ແລະ ການຫັນເປັນເອກະຊົນ, ການປະຕິຮູບການພັດທະນາ, ການວາງແຜນຜັງຕົວເມືອງ ແລະ ຊົນນະບົດທີ່ຜິດພາດ ແລະ ການຫັນປ່ຽນເປັນຕົວເມືອງທີ່ສວຍງາມນັ້ນແມ່ນມັນໄດ້ເຮັດໃຫ້ເກີດການແບ່ງພື້ນທີ່, ການຂາດຄວາມສາມາດໃນການໄດ້ທີ່ຢູ່ອາໃສ ແລະ ເກີດການລະເມີດຄວາມໝັ້ນຄົງໃນການຄອບຄອງທີ່ດິນ.

ສາຍເຫດທີ່ວ່ານັ້ນໄດ້ເຮັດໃຫ້ຄົນຈໍານວນຫຼາຍຕ້ອງໄດ້ອາໃສໃນສະລໍາ ແລະ ຕັ້ງຖິ່ນຖານແບບບໍ່ໄດ້ຮັບອານຸຍາດ, ເກີດມີການອາໃສໃນສະຖານທີ່ແອອັດ ແລະ ບໍ່ເໝາະສົມ, ເກີດບັນຫາຂາດການບໍລິການທາງສັງຄົມ, ເກີດສະພາບແວດລ້ອມໃນການດໍາລົງຊີວິດແບບບໍ່ເປັນສ່ວນໂຕ, ບໍ່ມີກຽດ ແລະ ບໍ່ມີວັດທະນະທໍາໃນດ້ານການດໍາລົງຊີວິດ. ກ່ຽວກັບບັນຫາດັ່ງກ່າວ, ກຸ່ມຄົນ ແລະ ຜູ້ທີ່ຢູ່ອາໃສທີ່ທຸກຍາກ ແລະ ມີລາຍໄດ້ຕໍ່າເຊິ່ງລວມມີແມ່ຍິງ, ຜູ້ອົບພະຍົບ ແລະ ຄົນພື້ນເມືອງແມ່ນໄດ້ປະເຊີນກັບການຖືກຈໍາແນກເປັນປະຈໍາ ແລະ ຖືກຕັດແຍກສິດໃນການມີບ້ານຢູ່ອາໃສທີ່ພໍພຽງ.

> ນັບລາຍງານພິເສດກ່ຽວກັບການມີທີ່ຢູ່ອາໃສທີ່ພໍພຽງໄດ້ກ່າວວ່າ "ທີ່ດິນຖືວ່າເປັນຊັບສິນດ້ານທີ່ຢູ່ອາໃສທີ່ສໍາຄັນທີ່ກ່ຽວຂ້ອງກັບສິດທິໃນການມີບ້ານຢູ່ທີ່ພໍພຽງ. ການບໍ່ມີທີ່ຢູ່ ອາໃສທີ່ພໍພຽງຂອງຄົນທຸກຍາກແມ່ນສ້າງບັນຫາໃນການກີດກັ້ນເຂົາເຈົ້າໃນການເຂົ້າເຖິງທີ່ດິນ, ການເງິນ, ແລະ ວັດຖຸອຸປະກອນຕ່າງໆໃນການສ້າງບ້ານ. ໃນເວລາ ທີ່ມີໂອກາດໃນການເຂົ້າເຖິງ, ການຄອບຄອງທີ່ດິນພັດບໍ່ ໄດ້ດັ່ງທີ່ເປັນ. ການຂາດຂໍ້ກໍານົດທາງກົດໝາຍໃນການຮັບປະກັນໃຫ້ຊຸມຊົນໄດ້ຮັບການສືບທອດ ຫຼື ເປັນເຈົ້າຂອງທີ່ດິນ ແລະ ໄດ້ມີໂອກາດນໍາໃຊ້ຊັບພະຍາກອນສ່ວນລວມ ຫຼື ທໍາມະ ຊາດນັ້ນແມ່ນຖືວ່າເປັນການຂັດຂວາງການຈັດຕັ້ງປະຕິບັດສິດທິໃນການມີບ້ານຢູ່ທີ່ພໍພຽງ."
>
> *ແຫຼ່ງຂໍ້ມູນ:* ບົດລາຍງານຂອງນັກລາຍງານພິເສດກ່ຽວກັບການມີທີ່ຢູ່ອາໃສທີ່ພໍພຽງ (A/HRC/7/16), ວັກທີ 66.

ໃນຊົນນະບົດ, ຊາວນາ, ກໍາມະກອນ, ຊາວປາມົງພື້ນບ້ານ, ຄົນພື້ນເມືອງ ແລະ ອີກຫຼາຍໆຄົນແມ່ນບໍ່ມີທີ່ຢູ່ອາໃສ ແລະ ຖືກບັງຄັບໃຫ້ຍົກຍ້າຍຖິ່ນຖານອອກຈາກທີ່ດິນ ແລະ ເຮືອນ. ປັດໃຈຫຼັກຂອງການຖືກບັງຄັບໃຫ້ຍົກຍ້າຍນີ້ແມ່ນກ່ຽວກັບບັນຫາການເວນຄືນທີ່ດິນທີ່ກວ້າງໃຫຍ່, ໂຄງການ ການພັດທະນາ ແລະ ການສ້າງໂຄງລ່າງເຊັ່ນ: ການສ້າງເຂື່ອນໄຟຟ້າ, ສ້າງຖະໜົນ ແລະ ສະຖານທີ່ທ່ອງທ່ຽວຕ່າງໆ, ກິດຈະກໍາດ້ານອຸດສະຫະກໍາ ແລະ ສະຖານທີ່ດຶງດູດຕ່າງໆ, ຄວາມຂັດແຍ່ງທີ່ດິນທີ່ບໍ່ທັນໄດ້ຮັບການແກ້ໄຂ ແລະ ບັນຫາຄວາມຂັດແຍ່ງຕ່າງໆຫຼາຍຢ່າງ.

## ຫຼັກການສາກົນທີ່ສາມາດນຳໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດໃນການມີບ້ານຢູ່ຕາມມາດຖານທີ່ພໍພຽງເພື່ອຕົນເອງ ແລະ ຄອບຄົວເຊິ່ງລວມມີອາຫານ, ເຮືອນ ແລະ ນ້ຳ, ແລະ ມີສິດໃນການໄດ້ຮັບການພັດທະນາດ້ານຊີວິດການເປັນຢູ່

*(ຖະແຫຼງການສິດທິມະນຸດສາກົນ ມາດຕາທີ 25, ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດສັງຄົມ ແລະ ວັດທະນະທຳ ມາດຕາທີ 11.)*

ໃນມູມມອງດ້ານສິດທິແມ່ຍິງຕໍ່ກັບໂພສະນາການ ແລະ ອາຫານທີ່ພໍພຽງ, ຜູ້ຍິງຄວນຈະໄດ້ຮັບໂອກາດໃນການມີບ້ານຢູ່ທີ່ພໍພຽງ ແລະ ໄດ້ຮັບເງື່ອນໄຂການດຳລົງຊີວິດໃນສະພາບແວດລ້ອມທີ່ເປັນມິດ. ເພື່ອຮັບປະກັນສິ່ງທີ່ວ່າມານີ້, ລັດທີ່ກ່ຽວຂ້ອງຕ້ອງຮັບປະກັນໃຫ້ແມ່ຍິງ ບໍ່ວ່າຈະມີຖານະທາງຄອບຄົວແນວໃດກໍ່ຕາມ ແມ່ນສາມສາມາດເຂົ້າເຖິງການມີບ້ານທີ່ພໍພຽງໄດ້.

(ອານຸສັນຍາຂອງກົດບັດແຫ່ງອັບຟຣິກາກ່ຽວກັບສິດທິຂອງແມ່ຍິງໃນອັບຟຣິກາ ມາດຕາ 16, ແລະ 15)

ທຸກຄົນແມ່ນມີສິດທີ່ຈະບໍ່ຕົກເປັນຜູ້ເຄາະຮ້າຍໃນການຖືກແຊກແຊງທີ່ບໍ່ຖືກຕ້ອງ ແລະ ການໃຊ້ອຳນາດເກີນຂອບເຂດທີ່ຈະກະທົບຕໍ່ສິດທິສ່ວນບຸກຄົນ, ຄອບຄົວ ແລະ ບ້ານ ຫຼື ດ້ານອື່ນໆ.

(ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 17.1)

ທຸກຄົນແມ່ນມີສິດທີ່ຈະບໍ່ຕົກເປັນຜູ້ເຄາະຮ້າຍໃນການຖືກບັງຄັບໃຫ້ຍົກຍ້ານຖິ່ນຖານຈາກບ້ານຢູ່, ຈາກທີ່ດິນ ແລະ ຈາກຊັບສິນຕ່າງໆ, ທຸກຄົນຕ້ອງໄດ້ຮັບການປົກປ້ອງຈາກການຖືກບັງຄັບໃຫ້ຍົກຍ້າຍຖິ່ນຖານ.

(ສົນທິສັນຍາສະຫະພາບອັບຟຣິກາເພື່ອການປົກປ້ອງ ແລະ ຊ່ວຍເຫຼືອຄົນພິການພາຍໃນອັບຟຣິກາ (ສົນທິສັນຍາ ກຳພະລາ ມາດຕາ 4))

ລັດພາຄີທີ່ກ່ຽວຂ້ອງຕ້ອງໃຫ້ການຊ່ວຍເຫຼືອແກ່ຄົນພິການດ້ານມະນຸດສະທຳທີ່ພໍພຽງ. ໃນດ້ານການມີທີ່ຢູ່ອາໃສ, ລັດທີ່ກ່ຽວຂ້ອງຈະຕ້ອງໃຫ້ທີ່ພັກອາໃສແກ່ຊາວອົບພະຍົບຢູ່ໃນດິນແດນຕົນຢ່າງຖືກຕ້ອງຕາມກົດໝາຍຕາມທີ່ສາມາດເຮັດໄດ້ ແລະ ບໍ່ວ່າຈະຕົກໃນກໍລະນີໃດກໍ່ຕາມ ການປະຕິບັດທີ່ວ່ານີ້ແມ່ນຕ້ອງໃຫ້ໄດ້ຄືກັນກັບການປະຕິບັດຕໍ່ຄົນຕ່າງດ້າວທີ່ອາໃສໃນດິນແດນຂອງຕົນ.

*(ສົນທິສັນຍາສະຫະພາບອັບຟຣິກາເພື່ອການປົກປ້ອງ ແລະ ຊ່ວຍເຫຼືອຄົນພິການພາຍໃນອັບຟຣິກາ (ສົນທິສັນຍາກຳປາລ່າ) ມາດຕາ 7.2; ສົນທິສັນຍາທີ່ກ່ຽວຂ້ອງກັບສະຖານະພາບຂອງຜູ້ລີ້ໄພ ມາດຕາ 21)*

## ຕົວຢ່າງໃນການນຳໃຊ້

ຕາມທີ່ນັກລາຍງານພິເສດໄດ້ຊີ້ແຈງກ່ຽວກັບການມີບ້ານຢູ່ອາໃສທີ່ພໍພຽງ, “ທີ່ດິນເປັນສິ່ງທີ່ສຳຄັນ ແລະ ເປັນສາຍເຫດຂອງການເກີດຂໍ້ຂັດແຍ່ງ ແລະ ເປັນພື້ນຖານຂອງການຮັບຮູ້ສິດກ່ຽວກັບທີ່ຢູ່ອາໃສທີ່ພໍພຽງ”[44]

ໃນຄຳເຫັນເລກທີ 4 (1991) ກ່ຽວກັບສິດໃນດ້ານການມີທີ່ຢູ່ອາໃສທີ່ພໍພຽງ, ຄະນະກຳມະທິການເສດຖະກິດສັງຄົມ ແລະ ວັດທະນະທຳໄດ້ບັນຍາຍກ່ຽວກັບຄວາມໝັ້ນຄົງໃນການຄອບຄອງທີ່ດິນຕາມກົດໝາຍວ່າມັນເປັນສິ່ງທີ່ສຳຄັນຫຼັກໃນການຮັບຮູ້ສິດໃນດ້ານທີ່ຢູ່ອາໃສທີ່ພໍພຽງ. ອີງຕາມຄະນະກຳມະທິການແລ້ວ, ການຄອບຄອງທີ່ດິນແມ່ນມີຫຼາຍຮູບແບບເຊິ່ງລວມມີ “ການເຊົ່າທີ່ຢູ່ອາໃສ (ພາກລັດ ຫຼື ເອກະຊົນ), ທີ່ຢູ່ຂອງສະຫະກອນ, ການໃຫ້ເຊົ່າ, ເຈົ້າຂອງກິດຈະການຕ່າງໆ, ບ້ານຢູ່ແບບສຸກເສີນ ແລະ ສະຖານທີ່ຢູ່ແບບບໍ່ທັນໄດ້ຮັບອານຸຍາດ ເຊິ່ງລວມມີການຄອບຄອງທີ່ດິນ ຫຼື ຊັບສິນຕ່າງໆ”. ບໍ່ວ່າຈະເປັນຮູບແບບການຄອບຄອງແນວໃດກໍ່ຕາມ “ຄົນທຸກຄົນແມ່ນ

[44] A/HRC/4/18, para. 25.

ຄວນຈະໄດ້ມີສິດຄອບຄອງທີ່ດິນແບບທີ່ມີຄວາມໝັ້ນຄົງທີ່ສາມາດຄໍ້າປະກັນຂະບວນການປົກປ້ອງດ້ານກົດໝາຍຈາກການຖືກບັງຄັບໃຫ້ອອກຈາກທີ່ດິນຂອງຕົນ, ຈາກການຖືກຣຸກຮານ ແລະ ຖືກຂົ່ມຂູ່ອື່ນໆ." ສິ່ງ**ສຳ**ຄັນທີ່ຄວນໃສ່ໃຈຄືຄວາມໝັ້ນຄົງໃນການຄອບຄອງບໍ່ໄດ້ກ່ຽວຂ້ອງກັບການເປັນເຈົ້າຂອງ ຫຼື ຮູບແບບການຄອບຄອງໃດໜຶ່ງສະເພາະ. ເພາະສະນັ້ນຄະນະກຳມະທິການຈຶ່ງໄດ້ໃຫ້ທັດສະນະຕໍ່ໄປອີກວ່າລັດ ທີ່ກ່ຽວຂ້ອງ "ຄວນຈະນຳໃຊ້ມາດຕະການທີ່ຮີບດ່ວນເພື່ອໃຫ້ການປົກປ້ອງດ້ານຄວາມໝັ້ນຄົງທາງກົດໝາຍຂອງການຄອບຄອງແກ່ຄົນທີ່ຍັງບໍ່ໄດ້ຮັບການປົກປ້ອງເທື່ອ ແລະ ຄວນດຳເນີນການຫາຂໍ້ມູນກັບຜູ້ທີ່ໄດ້ຮັບຜົນກະທົບທີ່ວ່ານັ້ນ." (ວັກທີ 8 (a)).

ທີ່ດິນເປັນປັດໃຈທີ່ມີອິດທິພົນກະທົບຕໍ່ສິດທິໃນດ້ານການມີທີ່ຢູ່ອາໃສທີ່ພໍພຽງຫຼາຍຢ່າງ. ມັນເປັນປັດໃຈທີ່**ສຳ**ຄັນໃນເວລາທີ່ຄົນສາມາດຊື້ທີ່ດິນມາຄອບຄອງ. ສ່ວນຄົນທຸກແມ່ນຕ້ອງໄດ້ຕັ້ງຖິ່ນຖານຢູ່ໃນເຂດທີ່ດິນທີ່ບໍ່ມີຄຸນຄ່າທາງເສດຖະກິດເພາະວ່າເຂດດັ່ງກ່າວມັນເປັນບ່ອນທີ່ມີສິ່ງເຈືອປົນດ້ານມົນລະພິດ ຫຼື ເຂດທີ່ມີສານຕົກຄ້າງຕ່າງໆ, ຫຼື ມີປັດໃຈດ້ານລົບຕ່າງໆໃນເຂດດັ່ງກ່າວ. ນອກນີ້ທີ່ດິນຍັງເປັນສູນກາງຂອງຕົວເມືອງ ແລະ ການວາງແຜນຜັງເມືອງ ເຊິ່ງຂະບວນການທີ່ວ່າມານີ້ແມ່ນມັນໄດ້ກະທົບຕໍ່ທີ່ຢູ່ອາໃສທີ່ກ່ຽວຂ້ອງກັບການເຂົ້າເຖິງການບໍລິການທາງສັງຄົມຂັ້ນພື້ນຖານລວມມີໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກດ້ານສາທາລະນະສຸກ. ໃນດ້ານການເຂົ້າເຖິງທີ່ຢູ່ອາໃສ, ທາງຄະນະກຳມະທິການໄດ້ກ່າວໃນບົດ ຄຳເຫັນເລກທີ 4 (1991) ວ່າ "ຢູ່ໃນຫລາຍໆລັດພາຄີ, ການເຂົ້າເຖິງທີ່ດິນທີ່ເພີ່ມຂື້ນຂອງຄົນທີ່ບໍ່ມີທີ່ດິນ ຫຼື ກຸ່ມຄົນທຸກຍາກ ນັ້ນແມ່ນຄວນເອົາມາພິຈາລະນາໃສ່ເປັນປັດໃຈຫຼັກໃນການອອກນະໂຍບາຍຕ່າງໆ" ພ້ອມນັ້ນ "ບັນດາພັນທະຂອງລັດຖະບານທີ່ເຫັນໄດ້ຊັດເຈນແມ່ນຕ້ອງໄດ້ຮັບການພັດທະນາເພື່ອສ້າງຄວາມໝັ້ນຄົງໃຫ້ແກ່ສິດທິຂອງທຸກຄົນທີ່ຈະໄດ້ທີ່ຢູ່ອາໃສທີ່ໝັ້ນຄົງດ້ວຍຄວາມສະຫງົບ ແລະ ມີກຽດສັກສີເຊິ່ງລວມເຖິງສິດໃນການເຂົ້າເຖິງທີ່ດິນ" (ວັກທີ 8 (e))

ມາດຖານຂໍ້ຫ້າມໃນການຖືກບັງຄັບໃຫ້ຍົກຍ້າຍແມ່ນໄດ້ຖືກພັດທະນາເຂົ້າໃນສິດທິໃນການມີບ້ານຢູ່ທີ່ພໍພຽງ. ຄະນະກຳມະທິການສິດທິມະນຸດໄດ້ໃຫ້ລາຍລະອຽດໄວ້ວ່າ "ການກະທຳທີ່ເປັນການບັງຄັບໃຫ້ມີການຍົກຍ້າຍແມ່ນຖືວ່າເປັນການລະເມີດສິດທິມະນຸດທີ່ຮຸນແຮງ, ໂດຍສະເພາະແມ່ນສິດໃນການມີທີ່ຢູ່ອາໃສທີ່ພໍພຽງ".[45] ຄະນະກຳມະທິການສິດທິທາງເສດຖະກິດສັງ ແລະ ວັດທະນະທຳໄດ້ກ່າວໃນບົດຄຳເຫັນເລກທີ 7 (1997) ວ່າ "ໃນສະຖານທີ່ທີ່ມີການບັງຄັບໃຫ້ຍົກຍ້າຍທີ່ເປັນທຳນັ້ນແມ່ນອາດຕົກໃນກໍລະນີທີ່ເກີດການບໍ່ຍອມຈ່າຍຄ່າເຊົ່າ ຫຼື ມີການສ້າງຄວາມເສຍຫາຍຂອງຊັບສິນທີ່ເຊົ່າຢູ່, ". ມັນເປັນໜ້າທີ່ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງທີ່ຈະໃຫ້ການນຮັບປະກັນວ່າພວກເຂົາແມ່ນໄດ້ເຮັດໜ້າທີ່ຕາມບົດບາດທີ່ມີພາຍໃຕ້ກົດໝາຍທີ່ສອດຄ່ອງກັບສົນທິສັຍາ ພ້ອມນັ້ນ ໃນການປະຕິບັດໜ້າທີ່ຍັງຕ້ອງມີຊັບພະຍາກອນ ແລະ ມາດຕະການປຽວຢາທີ່ເໝາະສົມແກ່ຜູ້ທີ່ຖືກເຄາະຮ້າຍ. (ວັກທີ 11). ຫຼັກການ ແລະ ຄູ່ມືກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການບໍ່ມີທີ່ຢູ່ອາໃສແມ່ນໄດ້ໃຫ້ລາຍລະອຽດກ່ຽວກັບພັນທະຂອງລັດ-ກ່ອນ, ລະຫວ່າງ ແລະ ພາຍຫຼັງການຖືກບັງຄັບໃຫ້ຍົກຍ້າຍໃນກໍລະນີທີ່ຈຳເປັນ.

ເຖິງຢ່າງໃດກໍ່ດີ ສິ່ງທີ່ຄວນໃສ່ໃຈກໍ່ຄືວ່າ ການຖືກບັງຄັບໃຫ້ຍົກຍ້າຍແມ່ນມີຜົນກະທົບບໍ່ພຽງແຕ່ໃນດ້ານສິດທິກ່ຽວກັບການມີທີ່ຢູ່ອາໃສທີ່ພໍພຽງ, ແຕ່ມັນຍັງກະທົບໃສ່ສິດທິມະນຸດໃນວົງກວ້າງອີກນຳ. ຕາມບົດຄຳເຫັນທົ່ວໄປຂອງຄະນະກຳມະທິການສິດທິທາງເສດຖະກິດສັງຄົມ ແລະ ວັດທະນະທຳເລກທີ 7 (1997) ໄດ້ກ່າວວ່າ "ເນື່ອງຈາກຄວາມສຳພັນ ແລະ ຄວາມກ່ຽວເນື່ອງທີ່ມີໃນສິດທິມະນຸດ, ການຖືກບັງຄັບໃຫ້ຍົກຍ້າຍແມ່ນມັນເປັນການລະເມີດສິດທິມະນຸດທີ່ເກີດຂື້ນເລື້ອຍໆ." ສະນັ້ນ ໃນເວລາທີ່ມີການລະເມີດຂໍ້ກຳນົດໃນສົນທິສັນຍາທີ່ເຫັນໄດ້ຢ່າງຊັດເຈັນກໍ່ຄື ການກະທຳທີ່ເປັນການບັງຄັບໃຫ້ຍົກຍ້າຍ ແມ່ນຖືວ່າເປັນການລະເມີດສິດທິທາງການເມືອງ ແລະ ພົນລະເຮືອນ, ເຊັ່ນ: ສິດໃນການມີຊີວິດຢູ່ລອດ, ສິດໃນຄວາມປອດໄພ, ສິດໃນການບໍ່ຖືກແຊກແຊງໃນຄວາມເປັນສ່ວນຕົວ, ໃນຄອບຄົວ, ແລະ ໃນບ້ານຢູ່ ພ້ອມທັງສິດໃນການຄອບຄອງຊັບສິນຢ່າງເສລີພາບ (ວັກທີ 4). ນອກນີ້, ການຖືກບັງຄັບໃຫ້ຍົກຍ້າຍແມ່ນບໍ່ຄວນເຮັດໃຫ້ຜູ້ທີ່ຖືກຍົກຍ້າຍນັ້ນຕ້ອງຂາດທີ່ຢູ່ອາໃສ ຫຼື ຕົກເປັນເຫຍື່ອຂອງການຖືກລະເມີດສິດທິຕ່າງໆ (ວັກທີ 16).

## ໃຫ້ເບິ່ງບົດສະຫຼຸບກ່ຽວກັບສິດໃນຊັບສິນ

ໃນບົດສະຫຼຸບສັງເກດການກ່ຽວກັບລັດຕ່າງໆ, ຄະນະກຳມະທິການສິດທິດ້ານເສດຖະກິດສັງຄົມ ແລະ ວັດທະນະທຳໄດ້ໃຫ້ຄຳເຫັນວ່າລັດທີ່ກ່ຽວຂ້ອງທີ່ຮັບຮອງບັນດາມາດຕະການສະເພາະ ແລະ ນິຕິກຳໃດໜຶ່ງແມ່ນຕ້ອງຮັບປະກັນການຈັດຕັ້ງປະຕິບັດໃນເລື່ອງທີ່

ກ່ຽວກັບການບັງຄັບໃຫ້ຍົກຍ້າຍ ແລະ ຕ້ອງຮັບປະກັນການໃຫ້ມີການເຂົ້າເຖິງບ້ານຢູ່ທີ່ພໍພຽງໃຫ້ແກ່ຊຸມຊົນທີ່ດ້ອຍໂອກາດ ແລະ ຊຸມຊົນທີ່ທຸກຍາກ.[46] ຄະນະກຳມະທິການສິດທິວ່າດ້ວຍການລົບລ້າງການຈຳແນກແມ່ຍິງໄດ້ກ່າວໃນບົດສັງເກດການກ່ຽວກັບປະເທດອິນເດຍ (2010) [47] ແລະ ປະເທດເຄນຢ່າ (2011) [48] ວ່າປະເທດດັ່ງກ່າວຕ້ອງໃສ່ໃຈຄວາມເທົ່າທຽມໃນການເຂົ້າເຖິງບ້ານຢູ່ທີ່ພໍພຽງຂອງແມ່ຍິງ. ໃນບົດລາຍງານສັງເກດການຂອງຄະນະກຳມະທິການວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດໄດ້ໃຫ້ຄຳແນະນຳວ່າລັດພາຄີທີ່ກ່ຽວຂ້ອງເຊັ່ນປະເທດຝຣັ່ງ 2010),[49] ແມ່ນຕ້ອງເຮັດທຸກວິທີທາງໃນການເພື່ອຮັບປະກັນສິດເທົ່າທຽມກັນຂອງຄົນພື້ນເມືອງໃນການເຂົ້າເຖິງການສຶກສາ, ວຽກເຮັດງານທຳ, ບ້ານຢູ່ອາໃສ, ແລະ ການບໍລິການສາທາລະນະສຸກໃນທົ່ວປະເທດ.

**ຄະດີຕົວຢ່າງ:**

**ຄະນະກຳມະທະການສິດທິທາງສັງຄົມຂອງສະຫະພາບເອີຣົບ: ສູນສິດທິມະນຸດຊາວໂຣມ້າໃນເອີຣົບ ກັບ ປະເທດກະເຣັກ, ບົດລາຍງານເລກທີ 15\2003 (8 ທັນວາ 2004).** ໃນຄະດີດັ່ງກ່າວແມ່ນກ່ຽວກັບຊຸມຊົນຊາວໂລມ້າຖືກບັງຄັບໃຫ້ຍົກຍ້າຍອອກຈາກທີ່ດິນທີ່ພວກເຂົາຕັ້ງຖິ່ນຖານຢູ່ຊົ່ວຄາວນັ້ນແມ່ນຈະມີສິດໄດ້ຮັບການຄຸ້ມຄອງສິດຂອງຄອບຄົວໃນດ້ານສັງຄົມ, ກົດໝາຍ ແລະ ເສດຖະກິດຈາກກົດບັດແຫ່ງສະຫະພາບເອີຣົບກ່ຽວກັບບັນຫາທີ່ດິນ ແລະ ບ້ານຢູ່ທີ່ກ່ຽວຂ້ອງເຫຼົ່ານັ້ນຫຼືບໍ່. ທາງຄະນະກຳມະທິການແມ່ນໄດ້ແນະນຳໃຫ້ທົດແທນທີ່ດິນໃນການຍົກຍ້າຍດັ່ງກ່າວ ແລະ ການບັງຄັບໃຫ້ຍົກຍ້າຍທີ່ວ່ານັ້ນແມ່ນຄວນໃຫ້ຍົກເລີກ.[50]

## ຫຼັກການ ແລະ ຄູ່ມືຕ່າງໆທີ່ກ່ຽວຂ້ອງ

- ຄູ່ມືອາສາກ່ຽວກັບການບໍລິຫານຄຸ້ມຄອງການຄອບຄອງທີ່ດິນ, ປ່າໄມ້, ແລະ ການປາມົງໃນດ້ານຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດ (Rome, FAO, 2012) ໂດຍສະເພາະແມ່ນພາກ 3.1.2; 4.4; 7.6; 7 to 10 ແລະ 16.
- ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບການບັງຄັບ ແລະ ການບໍ່ມີທີ່ຢູ່ອາໃສທີ່ກ່ຽວຂ້ອງກັບບັນຫາການພັດທະນາ (A/HRC/4/18, annex I).

---

[46] Concluding observations on Argentina (E/C.12/ARG/CO/3), Cambodia (E/C.12/KHM/CO/1), the Democratic Republic of the Congo (E/C.12/COD/CO/4), Israel (E/C.12/ISR/CO/3) and Poland (E/C.12/POL/CO/5).
[47] CEDAW/C/IND/CO/SP.1.
[48] CEDAW/C/KEN/CO/7.
[49] CERD/C/FRA/CO/17-19, para. 18.
[50] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ

## ຈ. ສິດໃນການໄດ້ຮັບການປຽວຍາຢ່າງມີປະສິດທິພາບ

### ບົດນໍາສະເໜີ

ໃນເວລາທີ່ສິດທິມະນຸດໄດ້ຖືກລະເມີດແລ້ວ, ຜູ້ເຄາະຮ້າຍແມ່ນຕ້ອງໄດ້ຮັບການປຽວຍາຈາກກົນໄກຕ່າງໆຢ່າງມີປະສິດຕິພາບ ເຊັ່ນ: ຈາກສານ ຫຼື ຈາກລະບົບການແກ້ໄຂຕ່າງໆ, ແລະ ຕ້ອງໃຫ້ການປຽວຍາຢ່າງພຽງພໍຈາກຜົນກະທົບທີ່ເກີດຂື້ນ. ລັດພາຄີທີ່ກ່ຽວຂ້ອງແມ່ນມີພັນທະໃນການສືບສວນສອບສວນສິ່ງທີ່ເກີດນຂື້ນ, ແລະ ໃນກໍລະນີທີ່ມີການກໍ່ອາສະຍາກໍາ, ອາສະຍາກອນແມ່ນຕ້ອງໄດ້ຮັບການລົງໂທດຕາມສິ່ງທີ່ກໍ່. ໃນສິ່ງທີ່ກ່ຽວຂ້ອງກັບບັນຫາທີ່ກ່າວມານີ້, ການລະເມີດສິດທິມະນຸດສ່ວນໃຫຍ່ແມ່ນຈະກ່ຽວຂ້ອງກັບການນໍາໃຊ້ທີ່ດິນ (ມີການກໍ່ມົນລະພິດ ຫຼື ເຮັດໃຫ້ທີ່ດິນເຊື່ອມໂຊມ) ຫຼື ກ່ຽວຂ້ອງກັບຂະບວນການຮ້ອງຟ້ອງກ່ຽວກັບທີ່ດິນ.

> "ຄະນະກໍາມະທິການແມ່ນໄດ້ສະແດງຄວາມເປັນຫ່ວງກ່ຽວກັບການຂາດລະບົບທີ່ມີປະສິດທິພາບໃນການຮັບຮູ້ ແລະ ຊົດເຊີຍທີ່ດິນຕາມສິດໃນການປົກປ້ອງຄົນພື້ນເມືອງຈາກການເຂົ້າເຖິງທີ່ດິນຂອງບັນພະບູລຸດເຂົາເຈົ້າ
>
> ຄວາມເປັນຫ່ວງອີກຢ່າງກໍຄືດ້ານຄວາມລົ້ມເຫຼວຂອງລັດພາຄີໃນການສືບສວນສອບສວນ ແລະ ຈັດການກັບບັນຫາໄພອົ່ມຂູ ແລະ ຄວາມຮຸນແຮງທີ່ມີຕໍ່ຄົນພື້ນເມືອງ ແລະ ຊຸມຊົນຊາວອັບຟຣິກກາດັ້ງເດີມທີ່ກໍາລັງປະເຊີນກັບການຖືກບັງຄັບໃຫ້ຍົກຍ້າຍ..."
>
> *ທີ່ມາ:* ບົດສັງເກດການຂອງຄະນະກໍາມະທິການກ່ຽວກັບການລົບລ້າງບັນຫາການຈໍາແນກເຊື້ອຊາດໃນປະເທດປາລາກວຍ (CERD/C/PRY/CO/1-3), ວັກທີ 15.

ການຂາດກົນໄກແກ້ໄຂທີ່ມີປະສິດຕິພາບ, ຂາດການຮ່ວມມື ແລະ ຂາດການແບ່ງວຽກທີ່ຈະແຈ້ງໃຫ້ແກ່ເຈົ້າໜ້າທີ່ເພື່ອ ດໍາເນີນການກັບບັນຫາທີ່ເກີດຂື້ນ ແລະ ການໃຫ້ການປຽວຍາ, ຫຼື ບັນຫາການສໍ້ລາດບັງຫຼວງຕ່າງໆ ແມ່ນເປັນສາຍເຫດຂອງການຂັດຂວາງການເຂົ້າເຖິງຄວາມຍຸຕິທໍາ ແລະ ການປຽວຍາທີ່ມີປະສິດຕິພາບແກ່ຜູ້ທີ່ເຄາະຮ້າຍຈາກບັນຫາທີ່ດິນ. ໃນດ້ານທີ່ກົງກັນຂ້າມ, ການຊ່ວຍເຫຼືອທາງກົດໝາຍທີ່ພຽງພໍ, ການຊ່ວຍເຫຼືອຂອງນັກກົດໝາຍທີ່ບໍລິການເຄື່ອນທີ່ໃຫ້ແກ່ຊຸມຊົນຫ່າງໄກສອກຫຼີກ ແມ່ນສາມາດສ້າງຄວາມສະດວກໃນການເຂົ້າເຖິງຂະບວນການພິຈາລະນາຄະດີກ່ຽວກັບທີ່ດິນ ແລະ ຖືວ່າເປັນການເຂົ້າຫາຄວາມຍຸຕິທໍາ ແລະ ການປຽວຍາທີ່ມີປະສິດຕິຜົນໃຫ້ແກ່ຜູ້ທີ່ທຸກຍາກ ແລະ ຢູ່ຫ່າງໄກສອກຫຼີກ.

ການຕິດຕາມກວດກາທີ່ຮີບດ່ວນຕາມໄລຍະເວລາຂອງຂໍ້ຂັດແຍ່ງທີ່ເກີດຂື້ນນັ້ນແມ່ນຖືວ່າເປັນການຮັບປະກັນສິດໃນການໄດ້ຮັບການປຽວຍາທີ່ມີປະສິດຕິພາບໃນກໍລະນີທີ່ມີການລະເມີດສິດ ແລະ ການເອົາລັກເອົາປຽບຕ່າງໆເຊິ່ງມັນມີຄວາມສໍາຄັນໃນການສ້າງ ແລະ ຮັກສາສັນຕິພາບ. ສັນຕິພາບແມ່ນບໍ່ສາມາດເຮັດໄດ້ສໍາເລັດໂດຍປາດສະຈາກການຮ່ວມມືຂອງປະຊາຊົນໃນການແກ້ໄຂບັນຫາທີ່ເກີດຂື້ນ, ການລະເມີດສິດ ແລະ ການຖືກເອົາປຽບຕ່າງໆໂດຍສະເພາະບັນຫາທີ່ດິນ ຫຼື ການກີດກັນໃນການເຂົ້າເຖິງທີ່ດິນ, ສິ່ງທີ່ກ່າວມານີ້ແມ່ນຕ້ອງໄດ້ຮັບການແກ້ໄຂຜ່ານກົງຈັກການແກ້ໄຂຄວາມຂັດແຍ່ງຢ່າງສັນຕິ ແລະ ການນໍາພາເຂົ້າສູ່ຂະບວນການຍຸຕິທໍາທີ່ເປັນທໍາ.

## ຫຼັກການສາກົນທີ່ສາມາດນຳໃຊ້ເຂົ້າໃນບັນຫາທີ່ດິນ

ທຸກຄົນແມ່ນມີສິດໄດ້ຮັບການປົວແປງຢ່າງມີປະສິດຕິພາບຈາກຂະບວນການຂອງສານພາຍໃນທີ່ມີຄວາມສາມາດທີ່ຈະດຳເນີນການກັບບັນຫາການລະເມີດສິດທິພື້ນຖານ ແລະ ສິດທິມະນຸດທີ່ຖືກຮັບຮອງໃນກົດໝາຍສາກົນ ແລະ ພາຍໃນ.

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 8, ສົນທິສັນຍາສາກົນວ່າດ້ວຍສິດທິທາງພົນລະເຮືອນ ແລະ ການເມືອງ ມາດຕາ 2, ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກເຊື້ອຊາດ, ມາດຕາ 6)

ຂັ້ນຕອນການດຳເນີນງານທີ່ພຽງພໍແມ່ນຈະຕ້ອງໄດ້ຮັບການເອົາໃສ່ໃນລະບົບກົດໝາຍພາຍໃນເພື່ອແກ້ໄຂບັນຫາທີ່ດິນທີ່ໄດ້ຮັບການຮ້ອງຟ້ອງມາຈາກຄົນພື້ນເມືອງທີ່ກ່ຽວຂ້ອງ.

(ສົນທິສັນຍາຂອງອົງການແຮງງານສາກົນ ILO ກ່ຽວກັບຄົນພື້ນເມືອງ ແລະ ຄົນຊົນເຜົ່າໃນປະເທດເອກະລາດຕ່າງໆ ( ເລກທີ 169), 1998 ມາດຕາ 14 (3))

ຄົນພື້ນເມືອງແມ່ນມີສິດເຂົ້າເຖິງ ແລະ ຮູ້ເຫັນການຕົກລົງຕ່າງໆໂດຍຜ່ານຂະບວນການທີ່ມີຄວາມທ່ຽງທຳ ແລະ ຍຸດຕິທຳໃນການແກ້ໄຂບັນຫາຄວາມຂັດແຍ່ງ ແລະ ຂໍ້ພິພາກຕ່າງໆກັບລັດ ຫຼື ພາກສ່ວນອື່ນໆ ນັ້ນກໍ່ຄືການປົວແປງທີ່ທີ່ມີປະສິດທິພາບສຳລັບບັນຫາການຖືກລະເມີດສິດສ່ວນຕົວ ແລະ ສິດໃນສ່ວນລວມ. ບັນຫາການຕົກລົງຕ່າງໆຈະຕ້ອງພິຈະລານາທາງຮີດຄອງປະເພນີ, ລະບຽບການຕ່າງໆ, ແລະ ລະບົບກົດໝາຍຂອງຄົນພື້ນເມືອງ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງ.

(ຖະແຫຼງການ ສປຊ ວ່າດ້ວຍສິດຂອງຄົນພື້ນເມືອງ ມາດຕາ 40)

## ຕົວຢ່າງຂອງການນຳໃຊ້

ໃນເວລາທີ່ລັດນັ້ນຫາກບໍ່ສາມາດຈັດຕັ້ງປະຕິບັດຫຼັກການສົນທິສັນຍາສິດທິມະນຸດ, ຜູ້ຖືສິດທີ່ທີ່ກ່ຽວຂ້ອງແມ່ນຍັງສາມາດໄດ້ຮັບການປົກປ້ອງສິດທີ່ເໝາະສົມຕໍ່ໜ້າລະບົບຕຸລາການ, ລະບົບບໍລິຫານ ຫຼື ເຈົ້າໜ້າທີ່ທີ່ມີຄວາມສາມາດຕ່າງໆ, ອີງຕາມ ລະບຽບການ ແລະ ຂະບວນການທີ່ກຳນົດໃນກົດໝາຍ. ເຈົ້າໜ້າທີ່ທີ່ມີຄວາມສາມາດຈະຕ້ອງນຳໃຊ້ຫຼັກການ ແລະ ມາດຕະການດັ່ງທີ່ກ່າວມານັ້ນໃນເວລາທີ່ຈຳເປັນ ແລະ ຕ້ອງເຮັດທຸກວິທີທາງເພື່ອປົກປ້ອງຜູ້ທີ່ຮ້ອງໃນບັນຫາທີ່ກ່ຽວກັບການຖືກລະເມີດ ແລະ ຖືກກະ ທຳຕ່າງໆ.

ໃບບົດລາຍງານເລກທີ 9 (1998) ກ່ຽວກັບການນຳໃຊ້ສົນທິສັນຍາເຂົ້າໃນລະບົບພາຍໃນ, ທາງຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ໃສ່ໃຈເປັນພິເສດໃນ "ເງື່ອນໄຂພື້ນຖານຂອງກົດໝາຍສິດທິມະນຸດສາກົນ" ແລະ ໄດ້ກ່າວຕື່ມວ່າ "ກົນໄກສົນທິສັນຍາຈະຕ້ອງໄດ້ຮັບການຮັບຮອງໃຫ້ເໝາະສົມເຂົ້າໃນລະບົບກົດໝາຍພາຍໃນ, ເຂົ້າໃນຂັ້ນຕອນການແກ້ໄຂທີ່ເໝາະສົມ, ຫຼື ປົວແປງ, ຕ້ອງໃຫ້ການຊ່ວຍເຫຼືອແກ່ທຸກຄົນທີ່ຖືກລະເມີດ, ແລະ ຕ້ອງໃຫ້ພາກລັດມີຄວາມຮັບຜິດຊອບໃນເວລາທີ່ກະທຳການລະເມີດ" (ວັກທີ 2).

ອີງຕາມຫຼັກການພື້ນຖານ ແລະ ຄູ່ມືຕ່າງໆກ່ຽວກັບສິດໃນການໄດ້ຮັບການປົວແປງ ແລະ ຮັບຜິດຊອບຕໍ່ຜູ້ທີ່ຖືກລະເມີດສິດທິຕາມກົດໝາຍສິດທິມະນຸດສາກົນ ແລະ ຕາມກົດໝາຍມະນຸດສະທຳສາກົນ, ການປົວແປງຕ້ອງໃຫ້ສິດແກ່ຜູ້ເຄາະຮ້າຍໃນການ (ກ) ເຂົ້າເຖິງລະບົບຍຸຕິທຳທີ່ມີປະສິດຕິພາບ ແລະ ເຂົ້າເຖິງອົງການບໍລິຫານ ແລະ ອົງການອື່ນໆ, (ຂ) ຕ້ອງຮັບຜິດຊອບຕໍ່ຜົນກະທົບຕ່າງໆທີ່ເກີດຂຶ້ນຢ່າງມີປະສິດຕິພາບ, ພຽງພໍ ແລະ ວ່ອງໄວ, (ຄ) ຕ້ອງສາມາດເຂົ້າເຖິງແຫຼ່ງຂໍ້ມູນທີ່ກ່ຽວກັບການລະເມີດ ແລະ ກົນໄກການຊົດເຊີຍໃຊ້ຕ່າງໆ.[51]

[51] General Assembly resolution 60/147, para. 11.

ບັນດາຫຼັກການ ແລະ ຄູ່ມືຕ່າງໆຍັງໃຫ້ແນວທາງຕື່ມອີກວ່າ ການຊົດໃຊ້ແມ່ນຄວນສົມເຫດສົມຜົນຕໍ່ກັບຄວາມເສຍຫາຍທີ່ເກີດຂື້ນ ແລະ ຕໍ່ສະຖານະການໃນແຕ່ລະດ້ານ, ພ້ອມນັ້ນ ການຊົດໃຊ້ຕ້ອງລວມໄປເຖິງ: ການຊົດໃຊ້ຄ່າເສຍຫາຍ, ການທົດແທນຕ່າງໆ, ການຟື້ນຟູ, ການສ້າງຄວາມພໍໃຈ ແລະ ຮັບປະກັນການບໍ່ຊໍ້າຊ້ອນໃນການຊົດໃຊ້. ການຊົດໃຊ້ຄວນທົດແທນຜູ້ເສຍຫາຍດ້ວຍການເຮັດໃຫ້ສະພາບທີ່ຖືກລະເມີດກັບຄືນມາຄືເກົ່າ, ການທົດແທນແມ່ນຄວນໃຫ້ເປັນໄປຕາມລັກສະນະຄວາມສູນເສຍທາງເສດຖະກິດ, ການຟື້ນຟູແມ່ນຄວນມີການປິ່ນປົວທາງສຸກຂະພາບ ແລະ ຈິດໃຈ ນັ້ນກໍ່ຄືການໃຫ້ການບໍລິການທາງກົດໝາຍ ແລະ ສັງຄົມ. ການສ້າງຄວາມພໍໃຈແມ່ນລວມມີບັນດາມາດຕະການຕ່າງໆທີ່ແນໃສ່ການຍຸດຕິການລະເມີດຕ່າງໆ, ການຊອກຫາສາຍເຫດ, ແລະ ເປີດເຜີຍຕໍ່ສາທາລະນະຢ່າງກວ້າງຂວາງເຊັ່ນ: ຮັບປະກັນການຄຸ້ມຄອງທາງການທະຫານ ແລະ ທາງໜ່ວຍງານຮັກສາຄວາມປອດໄພໃຫ້ໄດ້ຢ່າງມີປະສິດຕິພາບ, ເສີມຂະຫຍາຍຄວາມເປັນເອກະລາດຂອງອົງການຕຸລາການ, ຫຼື ສົ່ງເສີມກົນໄກເພື່ອປ້ອງກັນ ແລະ ກວດສອບຄວາມຂັດແຍ່ງໃນສັງຄົມ ແລະ ຊອກວິທີແກ້ໄຂ. (ວັນທີ 23).

ການດຳເນີນການບັງຄັບໃຫ້ຍົກຍ້າຍທີ່ເຮັດຂື້ນມາໃນຮູບແບບທີ່ຂັດກັບຫຼັກການສິດທິມະນຸດສາກົນແມ່ນຖືວ່າເປັນການລະເມີດສິດທິມະນຸດຢ່າງຮຸນແຮງ.[52] ໃນບົດຄໍາເຫັນເລກທີ 7 (1977) ຂອງຄະນະກໍາມະທິການສິດທິທາງເສດຖະກິດສັງຄົມ ແລະ ວັດທະ ນະທໍາ, ທາງຄະນະກໍາມະທິການໄດ້ພິຈາລະນາວ່າມາດຕະການປົກປ້ອງທີ່ຄວນນໍາໃຊ້ຕໍ່ກັບບັນຫາການຖືກບັງຄັບໃຫ້ຍົກຍ້າຍນັ້ນແມ່ນລວມມີຂໍ້ກໍານົດທາງກົໝາຍວ່າດ້ວຍການປິ່ນປົວ, ແລະ ການໃຫ້ການຊ່ວຍເຫຼືອທາງກົດໝາຍແກ່ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຈາກສານ (ວັນທີ 15).

ພາຍໃຕ້ຫຼັກການພື້ນຖານ ແລະ ຄູ່ມືກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສເນື່ອງຈາກບັນຫາການພັດທະນາ (ວັກທີ 59)ນັ້ນ, ມາດຕະການທີ່ສາມາດໃຊ້ໃນການປິ່ນປົວແມ່ນມີ "ການດໍາເນີນຄະດີທີ່ເປັນທໍາ, ການມີສິດເຂົ້າເຖິງທະນາຍຄວາມ, ເຂົ້າເຖິງການຊ່ວຍເຫຼືອທາງກົດໝາຍ, ການສົ່ງກັບຄືນບ້ານ, ການສ້າງຖິ່ນຖານໃຫ້ໃໝ່, ການທົດແທນຊັບສິນ, ການຊົດໃຊ້ຄ່າເສຍຫາຍຕ່າງໆ, ແລະ ປົວແປງສິ່ງທີ່ເສຍຫາຍ, ພ້ອມນັ້ນ ຖ້າເປັນໄປໄດ້, ມາດຕະການປິ່ນປົວເຫຼົ່ານັ້ນແມ່ນຄວນໃຫ້ສອດຄ່ອງກັບຫຼັກການພື້ນຖານ ແລະ ຄູ່ມືກ່ຽວກັບສິດໃນການໄດ້ຮັບການປິ່ນປົວ ແລະ ປົວແປງສິ່ງທີ່ສູນເສຍໃຫ້ແກ່ຜູ້ທີ່ເສຍຫາຍຈາກາກຖືກລະເມີດກົດໝາຍສິດທິມະນຸດສາກົນຢ່າງຮຸນແຮງ ແລະ ລະເມີດກົດໝາຍມະນຸດສະທໍາສາກົນອີກນໍາ"

ຫຼັກການພື້ນຖານຄູ່ມືກ່ຽວກັບການບໍ່ມີທີ່ຢູ່ອາໃສພາຍໃນ (ຫຼັກການທີ 29) ແມ່ນໄດ້ໃຫ້ຄວາມຈະ ແຈ້ງວ່າຄົນທີ່ຂາດທີ່ຢູ່ອາໃສພາຍໃນທີ່ກໍາລັງປະເຊີນໜ້າກັບການຕັ້ງຖິ່ນຖານບ່ອນໃໝ່ນັ້ນຕ້ອງບໍ່ໄດ້ຖືກຈໍາແນກ ແລະ ມີສິດຢ່າງເຕັມທີ່ໃນການມີສ່ວນຮ່ວມໃນກິດຈະກໍາທາງສັງຄົມ. ນອກນີ້, ລັດທີ່ກ່ຽວຂ້ອງຕ້ອງໃຫ້ການຊ່ວຍເຫຼືອເຂົາ ເຈົ້າເຫຼົ່ານັ້ນໃນການຟື້ນຟູຊັບສິນ ແລະ ສິ່ງຂອງຕ່າງໆຂອງເຂົາເຈົ້າ ຫຼື ໃຫ້ການທົດແທນສິ່ງທີ່ເສຍຫາຍຕ່າງໆ. ຂະບວນການຂອງ ສານແມ່ນເປັນເລື່ອງທີ່ຍາກທີ່ຈະເຂົ້າໃຈ, ໃຊ້ເວລາ ແລະ ອາດເສຍຄ່າໃຊ້ຈ່າຍຫຼາຍ, ສະນັ້ນ ມັນຊິເປັນການດີຖ້າຫາກຈະມີການປ້ອງກັນ ໂດຍສະເພາະແມ່ນແມ່ຍິງ ໃຫ້ອອກຈາກຂະບວນການ ຮ້ອງຟ້ອງໃນເລື່ອງກ່ຽວກັບຊັບສິນ ແລະ ບັນຫາຂັດແຍ່ງໃນທີ່ດິນ ແມ່ນຈະເປັນການດີກວ່າ.

ໃນບົດສັງເກດການຂອງຄະນະກໍາມະທິການວ່າດ້ວຍການລົບລ້າງການຈໍາແນກໃນທຸກຮູບແບບແມ່ນໄດ້ໃຫ້ຄໍາເຫັນແກ່ປະເທດພາຄີຕ່າງໆວ່າມາດຕະການເພື່ອຮັບປະກັນການເຂົ້າເຖິງຄວາມຍຸຕິທໍາ, ການທົດແທນ ແລະ ຊົດໃຊ້ທີ່ສົມເຫດສົມຜົນໃຫ້ແກ່ຜູ່ເຄາະຮ້າຍນັ້ນແມ່ນຕ້ອງລວມເອົາບັນຫາຄົນພື້ນເມືອງທີ່ໄດ້ຮັບຜົນກະທົບຈາກການຖືກບັງຄັບໃຫ້ຍ້າຍຖິ່ນຖານ ແລະ ການບໍລິຫານຈັດການທີ່ດິນທີ່ບໍ່ຖືກກົດໝາຍເຂົ້າພິຈາລະນານໍາ.[53] ຄະນະກໍາມະທິການສິດທິທາງເສດຖະກິດສັງຄົມ ແລະ ການເມືອງໄດ້ໃຫ້ຄໍາເຫັນໃນບົດສັງເກດການ ວ່າມາດຕະການທີ່ລັດພາຄີຕ່າງໆໄດ້ດໍາເນີນການນັ້ນແມ່ນຕ້ອງຮັບປະກັນການປິ່ນປົວທາງກົດໝາຍແກ່ຜູ້ທີ່ຖືກເຄາະຮ້າຍຈາກການຖືກຍົກຍ້າຍ ແລະ ການຍາດແຍ່ງທີ່ດິນ.[54]

ຄະນະກໍາມະທິການວ່າດ້ວຍການລົບລ້າງການຈໍາແນກທຸກຮູບແບບຕໍ່ແມ່ຍິງໄດ້ກ່າວໃນບົດສະຫຼຸບສັງເກດການ (2010) ວ່າມາດຕະການເພື່ອຮັບປະກັນສິດໃນທີ່ດິນ ແລະ ບ້ານຢູ່ ນັ້ນແມ່ນເປັນພື້ນຖານທີ່ສໍາຄັນໃນການປົວແປງ ແລະ ທົດແທນໃຫ້ແກ່ແມ່ຍິງຜູ້ເຄາະ

[52] Commission on Human Rights resolutions 1993/77 and 2004/28.
[53] Concluding observations on Cambodia (CERD/C/KHM/CO/8-13), Cameroon (CERD/C/CMR/CO/15-18), Paraguay (CERD/C/PRY/CO/1-3) and Ukraine (CERD/C/UKR/CO/19-21).
[54] Concluding observations on Argentina (E/C.12/ARG/CO/3), Israel (E/C.12/ISR/CO/3) and Russian Federation (E/C.12/RUS/CO/5).

ຮ້າຍຈາກຄວາມວຸ້ນວາຍທີ່ເກີດໃນເມືອງກູຈາຣັດທີ່ຜ່ານມາ.[55]

### ຄະດີຕົວຢ່າງ:

**ປະເທດເຄນຢ້າ, ສານສູງທີ່ເມືອງເອມບູ: ລະຫວ່າງອີບຣາລາຫີມ ຊັງເກີ້ ແລະ ຜູ້ອື່ນໆ ກັບ ລັດຖະມົນຕີການບໍລິຫານແຂວງ ແລະ ຄວາມໝັ້ນຄົງ ແລະ ວຽກງານອື່ນໆຂອງລັດ, ຮ້ອງຟ້ອງຕາມລັດຖະທຳມະນູນ ເລກທີ 2 ເດືອນ 2011 (16 ພະຈິກ 2011).** ໃນຄະດີດັ່ງກ່າວແມ່ນກ່ຽວຂ້ອງກັບການຖືກບັງຄັບໃຫ້ຍົກຍ້າຍຂອງຊຸມຊົນຢ່າງກວ້າງຂວາງເຊິ່ງການຍົກຍ້າຍນັ້ນແມ່ນບໍ່ໄດ້ຮັບການທົດແທນທີ່ດິນ ຫຼື ບ້ານຢູ່ທີ່ເໝາະສົມ, ແຕ່ທົດໃຫ້ທີ່ຢູ່ທີ່ຫ່າງໄກໂດຍບໍ່ສາມາດເຂົ້າເຖິງໂຮງຮຽນປະຖົມໄດ້. ບັນຫາທີ່ຮ້ອງຟ້ອງມານັ້ນແມ່ນແນໃສ່ດ້ານກົດໝາຍວ່າຈະມີເງື່ອນໄຂໃດທີ່ມາສາມດຊ່ວຍໃຫ້ຊຸມຊົນທີ່ຖືກຍ້າຍນັ້ນຈະໄດ້ຮັບການທົດແທນທີ່ເໝາະສົມຫຼືບໍ່. ໃນການຕັດສິນຂອງສານນັ້ນ, ສານໄດ້ເບິ່ງກົດໝາຍສິດທິມະນຸດສາກົນ ແລະ ຫຼັກການກົດໝາຍປຽບທຽບຕ່າງໆໃນອັບຟຣິກາ, ຈາກການທົບທວນບັນດາກົດໝາຍທີ່ກ່າວມານັ້ນເຫັນວ່າຊຸມຊົນທີ່ຖືກບັງຄັບໃຫ້ຍົກຍ້າຍນັ້ນແມ່ນຕ້ອງໄດ້ຮັບການທົດແທນທີ່ເໝາະສົມ. ໃນການຕັດສິນດັ່ງກ່າວ, ສານແມ່ນໄດ້ອີງໃສ່ມາດຕາທີ 8 ຂອງຫຼັກການ ແລະ ຄູ່ມືພື້ນຖານກ່ຽວກັບການປຽວຢາຜູ້ທີ່ຖືກເຄາະຮ້າຍຈາກການລະເມີດສິດທິມະນຸດສາກົນຢ່າງຮຸນແຮງ ແລະ ທັງເປັນການລະເມີດກົດໝາຍວ່າດ້ວຍມະນຸດສະທຳສາກົນອີກດ້ວຍ.[56]

### ຫຼັກການ ແລະ ຄູ່ມືຕ່າງໆທີ່ກ່ຽວຂ້ອງອື່ນໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບລິຫານຄຸ້ມຄອງທີ່ດິນ, ປ່າໄມ້, ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງດ້ານສະບຽງ ອາຫານແຫ່ງຊາດ (Rome, FAO, 2012), ຫຼັກການແນະນຳ 3.2, ຄູ່ມື 4.9, 21.1, 25.4, 25.5.
- ຄູ່ມືແນະນຳກ່ຽວກັບສິດທິມະນຸດ ແລະ ການເຮັດທຸລະກິດ: ການຈັດຕັ້ງປະຕິບັດແຫ່ງ ສປຊ "ການປົກປ້ອງ, ການເຄົາລົບ ແລະ ການປຽວຢາ" ໃນກອບຂອງ (ເອກະສານຂອງ ສປຊ, Sales No. E.13.XIV.5), ຫຼັກການ 1, 11, 14, 15, 17, 19, 22, 24–31.
- ການເວນຄືນ ແລະ ໃຫ້ສຳປະທານທີ່ດິນຂະໜາດໃຫຍ່: ຫຼັກການ ແລະ ມາດຕະການໃນການແກ້ໄຂບັນຫາຕ່າງໆໃນດ້ານສິດທິມະນຸດ ຕາມມາດຕະຖານລະດັບນ້ອຍ A/HRC/13/33/Add.2), ຫຼັກການ 2.
- ຫຼັກການ ແລະ ຄູ່ມືພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ບໍ່ມີທີ່ຢູ່ອາໃສເນື່ອງຈາກບັນຫາການພັດທະນາ (A/HRC/4/18, annex I), paras. 17, 22, 59–68.
- ຫຼັກການ ແລະ ຄູ່ມືພື້ນຖານກ່ຽວກັບສິດໃນການໄດ້ຮັບການປຽວຢາ ແລະ ທົດແທນສຳລັບຜູ້ທີ່ເຄາະຮ້າຍຈາກການລະເມີດສິດທິມະນຸດສາກົນຢ່າງຮຸນແຮງ ແລະ ທັງເປັນການລະເມີດກົດໝາຍວ່າດ້ວຍມະນຸດສະທຳສາກົນ (ມະຕິຂອງສະມັດຊາໃຫຍ່ 60/147).
- ຫຼັກການແນະນຳກ່ຽວກັບການບໍ່ມີທີ່ຢູ່ອາໃສພາຍໃນ (E/CN.4/1998/53/Add.2), ຫຼັກການ 29.2.

[56] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ
## ສ. ສິດເສລີພາບໃນການຍົກຍ້າຍ ແລະ ຕັ້ງຖິ່ນຖານ
## ບົດສະເໜີ

ມີຄົນຈໍານວນຫຼວງຫຼາຍໃນປະຈຸບັນແມ່ນກໍາລັງປະເຊີນກັບບັນຫາການຖືກຍົກຍ້າຍອອກຈາກບ້ານຢູ່ ແລະ ທີ່ດິນ. ການຍົກຍ້າຍທີ່ບໍ່ໄດ້ຕັ້ງໃຈດັ່ງກ່າວນັ້ນສ່ວນຫຼາຍແລ້ວແມ່ນເກີດຈາກສົງຄາມ, ຫຼື ໄພທໍາມະຊາດ. ໃນສອງກໍລະນີທີ່ວ່ານັ້ນ ສິດເສລີພາບໃນການຍົກຍ້າຍ ແລະ ສິດໃນທີ່ຢູ່ອາໃສແມ່ນອາດຈະຖືກຈໍາກັດໃນການຍົກຍ້າຍໄປມາຕາມທີ່ຕ້ອງການໄດ້, ຕົວຢ່າງ: ໃນກໍລະນີທີ່ເຂດທີ່ຢູ່ອາໃສທີ່ກ່ຽວຂ້ອງນັ້ນຫາກຖືກປິດລ້ອມທາງການທະຫານ ຫຼື ເພື່ອປ້ອງກັນໄພພິບັດຈາກທໍາມະຊາດ. ຜູ້ທີ່ບໍ່ມີທີ່ຢູ່ອາໃສດັ່ງກ່າວແມ່ນ ສາມາດໄດ້ຮັບການປົກປ້ອງໃຫ້ຢູ່ໃນທີ່ປອດໄພ ແລະ ອາດຖືກ ຫ້າມບໍ່ໃຫ້ຍົກຍ້າຍໄປມາຕາມສະຖານທີ່ຕ່າງໆເພື່ອຄວາມປອດໄພ.

> "ທາງຄະນະກໍາມະທິການແມ່ນໄດ້ສະແດງຄວາມເປັນຫ່ວງໃນບັນຫາການຖືກຈໍາກັດສິດເສລີພາບໃນການຍົກຍ້າຍຂອງຊາວປາເລສສະໄຕ່ ໂດຍສະເພາະແມ່ນຜູ້ທີ່ອາໃສໃນເຂດຊາຍແດນລະຫວ່າງກໍາແພງກັ້ນແລະປະເທດອິສສະລາເອວ, ການປະຕິເສດໃຫ້ເຂົ້າເຖິງທີ່ດິນເພື່ອການກະເສດທີ່ມີມາຕໍ່ເນື່ອງແກ່ປະຊາຊົນທີ່ຢູ່ໃນຝາກກົງກັນຂ້າມກັບກໍາແພງ ຫຼື ຖືກປະຕິເສດການເຂົ້າຢ້ຽມພີ່ນ້ອງທີ່ຢູ່ອີກຝາກໜຶ່ງຂອງກໍາແພງ, ແລະ ການເປີດປະຕູເປັນຊ່ວງເວລາເພື່ອອານຸຍາດໃຫ້ຄົນຂ້າມໄປເຮັດການກະເສດ."
>
> *ທີ່ມາຂໍ້ມູນ:* ບົດສະຫຼຸບສັງເກດຂອງຄະນະກໍາມະທິການສິດທິມະນຸດກ່ຽວກັບປະເທດອິສສະລາເອວl (CCPR/C/ISR/CO/3), ວັກທີ 16.

ສິດເສລີພາບໃນການຍົກຍ້າຍ ແລະ ເລືອກທີ່ຢູ່ອາໃສແມ່ນຈະຄໍ້າປະກັນເສລີພາບໃນການເຄື່ອນຍ້າຍ ແລະ ປົກປ້ອງຄົນອອກຈາກການຖືກບັງຄັບໃຫ້ຍົກຍ້າຍ. ສິດເສລີພາບທີ່ວ່ານັ້ນແມ່ນມີຄວາມສໍາຄັນຫຼາຍເພື່ອການມີວຽກເຮັດງານທໍາ, ການສຶກສາ, ແລະ ສາທາລະນະສຸກ, ພ້ອມນັ້ນ ມັນຍັງເປັນການຮັກສາລະບົບແບບແຜນການດໍາລົງຊີວິດຂອງຄົນໄປໃນໂຕອີກດ້ວຍ.

ໃນບໍລິບົດຂອງທີ່ດິນດັ້ງເດີມທີ່ນໍາໃຊ້ໃນການທໍາມາຫາກິນ ແລະ ເປັນສູນລວມໃນກິດຈະກໍາຕ່າງໆ, ເສລີພາບໃນການຍົກຍ້າຍແມ່ນມີຄວາມສໍາຄັນເປັນພິເສດ ແລະ ເປັນປັດໃຈທີ່ສໍາຄັນໃນການດໍາລົງຊີວິດຂອງຄົນໃນເຂດຊົນນະບົດ. ການຈໍາກັດໃນການຍົກຍ້າຍທີ່ຜິດກົດໝາຍໃນເຂດໃດໜຶ່ງເພື່ອຈຸດປະສົງທາງການທະຫານ ຫຼື ເພື່ອນໍາໃຊ້ໃນທຸລະກິດເອກະຊົນ ຫຼື ເພື່ອການຂະຫຍາຍເຂດກະສິກໍາທີ່ກວມເອົາເຂດທີ່ປະຊາຊົນເຄີຍລ້ຽງຊີບດ້ວຍການລ້ຽງສັດແບບພະເນຈອນ, ສິ່ງທີ່ກ່າວມານີ້ແມ່ນຖືວ່າເປັນການລະເມີດສິດເສລີພາບຂອງຊຸມຊົນທີ່ດໍາລົງຊີວິດແບບເຄື່ອນທີ່ ແລະ ກໍ່ອາດເປັນສາຍເຫດໃນຄວາມຂັດແຍ່ງ ແລະ ຄວາມຕຶງຄຽດຕ່າງໆ.

## ຫຼັກການສາກົນທີ່ນໍາໃຊ້ໃນບັນຫາທີ່ດິນ

ທຸກຄົນທີ່ອາໃສໃນແດນຂອງລັດໃດໜຶ່ງທີ່ຖືກຕ້ອງຕາມກົດໝາຍແມ່ນມີສິດເສລີພາບໃນການຍົກຍ້າຍໄປມາ ແລະ ເລືອກທີ່ຢູ່ອາໃສ.

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 13, ສົນທິສັນຍາສາກົນວ່າດ້ວຍສິດທາງການເມືອງ ແລະ ພົນລະເຮືອນ ມາດຕາທີ 12, ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈໍາແນກແມ່ຍິງ ມາດຕາ 15 (4), ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈໍາແນກເຊື້ອຊາດ ມາດຕາ 5 (d) (i), ສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການ ມາດຕາ 18, ສົນທິສັນຍາສິດທິມະນຸດອາເມລິກາ ມາດຕາ 22)

ທຸກຄົນແມ່ນມີສິດທີ່ຈະເດີນທາງອອກນອກປະເທດ ແລະ ແລະ ມີສິດທີ່ຈະເດີນທາງເຂົ້າໃນປະເທດຂອງຕົນໄດ້ຕະຫຼອດເວລາ.

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 13, ສົນທິສັນຍາສາກົນວ່າດ້ວຍສິດທາງການເມືອງ ແລະ ພົນລະເຮືອນ ມາດຕາທີ 12, ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈຳ ແນກເຊື້ອຊາດ ມາດຕາ 5 (d) (ii), ສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການ ມາດຕາ 18, ສົນທິສັນຍາສິດທິມະນຸດອາເມລິ ກາ ມາດຕາ 22)

ແຮງງານເຄື່ອນຍ້າຍແລະສະມາຊິກຄອບຄົວຂອງເຂົາເຈົ້າແມ່ນມີສິດໃນການເຄື່ອນຍ້າຍໄປມາພາຍໃນປະເທດທີ່ເຂົາເຮັດວຽກຢູ່ ແລະ ມີເສລີພາບໃນການເລືອກທີ່ຢູ່ອາໃສໃນປະເທດດັ່ງກ່າວ.

(ສົນທິສັນຍາສາກົນວ່າດ້ວຍການປົກປ້ອງແຮງງານຕ່າງດ້າວ ແລະ ຄອບຄົວຂອງເຂົາເຈົ້າ ມາດຕາ 39 (1))

ລັດພາຄີທີ່ກ່ຽວຂ້ອງຕ້ອງໃຫ້ສິດທິແກ່ຜູ້ອົບພະຍົບຕາມກົດໝາຍໃນການເລືອກທີ່ຢູ່ອາໃສ ແລະ ຍ້າຍໄປມາພາຍໃນປະເທດຢ່າງມີເສລີພາບ ແລະໃຫ້ປະຕິບັດຄ້າຍຄືກັນກັບຄົນຕ່າງດ້າວທີ່ຢູ່ໃນປະເທດຕົນຕາມລະບຽບການທີ່ມີ.

(ສົນທິສັນຍາທີ່ກ່ຽວຂ້ອງກັບຜູ້ອົບພະຍົບ ມາດຕາທີ 26, ສົນທິສັນຍາເພື່ອການປົກປ້ອງ ແລະ ໃຫ້ການຊ່ວຍເຫຼືອຄົນພິການພາຍໃນອັບຟຣິກາ (ສົນທິສັນຍາກຳປາລາ) ມາດຕາ 9 (28 (f))

## ຕົວຢ່າງຂອງການນຳໃຊ້

ຄະນະກຳມະທິການສິດທິມະນຸດໄດ້ໃຫ້ຄຳເຫັນກ່ຽວກັບເສລີພາບໃນການຍົກຍ້າຍໃນເອກະສານຄຳເຫັນເລກທີ 27 (1999) ວ່າທຸກຄົນທີ່ຢູ່ໃນລັດໃດໜຶ່ງແມ່ນມີສິດໃນການຍົກຍ້າຍໄປມາຕາມຄວາມພໍໃຈ ແລະມີສິດທີ່ຈະເລືອກສະຖານທີ່ຢູ່ຂອງຕົນຢ່າງມີເສລີພາບ (ວັກທີ 4). ຄະນະກຳມະທິການໄດ້ເວົ້າອີກວ່າ "ການຍົກຍ້າຍຢ່າງເສລີນັ້ນແມ່ນສະເພາະໃນປະເທດທີ່ອາໃສຢູ່ເຊິ່ງລວມທັງແຕ່ລະລັດທີ່ຢູ່ໃນຮູບແບບການປົກຄອງແບບສະຫະພັນທະລັດ. ອີງຕາມມາດຕາທີ 12, ວັກ1, ທຸກຄົນແມ່ນມີສິດເສລີພາບໃນການຍົກຍ້າຍຕາມໃຈ ແລະ ເລືອກທີ່ຈະຕັ້ງຖິ່ນຖານໃນບ່ອນທີ່ເລືອກໄດ້. ເສລີພາບທີ່ກ່າວມານັ້ນແມ່ນຕ້ອງບໍ່ມີເງື່ອນໄຂໃດໆທີ່ສ້າງມາເພື່ອຂັດຂວາງສິດທິໃນການຍົກຍ້າຍເຫຼົ່ານັ້ນ" (ວັກທີ 5).

ລັດພາຄີທີ່ກ່ຽວຂ້ອງຕ້ອງຮັບປະກັນວ່າສິດທີ່ກຳນົດໃນມາດຕາທີ່ 12 ຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນນັ້ນແມ່ນໄດ້ຮັບການປົກປ້ອງບໍ່ພຽງຈາກການແຊກແຊງຂອງພາກເອກະຊົນ ແລະ ພາກລັດ. ໃນກໍລະນີຂອງແມ່ຍິງ, ຄະນະກຳມະທິການຍັງໄດ້ກ່າວອີກວ່າການປົກປ້ອງແມ່ຍິງກໍ່ແມ່ນກ່ຽວຂ້ອງກັບຫຼັກການທີ່ກ່າວມາເຊັ່ນດຽວກັນ. "ຕົວຢ່າງ: ຫ້າມບໍ່ໃຫ້ອອກກົດໝາຍ ຫຼື ລະບຽບການໃດໆທີ່ກຳນົດໃຫ້ຜູ້ອື່ນໆ ຫຼື ຍາດທີ່ພີ່ນ້ອງດຳເນີນການຕັດສິນໃຈແທນແມ່ຍິງ, ການກຳນົດດັ່ງກ່າວຖືວ່າຂັດກັບມາດຕາທີ 12 ວັກ 1 ຂ້າງເທິງນັ້ນ" (ວັກທີ 6).

ສິ່ງທີ່ສຳຄັນ, ໃນຄຳເຫັນດຽວກັນ ທາງຄະນະກຳມະທິການແມ່ນໄດ້ເນັ້ນວ່າ "ອີງຕາມມາດຕາທີ 12 ວັນ 3, ສິດໃນການເລືອກທີ່ຢູ່ອາໃສຢ່າງເສລີພາບພາຍໃນລັດທີ່ອາໃສຢູ່ນັ້ນແມ່ນຖືວ່າເປັນການປົກປ້ອງຈາກການຖືກບັງຄັບໃຫ້ຍົກຍ້າຍໃນທຸກຮູບແບບ" (ວັກ 7). ນອກຈາກນີ້ ຫຼັກການກ່ຽວກັບການສ້າງທີ່ຢູ່ອາໃສ ແລະ ການຊົດເຊີຍຊັບສິນໃຫ້ແກ່ຜູ້ອົບພະຍົບ ແລະ ຜູ້ທີ່ຂາດທີ່ຢູ່ອາໃສ ("ຫຼັກການ Pinheiro") ໄດ້ກຳນົດວ່າບໍ່ມີໃຜທີ່ຈະຖືກບີບບັງຄັບໃຫ້ອອກຈາກປະເທດ ຫຼື ຈາກ ເຂດ ຫຼື ຈາກ ພາກພື້ນໃດໜຶ່ງໂດຍບໍ່ຖືກຕ້ອງ ແລະ ບໍ່ມີເຫດຜົນ.[57] ໃນຄຳແນະນຳເລກທີ 15 (1994) ກ່ຽວກັບ

[57] E/CN.4/Sub.2/2005/17, annex, principle 9.

ສະຖານະຂອງຊາວຕ່າງດ້າວພາຍໃຕ້ສົນທິສັນຍາ, ຄະນະກຳມະທິການສິດທິມະນຸດໃຫ້ເຫດຜົນເພີ່ມເຕີມວ່າຄົນທີ່ບໍ່ໄດ້ຖືສັນຊາດກໍ່ແມ່ນມີສິດເສລີພາບໃນການຍົກຍ້າຍ ແລະ ມີສິດເລືອກທີ່ຢູ່ອາໃສໄດ້ເໝືອນກັນ (ວັກທີ 7 ແລະ 8).

ຄະນະກຳມະທິການສິດທິທາງເສດຖະກິດສັງຄົມ ແລະ ວັດທະນະທຳໄດ້ກ່າວໃນບົດຄຳເຫັນເລກທີ 4 (1991) ວ່າສິດໃນການມີບ້ານຢູ່ທີ່ພໍພຽງແມ່ນຕິດພັນກັບສິດທິມະນຸດເລື້ອຍມາເຊິ່ງວ່າສິດດັ່ງກ່າວນັ້ນແມ່ນຖືກກຳນົດໃນສອງສົນທິສັນຍາ ແລະ ເອກະສານກົນໄກສິດທິມະນຸດອື່ນໆ. "ເສລີພາບໃນການຖືສິດຢ່າງເຕັມທີ່ເຊັ່ນ: ສິດເສລີພາບໃນທີ່ຢູ່ອາໃສ…ແມ່ນສິດທີ່ຈຳເປັນຖ້າຫາກສິດທີ່ວ່ານີ້ຫາກໄດ້ຖືກຍອມຮັບ ແລະ ຖືກຈັດຕັ້ງປະຕິບັດຈາກກຸ່ມຄົນຕ່າງໆໃນສັງຄົມ" (ວັກທີ 9).

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບສິດໃນການມີບ້ານຢູ່ທີ່ພໍພຽງ ແລະ ສິດໃນຊັບສິນ

**ຄະດີຕົວຢ່າງ:**

**ສານສິດທິມະນຸດລະຫວ່າງລັດໃນອາເມລິກາ: ຄະດີຂອງຊຸມຊົນມອຍອານາ ກັບ ຊູລິນາເມ, ເອກະສານຊຸດທີ C, ເລກທີ 124 (15 ມິຖຸນາ 2005).** ຄະດີດັ່ງກ່າວແມ່ນກ່ຽວກັບການໂຈມຕີທີ່ເຮັດໂດຍສະມາຊິກຂອງກອງກຳລັງຊູລິນາເມຕໍ່ສູ້ກັບຝ່າຍໝູ່ບ້ານ N'djuka Maroon ໃນເມືອງ ມອຍອານາ. ໃນການຕໍ່ສູ້ຝ່າຍລັດຖະບານແມ່ນໄດ້ສັງຫານແມ່ຍິງ, ເດັກນ້ອຍ, ແລະ ຜູ້ຊາຍໄປຫຼາຍກ່ວາ 40 ຄົນ ແລະ ເຮັດໃຫ້ໝູ່ບ້ານກາຍເປັນເມືອງຮ້າງ. ຜູ້ທີ່ລອດຊີວິດແມ່ນໄດ້ໜີເຂົ້າໄປໃນປ່າທີ່ໃກ້ຄຽງ ແລະ ກາຍເປັນຜູ້ລີ້ບລີ້ແລະຂາດທີ່ຢູ່ອາໃສ. ນອກນີ້, ຍັງບໍ່ມີການສືບສວນສອບສວນຕໍ່ກັບເຫດການດັ່ງກ່າວ, ບໍ່ມີໃຜຖືກລົງໂທດ ຫຼື ຮັບຜິດຊອບຕໍ່ເຫດການດັ່ງກ່າວ, ຜົນທີ່ຕາມມາກໍ່ຄືຜູ້ທີ່ລີ້ບລີ້ດັ່ງກ່າວກາຍເປັນຜູ້ທີ່ຂາດທີ່ຢູ່ອາໃສ ແລະ ບໍ່ສາມາດກັບຄືນຖິ່ນຖານຂອງຕົນຕາມທີ່ເຄີຍມີແບບແຜນການດຳລົງຊີວິດໃນທີ່ຜ່ານມາ.

ສານໄດ້ພິຈາລະນາວ່າກອງກຳລັງຊູລິນາເມຕ້ອງຮັບຜິດຊອບຕໍ່ເຫດການດັ່ງກ່າວໃນຖານະເປັນຜູ້ລະເມີດສິດໃນສົນທິສັນຍາອາເມລິກາວ່າດ້ວຍສິດທິມະນຸດ: ສິດໃນການໄດ້ຮັບການປະຕິບັດຢ່າງມີມະນຸດສະທຳ (ມາດຕາ 5 (1)), ສິດເສລີພາບໃນການຍົກຍ້າຍ ແລະ ຕັ້ງຖິ່ນຖານ (ມາດຕາ 22), ສິດໃນຊັບສິນ (ມາດຕາ 21) ແລະ ສິດໃນການໄດ້ຮັບການຮັບປະກັນທາງກົດໝາຍ ແລະ ການປ້ອງກັນທາງກົດໝາຍ (ມາດຕາ 8 (1) ແລະ 25)[58]

### ຫຼັກການ ແລະ ຄູ່ມືຕ່າງໆທີ່ກ່ຽວຂ້ອງອື່ນໆ

- ຫຼັກການ ແລະ ຄູ່ມືພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສເນື່ອງຈາກບັນຫາການພັດທະນາ (A/HRC/4/18, annex I), ວັກທີ 6, 57.
- ຫຼັກການກ່ຽວກັບການສ້າງບ້ານຢູ່ອາໃສ ແລະ ການທົດແທນຄືນຊັບສິນແກ່ຜູ້ອົບພະຍົບ ແລະ ຜູ້ທີ່ຂາດທີ່ຢູ່ອາໃສ *(E/CN.4/Sub.2/2005/17, annex), ຫຼັກການ 9.*

[58] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ

## ຂ. ສິດເສລີພາບໃນການສະແດງຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ສ້າງຕັ້ງສະມາຄົມ

### ບົດສະເໜີ

ການຈຳກັດໃນການສະແດງຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມຢ່າງສັນຕິຖືວ່າເປັນການຂັດຂວາງການໃຊ້ສິດຂອງຜູ້ທີ່ເຄື່ອນໄຫວປົກປ້ອງສິດທິມະນຸດໃນບັນຫາທີ່ດິນເຊິ່ງການເຄື່ອນໄຫວຂອງເຂົາເຈົ້າແມ່ນເພື່ອຮຽກຮ້ອງສິດ ແລະ ນຳພາການປ່ຽນແປງ ຫຼື ແກ້ໄຂສະພາບການທີ່ມີຜົນກະທົບທັງຕົວຜູ້ເຄື່ອນໄຫວເອງ ແລະ ຜູ້ທີ່ເຂົາເຈົ້າເປັນຕົວແທນໃຫ້.

ຜູ້ຄົນທີ່ອາໃສຢູ່ໃນເຂດທີ່ຍັງບໍ່ໄດ້ຮັບອານຸຍາດສ່ວນຫຼາຍແລ້ວແມ່ນເປັນຜູ້ທີ່ຂັດຄ້ານການຖືກບັງຄັບໃຫ້ຍົກຍ້າຍ, ການເຄື່ອນໄຫວຂອງຜູ້ທີ່ຂາດທີ່ຢູ່ອາໃສທີ່ກ່ຽວຂ້ອງກັບການຄອບຄອງທີ່ດິນແບບສັນຕິ,

> ນັກລາຍງານພິເສດກ່ຽວກັບສິດໃນອາຫານການກິນໃຫ້ການສັງເກດວ່າຄວາມກົດດັນທີ່ເພີ່ມຂຶ້ນໃນທີ່ດິນ "ຄວາມຂັດແຍ່ງທີ່ຮຸນແຮງຂຶ້ນແລະນຳໄປສູ່ບັນຫາສັງຄົມດ້ານອາສະຍາກຳເຊິ່ງວ່າບັນຫາການເຄື່ອນໄຫວທີ່ກ່າວມານີ້ແມ່ນເພື່ອແນໃສ່ການປະຕິຮູບທີ່ດິນ 'ເບິ່ງຂໍ້ມູນຂ້າງລຸ່ມເພີ່ມ' ໂດຍສະເພາະທີ່ດິນທີ່ຍັງບໍ່ທັນໄດ້ ຖືກນຳໃຊ້ເທື່ອ ແລະ ຄວບຈັດສັນທີ່ດິນດັ່ງກ່າວໃຫ້ມີຄວາມເທົ່າ ທຽມກັນ"
>
> *ທີ່ມາຂໍ້ມູນ*: ບົດລາຍງານຂອງນັກລາຍງານພິເສດກ່ຽວກັບອາຫານ (A/65/281), para. 10.

ຊາວນາທີ່ເຄື່ອນໄຫວຮຽກຮ້ອງການຈັດສັນທີ່ດິນໃຫ້ເທົ່າທຽມ, ຫຼື ຜູ້ອື່ນໆທີ່ຮຽກຮ້ອງ ແລະ ສົ່ງເສີມສິດທີ່ດ້ານທີ່ດິນແມ່ນອາດປະເຊີນກັບບັນຫາການໃຊ້ອຳນາດເກີນຂອບເຂດຂອງເຈົ້າໜ້າທີ່ຕຳຫຼວດ, ການຕັດສິນຄະດີທີ່ບໍ່ຍຸດຕິທຳ ຫຼື ການຮຸກຮານຕ່າງໆ. ການເຄື່ອນໄຫວທີ່ກ່າວມາຂ້າງເທິງນັ້ນແມ່ນຖືກປາບປາມພາຍໃຕ້ການຈຳກັດສິດເສລີພາບໃນປາກເວົ້າ, ການໂຮມຊຸມນຸມ ແລະ ຕັ້ງສະມາຄົມຢ່າງສັນຕິເຊິ່ງວ່າການຈຳກັດເຫຼົ່ານັ້ນ ແມ່ນອາດຈະມີໃນຂໍ້ຫ້າມທາງການເມືອງ ຫຼື ວ່າເປັນຂໍ້ອ້າງໃນການຫ້າມເພື່ອຄວາມສະຫງົບໃນສັງຄົມ.

### ຫຼັກການສາກົນທີ່ສາມາດນຳໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດເສລີພາລໃນການປາກເວົ້າ, ສະແດງຄວາມຄິດເຫັນ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມຢ່າງສັນຕິວິທີ.

ຖະການສິດທິມະນຸດສາກົນ ມາດຕາ 19 ແລະ 20, ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 19, 20 ແລະ 21, ສົນທິສັນຍາສາກົນວ່າດ້ວຍການລົບລ້າງການ**ຈຳ**ແນກເຊື້ອຊາດມາດຕາ 5 (d) (viii) ແລະ (ix))

ສຳລັບວັດຖຸປະສົງໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານນັ້ນໝາຍເຖິງວ່າທຸກຄົນແມ່ນມີສິດທັງໃນສ່ວນຕົວ ແລະ ສິດໃນສ່ວນລວມໃນການພົບປະສະມາຄົມ ຫຼື ໂຮມຊຸມນຸມຢ່າງສັນຕິ, ມີເສລີພາບໃນການພິມເຜີຍແຜ່, ແລກປ່ຽນ ຫຼື ສົ່ງຂໍ້ມູນ, ຄວາມຄິດເຫັນ ແລະ ຄວາມຮູ້ໃຫ້ຄົນອື່ນໆກ່ຽວກັບເລື່ອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານ, ມີສິດທີໃນການຮຽນຮູ້, ກໍ່ຕັ້ງ ແລະ ສະແດງຄວາມຄິດເຫັນກ່ຽວກັບສິ່ງທີ່ພົບເຫັນບໍ່ວ່າຈະໃນດ້ານກົດໝາຍ ແລະ ຂະບວນການຈັດຕັ້ງປະຕິບັດຕ່າງໆໃນດ້ານສິດ ແລະ ເສລີພາບຂັ້ນພື້ນຖານພ້ອມທັງສາມາດລະດົມຄວາມຄິດເຫັນຈາກສາທາລະນະໃນບັນຫາທີ່ເກີດຂຶ້ນ.

(ຖະແຫຼງການວ່າດ້ວຍນັກເຄື່ອນໄຫວສິດທິມະນຸດ ມາດຕາ 5 (a), 6 (b) ແລະ (c) [59]

[59] Declaration on the Right and Responsibility of Individuals, Groups and Organs of Society to Promote and Protect Universally Recognized Human Rights and Fundamental Freedoms (General Assembly resolution 53/144).

## ຕົວຢ່າງຂອງການນຳໃຊ້

ການໃຊ້ສິດຢ່າງເສລີພາບໃນການຊອກຫາ ແລະ ໃຫ້ຂໍ້ມູນ, ໃຫ້ແນວຄວາມຄິດ ແລະ ໃຫ້ທັດສະນະຄະຕິເພື່ອສະແດງຄວາມຄິດເຫັນສ່ວນຕົວກໍ່ຄືສ່ວນລວມ, ເພື່ອສ້າງຕັ້ງ ແລະ ຮ່ວມສະມາຄົມ, ແລະ ເພື່ອໂຮມຊຸມນຸມຕ່າງໆນັ້ນແມ່ນປັດໃຈພື້ນຖານຂອງລະບອບປະຊາທິປະໄຕ. ເສລີພາບ ແລະ ສິດທິຕ່າງໆທີ່ວ່ານັ້ນແມ່ນມີບົດບາດສຳຄັນໃນການສ້າງຄວາມເຂົ້າໃຈ ແລະ ຮັບປະກັນການມີສ່ວນຮ່ວມໃນການບໍລິຫານຈັດການ ການບໍລິການທາງສັງຄົມ ແລະ ການບໍລິການຊັບສິນຕ່າງໆກໍ່ຄືການບໍລິຫານຊັບພະກອນຕ່າງໆເຊິ່ງລວມມີທີ່ດິນ. ເສລີພາບໃນການສະແດງຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ຈັດຕັ້ງສະມາຄົມຢ່າງສັນຕິແມ່ນມີຄວາມສຳຄັນສຳລັບຜູ້ທີ່ຖືສິດຕ່າງໆເພື່ອຮຽກຮ້ອງສິດທາງສັງຄົມ. ໃນກໍລະນີດັ່ງກ່າວ, ຄະນະກຳມະທິການສິດທິມະນຸດໃຫ້ຄຳເຫັນໃນເອກະສານເລກທີ 34 (2011) ກ່ຽວກັບເສລີພາບໃນການສະແດງຄວາມຄິດເຫັນ ແລະ ເສລີພາບຂອງການປາກເວົ້າ "ເສລີພາບຂອງການປາກເວົ້າແມ່ນມີຄວາມຈຳເປັນສຳລັບການຮັບຮູ້ຫຼັກການຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບທີ່ສຳຄັນສຳລັບການສົ່ງເສີມ ແລະ ການປົກປ້ອງສິດທິມະນຸດ" (ວັກ 3). 123194

ໃນຄຳເຫັນທີ່ກ່າວມາຂ້າງເທິງນັ້ນ, ຄະນະກຳມະທິການຍັງໄດ້ທົບທວນຄືນມາດຕາ 19 ຂອງສົນທິສັນຍາສາກົນວ່າດ້ວຍສິດທາງການເມືອງ ແລະ ພົນລະເຮືອນວ່າ "ການນຳໃຊ້ສິດເສລີພາບໃນການປາກເວົ້າແມ່ນເປັນພັນທະໜ້າທີ່ ແລະ ເປັນຄວາມຮັບຜິດຊອບພິເສດໄປໃນຕົວ" ແລະ "ດ້ວຍເຫດຜົນທີ່ກ່າວມານີ້ສິດດັ່ງກ່າວແມ່ນຈະມີເຫດຜົນສອງຢ່າງທີ່ຈະໄດຮັບອານຸຍາດໃນການຈຳກັດສິດເຊິ່ງລວມມີການເຄົາລົບສິດ ຫຼື ຊື່ສຽງຂອງຄົນອື່ນ ຫຼື ເພື່ອເປັນການປົກປ້ອງຄວາມປອດໄພແຫ່ງຊາດ ຫຼື ເພື່ອລະບຽບສາທາລະນະ ຫຼື ເພື່ອປົກປ້ອງສິນລະທຳໃນສັງຄົມ." ເຖິງຢ່າງໃດກໍ່ດີ, ຄະນະກຳມະທິການຍັງໄດ້ເນັ້ນວ່າໃນເວລາທີ່ລັດພາຄີນຳໃຊ້ການຈຳກັດຕ່າງໆຕໍ່ກັບເສລີພາບໃນການປາກເວົ້າ, "ວັກ 3 ໄດ້ຂຽນເງື່ອນໄຂ ແລະ ມີພຽງເງື່ອນໄຂທີ່ຂຽນໃນຄຳເຫັນນີ້ທີ່ຈະອານຸຍາດໃຫ້ນຳໃຊ້ໄດ້ຄື: ການຈຳກັດຈະຕ້ອງມີໃນຂໍ້ກຳນົດກົດໝາຍ, ຂໍ້ກຳນົດເຫຼົ່ານັ້ນແມ່ນຈະໃຊ້ໄດ້ກໍ່ຕໍ່ເມື່ອມີການກຳນົດໃນວັກຍ່ອຍ (a) ແລະ (b) ຂອງວັກທີ່ 3ເທົ່ານັ້ນ, ແລະ ຂໍ້ກຳນົດທີ່ວ່ານັ້ນຕ້ອງສອດຄ່ອງກັບຄວາມຈຳເປັນທາງສັງຄົມ ແລະ ມີຄວາມເໝາະສົມ" (ວັກ 21 ແລະ 22).

ພາຍໃຕ້ຫຼັກການ ແລະ ຄູ່ມືພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສເນື່ອງຈາກບັນຫາການພັດທະນາ, ກ່ອນການຖືກບັງຄັບໃຫ້ຍົກຍ້າຍ, ກຸ່ມຄົນ ແລະ ບຸກຄົນຕ່າງໆເຊິ່ງລວມມີແມ່ຍິງ ແລະ ເດັກນ້ອຍ, ຄົນພື້ນເມືອງ ແລະ ຄົນພິການພ້ອມທັງຄົນອື່ນໆທີ່ເປັນຕົວແທນຄົນເຫຼົ່ານັ້ນແມ່ນມີສິດເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງກັບການພັດທະນາທີ່ຈະເກີດຂຶ້ນດັ່ງກ່າວ ແລະ ສາມາດເຂົ້າເຖິງການປຶກສາຫາລື ແລະ ມີສ່ວນຮ່ວມຕ່າງໆເພື່ອຂໍໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງດຳເນີນການຕາມທີ່ເໝາະສົມ ແລະ ຕາມພັນທະໜ້າທີ່ທີ່ມີ (ຄູ່ມືທີ 38).

ໃຫ້ເບິ່ງຂໍ້ມູນເພີ່ມທີ່ບົດສະຫຼຸບສັງລວມກ່ຽວກັບສິດໃນການມີສ່ວນຮ່ວມ, ສິດໃນການເຂົ້າເຖິງຂໍ້ມູນ ແລະ ສິດຂອງຜູ້ທີ່ເຄື່ອນໄຫວເພື່ອປົກປ້ອງສິດທີ່ກ່ຽວກັບທີ່ດິນ.

ໃນບົດຄຳເຫັນເລກທີ 4 (1991), ຄະນະກຳມະທິການສິດທິມະນຸດວ່າດ້ວຍສິດທາງເສດຖະກິດ ສັງຄົມ ແລະ ວັດທະນຳໄດ້ຊີ້ແຈງວ່າການໃຊ້ສິດໃດໜຶ່ງຢ່າງເຕັມທີ່ເຊັ່ນ: ສິດເສລີພາບໃນການສະແດງຄວາມຄິດເຫັນ ແລະ ສິດເສລີພາບໃນການຮ່ວມສະມາຄົມ (ເຊັ່ນວ່າກຸ່ມທີ່ຢູ່ໃນຊຸມຊົນ ແລະ ກຸ່ມຜູ້ຄອບຄອງທີ່ດິນ), ສິດທີ່ກ່າວມານັ້ນກໍ່ຄືບັນດາສິດເສລີພາບໃນການສ້າງທີ່ຢູ່ອາໃສ ແລະ ສິດໃນການມີສ່ວນຮ່ວມໃນຂະບວນການຕັດສິນໃຈສາທາລະນະ, ສິດເຫຼົ່ານັ້ນແມ່ນຈະມີຄວາມສຳຄັນຫຼາຍຖ້າຫາກວ່າສິດໃນການມີທີ່ຢູ່ອາໃສທີ່ພໍພຽງໄດ້ຖືກຮັບຮູ້ ແລະ ໄດ້ຮັບເຄົາລົບຈາກທຸກພາກສ່ວນໃນສັງຄົມ (ວັກທີ 9)

ຂະບວນການພັດທະນາຕົວເມືອງ ແລະ ສ້າງເມືອງໃໝ່ແມ່ນອາດຈະຈຳກັດພື້ນທີ່ສາທາລະນະແບບຕັ້ງໃຈ ແລະ ບໍ່ຕັ້ງໃຈເຊິ່ງວ່າການຈຳກັດພື້ນທີ່ດັ່ງກ່າວນັ້ນແມ່ນໄດ້ກະທົບຕໍ່ສິດຂອງປະຊາຊົນໃນການລວບລວມ ແລະ ສະແດງແນວຄວາມຄິດຢ່າງສັນຕິ.

## ຫຼັກການ ແລະ ຄູ່ມືສາກົນທີ່ກ່ຽວຂ້ອງອື່ນໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານຈັດການຂອງຜູ້ຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ໃນບໍລິບົດຂອງຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (Rome, FAO, 2012), ຄູ່ມື 4.8.
- ຫຼັກການ ແລະ ຄູ່ມືພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສເນື່ອງຈາກບັນຫາການພັດທະນາ (A/HRC/4/18, annex I), para. 38.
- ຄູ່ມືອາສາເພື່ອການສະໜັບສະໜູນການຮັບຮູ້ສິດຢ່າງຕັ້ງໜ້າໃນການມີອາຫານພໍພຽງໃນບໍລິບົດຂອງຄວາມໝັ້ນຄົງໃນສະບຽງອາຫານແຫ່ງຊາດ (Rome, FAO, 2005), ຄູ່ມື 1.2 ຮ່ວມກັບຄູ່ມືທີ 8.

**ບົດສະຫຼຸບສັງລວມ**
**ຍ. ສິດເສລີພາບໃນສາດສະໜາ**
**ບົດສະເໜີ**

ທີ່ດິນ ແລະ ໂຄງສ້າງຂອງຄຸນຄ່າທາງສິ່ງສັກສິດເຊັ່ນ: ສະຖານທີ່ສັກກະລະບູຊາ ແລະ ປ່າຊ້າຕ່າງໆແມ່ນຖືວ່າມີຄວາມສໍາຄັນທາງສາດສະໜາຢ່າງເລິກເຊິ່ງແກ່ຫຼາຍໆຊຸມຊົນລວມມີຄົນພື້ນເມືອງ. ເຖິງຢ່າງໃດກໍ່ດີ, ການໃຊ້ສິດໃນດ້ານສາດສະໜານີ້ແມ່ນຈະຖືກລະເມີດຖ້າຫາກວ່າບັນດາສະຖານທີ່ດັ່ງກ່າວເຫຼົ່ານັ້ນຖືກທໍາລາຍ, ຖືກເຜພັງ ຫຼື ຖືກໄພອັນຕະລາຍ ຫຼື ມີການຫ້າມບໍ່ໃຫ້ເຂົ້າເຖິງສະຖານທີ່ຕ່າງໆຂ້າງເທິງເນື່ອງຈາກບັນຫາຄວາມຂັດແຍ່ງ ຫຼື ເນື່ອງຈາກກິດຈະກໍາການພັດທະນາ.

ການນໍາໃຊ້ທີ່ດິນສາທາລະນະ ແລະ ທີ່ດິນສ່ວນບຸກຄົນ, ພື້ນທີ່ ແລະ ຕຶກອາຄານສໍາລັບກິດຈະກໍາທາງສາດສະໜາແມ່ນອາດຖືກຈໍາກັດຈາກກົດໝາຍພາຍໃນ, ຈາກການຈັດຕັ້ງປະຕິບັດນະໂຍບາຍຕ່າງໆໃນຮູບແບບການເວນຄືນທີ່ດິນທີ່ເປັນສະຖານທີ່ທາງສາດສະໜາ ຫຼື ຈາກການວາງຂໍ້ກໍານົດທີ່ເປັນການ ຈໍາກັດຊົນເຜົ່າທີ່ນັບຖືສາດສະໜາຕ່າງໆໃນການເຂົ້າເຖິງທີ່ດິນເພື່ອນໍາໄປສ້າງສະຖານທີ່ສັກກະລະບູຊາຂອງເຂົາເຈົ້າ.

ຊຸມຊົນຊາວອິດສະລາມໃນປະເທດບອສເນຍ ແລະ ເຮີເຊໂກວີນ່າໄດ້ຮ້ອງຟ້ອງຕໍ່ສະພາສິດທິມະນຸດໃນກໍລະນີປະເທດບອສເນຍ ແລະ ເຮີເຊໂກວີນ່າຖືກກ່າວຫາວ່າໄດ້ລະ ເມີດສິດມະນຸດເນື່ອງຈາກອົງກອນເທດສະບານຂອງ Banja Luka ໄດ້ຮື້ທໍາລາຍ ແລະ ຍົກຍ້າຍສະຖານທີ່ໂບດຕ່າງໆທີ່ມີ, ບໍ່ເຄົາລົບນັບຖືປ່າຊ້າ ຫຼື ເມີນເສີຍການຮື້ທໍາລາຍທີ່ເກີດຂຶ້ນ ແລະ ບໍ່ຮັບຜິດຊອບໃຫ້ມີການສ້າງສະຖານທີ່ຖືກທໍາລາຍດັ່ງກ່າວນັ້ນຄືນໃໝ່. ສະພາໄດ້ພິຈາລະນາ ວ່າການບໍ່ຮັບຜິດຊອບໃນການສ້າງສະຖານທີ່ທີ່ຖືກທໍາລາຍນັ້ນຄືນໃໝ່ເຊິ່ງລວມທັງກໍາແພງອ້ອມໂບດທີ່ຖືກຮື້ຖອນນັ້ນແມ່ນຖືວ່າເປັນການລະເມີດສິດຂອງເຈົ້າໜ້າທີ່ໃນການປົກປ້ອງສິດຂອງຜູ້ທີ່ເຊື່ອຖືທາງສາດສະໜາຢ່າງມີເສລີພາບ.

*ທີ່ມາຂໍ້ມູນ:* ປະເທດບອສເນຍ ແລະ ເຮີເຊໂກວີນ່າ, ສະພາສິດ ທິມະນຸດສໍາລັບບອສເນຍ ແລະ ເຮີເຊໂກວີນ່າ ຊຸມຊົນຊາວອິສລາມໃນບອສເນຍ ແລະ ເຮີເຊໂກວີນ່າ ກັບ *Republika Srpska, ຄະດີເລກທີ* CH/96/29 (11 ມິຖຸນາ 1999) ບັນຫາທີ່ດິນ ແລະ ສິດທິມະນຸດ: ບົດບັນທຶກລວມຄະດີທາງກົດໝາຍ.

## ຫຼັກການສາກົນທີ່ສາມາດນໍາໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດເສລີພາບໃນການສະແດງຄວາມຄິດເຫັນ, ໃນການນັບຖືທາງສິນລະທໍາ ແລະ ສາດສະໜາ, ສິດທີ່ວ່ານີ້ແມ່ນລວມມີເສລີພາບບໍ່ວ່າຈະເປັນສ່ວນຕົວ ຫຼື ສ່ວນລວມກໍ່ແມ່ນເປັນສິດທີ່ສາມາດສະແດງອອກທາງດ້ານການນັບຖືສາດສະໜາ, ຫຼື ເຊື່ອໃນຄໍາສັ່ງສອນ, ໃນການປະຕິບັດ, ໃນການສັກກາລະບູຊາ ແລະ ການເຄົາລົບທາງສາດສະໜາຕ່າງໆ.

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 18, ສົນທິສັນຍາສາກົວ່າດ້ວຍດິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 18, ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບແບບການຈໍາແນກເຊື້ອຊາດ ມາດຕາ 5 (d) (viii), ສົນທິສັນຍາສາກົນວ່າດ້ວຍສິດທິເດັກ ມາດຕາ 14 (1), ສົນທິສັນຍາສາກົນວ່າດ້ວຍການປົກປ້ອງສິດຂອງແຮງງານອົບພະຍົບ ແລະ ຄອບຄົວຂອງເຂົາເຈົ້າ ມາດຕາ 12, ສົນທິສັນຍາວ່າດ້ວຍສິດທິມະນຸດຂອງອາເມລິກາ ມາດຕາ 12, ສົນທິສັນຍາວ່າດ້ວຍການປົກປ້ອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານ (ສົນທິສັນຍາສິດທິມະນຸດຂອງສະຫະພາບເອີຣົບ ມາດຕາ 9)

*ໃນປະເທດທີ່ມີບັນດາຊົນເຜົ່າທີ່ມີຄວາມຫຼາກຫຼາຍດ້ານພາສາ, ສາດສະໜາ ແລະ ເຜົ່າຊົນ, ຜູ້ທີ່ມາຈາກຊົນເຜົ່າທີ່ກ່າວມານີ້ແມ່ນຈ ະຕ້ອງໄດ້ຖືກຮັບຮູ້ສິດຮ່ວມກັບບຸກຄົນຕ່າງໆໃນຊຸມຊົນເພື່ອການຈັດຕັ້ງ ແລະ ປະຕິບັດທາງສາດສະໜາຂອງຕົນທີ່ນັບຖື.*

(ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 27)

ສິດເສລີພາບໃນດ້ານມະໂນທຳ, ດ້ານອາຊີບການງານ ແລະ ອິດສະຫຼະໃນການປະຕິບັດທາງສາດສະໜາແມ່ນເປັນສິດທີຈະຖືກຮັບຮູ້. ບຸກຄົນໃດກໍ່ຕາມແມ່ນຈະບໍ່ຖືກກີດກັ້ນໃນສິດເສລີພາບທີ່ກ່າວມານີ້ບໍ່ວ່າຈະເປັນດ້ານກົດໝາຍ ແລະ ລະບຽບການອື່ນໆກໍ່ຕາມ.

(ກົດບັດວ່າດ້ວຍສິດທິມະນຸດ ແລະ ສິດທິຂອງປະຊາຊົນອັບຟຣິກາ ມາດຕາ 8)

ທຸກຄົນແມ່ນມີສິດທີ່ຈະສະແດງອອກ, ປະຕິບັດ, ພັດທະນາ ແລະ ສອນຮີດຄອງທາງສາດສະໜາ ແລະ ຄວາມເຊື່ອຖືຂອງຕົນ, ສອນກິດຈະກຳທາງປະເພນີ ແລະ ສິ່ງທີ່ເຄີຍປະຕິບັດກັນມາຕ່າງໆໄດ້, ນອກນີ້ຍັງມີສິດໃນການຮັກສາ, ປົກປ້ອງ ແລະ ເຂົ້າເຖິງເປັນສ່ວນຕົວໃນສະຖານທີ່ທາງສາດສະໜາ ແລະ ວັດທະນະທຳຂອງຕົນພ້ອມທັງມີສິດໃນການນຳໃຊ້ ແລະ ຄຸ້ມຄອງວັດຖຸທາງສາດສະໜານຳອີກ.

ຄົນພື້ນເມືອງແມ່ນມີສິດໃນການຮັກສາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສາຍພົວພັນທາງການເຊື່ອຖືທີ່ກ່ຽວຂ້ອງກັບທີ່ດິນ, ອານະເຂດ, ນໍ້າ, ຊາຍຝັ່ງ ແລະ ອື່ນໆທີ່ພວກເຂົາຄອບຄອງ ຫຼື ນຳໃຊ້ຢູ່, ນອກນັ້ນ ກໍ່ຍັງມີສິດໃນການຮັກສາ ແລະ ສົ່ງຕໍ່ຄົນລຸ້ນໃໝ່ໃນການສືບຕໍ່ກິດຈະກຳທີ່ກ່າວມານີ້ໄດ້. ລັດພາຄີທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີທາງທີ່ທ່ຽງທຳ ແລະ ຍຸດຕິທຳໃນການທົດແທນສິ່ງທີ່ເສຍຫາຍຈາກກິດຈະກຳການພັດທະນາທີ່ມັນກະທົບໃສ່ທີ່ດິນ ຫຼື ອານາເຂດທາງສາດສະໜາໃຫ້ໄດ້ຢ່າງມີປະສິດຕິພາບ, ແລະ ຕ້ອງໃຊ້ມາດຕະການທີ່ເໝາະສົມເພື່ອລຸດບັນຫາຜົນທີ່ຈະກະທົບຕໍ່ສິ່ງແວດລ້ອມ, ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ສິ່ງສັກສິດຕ່າງໆ.

(ຖະແຫຼງການ ສປຊ ວ່າດ້ວຍສິດທິຂອງຄົນພື້ນເມືອງ ມາດຕາ 12, 25, ແລະ 32.3)

## ຕົວຢ່າງການນຳໃຊ້

ອີງຕາມນັກລາຍງານພິເສດກ່ຽວກັບສິດເສລີພາບທາງສາດສະໜາ ຫຼື ຄວາມເຊື່ອຖື, ສະຖານທີ່ເຄົາລົບບູຊາ ແມ່ນມີຄວາມສຳຄັນໃນການນຳໃຊ້ສິດເສລີພາບທາງສາດສະໜາ ແລະ ຄວາມເຊື່ອຖືໃນລະດັບທີ່ຄົນສ່ວນໃຫຍ່ໃນຊຸມຊົນໃຫ້ການເຊື່ອຖື ແລະ ແລະ ຕ້ອງການຮັກສາສະຖານທີ່ທີ່ສັກສິດດັ່ງກ່າວໄວ້ເພື່ອສະມາຊິກໃນຊຸມຊົນສາມາດສະແດງຄວາມສັດທາຕໍ່ສາດສະໜາທີ່ນັບຖືໃນສະຖານທີ່ທີ່ກ່າວ. ການລະເມີດສິດທິເສລີພາບໃນທາງສາດສະໜາ ຫຼື ຄວາມເຊື່ອຖືນັ້ນແມ່ນອາດບໍ່ຄືກັນກັບຮູບແບບການລະເມີດອື່ນໆ, ການຖືກຈຳກັດສະຖານສັກກາລະບູຊາ ຫຼື ສະຖານທີ່ທາງສາດສະໜາແມ່ນຖືວ່າເປັນການລະເມີດສິດຫຼາຍຢ່າງເຊິ່ງບໍ່ພຽງ ແຕ່ເປັນ ການລະເມີດສິດທິສ່ວນບຸກຄົນ ແຕ່ຍັງຖືວ່າເປັນການລະເມີດສິດຂອງກຸ່ມຄົນໃນຊຸມຊົນທີ່ມີສ່ວນໃນສະຖານທີ່ສັກສິດທີ່ກ່າວມາ ນັ້ນອີກນຳ.[60]

ໃຫ້ເບິ່ງຂໍ້ມູນເພີ່ມທີ່ບົດສະຫຼຸບສັງລວມກ່ຽວກັບສິດໃນການມີສ່ວນຮ່ວມໃນທາງສາດສະໜາ

ໃນບົດລາຍງານຂອງນັກລາຍງານພິເສດໃນເວລາທີ່ປະຕິບັດໜ້າທີ່ຢູ່ປະເທດອິລ່ານໃນປີ 2005, ການລາຍງານນັ້ນແມ່ນກ່ຽວກັບສິດໃນທີ່ຢູ່ອາໃສທີ່ພໍພຽງເຊິ່ງນັກລາຍງານໄດ້ອະທິບາຍແຈ້ງເຖິງບັນຫາທີ່ມັນກະທົບໃສ່ບັນດາຊຸມຊົນທີ່ມີຄວາມເຊື່ອທາງສາດສະໜາທີ່ເກີດມາຈາກຂໍ້ກຳນົດກົດໝາຍທີ່ມີການຈຳແນກ ແລະ ບັນຫາການເວນຄືນຊັບສິນຕ່າງໆ. ໃນບົດລາຍງານໄດ້ເນັ້ນຕົວຢ່າງບ່ອນທີ່ຄວາມເຊື່ອໃນສາດສະໜາບາຮາຍມີຊັບສິນທາງສາດສະໜາເຊິ່ງລວມມີສະຖານສັກກະລະບູຊາຕ່າງໆເຊັ່ນ: ໂບດ ແລະ ປ່າຊ້າທີ່ຖືກທາງການເວນຄືນໃນລັກສະນະບໍ່ມີການທົດແທນ.[61]

[60] E/CN.4/2005/61, paras. 51 and 52.
[61] E/CN.4/2006/41/Add.2, paras. 81–85.

ໃນບັນຫາທີ່ກ່ຽວກັບການເຂົ້າເຖິງທີ່ດິນດັ້ງເດີມ, ແລະ ອານາເຂດຂອງຄົນພື້ນເມືອງ ພ້ອມທັງເລື່ອງຄວາມມີເສລີພາບໃນທາງສາສະໜາແມ່ນໃຫ້ເບິ່ງຂໍ້ມູນເພີ່ມທີ່ບົດສະຫຼຸບສັງລວມກ່ຽວກັບສິດຂອງຄົນພື້ນເມືອງໃນດິນແດນ, ອານາເຂດ, ແລະ ຊັບພະຍາກອນຕ່າງໆເຊິ່ງລວມມີນໍ້າທີ່ເຄີຍເປັນຂອງພວກເຂົາມາກ່ອນ.

## ຄະດີຕົວຢ່າງ:

**ຄະນະກໍາມະທິການອັບຟຣິກກາກ່ຽວກັບສິດທິມະນຸດ ແລະ ສິດທິຂອງປະຊາຊົນ: ສູນສິດທິຄົນຊົນເຜົ່າໃນການພັດທະນາ (ປະເທດເຄັນຢ້າ) ແລະ ກຸ່ມສິດທິຂອງຄົນຊົນເຜົ່າສາກົນໃນນາມຂອງສະພາສະຫວັດດີການເອນໂດລອຍ ກັບ ປະເທດເຄັນຢ້າ, ເອກະສານເລກທີ 276/03 (25 ພະຈິກ 2009).** ຄະນະກໍາມະທິການອັບຟຣິກກາພິຈາລະນາວ່າການຖືກບັງຄັບໃຫ້ຍົກຍ້າຍຈາກທີ່ດິນຂອງບັນພະບູລຸດຂອງຊຸມຊົນເອນໂດລອຍ ແລະ ຜົນກະທົບທີ່ແຕະຕ້ອງເຖິງສິດທິຕ່າງໆພາຍໃຕ້ກົດບັດອັບຟຣິກກາກ່ຽວກັບສິດທິມະນຸດ ແລະ ສິດທິຂອງປະຊາຊົນແມ່ນຖືວ່າເປັນການ ລະເມີດກົດໝາຍ. ຄະນະກໍາມະທິການເຫັນວ່າປະເທດເຄນຢ້າໄດ້ລະເມີດມາດຕາ 1, 8, 14, 17, 21 ແລະ 22 ຂອງກົດບັດ. ໃນດ້ານຖານຄວາມຜິດອື່ນໆ, ຄະນະກໍາມະທິການໄດ້ຊີ້ໃຫ້ເຫັນເຖິງການລະເມີດສິດເສລີພາບໃນສາດສະໜາ (ມາດຕາ 8) ແລະ ລະເມີດສິດໃນວັດທະນະທໍາ (ມາດຕາ 17), ຕັ້ງແຕ່ຊຸມຊົນໄດ້ຖືກຍົກຍ້າຍຈາກສະຖານທີ່ບັນພະບູລຸດຂອງເຂົານັ້ນແມ່ນເຫັນວ່າ ການທີ່ຈະກອບກູ້ຄືນທາງວັດທະນະທໍາ ແລະ ສາດສະໜາແມ່ນເປັນເລື່ອງຍາກ, ເຫດຜົນກໍ່ເນື່ອງມາຈາກສະຖານທີ່ດັ່ງກ່າວແມ່ນ ຖືກທໍາລາຍໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ນອກນັ້ນການເຂົ້າເຖິງສະຖານທີ່ທີ່ກ່າວມານັ້ນກໍ່ເຫັນ ວ່າຍັງມີຂໍ້ຈໍາກັດທີ່ເປັນລະບົບກົດຂວາງຢູ່.[62]

## ຫຼັກການ ແລະ ຄູ່ມືສາກົນທີ່ກ່ຽວຂ້ອງ

- ຄູ່ມືອາສາໆກ່ຽວກັບຄວາມຮັບຜິດຊອບການບໍລິຫານຈັດການຂອງຜູ້ຄອບຄອງທີ່ດິນ, ການປາມົງ ແລະ ປ່າໄມ້ໃນບໍລິບົດຂອງຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດ (Rome, FAO, 2012), ຄູ່ມື 9.1, 9.7, 18.2.

[62] See *Land and Human Rights: Annotated Compilation of Case Law.*

**ບົດສະຫຼຸບສັງລວມ**

**ດ. ສິດຕໍ່ກັບຂໍ້ມູນຂ່າວສານ**

**ບົດສະເໜີ**

ການເຂົ້າເຖິງຂໍ້ມູນຂ່າວສານແມ່ນເປັນເງື່ອນໄຂທໍາອິດໃນການມີສ່ວນຮ່ວມໃນການການຕັດສິນໃຈທີ່ມີຄວາມໝາຍ ແລະ ໃນການປະເມີນບັນດາການຕັດສິນໃຈຕ່າງໆຂອງລັດ ຖະບານທີ່ສໍາຄັນ, ສິ່ງທີ່ກ່າວມານີ້ແມ່ນຖືວ່າເປັນສິດເສລີ ພາບໃນການສະແດງຄວາມຄິດເຫັນ. ເພື່ອຮັບປະກັນຄວາມຮັບຜິດຊອບ, ລັດແມ່ນມີພັນທະໜ້າທີ່ໃນການສ້າງ ແລະ ເຜີຍແຜ່ແຜນພັດທະນາ, ໂຄງການ ແລະ ຜົນການຕັດສິນໃຈຂອງຕົນໃຫ້ແກ່ສາທາລະນະໄດ້ຮັບຊາບ. ມີຫຼາຍໆກໍລະນີທີ່ບັນຫາທີ່ດິນ, ແຜນການພັດທະນາ ແລະ ການປະຕິຮູບທີ່ດິນແມ່ນໄດ້ຖືກດໍາເນີນໄປດ້ວຍຄວາມບໍ່ໂປ່ງໃສ ແລະ ບໍ່ມີການມີສ່ວນຮ່ວມຂອງສາທາລະນະ. ຄົນສ່ວນຫຼາຍແມ່ນມີອຸປະສັກໃນການເຂົ້າເຖິງຂໍ້ມູນຢ່າງໂຈ່ງແຈ້ງ ແລະ ບໍ່ເຊື່ອຖືໄດ້. ດັ່ງນັ້ນສາທາລະນະຈຶ່ງບໍ່ສາມາດໃຊ້ສິດຂອງຕົນໃນການຂັດຄ້ານ ແລະ ຕໍ່ຕ້ານກັບການຕັດສິນໃຈທີ່ບໍ່ສອດຄ່ອງຂອງລັດຖະບານໄດ້.

ພາກສື່ມວນຊົນແມ່ນມີບົດບາດສໍາຄັນຫຼາຍໃນການເຜີຍແຜ່ຂໍ້ມູນຂ່າວສານ ແລະ ສ້າງພື້ນທີ່ໃຫ້ພາກສ່ວນສາທາລະນະໄດ້ທໍາການສົນທະນາໃນບັນຫາຕ່າງໆ. ເຖິງຢ່າງໃດກໍ່ດີ, ມັນເປັນເລື່ອງປົກກະຕິທີ່ນັກຂ່າວ ແລະ ຜູ້ເຮັດວຽກໃນສື່ມວນຊົນແມ່ນພົບພໍ້ບັນຫາການຂົ່ມຂູ່, ຖືກກໍ່ອາດສະຍາກໍາ ແລະ ບາງຄັ້ງຖືກປອງຮ້າຍເອົາຊີວິດເນື່ອງມາຈາກພວກເຂົານັ້ນໄດ້ເຮັດວຽກທີ່ກ່ຽວຂ້ອງກັບບັນຫາທີ່ດິນ ແລະ ບັນຫາອື່ນໆ ທີ່ກ່ຽວຂ້ອງກັບທີ່ດິນເຊິ່ງລວມມີໂຄງການການພັດທະນາ, ໂຄງການທາງສິ່ງແວດລ້ອມ ແລະ ທາງທຸລະກິດ ຫຼືບັນຫາການຖືກບັງຄັບໃຫ້ຍົກຍ້າຍອອກຈາກຕົວເມືອງ ຫຼື ຊົນນະບົດ.

"ມັນມີຄວາມຈໍາເປັນທີ່ວ່າການໃຫ້ສໍາປະທານ ຫຼື ການຊື້ທີ່ດິນຕ້ອງມີຄວາມໂປ່ງໃສຢ່າງຄັກແນ່. ບັນຫານີ້ແມ່ນຈໍາເປັນທີ່ລັດຕ້ອງຮັບປະກັນການມີສ່ວນຮ່ວມທີ່ເໝາະສົມຈາກພາກສ່ວນຊຸມຊົນທີ່ຈະມີຜົນກະທົບຈາກບັນຫາການສໍາປະທານ ຫຼື ການຊື້ທີ່ດິນ, ດັ່ງນັ້ນຂະບວນການຕັດສິນໃຈຈຶ່ງຈໍາເປັນຕ້ອງໂປ່ງໃສແທ້ໆ."

*ທີ່ມາຂໍ້ມູນ:* ບົດລາຍງານຂອງນັກລາຍງານພິເສດກ່ຽວກັບສິດໃນດ້ານອາຫານ (A/HRC/13/33/Add.2), para. 31.

"ປັດໃຈສໍາຄັນທີ່ມັນກະທົບຕໍ່ສິດທິຂອງແມ່ຍິງໃນດ້ານການມີບ້ານຢູ່ ແລະ ມີທີ່ດິນທີ່ພໍພຽງແມ່ນ...ຍ້ອນຂາດຂໍ້ມູນຂ່າວສານກ່ຽວກັບສິດທິຂອງແມ່ຍິງ...ການປົກປ້ອງສິດທິຂອງແມ່ຍິງໃນການມີບ້ານຢູ່ທີ່ພໍພຽງແມ່ນຕ້ອງໃຫ້ສິດທິສ່ວນບຸກຄົນເປັນສູນກາງຂອງຍຸດທະສາດ, ໃຫ້ການປະສົມປະສານທັງສິດທິພື້ນຖານທາງການເມືອງ ແລະ ພົນລະເຮືອນ (ເຊັ່ນ: ສິດໃນຄວາມປອດໄພ, ສິດໃນການມີສ່ວນຮ່ວມ, ສິດຮັບຮູ້ຂໍ້ມູນຂ່າວສານ) ກໍ່ຄືສິດພື້ນຖານທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາໃນການມີບ້ານຢູ່ທີ່ພໍພຽງ (ເຊັ່ນ: ສິດໃນອາຫານ, ໃນການສຶກສາ, ແລະ ໃນນໍ້າດື່ມ)."

*ທີ່ມາຂໍ້ມູນ:* ແມ່ຍິງ ແລະ ການມີບ້ານຢູ່ທີ່ພໍພຽງ: ດໍາເນີນການສຶກສາໂດຍນັກລາຍງານພິເສດກ່ຽວກັບການມີບ້ານຢູ່ທີ່ພໍພຽງ (E/CN.4/2005/43), ບົດສະຫຼຸບ ແລະ ວັກທີ 40.

ກຸ່ມຊົນເຜົ່າທີ່ມີຄວາມແຕກຕ່າງດ້ານພາສາແມ່ນອາດຈະມີຄວາມຫຍຸ້ງຍາກໃນການຊອກຫາ ແລະ ໄດ້ຮັບຂໍ້ມູນຂ່າວສານເຊັ່ນ: ນິຕິກໍາຕ່າງໆທີ່ກ່ຽວກັບທີ່ດິນ ຫຼື ແຜນການພັດທະນາຕົວເມືອງໃໝ່, ເຫດຜົນກໍ່ເນື່ອງມາຈາກວ່າຂໍ້ມູນຕ່າງໆນັ້ນແມ່ນຖືກສ້າງເປັນແຕ່ພາສາທາງການເທົ່າ. ບັນຫາທີ່ວ່າມານີ້ຍັງກະທົບໃສ່ການເຂົ້າເຖິງຄວາມຍຸຕິທໍາໃນສັງຄົມຂອງເຂົາເຈົ້າອີກດ້ວຍ.

## ຫຼັກການສາກົນທີ່ສາມາດໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດເສລີພາບໃນການປາກເວົ້າເຊິ່ງລວມມີເສລີພາບໃນການຊອກຫາ, ໄດ້ຮັບ ແລະ ກະຈາຍຂໍ້ມູນໄດ້ທຸກຮູບແບບຂອງການສົນທະນາຕາມທີ່ຕ້ອງການ.

(ຖະແຫຼງການສິດທິມະນຸດສາກົນມາດຕາ 19, ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 19(2), ສົນທິສັນຍາສາກົນວ່າການປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍ ແລະ ຄອບຄົວຂອງເຂົາເຈົ້າ ມາດຕາ 13 (2), ສົນທິສັນຍາສາກົນວ່າດ້ວຍສິດຂອງຄົນພິການ ມາດຕາ 21)

ເພື່ອປະກອບສ່ວນເຂົ້າໃນການປົກປ້ອງສິດຂອງທຸກຄົນລຸ້ນໃໝ່ ແລະ ລຸ້ນໃນອານາຄົດເພື່ອວ່າພວກເຂົາຈະມີຊີວິດທີ່ສະດວກຂື້ນບໍ່ວ່າຈະເປັນດ້ານສຸກຂະພາບ ແລະ ດ້ານຄວາມຢູ່ດີກິນດີ, ລັດທີ່ກ່ຽວຂ້ອງຕ້ອງຮັບປະກັນສິດໃນການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມໃນຂະບວນການຕັດສິນໃຈສາທາລະນະ ແລະ ສາມາດເຂົ້າເຖິງຄວາມຍຸຕິທໍາບໍ່ວ່າຊິມີສະພາບແວດລ້ອມແນວໃດກໍ່ຕາມ.

(ສົນທິສັນຍາກ່ຽວກັບການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມໃນຂະບວນການຕັດສິນໃຈສາທາລະນະ ແລະ ການເຂົ້າເຖິງຄວາມຍຸຕິທໍາໃນດ້ານສະພາບແວດລ້ອມ ມາດຕາ 1)

ທຸກຄົນແມ່ນມີສິດໃນສ່ວນຕົວ ແລະ ໃນສ່ວນລວມຮ່ວມກັບຄົນອື່ນ: (a) ໃນການຮັບຮູ້, ຊອກຫາ, ໄດ້ຮັບ, ແລະ ຮັກສາຂໍ້ມູນກ່ຽວກັບສິດທິມະນຸດ ແລະ ເສລີພາບທຸກຢ່າງເຊິ່ງລວມມີການເຂົ້າເຖິງຂໍ້ມູນເພື່ອຮັບຮູ້ເຖິງສິດທິ ແລະ ເສລີພາບຕ່າງ ໆວ່າມັນມີຜົນກະທົບຫຍັງແດ່ໃນບໍລິບົດຂອງນິຕິກໍາພາຍໃນ, ໃນລະບົບການບໍລິຫານ ແລະ ລະບົບຕຸລາການ; *(b)* ໃນການປະຕິບັດຕາມຂໍ້ກໍານົດໃນບັນດາ ກົນໄກສາກົນສິດທິມະນຸດ ແລະ ກົນໄກອື່ນໆທີ່ໄດ້ຈັດຕັ້ງປະຕິບັດມາ, ເສລີພາບໃນການຈັດພິມເຜີຍແຜ່, ການເຜີຍແຜ່ ແລະ ການກະຈາຍ ຂໍ້ມູນໃຫ້ແກ່ຄົນອື່ນໆ, ຂໍ້ມູນຂ່າວສານ ແລະ ຄວາມຮູ້ກ່ຽວກັບສິດທິ ແລະ ເສລີພາບຂັ້ນພື້ນຖານທຸກຢ່າງ; (c) ເພື່ອສຶກສາ, ສົນທະນາ ແລະ ສະແດງຄວາມຄິດເຫັນໃນສິ່ງທີ່ພົບເຫັນທັງໃນກົດໝາຍ ແລະ ໃນພາກປະຕິບັດຈາກຂະບວນການຕ່າງໆທີ່ກ່າວມານີ້ ແລະ ຂະບວນ ການອື່ນໆທີ່ເໝາະສົມເຊິ່ງມັນກ່ຽວກັບສິດ ແລະ ເສລີພາບຂັ້ນພື້ນຖານທັງໝົດ, ແລະ ເພື່ອສ້າງຄວາມຕື່ນຕົວໃຫ້ແກ່ສາທາລະນະໃນ ເລື່ອງສິດຕ່າງໆທີ່ມີ.

ຖະແຫຼງການກ່ຽວກັບສິດທິຂອງຜູ້ເຄື່ອນໄຫວປົກປ້ອງສິດທິມະນຸດ ມາດຕາ 6 (a) (b) ແລະ (c))

## ຕົວຢ່າງການນໍາໃຊ້

ການເຂົ້າເຖິງຂໍ້ມູນຂ່າວສານແມ່ນມີຄວາມສໍາຄັນຫຼາຍສໍາລັບການມີສ່ວນຮ່ວມທີ່ມີຄວາມໝາຍ, ມີປະສິດທິພາບ ແລະ ມີອິດສະຫຼະໃນຂະບວນການຕັດສິນໃຈເຊິ່ງມັນບໍ່ຕ່າງຫຍັງກັບການເຂົ້າເຖິງຂະບວນການຍຸຕິທໍາ ແລະ ການປຽວຢາທີ່ມີປະສິດທິພາບ. ການເຂົ້າເຖິງຂໍ້ມູນຂ່າວສານໄດ້ຢ່າງເຕັມທີ່, ຖືກຕ້ອງ ແລະ ທັນເວລາກ່ຽວກັບນະໂຍບາຍ, ກົດໝາຍ ແລະ ການຕັດສິນໃຈຕ່າງໆທີ່ພົວພັນກັບບັນຫາທີ່ດິນ ແລະ ບັນຫາຜົນກະທົບທີ່ຈະເກີດຂື້ນຕ່າງໆນັ້ນແມ່ນຖືວ່າມີຄວາມສໍາຄັນຫຼາຍສໍາລັບຜູ້ຖືສິດເພື່ອມີສ່ວນຮ່ວມໃນຂະບວນການຕັດສິນໃຈທີ່ສໍາຄັນ ຫຼືວ່າ ເພື່ອເປັນການພັກດັນໃຫ້ຜູ້ທີ່ມີໜ້າທີ່ຮັບຜິດຊອບນັ້ນຕ້ອງອອກມາດຕະການທີ່ເໝາະສົມເຊິ່ງລວມມີການເຂົ້າເຖິງ, ການນໍາໃຊ້ ແລະ ການຄຸ້ມຄອງທີ່ດິນ. ການຂາດຄວາມເຂົ້າໃຈກ່ຽວກັບສິດຂອງຕົນເອງ ແລະ ກົນໄກທາງຕຸລາການ ແລະ ບໍລິຫານນັ້ນແມ່ນຖືກວ່າເປັນການກີດກັ້ນການຮຽກຮ້ອງສິດທິຕ່າງໆ.

ໃນບົດຄໍາເຫັນຂອງຄະນະກໍາມະທິການສິດທິມະນຸດເລກທີ 34 (2011), ຄະນະກໍາມະທິການໄດ້ກ່າວວ່າ ເພື່ອໃຫ້ສິດທິໃນການເຂົ້າເຖິງຂໍ້ມູນຂ່າວສານໄດ້ຢ່າງມີປະສິດທິຜົນເພື່ອຈະໄດ້ຂໍ້ມູນຈາກອົງກອນຕ່າງໆຂອງລັດ, “ລັດທີ່ກ່ຽວຂ້ອງຕ້ອງເປີດເຜີຍຂໍ້ມູນໃສ່ຖານຂໍ້ມູນທີ່ສາທາລະນະສາມາດເຂົ້າເຖິງໄດ້. ລັດພາຄີຕ່າງໆນັ້ນຕ້ອງເຮັດທຸກວິທີທາງເພື່ອຮັບປະກັນການເຂົ້າເຖິງຂໍ້ມູນທີ່ວ່ານັ້ນໄດ້ຢ່າງງ່າຍດາຍ, ທັນເຫດການ, ມີປະສິດທິພາບ ແລະ ສະດວກສະບາຍ. ນອກນັ້ນລັດຕ້ອງອອກມາດຕະການທີ່ເໝາະສົມທີ່ສາມາດເຮັດໃຫ້ບຸກຄົນຕ່າງໆເຂົ້າເຖິງຂໍ້ມູນໄດ້ງ່າຍຂື້ນເຊັ່ນ: ການໃຫ້ສິດເສລີພາບທາງກົດໝາຍໃນການເຂົ້າເຖິງຂໍ້ມູນ” (ວັກທີ 19).

ສິ່ງທີ່ຄ້າຍກັນກໍ່ຄືວ່າຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານການຄອບຄອງທີ່ດິນ, ການປາມົງ ແລະ ປ່າໄມ້ໃນບໍລິບົດຂອງຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດໄດ້ເນັ້ນຄວາມສຳຄັນ "ຂອງຂະບວນການ, ກົດໝາຍ ແລະ ນະໂຍບາຍຕ່າງໆທີ່ມີຄວາມຈະແຈ້ງ ແລະສາມາດ ເຜີຍແຜ່ຢ່າງກວ້າງຂວາງນັ້ນແມ່ນຕ້ອງສ້າງເປັນຫຼາຍພາສາ, ແລະ ສາມາດເຜີຍແຜ່ເລື່ອງການຕັດສິນໃຈທີ່ກ່ຽວຂ້ອງ ພ້ອມທັງສ້າງເປັນຮູບແບບເອກະສານຕ່າງໆທີ່ທຸກຄົນສາມາດເຂົ້າເຖິງ ໄດ້" (ຫຼັກການແນະ**ນຳ** 3b (8)). ຄູ່ມືອາສາຍັງໄດ້ອະທິບາຍແຈ້ງກ່ຽວກັບເນື້ອນໃນຂອງສິດທິໃນການເຂົ້າເຖິງຂໍ້ມູນຂ່າວສານວ່າ ມີຄວາມສຳຄັນຫຼາຍເຊິ່ງມັນລວມມີຄວາມສຳພັນໃນດ້ານການປັບປຸງນະໂຍບາຍ, ກົດໝາຍ ແລະ ປັບປຸງໂຄງສ້າງທີ່ກ່ຽວຂ້ອງກັບ ການ ຄອບ ຄອງທີ່ດິນ ແລະ ຜົນກະທົບທີ່ອາດເກີດຂຶ້ນ, ກ່ຽວຂ້ອງກັບການຈັດສັນສິດໃນການຄອບຄອງ ແລະ ການມອບອຳນາດໃນການ ຄອບຄອງ, ການໂອນສິດໃນການຄອບຄອງທີ່ດິນ, ການຂາຍ ແລະ ໃຫ້ການເຊົ່າ, ການປັບປຸງການຊົດເຊີຍ, ຂັ້ນຕອນໃນການປະຕິຮູບສຳລັບການຈັບຈອງທີ່ດິນ (ຄູ່ມືທີ 5.8, 8.9, 9.4, 12.11, 13.1, 14.4, 15.9, 16.2). ສະນັ້ນ, ລັດທີ່ກ່ຽວຂ້ອງຕ້ອງສ້າງນະໂຍບາຍ ແລະ ກົດໝາຍເພື່ອສົ່ງເສີມການເຜີຍແຜ່ຂໍ້ມູນທີ່ລວມມີເລື່ອງຂອງສິດໃນການ ຄອບ ຄອງທີ່ດິນ (ຄູ່ມື 5.6). ນອກນີ້ລັດຍັງຕ້ອງສ້າງລະບົບການເກັບຂໍ້ມູນທີ່ເໝາະສົມ ແລະ ສາມາດເຂົ້າເຖິງໄດ້ເຊັ່ນ: ລະບົບການຈົດ ທະບຽນທີ່ດິນທີ່ທຸກຄົນສາມາດເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງກັບເລື່ອງການໄດ້ສິດ ແລະ ພັນທະໃນການຄອບຄອງເພື່ອວ່າລະບົບທີ່ສ້າງຂຶ້ນມານັ້ນຈະສາມາດເພີ່ມຄວາມໝັ້ນຄົງໃນການຄອບຄອງທີ່ດິນ (ຄູ່ມື 8.4).

ພາຍໃຕ້ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບການຂາດທີ່ຢູ່ອາໃສ ແລະ ການຖືກບັງຄັບໃຫ້ຍົກຍ້າຍເນື່ອງຈາກບັນຫາພັດທະນາ, ການໃສ່ໃຈພິເສດແມ່ນເປັນສິ່ງທີ່ຄວນເຮັດໃນການເຜີຍແຜ່ຂໍ້ມູນຂ່າວສານທີ່ເໝາະສົມ ແລະ ທັນເຫດການໂດຍຜ່ານຍຸດທະວິທີ ແລະ ຊ່ອງທາງທີ່ເໝາະສົມທາງສາດສະໜາໃຫ້ແກ່ກຸ່ມຄົນທີ່ມີຄວາມສ່ຽງເປັນພິເສດໃນການທີ່ຈະຖືກບັງຄັບໃຫ້ຍົກຍ້າຍ. ຂະບວນການພັດທນາ ແລະ ວາງແຜນຕົວເມືອງ ແລະ ຊົນນະບົດນັ້ນແມ່ນຄວນໃຫ້ຄອບຄຸມຮອບດ້ານກັບສິ່ງທີ່ອາດຖືກຜົນກະທົບ ແລະ ເຈົ້າໜ້າທີ່ຄວນເຜີຍແຜ່ຂໍ້ມູນຂ່າວສານທີ່ກ່ຽວຂ້ອງຕ່າງໆນັ້ນລ່ວງໜ້າເຊິ່ງລວມມີປະຫວັດທີ່ມາຂອງດິນ ແລະ ສະເໜີແຜນຈັດຕັ້ງປະຕິບັດກ່ຽວກັບການໃຫ້ຕັ້ງຖິ່ງຖານຄືນໃໝ່ແບບທີ່ເໝາະສົມໂດຍສະເພາະແມ່ນໃນດ້ານການຈະຊ່ວຍປົກປ້ອງກຸ່ມຄົນທີ່ມີຄວາມສ່ຽງ, ສິ່ງທີ່ກ່າວມານັ້ນກໍ່ຄືຕ້ອງມີລະບຽບກົດໝາຍ ແລະ ນະໂຍບາຍທີ່ເຈາະຈົງແນໃສ່ການປົກປ້ອງບັນຫາທີ່ກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ.[63]

ອີງຕາມຫຼັກການແນະນຳກ່ຽວກັບການຂາດທີ່ຢູ່ອາໃສ, ໃນກໍລະນີທີ່ການຂາດທີ່ຢູ່ອາໃສຫາກເກີດຂຶ້ນໃນສະພາບທີ່ບໍ່ໄດ້ກ່ຽວຂ້ອງກັບບັນຫາສົງຄາມ ຫຼື ໄພພິບັດຕ່າງໆ, ມາດຕະການໃນການປົກ ປ້ອງຕ້ອງໄດ້ຮັບການສ້າງຂຶ້ນຢ່າງເໝາະສົມເພື່ອເປັນການຮັບປະກັນໃນການໃຫ້ຂໍ້ມູນທີ່ສົມບູນແກ່ຜູ້ທີ່ອາດຕົກເປັນຄົນທີ່ຂາດທີ່ຢູ່ອາໃສໃນເລື່ອງທີ່ກ່ຽວກັບເຫດຜົນ ແລະ ຂະບວນການສຳລັບການຊົດເຊີຍສະຖານທີ່ໃໝ່ທີ່ເໝາະສົມ ແລະ ສາມາດປະຕິບັດໄດ້.[64]

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບສິດໃນການມີສ່ວນຮ່ວມ ແລະ ສິດເສລີພາບໃນການສະແດງຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມ.

ຫຼັກການ ແລະ ຄຳແນະນຳພື້ນຖານກ່ຽວກັບສິດໃນການໄດ້ຮັບການປຽວຢາ ແລະ ປົວແປງຮັກສາຜູ້ເຄາະຮ້າຍຈາກການລະເມີດກົດໝາຍສິດທິມະນຸດ ແລະ ມະນຸດສະທຳຢ່າງຮຸນແຮງ ແລະ ເປັນລະບົບແມ່ນໄດ້ກຳນົດວ່າມາດຕະການປຽວຢາໃນກໍລະນີທີ່ມີການລະເມີດກົດໝາຍຂ້າງເທິງນັ້ນແມ່ນຈະລວມມີການໃຫ້ສິດແກ່ຜູ້ເຄາະຮ້າຍໃນການຮັບຮູ້ຂໍ້ມູນທີ່ກ່ຽວຂ້ອງກັບບັນຫາທີ່ຖືກລະເມີດ ແລະ ມາດຕະການທີ່ຈະປຽວຢາຮັກສາເຂົາເຈົ້າ. ສຳລັບຜູ້ເຄາະຮ້າຍທີ່ຈະໄດ້ການປຽວຢາທີ່ເໝາະສົມ ແລະ ໄດ້ຮັບການປົວແປງຮັກສານັ້ນ, ລັດພາຄີທີ່ກ່ຽວຂ້ອງຕ້ອງເຜີຍແຜ່ຂໍ້ມູນຂ່າວສານໂດຍຜ່ານທາງກົນໄກສາທາລະນະ ແລະ ກົນໄກອື່ນໆທີ່ເໝາະສົມກ່ຽວກັບມາດຕະການປຽວຢາທີ່ມີເພື່ອແກ້ໄຂການລະເມີດກົດໝາຍສິດທິມະນຸດ ແລະ ມະນຸດສະທຳສາກົນ.[65]

[63] A/HRC/4/18, annex I, paras. 35, 37, 38, 56 (e) and (h).
[64] E/CN.4/1998/53/Add.2, principle 7, para. 3 (b)-(c).
[65] General Assembly resolution 60/147, paras. 11 (c), 12 (a) and 24.

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບສິດໃນການໄດ້ຮັບການປຽວຍາທີ່ມີປະສິດທິພາບ

## ຫຼັກການ ແລະ ຄູ່ມືອື່ນໆທີ່ກ່ຽວຂ້ອງ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານການຄອບຄອງທີ່ດິນ, ການປາມົງ ແລະ ປ່າໄມ້ໃນບໍລິບົດຂອງຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (Rome, FAO, 2012), ຄູ່ມື 5.8, 6.5, 8.4, 9.4, 9.8, 10.5, 11.4, 11.5, 12.11, 13.6, 14.4, 15.9, 17.3, 17.5, 18.3, 18.5, 24.4, 25.4.
- ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບການຂາດທີ່ຢູ່ອາໃສ ແລະ ການຖືກບັງຄັບໃຫ້ຍົກຍ້າຍເນື່ອງມາຈາກບັນຫາການພັດທະນາ (A/HRC/4/18, annex I), ວັກທີ. 35, 37, 38, 56 (e) ແລະ (h).
- ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບສິດທີ່ຈະໄດ້ຮັບການປຽວຍາ ແລະ ການປົວແປງຮັກສາສໍາລັບຜູ້ເຄາະຮ້າຍຈາກການລະເມີດທີ່ຮ້າຍແຮງ ແລະ ຮຸນແຮງຂອງກົດໝາຍມະນຸດສະທໍາສາກົນ ແລະ ສິດທິມະນຸດສາກົນ (ມະຕິສະມັດຊາໃຫຍ່ ເລກທີ 60/147), ວັກທີ. 11 (c), 12 (a), 24.
- ຄູ່ມືອາສາກ່ຽວກັບການສະໜັບສະໜຸນການຮັບຮູ້ສິດຢ່າງຕັ້ງໜ້າໃນການມີອາຫານທີ່ພໍພຽງໃນບໍລິບົດຂອງຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (Rome, FAO, 2005), ຄູ່ມື 11.5.
- ຫຼັກການແນະນໍາກ່ຽວກັບການຂາດທີ່ຢູ່ອາໃສ (E/CN.4/1998/53/Add.2), ຫຼັກການ 7, ວັກທີ 3 (b)–(c).

## ບົດສະຫຼຸບສັງລວມ
## ຓ. ສິດໃນການມີຊີວິດຢູ່ລອດ
## ບົດສະເໜີ

ສໍາລັບສິດໃນການມີຊີວິດຢູ່ລອດນັ້ນແມ່ນບໍ່ມີໃຜທີ່ຈະກໍານົດ ສິດດັ່ງກ່າວໃຫ້ໃຜຜູ້ໃດໜຶ່ງໄດ້ ເຊິ່ງມັນອາດກວມເອົາສິດໃນທີ່ດິນນໍາ. ໃນເຂດທີ່ມີການດໍາລົງຊີວິດຂອງບຸກຄົນ ແລະ ຊຸມຊົນທີ່ອາໃສທີ່ດິນເປັນບ່ອນຢັ່ງຊີບແບບພໍພຽງ, ການກີດກັນສິດໃນການທໍາມາຫາກິນໃນທີ່ດິນຕອນດັ່ງກ່າວແມ່ນຈະຖືວ່າເປັນການລະເມີດສິດທີ່ຈະພາໃຫ້ເກີດບັນຫາທາງສຸຂະພາບ, ທາງໂພສະນາການ, ການອຶດຫິວ ແລະ ອາດນໍາໄປເຖິງບັນຫາ ອັດຕາການເສຍຊີວິດທີ່ເພີ່ມຂຶ້ນ.

ນອກຈາກນີ້, ໃນກໍລະນີທີ່ມີການຮຽກຮ້ອງສິດໃນ ການນໍາໃຊ້ ຫຼື ຄອບຄອງທີ່ດິນນັ້ນ, ສ່ວນຫຼາຍແລ້ວບຸກຄົນທີ່ຮຽກ ຮ້ອງສິດເຫຼົ່ານັ້ນຈະປະເຊີນກັບບັນຫາການຖືກຂົ່ມຂູ່ເອົາຊີວິດ. ຕົວຢ່າງ: ມີແມ່ຍິງຫຼາຍຄົນທີ່ເຄື່ອນໄຫວປົກປ້ອງສິດທິມະນຸດມັກ ຈະປະເຊີນກັບຄວາມຮຸນແຮງທາງຮ່າງກາຍເຊັ່ນວ່າການຖືກທໍາສໍາເລົາຕ່າງໆ, ສິ່ງທີ່ກ່າວມານີ້ແມ່ນເນື່ອງມາຈາກຜົນໃນການ ຮຽກຮ້ອງສິດເທົ່າທຽມໃນການສືບທອດມູນ. ນັກເຄື່ອນໄຫວປົກ ປ້ອງສິດກໍ່ແມ່ນໄດ້ຖືກຄາດຕະກໍາເນື່ອງມາຈາກການເຄື່ອນໄຫວເພື່ອປົກປ້ອງກຸ່ມຄົນທີ່ອາໃສໃນສະຖານທີ່ທີ່ຍັງບໍ່ທັນໄດ້ຮັບອາຍຸຍາດເທື່ອ, ກຸ່ມຊາວນາ, ຄົນທີ່ບໍ່ມີທີ່ຢູ່ອາໃສແນ່ນອນ ຫຼື ຄົນພື້ນເມືອງຕ່າງໆທີ່ພວກເຂົາເຫຼົ່ານັ້ນກໍາລັງຮຽກຮ້ອງສິດທິໃນທີ່ດິນ ທີ່ມີພວມຂັດແຍ່ງກັນຢູ່. ເຊັ່ນດຽວກັນກັບນັກຂ່າວ ແລະ ຜູ້ທີ່ເຮັດວຽກສື່ມວນຊົນຕ່າງໆກໍ່ແມ່ນຖືກຂົ່ມຂູ່ ແລະ ຖືກປອງຮ້າຍໃນເວລາທີ່ພວກ ເຂົາໄດ້ລາຍງານກ່ຽວກັບຄວາມຮຸນແຮງໃນການລະເມີດສິດທິມະນຸດ ແລະ ການຖືກເອົາລັກເອົາປຽບຕ່າງໆທີ່ກະທໍາໂດຍເຈົ້າ ຂອງທີ່ດິນ, ວິສະຫະກິດ ຫຼື ລັດຖະບານທີ່ກ່ຽວຂ້ອງ.

ໃນລະຫວ່າງເດືອນທັນວາ 2006 ແລະ ເມສາ 2011, ນັກລາຍງານພິເສດກ່ຽວກັບສະພາບການຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດໄດ້ລາຍງານ 34 ເລື່ອງທີ່ກ່ຽວກັບນັກເຄື່ອນໄຫວປົກປ້ອງສິດທິມະນຸດທີ່ເຮັດວຽກກ່ຽວກັບບັນຫາທີ່ດິນ ແລະ ບັນຫາສິ່ງແວດລ້ອມເຊິ່ງມັນພົວພັນເຖິງກິດຈະກໍາທາງເຂດອຸດສະຫະກໍາ ກໍ່ຄື ບັນຫາການກໍ່ສ້າງ ແລະ ໂຄງການພັດທະນາຕ່າງໆ. ເນື້ອໃນຕົ້ນຕໍທີ່ລາຍງານກໍ່ແມ່ນການລະເມີດທີ່ເກີດຂຶ້ນເລື້ອຍໆເຊິ່ງມັນກ່ຽວຂ້ອງກັບຄວາມຂັດແຍ່ງກັບພາກລັດ ແລະ ພາກເອກະຊົນເຊັ່ນ: ບໍລິສັດຂ້າມຊາດ ແລະ ບໍລິສັດຮັກ ສາຄວາມປອດໄພເອະຊົນຕ່າງໆ.
ອີງຕາມຂໍ້ມູນທີ່ໄດ້ຮັບ, ນັກເຄື່ອນໄຫວທີ່ເຮັດວຽກໃນບັນຫາຂ້າງເທິງນັ້ນແມ່ນຂ້ອນຂ້າງຈະພົບບັນຫາຄວາມສ່ຽງສູງຈາກຄວາມຮຸນແຮງໃນດ້ານສຸຂະພາບເຊິ່ງມັນລວມມີບັນຫາການລອບສັງຫານ, ການຖືກຄາດຕະກໍາ, ການຖືກປອງຮ້າຍ ແລະ ການກະທໍາຮຸນແຮງອື່ນໆເຊັ່ນ: ການໃຊ້ອໍານາດເກີນຂອບເຂດຂອງຕໍາຫຼວດໃນເວລາທີ່ມີການປະທ້ວງ. ນອກຈາກນີ້ນັກເຄື່ອນໄຫວຍັງຕົກເປັນເປົ້າໝາຍໃນການຖືກຂົ່ມຂູ່ ແລະ ຖືກຂູ່ເອົາຊີວິດ ພ້ອມທັງຖືກປອງຮ້າຍ ແລະ ການຂົ່ມຂູ່ຕ່າງໆ.
ຄວາມຮຸນແຮງທີ່ເກີດກັບນັກເຄື່ອນໄຫວເຫຼົ່ານັ້ນສ່ວນຫຼາຍແມ່ນເກີດຈາກການກະທໍາຂອງລັດ ແລະ ເອກະຊົນ. ລັດທີ່ວ່າແມ່ນປະກອບດ້ວຍຕໍາຫຼວດ, ເຈົ້າໜ້າທີ່ທ້ອງຖິ່ນ ແລະ ເຈົ້າໜ້າທີ່ສູນກາງຜູ້ທີ່ເຄີຍສະແດງທ່າທາງໃນການຂັດຄ້ານກັບກຸ່ມຄົນທີ່ເຄື່ອນໄຫວປົກປ້ອງສິດທິມະນຸດ. ສ່ວນພາກເອກະຊົນແມ່ນລວມມີບັນດາບໍລິສັດຂ້າມຊາດ, ສື່ມວນຊົນ, ກຸ່ມຕິດອາວຸດຮັບຈ້າງ, ແລະ ພະນັກງານຮັກສາຄວາມປອດໄພເອກະຊົນ.

ທີ່ມາຂອງຂໍ້ມູນ: ບົກລາຍງານຂອງນັກລາຍງານພິເສດທີ່ໄດ້ຮັບຮອງແລ້ວກ່ຽວກັບນັກເຄື່ອນໄຫວສິດທິມະນຸດ (A/HRC/19/55), ວັກທີ. 66, 68 and 70.

## ຫຼັກການສາກົນທີ່ສາມາດໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດຕາມທຳມະຊາດໃນການດຳລົງຊີວິດ ແລະ ສິດດັ່ງກ່າວແມ່ນເປັນສິດທີ່ບໍ່ມີໃຜຈະສາມາດບັງຄັບເອົາອອກຈາກຕົວເຮົາໄດ້. ທຸກຄົນແມ່ນມີສິດທີ່ຈະມີຊີວິດຢູ່ຢ່າງມີກຽດສັກສີ.

(ຖະແຫຼງການສິດທິມະນຸດສາກົນມາດຕາ 3, ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 6 (1), ສົນທິສັນຍາອາເມລິກາກ່ຽວກັບສິດທິມະນຸດ ມາດຕາ 4, ກົດບັດອັບຟຣິກາກ່ຽວກັບສິດທິມະນຸດ ແລະ ສິດທິຂອງປະຊາຊົນ ມາດຕາ 4)

ຜູ້ຍິງທຸກຄົນຕ້ອງໄດ້ຮັບການເຄົາລົບໃນກຽດສັກສີ, ຊີວິດການເປັນຢູ່ ແລະ ຄວາມປອດໄພ

(ອານຸສັນຍາຂອງກົດບັດອັບຟຣິກາກ່ຽວກັບສິດທິມະນຸດ ແລະ ສິດທິຂອງປະຊາຊົນໃນສ່ວນທີ່ກ່ຽວຂ້ອງກັບສິດທິຂອງແມ່ຍິງໃນອັບຟຣິກາ ມາດຕາ 4)

## ຕົວຢ່າງຂອງການນຳໃຊ້

ມີຫຼາຍໆກໍລະນີຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດ, ຜູ້ແທນຂອງຊຸມຊົນ ຫຼື ຕົວບຸກຄົນເອງທີ່ເຮັດວຽກກ່ຽວກັບບັນຫາທີ່ດິນແມ່ນໄດ້ຖືກປອງຮ້າຍທາງຮ່າງກາຍ ແລະ ຈິດໃຈ ຫຼື ຖືກຄາດຕະກຳກໍ່ມີ. ລັດທີ່ກ່ຽວຂ້ອງແມ່ນມີພັນທະໃນກາປົກປ້ອງຄົນເຫຼົ່ານີ້- ແລະ ຄອບຄົບຂອງເຂົາເຈົ້າ-ເພື່ອບໍ່ໃຫ້ຖືກປອງຮ້າຍຕາມທີ່ກ່າວມານັ້ນ.

ຄະນະກຳມະທິການສິດທິມະນຸດໄດ້ກ່າວໃນບົດຄຳເຫັນເລກທີ 6 (1994) ກ່ຽວກັບສິດໃນຊີວິດວ່າ "ສິດໃນຊີວິດສ່ວນຫຼວງຫຼາຍແລ້ວແມ່ນຈະຖືກບີບບັງຄັບໃຫ້ແຄບເຂົ້າ. ເລື່ອງສິດຕາມທຳມະຊາດໃນການດຳລົງຊີວິດແມ່ນຈະເຂົ້າໃຈຢາກໃນກໍລະນີທີ່ຖືກຈຳກັດ, ແລະ ການທີ່ຈະຊ່ວຍໃນການປົກປ້ອງສິດທີ່ວ່ານີ້ແມ່ນທາງລັດຖະບານທີ່ກ່ຽວຂ້ອງຕ້ອງອອກມາດຕະປົກປ້ອງໃດໜຶ່ງໃຫ້ເໝາະສົມ" (ວັກທີ 5). ສະຫຼຸບກໍ່ຄືວ່າ ສິດໃນຊີວິດແມ່ນລວມມີທັງສິດທີ່ບໍ່ມີໃຜຈະເອົາພາກໄປຈາກຕົວເຮົາໄດ້ ແລະ ສິດທີທີ່ຈະໄດ້ຮັບການປົກປ້ອງໃນຊີວິດໂດຍຜ່ານຂະບວນການຕ່າງໆທີ່ຮັບຮູ້ສິດໃນຊີວິດທີ່ມີຄ່າຂອງຄົນ.

ນອກນີ້, ໃນບົດຄຳເຫັນເລກທີ 7 (1997), ທາງຄະນະກຳມະທິການວ່າດ້ວຍສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳຍັງໄດ້ໃຫ້ຂໍ້ສັງເກດວ່າ "ອີງຕາມສາຍພົວພັນພັນ ແລະ ສາຍກ່ຽວພັນທີ່ມີໃນບັນດາສິດທິມະນຸດຕ່າງໆເຊິ່ງລວມມີສິດໃນຊີວິດນັ້ນແມ່ນສ່ວນຫຼາຍຈະຖືກລະເມີດໃນບັນຫາທີ່ກ່ຽວກັບການບັງຄັບໃຫ້ຍົກຍ້າຍຈາກທີ່ດິນ." ຄະນະກຳມະທິການໄດ້ເນັ້ນວ່າ "ການດຳເນີນການບັງຄັບໃຫ້ຍົກຍ້າຍຈາກຖິ່ນຖານນັ້ນແມ່ນອາດຖືວ່າເປັນການລະເມີດສິດທິທາງການເມືອງ ແລະ ພົນລະເຮືອນ ເຊັ່ນ: ສິດໃນຊີວິດ, ສິດໃນຄວາມປອດໄພຂອງບຸກຄົນ, ສິດທີ່ຈະບໍ່ມີໃຜເຂົ້າມາແຊກແຊງໃນຊີວິດສ່ວນຕົວ, ໃນຄອບຄົວ ແລະ ໃນບ້ານ, ແລະ ສິດໃນການໃຊ້ສິດໃນການຄອບຄອງຊັບສິນຢ່າງສັນຕິ" (ວັກທີ 4).

ໃນລັກສະນະທີ່ຄ້າຍກັນນີ້, ທັງຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບບັນຫາການຖືກບັງຄັບໃຫ້ໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສທີ່ເນື່ອງມາຈາກບັນຫາການພັດທະນາ, ແລະ ຫຼັກການແນະນຳກ່ຽວກັບບັນຫາການຂາດທີ່ຢູ່ອາໃສ ໄດ້ກຳນົດວ່າການບັງຄັບໃຫ້ຍົກຍ້າຍຕ້ອງບໍ່ໃຫ້ແຕະຕ້ອງເຖິງກຽດສັກສີ ແລະ ສິດໃນຊີວິດ, ແລະ ຄວາມປອດໄພຂອງຜູ້ທີ່ຖືກຍົກຍ້າຍຕ່າງໆ.[66]

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຍວກັບສິດເສລີພາບໃນການສະແດງຄວາມຄິດເຫັນ, ໃນການປາກເວົ້າ, ການໂຮມຊຸມນຸມ ແລະ ການຕັ້ງສະມາຄົມພ້ອມທັງເລື່ອງທີ່ກ່ຽວກັບສິດຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດໃນບັນຫາທີ່ດິນ.

[66] A/HRC/4/18, annex I, para. 47, and E/CN.4/1998/53/Add.2, ຫຼັກການທີ 8.

### ຄະດີຕົວຢ່າງ

ສານລະຫວ່າງປະເທດສິດທິມະນຸດອາເມລິກາ: ກໍລະນີຂອງຊຸມຊົນຄົນພື້ນເມືອງ ***Yakye Axa*** ກັບ ປະເທດປາລາກວຍ, ເອກະສານ C ເລກທີ 125 (17 ມິຖຸນາ 2005). ບັນຫາກໍ່ແມ່ນທາງລັດຖະບານບໍ່ໃຫ້ການຮັບຮູ້ການຄອບຄອງ ແລະ ການເປັນເຈົ້າຂອງທີ່ດິນດັ້ງເດີມຂອງຊຸມຊົນ Yakye Axa, ຄົນໃນຊຸມແມ່ນໄດ້ກາຍເປັນຜູ້ຂາດທີ່ຢູ່ອາໃສ ແລະ ຖືກບັງຄັບໃຫ້ຍົກຍ້າຍ ແລະ ພາກັນ**ດຳ**ລົງຊີວິດແບບທຸກຍາກ. ສານໄດ້ພິຈາລະນາວ່າໃນກໍລະນີດັ່ງກ່າວແມ່ນໄດ້ມີການລະເມີດສິດທິມະນຸດແທ້ ແລະ ລັດທີ່ກ່ຽວຂ້ອງນັ້ນກໍ່ບໍ່ໄດ້ນໍາໃຊ້ມາດຕະການແກ້ໄຂໃດໆທີ່ຈໍາເປັນເຊັ່ນ: ຄວນໃຊ້ພັນທະທີ່ມີເຂົ້າແກ້ໄຂ, ໃຫ້ການຮັບປະກັນກຽດສັກສີໃນຊີວິດການເປັນຢູ່ເຊັ່ນວ່າໃຫ້ສິດໃນການສືບທອດທີ່ດິນດັ້ງເດີມແກ່ຊຸມຊົນໃນການຄອບຄອງ ແລະ ນໍາໃຊ້.[67]

- ຫຼັກການ ແລະ ຄໍາແນະນໍາພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສ (A/HRC/4/18, annex I), ວັກທີ. 47.
- ຄູ່ມືອາສາເພື່ອສະໜັບສະໜູນການຮັບຮູ້ຢ່າງຕັ້ງໜ້າກ່ຽວກັບສິດໃນການມີອາຫານທີ່ພໍພຽງໃນບໍລິບົດຂອງຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (Rome, FAO, 2005), guideline 8, in particular 8.11.
- ຫຼັກການແນະນໍາກ່ຽວກັບການຂາດທີ່ຢູ່ອາໃສໃນປະເທດ (E/CN.4/1998/53/Add.2), ວັກທີ 8.

[67] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ
## ຖ. ສິດໃນການມີສ່ວນຮ່ວມ
## ບົດສະເໜີ

ໃນດ້ານວັດຖຸປະສົງຂອງສິດທິມະນຸດ, ການມີສ່ວນຮ່ວມທີ່ຫ້າວຫັນ, ເປັນອິດສະຫຼະ ແລະ ມີຄວາມໝາຍແມ່ນເປັນປັດໃຈສຳຄັນຂອງການບໍລິຫານການຄອບຄອງທີ່ດິນ ແລະ ຊັບສິນແບບມີຄວາມຮັບຜິດຊອບ. ການມີສ່ວນຮ່ວມຂອງສາທາລະນະໃນຂະບວນການຕັດສິນໃຈໃນບັນຫາທີ່ດິນແມ່ນເພື່ອຮັບປະກັນໃຫ້ການຈັດສັນ ແລະ ການນຳ ໃຊ້ທີ່ດິນແກ່ພົນລະເມືອງໄດ້ຢ່າງຖືກຕ້ອງ ແລະ ອອກຈາກບັນ ຫາການສໍ້ລາດບັງຫລວງ ຫຼື ບັນຫາຜົນປະໂຫຍດຂອງພາກເອ ກະຊົນ. ການປະຕິຮູບທີ່ດິນ, ຂະບວນການຈັດສັນທີ່ດິນຄືນໃໝ່ ແລະ ການຕົກລົງຫັນທີ່ດິນໃນເຂດຊົນນະບົດໃຫ້ເປັນເຂດ ການກະຊິກຳແມ່ນຕ້ອງຜ່ານຂະບວນການການມີສ່ວນຮ່ວມຈິ່ງຈະດີ.

ການຂາດການມີສ່ວນຮ່ວມຈາກຊຸມຊົນທີ່ກ່ຽວຂ້ອງໃນຂະບວນການຕັດສິນໃຈແມ່ນມັນອາດນຳໄປສູ່ຄວາມລົ້ມເຫຼວໃນການສ້າງນະໂຍບາຍ ແລະ ສ້າງກອບໂຄງການກ່ຽວກັບທີ່ດິນໄດ້ຢ່າງຖືກຕ້ອງ, ພ້ອມນັ້ນມັນຍັງອາດພາໃຫ້ເກີດຄວາມຕຶງຄຽດ ແລະ ຄວາມຮຸນແຮງໃນສັງຄົມອີກດ້ວຍ. ຕົວຢ່າງ: ການບັງຄັບໃຫ້ຄົນອອກຈາກທີ່ດິນທີ່ເຂົາເຈົ້າອາໃສຢູ່ໂດຍຍັງບໍ່ໄດ້ຮັບອານຸຍາດຢ່າງເປັນທາງການເທື່ອແມ່ນອາດກໍ່ໃຫ້ເກີດບັນຫາການຍົກຍ້າຍກັບຄືນທີ່ດິນໃນທີ່ເດີມແບບຊ້ຳໆເພາະວ່າເຂົາເຈົ້າເລົ່ານັ້ນແມ່ນບໍ່ມີທາງເລືອກໃນທີ່ຢູ່ອາໃສ, ເພາະສະນັ້ນການບັງຄັບໃຫ້ຍົກຍ້າຍນັ້ນຈຶ່ງລົ້ມເຫຼວຕາມເປົ້າໝາຍທີ່ກຳນົດ. ອີກດ້ານໜຶ່ງ, ຕາມຫຼັກຖານຕົວຈິງທີ່ມີໄດ້ຊີ້ໃຫ້ເຫັນວ່າການປັບປຸງສະພາບຂອງສະລຳບ່ອນຢູ່ທີ່ແອອັດໂດຍໃຫ້ມີການມີສ່ວນຮ່ວມຂອງຄົນໃນສະລຳນັ້ນແມ່ນສາມາດແກ້ໄຂບັນຫາການພັດທະນາຕົວເມືອງໄດ້ຢ່າງມີປະສິດທິພາບ ແລະ ຍືນຍົງໄດ້.

> "ໃນຄະນະທີ່ທາງຄະນະກຳມະທິການກຳລັງສຶກສາຍຸດທະວິທີເພື່ອໃຫ້ສິດແກ່ແມ່ຍິງໃນການເປັນຜູ້ຄອບຄອງທີ່ດິນພາຍໃຕ້ກົດໝາຍທີ່ດິນທີ່ມີ, ຄະນະກຳມະທິການກໍ່ໄດ້ສະແດງຄວາມເປັນຫວ່ງໃນການ ຈັດຕັ້ງປະຕິບັດກົດໝາຍທີ່ກ່ຽວຂ້ອງວ່າຈະເປັນໄປຕາມທີ່ກຳນົດບໍ.
>
> ໃນຄວາມເປັນຫວ່ງທີ່ວ່ານີ້ຍັງລວມມີບັນຫາທີ່ແມ່ຍິງຍັງຂາດຄວາມຕື່ນຕົວກ່ຽວກັບສິດຂອງເຂົາເຈົ້າທີ່ມີ ແລະ ຍັງຂາດຄວາມ ເຂົ້າໃນກ່ຽວກັບກົດໝາຍ ແລະ ຂະບວນການລົງທະບຽນທີ່ດິນ. ໃນນັ້ນທາງຄະນະກຳມະທິການໄດ້ເນັ້ນເປັນພິເສດກ່ຽວກັບສະພາບການຂອງແມ່ຍິງທີ່ເປັນຫົວໜ້າຄອບຄົວທີ່ໄດ້ສູນເສຍແບບວິຖີຊີວິດອັນເນື່ອງມາຈາກການຖືກຍຶດທີ່ດິນຈາກພາກເອກະຊົນ ແລະ ບໍ່ມີໂອກາດໃນການເຂົ້າມີສ່ວນຮ່ວມໃນ ຂະບວນການຕັດສິນໃຈກ່ຽວກັບທີ່ດິນທີ່ກ່ຽວຂ້ອງດັ່ງກ່າວ."
>
> *ທີ່ມາຂໍ້ມູນ:* ບົດສະຫຼຸບຄຳເຫັນຂອງຄະນະກຳມະທິການເພື່ອການລົບລ້າງການຈຳແນກແມ່ຍິງໃນກຳປູເຈຍ (CEDAW/C/KHM/CO/3), ວັກທີ 31.

ເພື່ອດຳເນີນການຊົດເຊີຍໃຫ້ແກ່ຜູ້ທີ່ອົບພະຍົບທີ່ກັບຄືນມາ ແລະ ຜູ້ທີ່ຂາດທີ່ຢູ່ອາໃສພາຍໃນນັ້ນ ທາງທີ່ດີກໍ່ແມ່ນຄວນມີການໃຫ້ສ່ວນຮ່ວມໃນກະຂະບວນການແກ້ໄຂດັ່ງກ່າວຈາກຜູ້ທີ່ມີບັນຫາທີ່ຢູ່ອາໃສຂ້າງເທິງ ແລະ ຜູ້ທີ່ຄອບຄອງທີ່ດິນດັ່ງກ່າວຮ່ວມກັນ, ຖ້າບໍ່ດັ່ງນັ້ນການແກ້ໄຂກໍ່ຈະເປັນບັນຫາ ແລະ ອາດນຳໄປສູ່ການຄວາມຂັດແຍ່ງແບບໃໝ່ກໍ່ເປັນໄດ້.

## ຫຼັກການສາກົນທີ່ກ່ຽວຂ້ອງກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດ ແລະ ໂອກາດໃນການມີສ່ວນຮ່ວມໃນວຽກງານສາທາລະນະ, ບໍ່ວ່າຈະເຂົ້າຮ່ວມໂດຍກົງ ຫຼື ໃຫ້ຜູ້ໃດໜຶ່ງເປັນຕົວແທນເຊັ່ນ: ເຂົ້າຮ່ວມໃນວຽກງານການຕັດສິນໃຈ ແລະ ການອອກນະໂຍບາຍຕ່າງໆຂອງລັດ.

(ຖະແຫຼງການສິດທິມະນຸດສາກົນມາດຕາ 21, ສົນທິສັນຍາສາກົນວ່າດ້ວຍສິດທາງການເມືອງ ແລະ ພົນລະເຮືອນ ມາດຕາ 25 (a), ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດ ມາດຕາ 5 (c), ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈຳແນກແມ່ຍິງ ມາດຕາ 7, ສົນທິສັນຍາສາກົນວ່າດ້ວຍສິດຂອງຄົນພິການ ມາດຕາ 29)

ລັດພາຄີທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີທາງໃນການລົບລ້າງການຈຳແນກແມ່ຍິງໃນເຂດຊົນນະບົດເພື່ອເປັນການຮັບປະກັນຕາມພື້ນຖານຂອງຄວາມເທົ່າທຽມວ່າແມ່ຍິງຈະໄດ້ມີສ່ວນຮ່ວມ ແລະ ໄດ້ຮັບປະໂຫຍດຈາກການພັດທະນາເຂດຊົນນະບົດ ແລະ ໂດຍສະເພາະແມ່ນຈະໄດ້ໂອກາດໃນການເຂົ້າຮ່ວມໃນກິດຈະກຳຂອງຊຸມຊົນ ແລະ ໃນຂະບວນການວາງແຜນໃນທຸກຂັ້ນທີ່ກ່ຽວກັບຊຸມຊົນ.

(ສົນທິສັນຍາວ່າດ້ວຍການລົບລ້າງການ**ຈຳ**ແນກແມ່ຍິງໃນທຸກຮູບແບບ ມາດຕາ 14 (2) (a) ແລະ (f))

ລັດຖະບານຕ້ອງເຮັດທຸກທາງເພື່ອໃຫ້ຄົນພື້ນເມືອງສາມາດເຂົ້າຮ່ວມຢ່າງອິດສະຫຼະໃນຂະບວນການຕັດສິນໃຈໃນທຸກລະດັບຢ່າງນ້ອຍກໍໃຫ້ໄດ້ຄືກັນກັບການປະຕິບັດຕໍ່ພົນລະເຮືອນທົ່ວໄປອື່ນໆກ່ຽວກັບການເລືອກສະຖາບັນ ແລະ ອົງການບໍລິຫານຕ່າງໆ ແລະ ອົງກອນອື່ນໆ ທີ່ເຂົ້າມາຮັບຜິດຊອບໃນການສ້າງນະໂຍບາຍ ແລະ ໂຄງການຕ່າງໆທີ່ມັນກ່ຽວຂ້ອງກັບເຂົາເຈົ້າ.

(ສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນພື້ນເມືອງ ແລະ ຄົນຊົນເຜົ່າໃນປະເທດເອກະລາດຕ່າງໆ *(ເລກທີ. 169), 1989, aມາດຕາ 6 (b))*

ຄົນພື້ນເມືອງແມ່ນມີສິດໃນການມີສ່ວນຮ່ວມໃນການຕັດສິນໃຈໃນເລື່ອງທີ່ກະທົບເຖິງສິດຂອງເຂົາເຈົ້າໂດຍຜ່ານຕົວແທນທີ່ເຂົາເລືອກຂຶ້ນມາຕາມຂະບວນການຂອງເຂົາເຈົ້າເອງ ກໍ່ຄືເລື່ອງການຮັກສາ ແລະ ການພັດທະນາສະຖາບັນທີ່ເຮັດວຽກດ້ານຄົນພື້ນເມືອງ. ຄົນພື້ນເມືອງຍັງມີສິໃນການຕັດສິນໃຈເລືອກບູລິມະສິດດ້ວຍຕົວເອງໃນການພັດທະນາທີ່ມັນມີຜົນກະທົບຕໍ່ເຂົາເຈົ້າ, ຕໍ່ການເຊື່ອຖື, ຕໍ່ສະຖາບັນ ແລະ ຕໍ່ການຢູ່ດີກິນດີພ້ອມທັງຕໍ່ທີ່ດິນທີ່ພວກເຂົາໄດ້ຄອບຄອງຢູ່. ລັດທີ່ກ່ຽວຂ້ອງຕ້ອງໃຫ້ການປຶກສາຫາລື ແລະ ຮ່ວມມືດ້ວຍຄວາມຈິງໃຈກັບຄົນພື້ນເມືອງທີ່ກ່ຽວຂ້ອງເພື່ອໄດ້ມາເຊິ່ງການຕົກລົງເຫັນດີທີ່ອິດສະຫຼະ, ແລະ ທີ່ມີການແຈ້ງລ່ວງໜ້າກ່ອນຈະມີການຮັບຮອງບັນດານະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງທີ່ມັນພົວພັນເຖິງຄົນພື້ນເມືອງເຊັ່ນ: ບັນຫາການຍົກຍ້າຍ ແລະ ຕັ້ງທີ່ຢູ່ອາໃສບ່ອນໃໝ່, ການຊົດເຊີຍທີ່ເປັນທຳ ແລະ ທ່ຽງທຳ, ການພັດທະນາ, ການຂຸດຄົ້ນ ຫຼື ນຳໃຊ້ຊັບພະຍາກອນນ້ຳ, ບໍ່ແຮ່ ແລະ ອື່ນໆທີ່ມັນຢູ່ໃນຂົງເຂດທີ່ຄົນພື້ນເມືອງຢູ່ ກໍ່ຄື ບັນຫາການເກັບ ຫຼື ຖິ້ມຂີ້ເຫຍື້ອທີ່ປະປົນສານພິດ ຫຼື ບັນຫາການເຮັດກິດຈະກຳຕ່າງໆທາງການທະຫານໃນດິນແດນຂອງຄົນພື້ນເມືອງ.

(ຖະແຖງການ ສປຊກ່ຽວກັບສິດຂອງຄົນພື້ນເມືອງມາດຕາ 5, 10, 18, 19, 27, 28,l 29, 30, 32 ແລະ 41; ສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນຊົນເຜົ່າ ແລະ ຄົນພື້ນເມືອງທີ່ອາໃສໃນປະເທດເອກະລາດຕ່າງໆ (ເລກທີ. 169), 1989, ມາດຕາ. 5 (c), 7 (1) ແລະ (3), 15 ແລະ 16.2)

ເພື່ອປະກອບສ່ວນໃນການປົກປ້ອງສິດທິຂອງທຸກຄົນສຳລັບຄົນລຸ້ນປະຈຸບັນ ແລະ ອານາຄົດ ເພື່ອວ່າພວກເຂົາຈະໄດ້ດຳລົງຊີວິດໃນສະພາບແວດລ້ອມທີ່ເໝາະສົມໃນດ້ານສຸຂະພາບ ແລະ ການຢູ່ດີກິນດີ, ລັດພາຄີທີ່ກ່ຽວຂ້ອງຈະຕ້ອງຮັບປະກັນສິດໃນການໄດ້ຮັບຂໍ້ມູນຂ່າວສານ, ສິດໃນການມີສ່ວນຮ່ວມໃນຂະບວນການຕັດສິນໃຈ, ແລະ ສິດໃນການເຂົ້າເຖິງຄວາມຍຸຕິທຳໃນສະພາບທີ່ເອື້ອອຳນວຍ.

(ສົນທິສັນຍາວ່າດ້ວຍການເຂົ້າເຖິງຂໍ້ມູນຂ່າວສານ, ເຂົ້າເຖິງຂະບວນການຕັດສິນໃຈທີ່ເປີດກວ້າງ ແລະ ເຂົ້າເຖິງຂະບວນການຍຸຕິທຳທີ່ເອື້ອອຳນວຍ ມາດຕາ 1).

## ຕົວຢ່າງການນຳໃຊ້

ທຸກຄົນແມ່ນມີສິດໃນການເຂົ້າຮ່ວມໃນຂະບວນການຕັດສິນໃຈທີ່ລວມມີເລື່ອງຂອງການປະເມີນ, ການກຳນົດ, ການຈັດຕັ້ງປະຕິບັດ, ການກວດສອບ ແລະ ກວດກາກົດໝາຍ, ນະໂຍບາຍ ແລະ ໂຄງການຕ່າງໆທີ່ກະທົບຕໍ່ສິດທິຂອງທຸກຄົນເຊິ່ງວ່າບັນຫາການຕັດສິນໃຈທີ່ກ່ຽວຂ້ອງກັບການເຂົ້າເຖິງ, ການນຳໃຊ້, ແລະ ການຄຸ້ມຄອງທີ່ດິນ ແລະ ຊັບສິນຕ່າງໆໃນທີ່ດິນ. ການມີສ່ວນຮ່ວມທີ່ອິດສະຫຼະ, ຫ້າວຫັນ, ແລະ ມີຄວາມໝາຍສຳຄັນຂອງກຸ່ມຄົນທີ່ດ້ອຍໂອກາດໂດຍຜ່ານວົງຈອນທາງໂຄງການ, ນະໂຍບາຍ ແລະ ກົດໝາຍທີ່ກ່ຽວຂ້ອງກັບທີ່ດິນແມ່ນມີຄວາມສຳຄັນເປັນພິເສດຕັ້ງແຕ່ທີ່ເຄີຍປະຕິບັດກັນມາທີ່ຄົນເຫຼົ່ານັ້ນສ່ວນຫຼາຍແລ້ວແມ່ນຈະຖືກກີດກັນໃຫ້ມີສ່ວນຮ່ວມໃນການຕັດສິນໃຈເຖິງວ່າເຂົາເຈົ້າເຫຼົ່ານັ້ນຈະມີບົດບາດໃນການຊອກຫາທາງອອກທີ່ດີໄດ້ກໍ່ຕາມ. ແນວທາງແກ້ໄຂພິເສດແມ່ນຄວນຈະມີການຍິນຍອມຈາກການສົນທະນາແບບມີສ່ວນຮ່ວມ, ອິດສະຫຼະ, ຈະແຈ້ງ ແລະ ຕົກລົງກັນກ່ອນກ່ຽວກັບບັນຫາທີ່ມັນອາດກະທົບຄົນພື້ນເມືອງ ແລະ ຊົນເຜົ່າເຊິ່ງລວມມີບັນດາໂຄງການທີ່ກ່ຽວຂ້ອງກັບການພັດທະນາ, ການຂຸດຄົ້ນເອົາຊັບພະຍາກອນຫຼືການຍົກຍ້າຍປະຊາຊົນອອກຈາກທີ່ດິນ.

ສິ່ງທີ່ມີຄວາມກ່ຽວຂ້ອງ ແລະ ສຳພັນກັນກັບສິດເສລີພາບໃນການສະແດງແນວຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມແມ່ນເປັນສິດທີ່ກ່ຽວຂ້ອງກັບການມີສ່ວນຮ່ວມໃນກິດຈະກຳສາທາລະນະເຊັ່ນ: ສິດໃນການເລືອກຕັ້ງ. ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຄວາມໝາຍກໍ່ຄືສິດໃນການຮຽກຮ້ອງໃຫ້ເຈົ້າໜ້າທີ່ ແລະ ອົງການຂອງລັດຕ້ອງຮັບຜິດຊອບຕໍ່ໜ້າທີ່ຂອງຕົນຕາມກົດໝາຍແມ່ນຖືວ່າເປັນຫຼັກການທີ່ກ່ຽວຂ້ອງທີ່ມີຄວາມເທົ່າທຽມ.

ອົງກອນສິດທິມະນຸດ ສປຊ ເຊັ່ນ: ຄະນະກຳມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳ, ຄະນະກຳມະທິການສິດທິມະນຸດ ແລະ ຄະນະກຳມະທິການວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກເຊື້ອຊາດ ໄດ້ແນະນຳວ່າລັດທີ່ກ່ຽວຂ້ອງຕ້ອງຮັບປະກັນການປຶກສາຫາລືກັບຊຸມຊົນທີ່ມີຜົນກະທົບຕາມບໍລິບົດໃນລຸ່ມນີ້:

- ໃຫ້ການປຶກສາກ່ອນຈະມີການລົງມືສ້າງໂຄງການ, ກ່ອນຈະຂຸດຄົ້ນຊັບພະຍາກອນທຳມະຊາດ ແລະ ກ່ອນການເວນຄືນ ແລະ ໃຫ້ສຳປະ ທານທີ່ດິນ[68]
- ໃຫ້ການປຶກສາໃນການບໍລິຫານຈັດການທີ່ດິນ ແລະ ຊັບພະຍາກອນທຳມະຊາດ[69]
- ໃຫ້ການປຶກສາໃນເວລາສ້າງກົນໄກ ແລະ ນິຕິກຳທີ່ກ່ຽວກັບການບໍລິຫານຈັດການທີ່ດິນ[70]
- ໃຫ້ການປຶກສາໃນເວລາດຳເນີນການແກ້ໄຂ ແລະ ປ້ອງກັນຄວາມຂັດແຍ່ງໃນທີ່ດິນ.[71]

[68] Concluding observations of the Committee on Economic, Social and Cultural Rights on Cambodia (E/C.12/KHM/CO/1), Chad (E/C.12/TCD/CO/3) and Madagascar (E/C.12/MDG/CO/2) and of the Committee on the Elimination of Racial Discrimination on Argentina (CERD/C/ARG/CO/19-20), Chile (CERD/C/CHL/CO/15-18) and the Congo (CERD/C/COG/CO/9) and of the Human Rights Committee on the United Republic of Tanzania (CCPR/C/TZA/CO/4).

[69] Concluding observations of the Committee on Economic, Social and Cultural Rights on Australia (E/C.12/AUS/CO/4) and of the Committee on the Elimination of Racial Discrimination on the Congo (CERD/C/COG/CO/9).

[70] Concluding observations of the Committee on the Elimination of Racial Discrimination on Finland (CERD/C/FIN/CO/19) and Suriname (CERD/C/SUR/CO/12).

[71] Concluding observations of the Committee on Economic, Social and Cultural Rights on the Democratic Republic of the Congo (E/C.12/COD/CO/4) and Finland (E/C.12/FIN/CO/5).

ໃນບົດຄຳເຫັນເລກທີ 25 (1996) ກ່ຽວກັບສິດໃນການມີສ່ວນຮ່ວມໃນກິດຈະກຳສາທາລະນະ, ໃນການລົງຄະແນນສຽງເລືອກຕັ້ງ ແລະ ສິດໃນການເຂົ້າເຖິງການບໍລິການທາງສັງຄົມທີ່ເທົ່າທຽມນັ້ນ ທາງຄະນະກຳມະທິການສິດທິມະນຸດໄດ້ອະທິບາຍວ່າການດຳເນີນການໃຫ້ສາທາລະນະມີສ່ວນຮ່ວມແມ່ນເປັນແນວຄິດທີ່ກວ້າງເພາະວ່າມັນກ່ຽວຂ້ອງກັບການປະຕິບັດທາງການເມືອງ ໂດຍສະເພາະແມ່ນການນຳໃຊ້ອຳນາດທາງຕຸລາການ, ບໍລິຫານ ແລະ ທາງນິຕິບັນຍັດ. ສິດໃນການມີສ່ວນຮ່ວມແມ່ນມັນກ່ຽວຂ້ອງໃນຫຼາຍດ້ານທາງການບໍລິຫານສາທາລະນະ, ການສ້າງ ແລະ ການຈັດຕັ້ງປະຕິບັດນະໂຍບາຍໃນລະດັບສາກົນ, ພາຍໃນ, ພາກພື້ນ ແລະ ທ້ອງຖິ່ນ (ວັກທີ 5). ຄະນະກຳມະທິການໃຫ້ຂໍ້ສັງເກດວ່າພົນລະເມືອງທຸກຄົນແມ່ນສາມາດເຂົ້າມີສ່ວນຮ່ວມໃນວຽກງານສາທາລະນະດ້ວຍການສະແດງຄວາມຮູ້ຄວາມສາມາດໃນເວລາທີ່ດຳເນີນການສົນທະນາປຶກສາ ແລະ ອອກຄຳຄິດເຫັນຮ່ວມກັບຜູ້ທີ່ເປັນຕົວແທນ ຫຼື ເຂົ້າຮ່ວມສະແດງຄວາມສາມາດດ້ວຍຕົວເອງ. ການມີສ່ວນຮ່ວມທີ່ວ່ານີ້ແມ່ນເປັນສ່ວນໜຶ່ງຂອງການຮັບປະກັນສິດເສລີພາບໃນການສະແດງຄວາມຄິດເຫັນ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມ (ວັກທີ 6-8). ໃນການເນັ້ນຄວາມ**ສຳ**ຄັນຂອງການມີສ່ວນຮ່ວມທີ່ມີປະສິດທິພາບ, ມີຄວາມໝາຍ ແລະ ໃຫ້ຄວາມຮູ້ນັ້ນ ທາງຄະນະກຳມະທິການໄດ້ທົບທວນວ່າ "ສິດເສລີພາບໃນການສະແດງຄວາມຄິດເຫັນ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມແມ່ນຖືວ່າເປັນເງື່ອນໄຂທີ່ສຳຄັນສະລັບການໃຊ້ສິດຢ່າງມີປະສິດທິພາບໃນການລົງຄະແນນສຽງເລືອກຕັ້ງ ແລະ ຈະຕ້ອງໄດ້ຮັບການປົກປ້ອງເອົາໄວ້. ມາດຕະການທີ່ເໝາະສົມກໍຕ້ອງເອົາມານຳໃຊ້ເພື່ອກຳຈັດບັນຫາຕ່າງໆທີ່ຫຍຸ້ງຍາກເຊັ່ນວ່າບັນຫາການຖືກໜັງສື, ຄວາມຫຍຸ້ງຢາກດ້ານພາສາຕ່າງໆ, ຄວາມທຸກຍາກ, ຫຼື ການຂັດຂວາງເສລີພາບໃນການເຄື່ອນໄຫວທີ່ເປັນການຂັດຂວາງບໍ່ໃຫ້ຄົນມີສິດລົງຄະແນນສຽງເລືອກຕັ້ງ. ຂໍ້ມູນຂ່າວສານ ແລະ ວັດຖຸອຸປະກອນຕ່າງໆກ່ຽວກັບການເລືອກຕັ້ງແມ່ນຄວນມີໄວ້ບໍລິການທີ່ເປັນພາສາຂອງຂອງຊົນເຜົ່ານຳ. ມາດຕະການພິເສດເຊັ່ນຮູບ ແລະ ສັນຍາລັກຕ່າງໆຄວນໄດ້ຮັບການອານຸມັດເພື່ອເປັນການຢັ້ງຢືນວ່າຄົນທີ່ກຶກໜັງສືກໍແມ່ນສາມາດໄດ້ຮັບຂໍ້ມູນຂ່າວສານທີ່ເໝາະສົມເພື່ອລົງຄະແນນສຽງເລືອກຕັ້ງຕາມຄວາມເປັນຈິງ" (ວັກທີ 12).

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຍວກັບສິດໃນຂໍ້ມູນຂ່າວສານ ແລະ ສິດເສລີພາບໃນການສະແດງຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມ.

ໃນບົດຄຳເຫັນທົ່ວໄປເລກທີ 23 (1997) ກ່ຽວກັບຊີວິດໃນດ້ານການເມືອງ ແລະ ສັງຄົມ, ຄະນະກຳມະທິການກ່ຽວກັບການລົບລ້າງການຈະແນກຕໍ່ແມ່ຍິງໄດ້ທົບທວນວ່າແນວຄວາມຄິດໃນການມີສ່ວນຮ່ວມທີ່ເທົ່າທຽມໃນຊີວິດທາງສັງຄົມລະຫວ່າງຍິງ-ຊາຍແມ່ນຍັງກວມໄປເຖິງ "ຫຼາຍໆດ້ານຂອງສັງຄົມເຊິ່ງລວມມີກະດານຂ່າວສາທາລະນະ ແລະ ສະພາທ້ອງຖິ່ນ ກັບ ກິດຈະກຳຂອງອົງການຈັດຕັ້ງເຊັ່ນ: ພັກການເມືອງ, ກຳມະບານ, ສະມາຄົມວິຊາຊີບ ແລະ ດ້ານອຸສະຫະກຳ, ສະຫະພັນແມ່ຍິງ, ອົງການປະຈຳທ້ອງຖິ່ນ, ແລະ ອົງການອື່ນໆທີ່ກ່ຽວຂ້ອງກັບຊີວິດໃນດ້ານການເມືອງ ແລະ ສັງຄົມ" (ວັກທີ 5). ໃນບົດສະຫຼຸບ ລາຍງານກ່ຽວກັບລັດຕ່າງໆ, ຄະນະກຳມະທິການໄດ້ຮຽກຮ້ອງໃຫ້ລັດເຫຼົ່ານັ້ນຕ້ອງເຮັດທຸກວິທີທາງທີ່ຈຳເປັນເພື່ອເພີ່ມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການມີສ່ວນຮ່ວມຂອງແມ່ຍິງໃນການກຳນົດ ແລະ ຈັດຕັ້ງປະຕິບັດແຜນພັດທະນາທ້ອງຖິ່ນເຊິ່ງລວມມີ ແຜນທີ່ກ່ຽວກັບການບໍລິຫານຈັດການຊັບພະນາກອນໃນທ້ອງຖິ່ນ.[72]

ໃນບົດຄຳເຫັນແນະນຳທົ່ວໄປເລກທີ 22 (1996) ກ່ຽວກັບຜູ້ອົບພະຍົບ ແລະ ຜູ້ທີ່ຂາດທີ່ຢູ່ອາໄສ, ຄະນະກຳມະທິການກ່ຽວກັບການລົບລ້າງບັນຫາການຈຳແນະເຊື້ອຊາດໄດ້ໃຫ້ຄຳເຫັນກ່ຽວກັບຜູ້ທີ່ຂາດທີ່ອາໄສ ແລະ ຜູ້ອົບພະຍົບທີ່ມີພື້ນຖານຈາກຊົນເຜົ່າວ່າ "ທຸກຄົນທີ່ກ່າວມານັ້ນພາຍຫຼັງທີ່ເດີນທາງກັບຄືນມາຖິ່ນຖານເກົ່າແລ້ວແມ່ນຈະມີສິດໃນການມີສ່ວນຮ່ວມຢ່າງເຕັມທີ່ ແລະ ເທົ່າທຽມໃນກິດຈະກຳສາທາລະນະໃນທຸກຂັ້ນ ແລະ ມີສິດເທົ່າທຽມໃນການເຂົ້າຫາການບໍລິການທາງສັງຄົມ ແລະ ໄດ້ຮັບການ ຊ່ວຍເຫຼືອໃນການປົວແປງຊີວິດການເປັນຢູ່ຄືນໃໝ່" (ວັກທີ 2 (d)). ຫຼັກການກ່ຽວກັບການຊົດເຊີຍຊັບສິນ ແລະ ບ້ານຢູ່ໃຫ້ແກ່ຜູ້ອົບພະຍົບ ແລະ ຜູ້ທີ່ຂາດທີ່ຢູ່ອາໄສ ("ຫຼັກການ Pinheiro ") ຮຽກຮ້ອງໃຫ້ລັດທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນ ແລະ ພາຍໃນຕ້ອງຮັບປະກັນການຊົດເຊີຍແບບອາສາສະມັກ ພ້ອມທັງຮຽກຮ້ອງໃຫ້ມີໂຄງການຊົດເຊີຍບ້ານຢູ່, ທີ່ດິນ ແລະ ຊັບສິນຕ່າງໆເພື່ອຄົນທີ່ຂາດທີ່ຢູ່ອາໄສພາຍໃນຈະໄດ້ຮັບການໃສ່ໃຈດ້ວຍການມີສ່ວນຮ່ວມ ແລະ ການໃຫ້ການປຶກສາຫາລືທີ່ພໍພຽງແກ່ຄົນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ, ໃນນັ້ນລວມມີແມ່ຍິງ, ຄົນພື້ນເມືອງ, ຄົນຊົນເຜົ່າທີ່ຖືກຈຳແນກທາງເຊື້ອຊາດ, ຜູ້ເຖົ້າ ແລະ ເດັກນ້ອຍ (ຫຼັກການທີ 14)

[72] Concluding observations on Chad (CEDAW/C/TCD/CO/1-4), Fiji (CEDAW/C/FJI/CO/4), Kenya (CEDAW/C/KEN/CO/7), the Lao People's Democratic Republic (CEDAW/C/LAO/CO/7), Lesotho (CEDAW/C/LSO/CO/1-4), South Africa (CEDAW/C/ZAF/CO/4) and Zambia (CEDAW/C/ZMB/CO/5-6).

ກ່ຽວກັບສິດຂອງຄົນພື້ນເມືອງທີ່ຈະໄດ້ຮັບການປຶກສາຫາລືກ່ຽວກັບເລື່ອງທີ່ມັນຈະມີຜົນກະທົບຕໍ່ເຂົາເຈົ້າ, ນັກລາຍງານພິເສດກ່ຽວກັບສະຖານະການຂອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານຂອງຄົນພື້ນເມືອງໄດ້ກ່າວວ່າການໃຫ້ການປຶກສາຫາລືຄວນຈະດໍາເນີນໄປໃນຮູບແບບການເຈລະຈາເພື່ອໃຫ້ໄດ້ຮັບຜົນທີ່ເປັນທາງບວກ ແລະ ບໍ່ຄວນພຽງແຕ່ແຈ້ງຄົນພື້ນເມືອງໃຫ້ຮັບຊາບຂໍ້ມູນການຕັດສິນໃຈທີ່ຜ່ານໄປແລ້ວ ຫຼື ຂະບວນການທີ່ພວມດໍາເນີນໄປຢູ່ແຕ່ບໍ່ອານຸຍາດໃຫ້ເຂົາເຈົ້າມີສ່ວນຮ່ວມທີ່ມັນອາດເປັນສິ່ງທີ່ກະຕຸ້ນໃນທີ່ປະຊຸມກ່ຽວກັບການຕັດສິນໃຈທີ່ຖືກຕ້ອງກໍໄດ້.[73] ໃນກໍລະນີດັ່ງກ່າວ, ນັກລາຍງານພິເສດໄດ້ແນະນໍາວ່າບໍ່ຄວນອອກໜັງສືການສໍາປະທານທີ່ດິນທີ່ມີຄົນພື້ນເມືອງ ແລະ ຊົນເຜົ່າໄດ້ອາໄສ ແລະ ນໍາໃຊ້ຢູ່ ຈົນກວ່າວ່າຈະໄດ້ຮັບການຍິນຍອມຂອງຄົນເລົ່ານັ້ນແບບເຕັມໃຈ, ໄດ້ຜ່ານແຈ້ງການ ແລະ ຜ່ານຂະບວນການໃດໜຶ່ງມາກ່ອນແລ້ວ.[74]
ນັກລາຍງານພິເສດໄດ້ຊີ້ແຈງວ່າພັນທະຂອງລັດໃນການປຶກສາຫາລືແມ່ນບໍ່ໄດ້ຮຽກຮ້ອງໃຫ້ລັດທີ່ກ່ຽວຂ້ອງດໍາເນີນການປຶກສາຫາລືກັບຄົນພື້ນເມືອງ ແລະ ຊົນເຜົ່າໃນເວລາທີ່ໄດ້ຕັດສິນໃຈໄປແລ້ວ ແລະ ມັນມີຜົນກະທົບກັບເຂົາເຈົ້າແລ້ວ. ແນວໃດກໍດີ, ການປຶກສານັ້ນ "ແມ່ນຈະເລີ່ມໃນເວລາທີ່ການຕັດສິນໃຈຂອງລັດອາດຈະກະທົບຄົນພື້ນເມືອງໃນລັກສະນະທີ່ບໍ່ເຄີຍມີໃນສັງຄົມມາກ່ອນ". ຕົວຢ່າງ: ນິຕິ**ກໍາ**ກ່ຽວກັບທີ່ດິນ ຫຼື ກ່ຽວກັບການນໍາໃຊ້ຊັບພະຍາກອນຕ່າງໆໃນວົງກວ້າງ ມັນອາດກະທົບສິດ ແລະ ຜົນປະໂຫຍດຂອງຄົນພື້ນເມືອງໃນດ້ານໃດໜຶ່ງສະເພາະທີ່ເນື່ອງມາຈາກຄວາມເປັນເອກະລັກໃນ ດ້ານ ວັດທະນະທໍາ, ຫຼື ການຄອບຄອງທີ່ດິນດັ້ງເດີມຂອງເຂົາເຈົ້າ, ສະນັ້ນລັດທີ່ກ່ຽວຂ້ອງຕ້ອງຍົກສູງຄວາມຮັບຜິດຊອບໃນການ ໃຫ້ການປຶກສາຫາລືໃຫ້ຫຼາຍຂື້ນ.[75]
ໃນບົດຄໍາເຫັນທົ່ວໄປເລກທີ 23 (1997) ກ່ຽວກັບຄົນພື້ນເມືອງ, ທາງຄະນະກໍາມະທິການກ່ຽວກັບການລົບລ້າງການຈໍາແນກເຊື້ອຊາດໄດ້ຮຽກຮ້ອງບັນດາລັດຕ່າງໆຕ້ອງໃຫ້ການ "ຮັບປະກັນວ່າສະມາຊິດຂອງຄົນພື້ນເມືອງຈະມີສິດທີທີ່ເທົ່າທຽມໃນການມີສ່ວນຮ່ວມໃນກິດຈໍາທາງສັງຄົມ ແລະ ຮຽກຮ້ອງບໍ່ໃຫ້ມີການຕັດສິນໃຈອັນໃດອັນໜຶ່ງທີ່ຍັງບໍ່ໄດ້ຮັບການເຫັນດີຈາກເຂົາເຈົ້າ" (ວັກທີ 4 (d)). ຄະນະກໍາມະທິການຍັງໄດ້ຮຽກຮ້ອງຕໍ່ໄປອີກວ່າລັດທີ່ກ່ຽວຂ້ອງຕ້ອງດໍາເນີນການສິ່ງທີ່ດີນດັ້ງເດີໃຫ້ແກ່ຄົນພື້ນເມືອງໃນເຂດທີ່ຄົນເຫຼົ່ານັ້ນໄດ້ຖືກຍົກຍ້າຍອອກຈາກທີ່ດິນດັ່ງກ່າວໂດຍບໍ່ເຄີຍໄດ້ຕົກລົງເຫັນດີມາກ່ອນ. (ວັກທີ 5).
ຄ້າຍໆຄືກັນນີ້, ໃນບົດຄໍາເຫັນທົ່ວໄປເລກທີ 34 (2011) ກ່ຽວກັບການຈໍາແນກທາງເຊື້ອຊາດຕໍ່ຄົນພື້ນເມືອງໃນອັບຟຣິກາ, ຄະນະກໍາມະທິການກ່ຽວກັບການລົບລ້າງການຈໍາແນກເຊື້ອຊາດໄດ້ຮັບຮູ້ສິດຂອງຄົນພື້ນເມືອງໃນອັບຟຣິກາກ່ອນການປຶກສາຫາລືເພື່ອເປັນການເຄົາລົບການຕັດສິນໃຈທີ່ອາດກະທົບສິດທິຂອງເຂົາເຈົ້າ (ວັກທີ 4 (d))
ໃນບົດສະຫຼຸບສັງເກດການກ່ຽວກັບລັດຕ່າງໆ, ຄະນະກໍາມະທິການກ່ຽວກັບການລົບລ້າງການຈໍາແນກເຊື້ອຊາດໄດ້ແນະນໍາວ່າລັດຕ່າງໆນັ້ນຕ້ອງໃຫ້ການຮັບປະກັນສິດແກ່ຄົນພື້ນເມືອງ ແລະ ຊຸມຊົນຂອງເຂົາເຈົ້າເພື່ອໃຫ້ມີສ່ວນຮ່ວມໃນຂະບວນການຕດສິນໃຈ ແລະ ການວາງແຜນພັດທະນາເຊິ່ງລວມມີເລື່ອງຂອງ ການພັດທະນາ ແລະ ການບໍລິຫານຈັດການທີ່ດິນດັ້ງເດີມຂອງເຂົາເຈົ້າ.[76]
ນອກຈາກນີ້, ໃນບົດລາຍງານສັງເກດການກ່ຽວກັບປະ ເທດສະວີເດັນ, ຄະນະກໍາມະທິການໄດ້ໃຫ້ຄໍາເຫັນກ່ຽວກັບມາດຕະການໃນການສ້າງຄວາມເຂັ້ມແຂງແກ່ສະພາຂອງຊາວພື້ນເມືອງຊາມີໃນການຕັດສິນໃຈທີ່ມີຜົນຕໍ່ກິດຈະກໍາທາງຮີດຄອງ ແລະ ທີ່ດິນຂອງເຂົາເຈົ້າ.[77]

## ຄະດີຕົວຢ່າງ:

**ປະເທດໂຄລໍາເບຍ, ສານລັດຖະທໍາມະນູນ: ຄໍາຕັດສິນ** *SU-039/97* (3 **ກຸມພາ** 1997). ໃນຄະດີດັ່ງກ່າວແມ່ນກ່ຽວກັບສິດຂອງຄົນພື້ນເມືອງໃນການມີສ່ວນຮ່ວມໃນການປຶກສາຫາລືໃນຂະບວນການຕັດສິນໃຈທີ່ອາດຈະກະທົບກັບພວກເຂົາ, ໂດຍສະເພາະທີ່ກ່ຽວກັບການປ້ອງກັນ ແລະ ປົກປ້ອງທີ່ດິນຂອງຄົນພື້ນເມືອງ

[73] A/HRC/12/34, para. 46.
[74] A/HRC/18/35/Add.7, paras. 19 and 40.
[75] A/HRC/12/34, para. 43.
[76] Concluding observations on Peru (CERD/C/PER/CO/14-17) and Ukraine (CERD/C/UKR/CO/19-2).
[77] CCPR/C/SWE/CO/6.

ສານໄດ້ພິຈາລະນາວ່າຂັ້ນຕອນການຮັກສາຄວາມປອດໄພໃນການຂຸດຄົ້ນນ້ຳມັນທີ່ໄດ້ຮັບອານຸຍາດແມ່ນບໍ່ໄດ້ໃສ່ໃຈການປົກປ້ອງສິດທິພື້ນຖານຂອງຄົນພື້ນເມືອງອູວ້າ ໂດຍບໍ່ມີການປຶກສາຫາລືທີ່ເພື່ອຄວາມຍືນຍົງ ແລະ ເປັນທາງການ. ບັນຫາການຕັດສິນໃຈດັ່ງກ່າວແມ່ນອີງໃສ່ພື້ນ ຖານຫຼັກການມີສ່ວນຮ່ວມ ໂດຍຜ່ານການປຶກສາຫາລືອັນເປັນປັດໃຈສໍາຄັນທີ່ຈໍາເປັນສໍາລັບການດໍາລົງຊີວິດຂອງເຂົາເຈົ້າເພາະວ່າມັນເປັນວິທີດຽວໃນການປົກປ້ອງກຽດສັກສີ, ຄວາມເປັນຊົນເຜົ່າຄວາມເປັນຢູ່ທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາ ຂອງຊຸມຊົນພື້ນເມືອງດັ່ງກ່າວ.[78]

## ຫຼັກການ ແລະ ຄູ່ມືສາກົນທີ່ກ່ຽວຂ້ອງຕ່າງໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບການບໍລິການຈັດການການຄອບຄອງທີ່ດິນ, ການປາມົງ, ແລະ ປ່າໄມ້ໃນບໍລິບົດຂອງຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດ (Rome, FAO, 2012), ຫຼັກການແນະນໍາ 3B (6), ຄໍາແນະນໍາ 9.9.
- ຫຼັກການແນະນໍາກ່ຽວກັບການປະເມີນຜົນກະທົບດ້ານສິດທິມະນຸດຈາກການຄ້າ ແລະ ການລົງທຶນ (A/HRC/19/59/Add.5), ຫຼັກການທີ 4.)
- ການໃຫ້ສໍາປະທານ ແລະ ການເວນຄືນທີ່ດິນຂະໜາດໃຫຍ່: ເອກະສານຫຼັກການ ແລະ ມາດຕະການຂັ້ນຕໍ່າໃນການແກ້ໄຂສິ່ງທ້າທາຍສິດທິມະນຸດ (A/HRC/13/33/Add.2), ຫຼັກການ 1, 2, 10.
- ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບບັນຫາການຖືກບັງຄັບໃຫ້ຍົກຍ້າຍຖິ່ນຖານ ແລະ ການຂາດທີ່ຢູ່ອາໃສ (A/HRC/4/18, annex I), ວັກທີ. 38, 53, 55, 56 (e) ແລະ (i), 65.

[78] See *Land and Human Rights: Annotated Compilation of Case Law.*

**ບົດສະຫຼຸບສັງລວມ**

**ທ. ສິດໃນຊັບສິນ**

**ບົດສະເໜີ**

ສິດໃນຊັບສິນເປັນສິດສະເພາະທີ່ໄດ້ຮັບການບັນຈຸໃນເຄື່ອງມືສິດທິມະນຸດພາກພື້ນ, ສິດນີ້ແມ່ນມັນກ່ຽວຂ້ອງກັບທີ່ດິນ ແລະ ການນຳໃຊ້ທີ່ດິນ. ການເຂົ້າເຖິງ, ການນຳໃຊ້ ແລະ ການຄຸ້ມຄອງທີ່ດິນແມ່ນກ່ຽວກັບສິດທິສ່ວນບຸກຄົນ ແລະ ສ່ວນລວມໃນດ້ານການເປັນເຈົ້າຂອງຊັບສິນທີ່ໃຫ້ສິດທິຈາກການຖືກບັງຄັບໃຫ້ຍົກຍ້າຍ ຫຼື ໃຫ້ອອກຈາກທີ່ດິນ. ບຸກຄົນທີ່ອາໃສທີ່ດິນໃນການທຳມາຫາກິນແມ່ນອາດຈະໄດ້ຜົນປະໂຫຍດຈາກການຮັບປະກັນການໃຊ້ສິດຕໍ່ກັບຊັບສິນຕົນ.

> "ໃນຫຼາຍໆປະເທດກຳລັງພັດທະນາໂດຍສະເພາະແມ່ນໃນເຂດອານຸທະເລຊາຍຊາຫາລ່າໃນອັບຟຣິກກາ, ສິດທິຂອງຜູ້ນຳໃຊ້ທີ່ດິນນັ້ນແມ່ນບໍ່ໄດ້ຮັບການຮັບຮອງ. ດິນສ່ວນໃຫຍ່ແລ້ວແມ່ນຈະເປັນຂອງລັດ ແລະ ເອກະຊົນແມ່ນບໍ່ມີໃບຕາດິນທີ່ພວກເຂົາອາໃສຢູ່ນັ້ນ. ໃນຫຼາຍໆກໍລະນີທີ່ມີການລວມເອົາສິດທິໃນຊັບສິນ ແລະ ສິດທິການນຳໃຊ້ເຂົ້າກັນແບບສັບສົນໃນສະພາບການທີ່ຜູ້ຄອບຄອງທີ່ດິນບໍ່ສາມາດເປັນເຈົ້າຂອງໄດ້.
> ຕໍ່ກັບສະພາບການນີ້ຖືວ່າມັນເປັນທີ່ມາຂອງຄວາມບໍ່ແນນອນທາງກົດໝາຍ. ນອກນີ້ມັນຍັງກ່ຽວຂ້ອງກັບຜູ້ທີ່ນຳໃຊ້ທີ່ດິນທີ່ບໍ່ສາມາດເຂົ້າເຖິງການປຽວຢາທາງກົດໝາຍ, ແລະ ການໄດ້ຮັບຄ່າຊົດເຊີຍທີ່ເໝາະສົມ ຖ້າຫາກວ່າຕົກໃນກໍລະນີໃນການຖືກບັງຄັບໃຫ້ຍົກຍາຍອອກຈາກທີ່ດິນອັນເນື່ອງມາຈາກບັນຫາທີ່ລັດໄດ້ຕົກລົງອານຸຍາດໃຫ້ເອກະຊົນສຳປະທານທີ່ດິນຕອນດັ່ງກ່າວໃຫ້ຕ່າງປະເທດແລ້ວ"
>
> *ທີ່ມາຂໍ້ມູນ:* ບົດລາຍງານຂອງນັກລາຍງານພິເສດກ່ຽວກັບສິດໃນດ້ານອາຫານ (A/HRC/13/33/Add.2) para. 23.

ອີກດ້ານໜຶ່ງ,
ສິດໃນຊັບສິນຢ່າງດຽວແມ່ນບໍ່ອາດໄດ້ກົນໄກທີ່ດີທີ່ສຸດສຳລັບການພິຈາລະນາບັນຫາທີ່ດິນຕ່າງໆໄດ້, ບັນຫາສິດທິມະນຸດຫຼາຍຢ່າງທີ່ກ່ຽວກັບທີ່ດິນນັ້ນແມ່ນມາຈາກເລື່ອງຄວາມຂັດແຍ່ງໃນຊັບສິນ ແລະ ການນຳໃຊ້ທີ່ດິນ. ຕົວຢ່າງ: ຖ້າຈະເບິ່ງແຕ່ດ້ານໃບຕາດິນແມ່ນຈະຖືວ່າດ້ານອື່ນໆກໍ່ຈະບໍ່ໄດ້ຖືກໃສ່ໃຈເທົ່າທີ່ຄວນເຊັ່ນວ່າ ບັນຫາການນຳໃຊ້ທີ່ດິນທີ່ກຸ່ມຄົນດ້ອຍໂອກາດໃຊ້ໃນການປູກຝັງລ້ຽງສັດທີ່ເປັນປັດໃຈສຳຄັນໃນການລ້ຽງຊີບຂອງເຂົາເຈົ້າ.

ຕາມນິຍາມແລ້ວ ສິດໃນຊັບສິນແມ່ນສິດສະເພາະໃນດ້ານການສະແດງຄວາມເປັນເຈົ້າຂອງໃນຊັບສິນອັນດຽວກັນ, ສະນັ້ນການໃຫ້ສິດໃນຊັບສິນຂອງຝ່າຍໃດໜຶ່ງແມ່ນມັນໝາຍເຖິງການເສຍສິດໃນຊັບສິນຂອງອີກຝ່າຍໜຶ່ງ. ແນວໃດກໍ່ດີ, ແນວທາງການປະຕິບັດສິດໃນ ຊັບສິນຕາມທີ່ກຳນົດໃນກົນໄກສິດທິມະນຸດນັ້ນສ່ວນຫຼາຍແລ້ວແມ່ນເປັນສິດພິເສດທີ່ຕ້ອງໄດ້ຮັບການເຄົາລົບໃນການບໍລິຫານຈັດການຊັບສິນທີ່ມີ.[79] ຖ້າຫາກວ່າການແບ່ງປັນຊັບສິນທີ່ບໍ່ມີຄວາມຍຸຕິທຳ ແລະ ມີຄວາມຫຼຸດໂຕນກັນທາງດ້ານຄວາມຮັ່ງມີໃນສັງຄົມຫຼາຍ, ການຮຽກຮ້ອງສິດໃນຊັບສິນ ແລະ ການຕັດສິນຄະດີສ່ວນຫຼາຍແລ້ວແມ່ນຈະຕົກເປັນຂອງຜູ້ທີ່ມີອຳນາດ ແລະ ຄົນທີ່ຮັ່ງມີ ຫຼາຍກ່ວາຜູ້ທີ່ດ້ອຍໂອກາດ. ໃນເວລາທີ່ລະບົບນິຕິທຳບໍ່ມີຄວາມໂປ່ງໃສ, ສິ່ງທີ່ກ່ຽວພັນກັບທີ່ດິນແມ່ນອາດຈະແນໃສ່ແຕ່ບັນຫາໃບຕາດິນເຊິ່ງມັນຈະເຮັດໃຫ້ເກີດບັນຫາຄວາມບໍ່ເທົ່າທຽມໃນສັງຄົມ.

ນອກນີ້, ຕາມທີ່ເຫັນຄະດີທີ່ກ່ຽວຂ້ອງກັບສິດທິມະນຸດຫຼາຍຢ່າງ, ສິດໃນຊັບສິນບໍ່ແມ່ນສິດທີ່ຊີ້ຂາດ. ຫຼັກການຕ່າງໆທີ່ມີນັ້ນແມ່ນເພື່ອສ້າງຄວາມຖືກຕ້ອງໃຫ້ແກ່ຄວາມບໍ່ເທົ່າທຽມໃນການເຂົ້າເຖິງ, ການນຳໃຊ້ ແລະ ການຄອບຄອງທີ່ດິນເຊັ່ນ: ທີ່ດິນຕອນໃດໜຶ່ງ ຫຼື ການປະຕິຮູບຄືນທີ່ດິນກະຊິກຳ ຫຼື ການຈຳແນກຕໍ່ກັບແມ່ຍິງໃນການສືບສິດ ຫຼື ເປັນເຈົ້າຂອງທີ່ດິນ ສິ່ງເຫຼົ່ານີ້ແມ່ນອາດຈະກີດກັ້ນສິດໃນຊັບສິນຂອງຜູ້ໃດໜຶ່ງກໍ່ໄດ້. ເຊັ່ນວ່າ: ລັດທີ່ກ່ຽວຂ້ອງອາດຈະນຳໃຊ້ສິດອຳນາດຂອງຕົນທີ່ມີຕາມກົດໝາຍດ້ວຍການອອກຂໍ້ຈຳກັດກ່ຽວກັບການນຳໃຊ້ທີ່ດິນ ຫຼື ການເວນຄືນທີ່ດິນ ແລະ ຊັບສິນຂອງເອກະຊົນເພື່ອເອົາໄປໃຊ້ປະໂຫຍດທາງສາທາລະນະ.

[79] European Convention on Human Rights, Protocol No. 1, art. 1.

ໃນຕົວຈິງແລ້ວ, ຕາມທີ່ໄດ້ທົບທວນເບິ່ງສາຍກ່ຽວພັນທີ່ດິນກັບສິດໃນອາຫານ, ໃນການປະຕິຮູບທີ່ດິນກະເສດແມ່ນຖືວ່າເປັນຂໍ້ແນະນໍາທີ່ດີໃນ ການຮັບຮູ້ສິດໃນດ້ານອາຫານ ແລະ ມັນອາດຮຽກຮ້ອງໃຫ້ມີການເວນຄືນ ແລະ ຈັດແບ່ງຊັບສິນໃນທີ່ດິນຄືນໃໝ່.

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບສິດໃນການມີອາຫານທີ່ພຽງພໍ

## ຫຼັກການສາກົນທີ່ສາມາດນໍາໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດໃນການເປັນເຈົ້າຂອງຊັບສິນແບບສ່ວນຕົວກໍ່ຄືແບບທີ່ຮ່ວມກັນກັບຜູ້ອື່ນ ແລະ ສິດທີ່ວ່ານີ້ແມ່ນບໍ່ມີໃຜສາມາດເອົາອອກໄປຈາກຊີວິດຂອງຕົນໄດ້.

(ຖະແຫຼງການສິດທິມະນຸດສາກົນ, ມາດຕາ 17)

ທຸກຄົນແມ່ນມີສິດທີ່ປາດສະຈາກການຖືກຈໍາແນກ ແລະ ມີຄວາມເທົ່າທຽມໃນຕໍ່ໜ້າກົດໝາຍ ໂດຍສະເພາະໃນການໃຊ້ສິດທິຢ່າງເຕັມທີ່ໃນການເປັນເຈົ້າຂອງຊັບສິນສ່ວນຕົວ ແລະ ຮ່ວມກັບຜູ້ອື່ນໆໃນດ້ານການສືບທອດຕ່າງໆ.

(ສົນທິສັນຍາສາກົນວ່າດ້ວຍການລົບລ້າງການ**ຈໍາ**ແນກເຊື້ອຊາດ ມາດຕາ 5 (d)) (v) (vi))

ທຸກຄົນແມ່ນມີສິດໃນຊັບສິນ. ບໍ່ມີໃຜຈະສາມາດພາກສິດດັ່ງກ່າວອອກໄປຈາກເຮົາໄດ້ ເວັ້ນເສຍແຕ່ຊັບສິນດັ່ງກ່າວນັ້ນຈະຖືກເອົາໄປໃຊ້ສ່ວນລວມສາທາລະນະ ແລະ ພາຍໃຕ້ກົດໝາຍ (ດ້ວຍການທົດແທນຢ່າງເໝາະສົມ)

(ສົນທິສັນຍາສິດທິມະນຸດສະຫະພາບເອີຣົບ, ອານຸສັນຍາເລກທີ 1, ສົນທິສັນຍາສິດທິມະນຸດອາເມລິກາ ມາດຕາ 21, ກົດບັດອັບຟຣິກາກ່ຽວກັບສິດທິມະນຸດ ແລະ ສິດທິຂອງປະຊາຊົນ ມາດຕາ 14)

ລັດຕ້ອງອໍານວຍຄວາມສະດວກແກ່ແມ່ຍິງໃນດ້ານພົນລະເຮືອນຕ່າງໆທີ່ລວມມີຄວາມສາມາດດ້ານກົດໝາຍທີ່ເທົ່າທຽມກັບຜູ້ຊາຍ ແລະໃຫ້ໂອກາດໃນການນໍາໃຊ້ສິດທີ່ເທົ່າທຽມກັນເຊັ່ນ: ຄວນໃຫ້ແມ່ຍິງມີຄວາມເທົ່າທຽມໃນດ້ານສິດເພື່ອສາມາດເຮັດສັນຍາຕ່າງໆດ້ວຍຕົວເອງ ແລະ ຄຸ້ມຄອງຊັບສິນ ພ້ອມນັ້ນ ກໍ່ຕ້ອງໃຫ້ສິດແມ່ຍິງໃນການເຂົ້າສູ່ຄະດີໃນຂະບວນການຕ່າງໆຂອງສານທີ່ເທົ່າທຽມກັນກັບເພດຊາຍ. ນອກນີ້ ລັດຕ່າງໆຍັງຕ້ອງເຮັດທຸກວິທີທາງໃນການລົບລ້າງບັນຫາການຈໍາແນກຕໍ່ແມ່ຍິງໃນຊີວິດຄອບຄົວ ແລະສາຍພົວພັນຄອບຄົວຕ່າງໆ. ຕາມເນື້ອໃນທີ່ກ່າວມານີ້, ລັດຕ້ອງໃຫ້ການຮັບປະກັນສິດອັນດຽວກັນແກ່ແມ່ຍິງ ແລະ ຊາຍໃນການເປັນເຈົ້າຂອງຊັບສິນ, ການເວນຄືນຊັບສິນ, ການບໍລິຫານຈັດການ, ການຄຸ້ມຄອງ, ການນໍາໃຊ້ ແລະ ການກໍານົດກ່ຽວກັບ ຊັບສິນ.

(ສົນທິສັນຍາວ່າດ້ວຍການລົບລ້າງບັນຫາການ**ຈໍາ**ແນກແມ່ຍິງ ມາດຕາ 15 (2) ແລະ (1) ແລະ (h))

ໃນບໍລິບົດຂອງການພັດທະນາແບບຍືນຍົງ, ລັດທີ່ກ່ຽວຂ້ອງຕ້ອງສົ່ງເສີມແມ່ຍິງໃຫ້ເຂົ້າເຖິງ ແລະ ຄອບຄອງຊັບພະຍາກອນທີ່ເກີດຈາກທີ່ດິນ ພ້ອມທັງຕ້ອງໃຫ້ການຮັບປະກັນສິດໃນການເປັນເຈົ້າຂອງຊັບສິນຂອງແມ່ຍິງ

(ອານຸສັນຍາຂອງກົດບັດອັບຟຣິກາກ່ຽວກັບສິດທິມະນຸດ ແລະ ສິດຂອງຄົນພື້ນເມືອງທີ່ພົວພັນກັບເລື່ອງຂອງແມ່ຍິງໃນອັບຟຣິກາ ມາດຕາ 19 (c))

## ຕົວຢ່າງຂອງການນໍາໃຊ້

ທຸກຄົນແມ່ນມີສິດໃນການຄອບຄອງຊັບສິນໃດໜຶ່ງຢ່າງສະຫງົບ ແລະ ບໍ່ມີໃຜຈະມາຕັດແຍກສິດດັ່ງກ່າວອອກໄປໄດ້ໂດຍບໍ່ມີເຫດຜົນ. ການເວນຄືນ ແລະ ການຈໍາກັດການນໍາໃຊ້ສິດແມ່ນອາດມີໄດ້ພາຍໃຕ້ກົດໝາຍ ແຕ່ຕ້ອງມີເງື່ອນໄຂຊົດເຊີຍຢ່າງເໝາະສົມ. ທີ່ດິນ ແລະການນໍາໃຊ້ທີ່ດິນແມ່ນອາດຈະກ່ຽວຂ້ອງກັບເລື່ອງການຄອບຄອງຊັບສິນ.

ລັກສະນະທີ່ສິດໃນຊັບສິນຖືກເຂົ້າໃຈ ແລະ ໄດ້ຮັບການປົກປ້ອງນັ້ນແມ່ນມີຜົນກະທົບທັງທາງບວກ ແລະ ທາງລົບກ່ຽວກັບການເຂົ້າເຖິງ, ການນຳໃຊ້ ແລະ ການຄຸ້ມຄອງທີ່ເທົ່າທຽມກັນ.

ນັກລາຍງານພິເສດກ່ຽວກັບສະພາບຂອງສິດທິມະນຸດໃນປະເທດກຳປູເຈຍແມ່ນໄດ້ຮຽກຮ້ອງໃຫ້ມີການເລັ່ງໂຄງການອອກໃບຕາດິນເພື່ອຊ່ວຍໃນການປົກປ້ອງສິດຂອງຊຸມຊົນທີ່ຈະຖືກກະທົບຈາກການໃຫ້ສຳປະທານທີ່ດິນ.[80]

ໃນອີກມູມໜຶ່ງ, ນັກລາຍງານພິເສດດ້ານສິດໃນອາຫານກ່າວວ່າໃນບັນດາການເຂົ້າເຖິງທີ່ຕັ້ງໃຈເພື່ອປັບປຸງຄວາມໝັ້ນຄົງໃນ ການຄອບຄອງທີ່ດິນອັນທີ່ກ່ຽວຂ້ອງກັບການສົ່ງເສີມທີ່ດິນໃນການຕະຫຼາດດ້ວຍການຊື້ຂາຍຜ່ານໃບຕາດິນແມ່ນອາດເປັນຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈຕໍ່ກັບການເຂົ້າເຖິງ, ການນຳໃຊ້ ແລະ ການຄຸ້ມຄອງທີ່ດິນຂອງກຸ່ມຄົນດ້ອຍໂອກາດ. ບັນຫາທີໜຶ່ງກໍ່ຄື ໃນບ່ອນທີ່ເງື່ອນໄຂທາງເສດຖະກິດມະຫາພາກທີ່ເຂັ້ມແຂງນັ້ນກໍ່ບໍ່ໄດ້ແກ້ໄຂບັນຫາການຕະຫຼາດເທົ່າໃດ, ຊັບສິນກ່ຽວກັບທີ່ດິນທີ່ຖືກຂາຍອອກໄປແມ່ນຍ້ອນຄວາມຫຍຸ້ງຍາກຂອງຊາວນາຂະໜາດນ້ອຍທີ່ປະເຊີນກັບບັນຫາໜີ້ສິນ ຫຼື ຊາວນາຖືກບັງຄັບໃຫ້ຍົກຍ້າຍອອກຈາກທີ່ດິນອັນເນື່ອງມາຈາກໜີ້ສິນທີ່ທັບຖົມໃນການໃຊ້ເປັນຫຼັກຄ້ຳປະກັນໃນການກູ້ຢືມ, ສະນັ້ນບັນຫາທີ່ດິນຈຶ່ງເປັນສິ່ງເກີດຂຶ້ນເລື້ອຍໆ. ບັນຫາທີສອງກໍ່ແມ່ນກ່ຽວຂ້ອງກັບເລື່ອງອອກໃບຕາດິນໃຫ້ສ່ວນບຸກຄົນນັ້ນແມ່ນມັນບໍ່ອາດຈະຊ່ວຍແກ້ໄຂບັນຫາໃຫ້ແກ່ຜູ້ທີ່ນຳໃຊ້ທີ່ດິນທີ່ໃນການປູກຝັງລ້ຽງສັດເຊັ່ນ: ຄົນລ້ຽງສັດແບບພະເນຈອນ. ແນວໃດກໍ່ດີ ຄວາມຂັດແຍ່ງໃນທີ່ດິນອາດມີຄວາມຕຶງແຄດຖ້າຫາກ ວ່າຊ່ອງວ່າງທີ່ສຳຄັນມັນມີປະປົນຢູ່ລະຫວ່າງສິດໃນການນຳໃຊ້ທີ່ດິນຕາມຮີດຄອງປະເພນີ ແລະ ສິດໃນການນຳໃຊ້ທີ່ດິນຕາມ ກົດໝາຍທີ່ມີໃນລັກສະນະໃບຕາດິນ. ບັນຫາທີ່ສາມກໍ່ແມ່ນໃບຕາດິນສ່ວນບຸກຄົນແມ່ນບໍ່ສາມາດໄດ້ຮັບການປົກປ້ອງຢ່າງພຽງພໍ ຈາກການນຳໃຊ້ທີ່ດິນເພື່ອປະໂຫຍດຂອງຊຸມຊົນໂດຍລວມເຊິ່ງລວມມີທີ່ດິນເພື່ອການປູກຝັງລ້ຽງສັດ, ປ່າໄມ້, ແຫຼ່ງນ້ຳ, ການປາມົງ ແລະ ການຂຸດຄົ້ນແຮ່ທາດເທິງໜ້າດິນ. ການຄອບຄອງທີ່ດິນຂອງຊຸມຊົນແມ່ນເປັນປັດໃຈທີ່ສຳຄັນ ແລະ ມີປະສິດທິພາບໃນການໄດ້ສິດການຄຸ້ມຄອງທີ່ດິນ ແລະ ຊັບສິນແກ່ຜູ້ທີ່ມີໃບຕາດິນ ຫຼື ບໍ່ມີໃບຕາດິນ.[81] ໃນກໍລະນີນີ້, ນັກລາຍງານພິເສດກ່ຽວກັບສິດໃນອາຫານໄດ້ອະທິບາຍວ່າຄວາມສຳຄັນຂອງການເຂົ້າເຖິງອາຫານກໍ່ຄືການສິດໃນການເຂົ້າເຖິງທີ່ດິນເຊິ່ງມັນເປັນການຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນໄດ້ຫລາຍຂື້ນ.[82]

ອົງກອນສິດທິມະນຸດສາກົນໄດ້ຢ້ຳແລ້ວຢ້ຳອີກເຖິງສິດທິຄວາມເທົ່າທຽມຂອງແມ່ຍິງທີ່ກ່ຽວກັບທີ່ດິນ ແລະ ຊັບສິນ. ນອກຈາກນີ້, ຄະນະກຳມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ກ່າວໃນບົດຄຳເຫັນທົ່ວໄປເລກທີ 20 (2009) ວ່າດ້ວຍສະຖານະດ້ານຊັບສິນເຊັ່ນ: ເຈົ້າຂອງທີ່ດິນ ຫຼື ການຄອບຄອງທີ່ດິນ ຫຼື ຂາດທັງສອງຢ່າງ ແມ່ນເປັນໜຶ່ງໃນບັນດາພື້ນ ຖານທີ່ເກີດການຈຳແນກ (ວັກທີ 2). ພາຍໃຕ້ຄຳເຫັນແນະນຳທົ່ວໄປເລກທີ 16 (2005), ຄະນະກຳມະທິການໄດ້ຮຽກຮ້ອງໃຫ້ເພີ່ມການໃຫ້ສິດແກ່ແມ່ຍິງໃນການເປັນເຈົ້າຂອງ, ນຳໃຊ້ ຫຼື ຄຸ້ມຄອງບ້ານ, ເຮືອນ, ທີ່ດິນ ແລະ ຊັບສິນຕ່າງໆໃຫ້ເທົ່າ ທຽມກັບເພດຊາຍໄດ້, ພ້ອມນີ້ ແມ່ຍິງຄວນສາມາດເຂົ້າເຖິງບັນດາກົນໄກຕ່າງໆຂອງການໃຫ້ສິດທີ່ກ່າວມານັ້ນ (ວັກທີ 28). ສະນັ້ນ, ທາງຄະນະ**ກຳ** ມະທິການສິດທິມະນຸດຈຶ່ງໄດ້ກ່າວໃນບົດ**ຄຳ**ເຫັນທົ່ວໄປເລກທີ 28 (2000) ວ່າ "ຄວາມສາມາດຂອງແມ່ຍິງໃນການເປັນເຈົ້າຂອງ ຊັບສິນ, ໃນການເຮັດສັນຍາ ຫຼື ໃຊ້ສິດໃນດ້ານພົນລະເຮືອນແມ່ນຕ້ອງບໍ່ຖືກຈຳກັດໃນຖານະການແຕ່ງງານ ຫຼື ບັນຫາອື່ນໆ" (ວັກທີ 19). ຄ້າຍໆກັນນີ້, ໃນບົດລາຍງານທົ່ວໄປເລກທີ 21 (1994), ຄະນະກຳມະທິການວ່າດ້ວຍການລົບລ້າງການຈຳ ແນກຕໍ່ແມ່ຍິງໄດ້ຢັ້ງຢືນວ່າ "ໃນເວລາທີ່ແມ່ຍິງບໍ່ສາມາດເຮັດສັນຍາໃດໜຶ່ງ, ຫຼື ບໍ່ສາມາດເຂົ້າຫາການບໍລິການທາງການເງິນຕ່າງໆ, ຫຼື ສາມາດເຮັດໄດ້ແຕ່ຕ້ອງໄດ້ຮັບການເຫັນດີຂອງສາມີ ຫຼື ຍາດທີ່ພີ່ນ້ອງຂອງຝ່າຍຊາຍ ຫຼື ຕ້ອງມີໜັງສືຮັບປະກັນກ່ອນ, ສິ່ງທີ່ວ່ານັ້ນຖືວ່າເປັນການປະຕິເສດສິດທິຂອງແມ່ຍິງ" (ວັກທີ 7). ຄະນະກຳມະທິການຍັງໄດ້ເນັ້ນຕາມມາດຕາທີ 16 (1) (h) ວ່າ "ໃນຫຼາຍປະເທດທີ່ກຳລັງປະເຊີນກັບໂຄງການ ການປະຕິຮູບທີ່ດິນ ຫຼື ການຈັດສັນທີ່ດິນຄືນໃໝ່ແກ່ບັນດາຄົນທີ່ມີຄວາມ ແຕກຕ່າງດ້ານຊົນຊາດນັ້ນ ສິດທິຂອງແມ່ຍິງບໍ່ວ່າຈະຢູ່ໃນຖານະໃດກໍ່ຕາມແມ່ນຕ້ອງໄດ້ຮັບສິດການຈັດສັນທີ່ດິນທີ່ກ່າວມານັ້ນຢ່າງ ເທົ່າທຽມກັບເພດຊາຍ" (ວັກທີ 27).

---

[80] A/HRC/24/36, para. 48.
[81] A/HRC/13/33/Add.2, para. 26.
[82] A/65/281, para. 21, and A/HRC/13/33/Add.2, para. 9.

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບການບໍ່ຖືກຈຳແນກ ແລະ ຄວາມເທົ່າທຽມ, ແລະ ບົດສັງລວມກ່ຽວກັບສິດໃນບ້ານຢູ່ອາໃສທີ່ພໍພຽງ. ສຳລັບເງື່ອນໄຂຂໍ້ຈຳກັດຂອງຂໍ້ຍົກເວັ້ນໃນດ້ານສິດທິໃນຊັບສິນ, ໃຫ້ເບິ່ງໃນບົດສະຫຼຸບສັງລວມກ່ຽວກັບປ້ອງກັນຕ້ານຂໍ້ຈຳກັດຂອງສິດທິມະນຸດເພື່ອພົນປະ ໂຫຍດສ່ວນລວມ.

## ຄະດີຕົວຢ່າງ

**ສານສິດທິມະນຸດເອີຣົບ:** ***Ucci*** **ກັບ ອິດຕາລີ້, ເອກະສານເລກທີ 213/04 (22 ມິຖຸນາ 2006).** ໃນຄະດີດັ່ງກ່າວແມ່ນກ່ຽວກັບເຈົ້າໜ້າທີ່ລັດໄດ້ໄປເອົາທີ່ດິນກະຊິກຳ ເພື່ອເອົາໄປໃຫ້ສຳປະທານໂດຍບໍ່ມີຄ່າຊົດເຊີຍຫຍັງ. ສານສິດທິມະນຸດແຫ່ງເອີຣົບໄດ້ພົບວ່າການກະທຳຂອງລັດຖະບານຖືວ່າເປັນການບັງຄັບໃຫ້ຍົກຍ້າຍ ແລະ ຍັງບໍ່ມີຄ່າຊົດເຊີຍຫຍັງເລຍໃຫ້ແກ່ຜູ້ທີ່ຖືກກະທົບ. ເພາະສະນັ້ນ ສານຈຶ່ງລົງຄວາມເຫັນວ່ານັ້ນແມ່ນການລະເມີດມາດຕາ 1 ຂອງ ອານຸສັນຍາ ເລກທີ 1 ຂອງສົນທິສັນຍາສິດທິມະນຸດແຫ່ງເອີຣົບກ່ຽວກັບສິດທິມະນຸດໃນການປົກປ້ອງຊັບສິນ.[83]

## ຫຼັກການ ແລະ ຄູ່ມືທີ່ກ່ຽວຂ້ອງອື່ນໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງດ້ານສະບຽງອາຫານ (Rome, FAO, 2012) ໃນໝວດສະເພາະ 3.1.2; 4.4; 7.6; 7 to 10 ແລະ 16.
- ການໃຫ້ສຳປະທານ ແລະ ການເວນຄືນທີ່ດິນທີ່ມີຂະໜາດໃຫຍ່: ເອກະສານຫຼັກການ ແລະ ມາດຕະການລະດັບຕ່ຳເພື່ອການແກ້ໄຂບັນຫາສິດທິມະນຸດ (A/HRC/13/33/Add.2), sect. IV.
- ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສ (A/HRC/4/18, annex I), ວັກທີ 50, 52, 56 (b), 60, 61, 66, 67, 71.
- ຄູ່ມືອາສາເພື່ອສະໜັບສະໜູນການຮັບຮູ້ສິດຢ່າງຕັ້ງໜ້າກ່ຽວກັບສິດໃນດ້ານອາຫານທີ່ພໍພຽງໃນບໍລິບົດຂອງຄວາມໝັ້ນຄົງໃນສະບຽງອາຫານແຫ່ງຊາດ (Rome, FAO, 2005), ຫຼັກການ 8.6, 8.10.

---

[83] See *Land and Human Rights: Annotated Compilation of Case Law.*

**ບົດສະຫຼຸບສັງລວມ**
**ນ. ສິດໃນການຮັບຮູ້ເອກະລາດຂອງຕົນເອງ**
**ບົດສະເໜີ**

ຊັບພະຍາກອນນ້ຳ, ທີ່ດິນ ແລະ ຊັບພະຍາກອນທຳມະຊາດແມ່ນ ແມ່ນຖືວ່າມີຄວາມສຳຄັນທີ່ສຸດສຳລັບທຸກຄົນທົ່ວໂລກເພາະວ່າມັນເປັນປັດໃຈສຳຄັນໃນການຕອບສະໜອງຄວາມຕ້ອງການທາງເສດຖະກິດ ສັງຄົມ ແລະ ວັດທະນະທຳ, ນອກນີ້ມັນຍັງມີຄວາມ ສຳຄັນໃນການຕອບສະໜອງຄວາມສຳເລັດໃນການຮຽກຮ້ອງຄວາມເປັນເອກະລາດຂອງຕົນເອງອີກດ້ວຍ.
ສິດທິໃນການຂໍຮັບຮູ້ເອກະລາດຂອງຕົນເອງແມ່ນໄດ້ໃຫ້ພື້ນຖານໃນການຮຽກຮ້ອງການຄຸ້ມຄອງຊັບພະຍາກອນ ແລະ ຄວາມອຸດົມສົມບູນທາງທຳມະຊາດດ້ວຍຕົວເອງແບບຮ່ວມກັນເປັນກຸ່ມຕາມຄວາມຈຳເປັນເພື່ອຄວາມຢູ່ລອດ ແລະ ເພື່ອຊີວິດການເປັນຢູ່ຂອງຕົນ. ຕົວຢ່າງ: ຄົນທີ່ອາໃສຢູ່ໃນເຂດປົກຄອງ ຫຼື ໃນຄວາມຮັບຜິດຊອບຂອງລັດໃດໜຶ່ງ ຫຼື ກຸ່ມ ຄົນໃດໜຶ່ງທີ່ໄດ້ຮຽກຮ້ອງຂໍເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງທີ່ດິນໃດໜຶ່ງ ເພື່ອຄວາມຢູ່ລອດ ແລະ ມີຄວາມໝາຍໃນການຂໍຮັບຮູ້ຄວາມ ເປັນຕົນເອງ.

> "ສຳລັບຊາວຊາມີ ກໍ່ຄືຊາວພື້ນເມືອງອື່ນໆໃນທົ່ວໂລກ ການຮັກສາສິດໃນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ແມ່ນເປັນປັດໃຈພື້ນຖານໃນການຂໍຮັບຮູ້ຄວາມເປັນຕົວເອງ ແລະ ເປັນປັດໃຈສຳຄັນສຳລັບຊາວຊາມີໃນການສືບຕໍ່ເປັນກຸ່ມຄົນທີ່ໃກ້ຈະຫາຍໄປຈາກໂລກແລ້ວ."
>
> *ທີ່ມາຂໍ້ມູນ:* ບົດລາຍງານຂອງນັກລາຍງານພິເສດກ່ຽວກັບສິດຂອງ ຄົນພື້ນເມືອງ. ສະພາບການຂອງຊາວຊາມີໃນເຂດຊາບມີໃນປະເທດ ນໍເວ, ສະວີເດັນ ແລະ ຟິນແລນ (A/HRC/18/35/Add.2), ວັກທີ 79.

**ຫຼັກການສາກົນຕ່າງໆທີ່ກ່ຽວຂ້ອງກັບທີ່ດິນ**

ໜຶ່ງໃນຈຸດປະສົງຂອງ ອົງການ ສປຊ ແມ່ນເພື່ອພັດທະນາສາຍພົວພັນທີ່ເປັນມິດໃຫ້ແກ່ປະເທດຕ່າງໆໂດຍອີງຕາມການເຄົາລົບໃນຫຼັກການຂອງສິດທິຄວາມເທົ່າທຽມ ແລະ ການຮຽກຮ້ອງຂໍເປັນຕົວເອງຂອງກຸ່ມຄົນ.

(ກົດບັດ ສປຊ ມາດຕາ 1.1)

ຄົນທຸກຄົນແມ່ນມີສິດໃນການຮຽກຮ້ອງຄວາມເປັນໂຕຂອງຕົນເອງ. ຕາມມາດຖານຂອງສິດທິດັ່ງກ່າວ, ທຸກຄົນແມ່ນສາມາດຮຽກຮ້ອງສິດນັ້ນຢ່າງມີເສລີພາບໃນການເລືອກແນວທາງການເມືອງ ແລະ ດຳເນີນແນວທາງການພັດທະນາດ້ານເສດຖະກິດ ສັງຄົມ ແລະ ວັດທະນະທຳຢ່າງອິດສະຫຼະ. ທຸກຄົນແມ່ນອາດຈະເຮັດຕາມຄວາມຕ້ອງການຂອງຕົນໃນການບໍລິຫານຊັບພະນາກອນ ແລະ ຄວາມອຸດົມຮັ່ງມີທາງທຳມະຊາດ ແລະ ບໍ່ມີໃຜທີ່ຈະມາຕັດແຍກສິດດັ່ງກ່າວອອກຈາກເຮົາໄດ້.

(ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະ**ທຳ** ມາດຕາ 1, ສັນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 1)

ຄົນທຸກຄົນແມ່ນມີສິດທີ່ບໍ່ມີໃຜສາມາດເອົາອອກໄປຈາກໄດ້ໂດຍສະເພາະແມ່ນສິດໃນການຂໍຮັບຮູ້ຄວາມເປັນຕົນເອງ, ສິດໃນການເລືອກແນວທາງການເມືອງ ແລະ ສິດໃນການສ້າງສາພັດທະນາທາງດ້ານເສດຖະກິດ ແລະ ສັງຄົມໂດຍອີງຕາມແນວ ທາງທີ່ສ້າງຂື້ນມາຢ່າງອິດສະຫຼະ. ທຸກຄົນແມ່ນມີສິດໃນການບໍລິຫານຊັບພະຍາກອນ ແລະ ຄວາມອຸດົມຮັ່ງມີທາງທຳມະຊາດໂດຍບໍ່ມີໃຜສາມາດຕັດແຍກສິດດັ່ງກ່າວຂອງເຮົາໄດ້. ທຸກຄົນແມ່ນມີສິດໃນການໄດ້ຮັບການພັດທະນາທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໂດຍອີງຕາມຄວາມມີເສລີພາບ ແລະ ຄຸນລັກສະນະສະເພາະ ພ້ອມທັງມີສິດໃນການໃຊ້ສິດໃນການສືບທອດມູນມໍລະດົກຕ່າງໆ.

(ກົດບັດສິດທິມະນຸດ ແລະ ສິດທິຂອງປະຊາຊົນອັບຟຣິກາ ມາດຕາ 20, 21 ແລະ 22)

ຄົນພື້ນເມືອງແມ່ນມີສິດໃນການຍໍຮັບຮູ້ຄວາມເປັນໂຕເອງໄດ້. ອີງຕາມສິດດັ່ງກ່າວໝາຍຄວາມວ່າເຂົາເຈົ້າມີສິດໃນການເລືອກແນວທາງການເມືອງ ແລະ ເລືອກແນວທາງການພັດທະນາທາງເສດຖະກິດ ສັງຄົມ ແລະ ວັດທະນະທຳດ້ວຍຕົວເອງໄດ້.

(ຖະແຫຼງການ ສປຊກ່ຽວກັບສິດທິຂອງຄົນພື້ນເມືອງ ມາດຕາ 3)

## ຕົວຢ່າງການນຳໃຊ້

ຄະນະກຳມະທິການສິດທິມະນຸດໄດ້ກ່າວໃນບົດຄຳເຫັນທົ່ວໄປເລກທີ 12 (1984) ວ່າດ້ວຍສິດໃນການຍໍຮັບຮູ້ຄວາມເປັນຕົນເອງ ໂດຍເນັ້ນເອົາມາດຕາ 1 (2) ໃນສົນທິສັນຍາສາກົນວ່າດ້ວຍສິດທິການເມືອງ ແລະ ພົນລະເຮືອນວ່າມັນເປັນປັດໃຈພື້ນຖານໃນດ້ານການຍໍຮັບຮູ້ຄວາມເປັນເອກະລາດເຊັ່ນ: ສິດຂອງຄົນໃນການບໍລິຫານຊັບພະຍາກອນ ແລະ ຄວາມອຸດົມຮັ່ງມີທາງທຳມະຊາດໄດ້ຕາມ ຄວາມຕ້ອງການຢ່າງເທົ່າທຽມ ແລະ ມີການຮ່ວມມືທາງເສດຖະກິດກັບສາກົນພາຍໃຕ້ຫຼັກການວ່າດ້ວຍສິດ ແລະ ຜົນປະໂຫຍດຮ່ວມກັນໃນກົດໝາຍລະຫວ່າງປະເທດ. ສິດທີ່ກ່າວມານັ້ນແມ່ນບໍ່ມີໃຜສາມາດຕັດແຍກອອກໄປໄດ້. ນອກນີ້ທາງຄະນະກຳມະທິການຍັງໄດ້ເນັ້ນວ່າສິດທີ່ກ່າວມານັ້ນວ່າມັນເປັນພັນທະຂອງລັດຖະບານທຸກລັດ ແລະ ທຸກປະຊາຄົມສາກົນທີ່ກ່ຽວຂ້ອງຕ້ອງໄດ້ເອົາໃຈໃສ່ຕື່ມ (ວັກທີ 5).

ໃນບົດຄຳເຫັນທົ່ວໄປເລກທີ 21 (1996) ກ່ຽວກັບສິດໃນການຮັບຮູ້ຄວາມເປັນເອກະລາດຕົນເອງ, ຄະນະກຳມະທິການວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດໄດ້ແບ່ງຄຸນລັກສະນະຂອງສິດຍໍຮັບຮູ້ຄວາມເປັນເອກະລາດຂອງຕົນເອງອອກເປັນສອງຢ່າງຄື: ປັດໃຈພາຍໃນ ແລະ ພາຍນອກ. ຄະນະກຳມະທິການໄດ້ຊີ້ແຈງວ່າປັດໃຈພາຍໃນແມ່ນກ່ຽວກັບສິດຂອງຄົນໃນການເລືອກຮູບແບບການພັດທະນາເສດຖະກິດ ສັງຄົມ ແລະ ວັດທະນະທຳໂດຍບໍ່ຕ້ອງມີການແຊກແຊງຈາກພາຍນອກ. ນອກນີ້, ສິດທີ່ວ່າແມ່ນຍັງກ່ຽວກັບສິດຂອງພົນລະເມືອງໃນການມີສ່ວນຮ່ວມໃນວຽກງານສາທາລະນະໃນທຸກຂັ້ນ ໂດຍອີງຕາມມາດຕາ 5 (c) ຂອງສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດ. ດັ່ງນັ້ນ, ລັດທະບານທີ່ກ່ຽວຂ້ອງແມ່ນຕ້ອງເປັນຕົວແທນປະຊາຊົນທຸກຄົນໂດຍຫ້າມມີການຈຳແນກທາງເຊື້ອຊາດ, ສີຜິວ, ທີ່ມາຂອງຕົ້ນກຳເນີດ ຫຼື ທີ່ມາຂອງເຊື້ອຊາດ ແລະ ຄວາມເຊື່ອທາງສາດສະໜາ. ສ່ວນປັດໃຈພາຍນອກຂອງການຍໍຮັບຮູ້ຄວາມເປັນເອກະລາດຕົນເອງນັ້ນແມ່ນກ່ຽວກັບສິດຂອງທຸກຄົນໃນການເລືອກທາງເດີນດ້ານການເມືອງ ແລະ ເລື່ອກທີ່ຈະຮ່ວມໃນປະຊາຄົມສາກົນພາຍໃຕ້ຫຼັກການສິດສະເໝີພາບ ແລະ ຈະຍໍຍົກຕົວຢ່າງຂອງການຮຸກຮີ້ອື່ນເພື່ອປົດ ປ່ອຍຕົວເອງຈາກແອກຄອບຄອງຫົວເມືອງອື່ນ ແລະ ຕົວຢ່າງຂອງການຫ້າມບີບບັງຄັບຄົນຕ່າງດ້າວ, ແລະ ໃຊ້ອຳນາດຂູດຮີດ ປະຊາຊົນ. (ວັກທີ 4).

ໃນບົດສະລຸບສັງເກດການກ່ຽວກັບປະເທດນໍເວ, ຄະນະກຳມະທິການກ່ຽວກັບການລົບລ້າງການຈຳແນກເຊື້ອຊາດໄດ້ໃຫ້ຄຳເຫັນວ່ານໍເວຕ້ອງເຮັດທຸກວິທີທາງໃນການຮັບປະກັນສິດຂອງຊາວຊາມີ້ໃນການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີໃນດິນແດນບ່ອນທີ່ເຂົາອາໃສຢູ່ແຕ່ດັ້ງເດີມໄດ້ຢ່າງເຕັມທີ່.[84] ໃນບົດສັງເກດການກ່ຽວກັບລັດອື່ນໆ, ຄະນະ**ກຳ**ມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ຮຽກຮ້ອງໃຫ້ລັດຕ່າງໆຕ້ອງໃຊ້ມາດຕະການທີ່ເໝາະສົມໃນການແກ້ໄຂຜົນກະທົບທີ່ເກີດມາຈາກບັນຫາການໃຫ້ສຳປະທານ ແລະ ເວນຄືນທີ່ດິນຂະໜາດໃຫຍ່ໃນການໃຫ້ຂຸດຄົ້ນຊັບພະຍາກອນທຳມະຊາດເຊິ່ງມັນຈະກະທົບຕໍ່ສິດຂອງຄວາມມີເອກະລາດຂອງຄົນພື້ນເມືອງ..[85]

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບສິດຂອງຄົນພື້ນເມືອງຕໍ່ກັບທີ່ດິນ, ອານາເຂດ, ແລະ ຊັບພະຍາກອນຕ່າງໆທີ່ສືບທອດມາຂອງເຂົາເຈົ້າເຊິ່ງລວມມີທັງບັນຫາແຫຼ່ງນ້ຳ

[84] CERD/C/NOR/CO/19-20.
[85] Concluding observations on Brazil (E/C.12/BRA/CO/2), Cambodia (E/C.12/KHM/CO/1), Chad (E/C.12/TCD/CO/3) and Sri Lanka (E/C.12/LKA/CO/2-4).

ຫຼັກການ ແລະ ຄູ່ມືທີ່ກ່ຽວຂ້ອງອື່ນໆ

- ການເວນຄືນ ແລະ ໃຫ້ສຳປະທານທີ່ດິນທີ່ມີຂະໜາດໃຫຍ່: ເອກະສານຫຼັກການ ແລະ ມາດຕະການເພື່ອແກ້ໄຂບັນຫາທາງສິດທິມະນຸດ

## ບົດສະຫຼຸບສັງລວມ
## ບ. ສິດໃນກິດຈະກໍາທາງວັດທະນະທໍາ
## ບົດສະເໜີ

ຊີວິດໃນວັດທະນະທໍາຂອງຫຼາຍໆຊຸມຊົນແມ່ນມີຄວາມຕິດພັນກັບທີ່ດິນຢ່າງສະໜິດແໜ້ນ. ແບບແຜນການດໍາລົງຊີວິດແມ່ນພົວພັນກັບການກະເສດ, ການປາມົງ ແລະ ການລ່າສັດກໍ່ຄື ເທດສະການ ແລະ ບຸນປະເພນີທາງວັດທະນະທໍາເຫຼົ່ານັ້ນແມ່ນຈະອີງໃສ່ທີ່ດິນ ແລະ ສະຖານທີ່ຕ່າງໆເປັນສໍາຄັນ. ການເວນຄືທີ່ດິນ, ການຄອບຄອງ ແລະ ການເວນຄືນທີ່ຜິດກົດໝາຍ, ການສ້າງມົນລະພິດ ແລະ ເຮັດໃຫ້ລະບົບນິເວດເຊື່ອມໂຊມຈາກການຂຸດຄົ້ນຊັບພະຍາກອນທໍາມະຊາດ ຫຼື ການກໍ່ສ້າງຫົນທາງ, ຄອງນໍ້າ ຫຼື ທ່າເຮືອ, ສິ່ງເຫຼົ່ານີ້ແມ່ນອາດສ້າງຄວາມເສຍຫາຍໃຫ້ແກ່ສະຖານທີ່ ແລະ ສະພາບແວດລ້ອມທີ່ຈໍາເປັນສໍາລັບຄວາມຢູ່ລອດທາງດ້ານວັດທະນະທໍາຂອງຊຸມຊົນທ້ອງຖິ່ນ.

ການປະຕິບັດ ແລະ ວັດຖຸທາງວັດທະນະທໍາເຊັ່ນ: ຕົ້ນໄມ້ທີ່ນັບຖືກັນວ່າເປັນບ່ອນສັກສິດ ແລະ ເປັນຢາພື້ນເມືອງ, ຕົ້ນໄມ້ ແລະ ໜັງສັດແມ່ນຖືກໃຊ້ໃນດ້ານຈິດຕະກໍາ ແລະ ດ້ານກິດຈະກໍາທາງວັດທະນະທໍາອື່ນໆ, ພືດແລະສັດທີ່ສາມາດໃຊ້ເປັນເຄື່ອງມືຕ່າງໆໃນດ້ານການສ້າງບ້ານ, ເຮັດເປັນເຄື່ອງນຸ່ງຮົ່ມ, ຫຼື ເປັນອາຫານແມ່ນອາດຖືກດັບສູນຖ້າຫາກລະບົບນິເວດຖືກທໍາລາຍ ຫຼື ຊຸມຊົນຖືກຍົກຍ້າຍ ຫຼື ບໍ່ມີທີ່ອາໃສ ແລະ ໄດ້ໄປຢູ່ບ່ອນທີ່ຫ່າງໄກຈາກບ່ອນທີ່ເຄີຍຢູ່ມາກ່ອນ.

"ຍຸທະວິທີພື້ນຖານໃນການລຸດຜ່ອນຄວາມທຸກຍາກຂອງໂຄງການພັດທະນາເຂດຊົນນະບົດ [ໃນບອສສະວານ້າ] ແມ່ນການຕັ້ງຖິ່ນຖານຄືນໃໝ່ໃຫ້ຄົນໃນເຂດຫ່າງໄກສອກຫຼີກເພື່ອເປັນການສ້າງຄວາມສະດວກໃນການຈັດສັນການບໍລິການທາງສັງຄົມ. ການປະຕິບັດທີ່ວ່າມານີ້ແມ່ນບໍ່ໄດ້ມີການຮັບຮູ້ຮູບແບບການນໍາໃຊ້ທີ່ດິນທີ່ເປັນລັກສະນະດ້ານວັດທະນະທໍາທີ່ຫາຍາກຂອງຊຸມຊົນພື້ນເມືອງຕ່າງໆຖ້າເບິ່ງໃນກໍລະນີທີ່ຈະໃຫ້ການຊ່ວຍເຫຼືອຄົນເຫຼົ່ານັ້ນ. ບອສສະວານ້າແມ່ນເປັນປະເທດທີ່ໄດ້ຕົກລົງກັນເປັນເອກະພາບໃນການພັດທະນາ. ຜູ້ຄົນແມ່ນໄດ້ຮັກສາຮີດຄອງການ ລ່າສັດເປັນເອກະລັກຄວາມຢູ່ລອດແບບພໍພຽງທີ່ມັນຈະຂັດກັບໂຄງການການພັດທະນາຊົນນະບົດທີ່ມາພ້ອມກັບການຍົກຍ້າຍຄົນໄປບ່ອນໃໝ່ ໄປບ່ອນຊຸມຊົນທີ່ມີແບບແຜນການດໍາລົງຊີວິດທີ່ແຕກຕ່າງເຊັ່ນວ່າ ຊຸມຊົນທີ່ອາໃສການປູກຝັງລ້ຽງສັດແບບພະເນຈອນ."

*ທີ່ມາ: ບົດລາຍງານຂອງນັກລາຍງານພິເສດກ່ຽວກັບຄົນພື້ນເມືອງ: ສະພາບຂອງຄົນພື້ນເມືອງໃນບອສສະວານ້າ* (A/HRC/15/37/Add.2), ວັກທີ 31 ແລະ 32.

ໂດຍສະເພາະແມ່ນສາຍພົວພັນທີ່ເປັນສັນຍາລັກຂອງກຸມຄົນຊົນເຜົ່າ ແລະ ພື້ນເມືອງທີ່ມີດິນແດນມາແຕ່ດັ້ງເດີມ ແລະ ຖືເປັນຫຼັກຖານທາງຮີດຄອງດ້ານຊີວິດທີ່ຕິດພັນກັບວັດທະນະທໍາ ແລະ ຖືເປັນສິ່ງຢັ້ງຢືນຂອງຄວາມຢູ່ລອດທາງວັດທະນະທໍາຂອງເຂົາເຈົ້າ.

### ຫຼັກການສາກົນທີ່ສາມາດໃຊ້ກັບບັນຫາທີ່ດິນ

ຄົນທຸກຄົນແມ່ນມີສິດໃນການມີສ່ວນຮ່ວມໃນກິດຈະກໍາທາງວັດທະນະທໍາໃນຊຸມຊົນໂດຍບໍ່ມີການຈໍາແນກໃດໆ.

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 27, ສົນທິສັນຍາສາກົນວ່າດ້ວຍສິດທາງເສດຖະກິດ ສັງຄົມ ແລະ ວັດທະນະ**ທໍາ** ມາດຕາ 15, ສົນທິສັນຍາສາກົນວ່າດ້ວຍການລົບລ້າງການ**ຈໍາ**ແນກເຊື້ອຊາດ ມາດຕາ 5 (d), ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈໍາແນກແມ່ຍິງ ມາດຕາ 13, ສົນທິສັນຍາສິດທິເດັກ ມາດຕາ 31, ກົດບັດອັບຟຣິກາວ່າດ້ວຍສິດທິມະນຸດ ແລະ ມິດທິຂອງປະຊາຊົນ ມາດຕາ 17, ອານຸສັນຍາຂອງສົນທິສັນຍາສາດ້ວຍສິດທິມະນຸດໃນດ້ານສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນະທໍາໃນອາເມລິກາ ມາດຕາ 14.)

ໃນປະເທດທີ່ມີຊົນເຜົ່າ ແລະ ຄົນພື້ນເມືອງອາໃສຢູ່, ສະມາຊິກທຸກຄົນຂອງກຸ່ມຕ້ອງໄດ້ຮັບການເຄົາໃນສິດຂອງເຂົາເຈົ້າໃນຊຸມຊົນ ເພື່ອວ່າເຂົາເຫຼົ່ານັ້ນແມ່ນສາມາດເຄື່ອນໄຫວດ້ານກິດຈະກຳທາງວັດທະນະທຳໄດ້ຢ່າງເຕັມທີ່.

ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາທີ 27, ແລະ ສົນທິສັນຍາສິດທິເດັກ ມາດຕາ 30)

ລັດຕ່າງໆຕ້ອງສົ່ງເສີມເງື່ອນໄຂທີ່ຈຳເປັນແກ່ຄົນທີ່ມາຈາກຊົນເຜົ່າ, ຕ້ອງຮັກສາ ແລະ ພັດທະນາວັດທະນະທຳທີ່ມີ, ຕ້ອງປົກປ້ອງ ຫຼັກຖານທີ່ສຳຄັນຂອງທີ່ມາຂອງຊົນເຜົ່າ, ເຂດທີ່ມາ, ພາສາ, ຮີດຄອງ ແລະ ວັດທະນະທຳທີ່ຕົກທອດ, ແລະ ຕ້ອງປະກອບສ່ວນ ໃນຊີວິດທາງວັດທະນະດັ່ງກ່າວ.

(ກອບສົນທິສັນຍາເພື່ອການປົກປ້ອງຊົນເຜົ່າສ່ວນນ້ອຍ ມາດຕາ 5 (1) ແລະ (15)

ລັດຖະບານທີ່ກ່ຽວຂ້ອງຕ້ອງໃຫ້ການເຄົາລົບຄວາມສຳຄັນທາງດ້ານວັດທະນະທຳເປັນພິເສດ ແລະ ເຄົາລົບຄຸນຄ່າທາງ ຈິດວິນຍານຂອງຜູ້ທີ່ກ່ຽວຂ້ອງໃນສາຍພົວພັນທາງທີ່ດິນ ແລະ ອານາເຂດຕ່າງໆ, ຫຼື ບໍ່ວ່າຈະເປັນທັງໃນດ້ານການຄອບຄອງ ຫຼື ນຳໃຊ້ ໂດຍສະເພາະໃນດ້ານສ່ວນລວມຂອງຄວາມສຳພັນທີ່ກ່າວມານັ້ນ.

(ສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນພື້ນເມືອງ ແລະ ຊົນເຜົ່າທີ່ອາໃສໃນປະເທດເອກະລາດຕ່າງໆ (ເລກທີ 169), 1989, ມາດຕາ 13)

ຄົນພື້ນເມືອງແມ່ນມີສິດໃນການປະຕິບັດ ແລະ ດັດປັບຮີດຄອງ ແລະ ວັດທະນະທຳອັນດີງາມຂອງເຂົາເຈົ້າໄດ້. ໃນນີ້ແມ່ນລວມມີທັງ ສິດໃນການປົກປ້ອງ, ຮັກສາ, ແລະ ພັດທະນາເລື່ອງການສະແດງອອກທາງວັດທະນະທຳທີ່ມີມາແຕ່ອາດີດ, ປະຈຸບັນ ແລະ ອານາຄົດເຊັ່ນ: ສະຖານທີ່ທາງປະຫວັດສາດ ແລະ ບູຮານ, ສິ່ງປະດິດ, ການອອກແບບ, ພິທີກຳຕ່າງໆ, ແລະ ສິນລະປະວັນນະຄະດີທາງການສະແດງໃນດ້ານເທັກໂນໂລຍີ, ດ້ານພາບ ແລະ ດ້ານການຟ້ອນລຳ.

ສິ່ງທີ່ກ່າວມານີ້ແມ່ນສາມາດນຳໄປເຄື່ອນໄຫວ, ປະຕິບັດ, ພັດທະນາ ແລະ ນຳໄປສອນກ່ຽວກັບຮີດຄອງດ້ານວັດທະນະທຳ ແລະ ສິ່ງທີ່ສັກກາລະບູຊາ, ພິທີກຳ ແລະ ຮີດຄອງຕ່າງໆ. ນອກຈາກນັ້ນ ຄົນພື້ນເມືອງຍັງມີສິດໃນການຮັກສາ, ປົກປ້ອງ ແລະ ເຂົ້າເຖິງໃນນາມສ່ວນຕົວໃນສະຖານທີ່ທາງສາດສະໜາ ແລະ ວັດທະນະທຳ, ລວມທັງມີສິດນຳໃຊ້ ແລະ ຄຸ້ມຄອງວັດຖຸທາງ ພິທີກຳຕ່າງໆ.

ຄົນພື້ນເມືອງແມ່ນມີສິດໃນການຮັກສາ, ຄຸ້ມຄອງ, ປົກປ້ອງ ແລະ ພັດທະນາມໍລະດົກທາງວັນທະນະທຳ, ຄວາມຮູ້ ແລະ ການສະແດງອອກທາງວັດທະນະທຳທີ່ເຄີຍປະຕິບັດກັນມາ ກໍ່ຄື ການສະແດງອອກທາງດ້ານວິທະຍາສາດ, ເທັກໂນໂລຍີ ແລະ ວັດທະນະທຳເຊິ່ງລວມມີຊັບສິ່ງຂອງທີ່ປຸງແຕ່ງຂຶ້ນມາໃໝ່, ເມັດພັນພືດ, ການຢາ, ຄວາມຮູ້ດ້ານການປູກຝັງ ແລະ ລ້ຽງສັດ. ນອກນັ້ນ ພວກເຂົາຍັງມີສິດໃນການຮັກສາ, ຄຸ້ມຄອງ, ປົກປ້ອງ ແລະ ພັດທະນາຊັບສິນທາງປັນຍາທີ່ມີໃນດ້ານມໍລະດົກໃນທາງວັດທະນະທຳ, ຄວາມຮູ້ທາງຮີດຄອງປະເພນີ, ແລະ ການສະແດງອອກທາງວັດທະນະທຳທີ່ເຄີຍປະຕິບັດກັນມາ.

(ຖະແຫຼງການ ສປຊ ວ່າດ້ວຍສິດທິຂອງຄົນພື້ນເມືອງ ມາດຕາ 11, 12, 31 (1)).

ລັດທີ່ກ່ຽວຂ້ອງຕ້ອງພະຍາຍາມໃນການສົ່ງເສີມການປົກປ້ອງຊຸມຊົນທີ່ມັນພົວພັນເປັນພິເສດກັບທີ່ດິນ, ທີ່ກ່ຽວພັນ ກັບຄຸນຄ່າທາງວັດທະນະທຳ ແລະ ຄວາມເຊື່ອຖືທີ່ເກີດຂື້ນມາໃນດິນແດນທີ່ພວກເຂົາອາໃສຢູ່, ຍົກເວັ້ນບາງຢ່າງທີ່ມັນບໍ່ເໝາະສົມ ແລະ ຂັດກັບຄວາມດີງາມໃນສັງຄົມ. ລັດຕ່າງໆຕ້ອງເຮັດທຸກວິທີທາງທີ່ເໝາະສົມໃນການຟື້ນຟູທີ່ດິນຂອງຊຸມຊົນດ້ວຍຄວາມໃສ່ໃຈເປັນພິເສດໃນວັດມະນະທຳທີ່ເຄີຍມີມາແຕ່ ເດີມໃນຂົງເຂດທີ່ຊຸມຊົນເຄີຍອາໃສຢູ່ ແລະ ໄດ້ກັບຄືນມາສ້າງສາ ແລະ ພັດທະນາຊຸມຊົນດັ່ງກ່າວນັ້ນຄືນໃໝ່.

(ສົນທິສັນຍາສະຫະພາບອັບຟຣິກກາເພື່ອການປົກປ້ອງ ແລະ ຊ່ວຍເຫຼືອຄົນທີ່ບໍ່ມີທີ່ຢູ່ອາໃສພາຍໃນອັບຟຣິກກາ (ສົນທິສັນຍາ ກຳປາລາ) ມາດຕາ 4 (5) ແລະ 11 (5)).

## ຕົວຢ່າງການນຳໃຊ້

ໃນບົດຄຳເຫັນທົ່ວໄປເລກທີ 21 (2009) ກ່ຽວກັບສິດໃນການມີສ່ວນຮ່ວມໃນກິດຈະກຳທາງວັດທະນະທຳ, ທາງຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ກ່າວວ່າ "ວັດທະນະທຳ" ແມ່ນມີສາຍພົວພັນ "ກັບແນວທາງການດຳລົງຊີວິດ, ພາສາ, ວັນນະຄະດີທີ່ເປັນລັກສະນະທາງປາກເປົ່າ ແລະ ຂີດຂຽນ, ດົນຕີ ແລະ ເພງ, ການສື່ສານແບບພາສາໃບ້, ຄວາມເຊື່ອຖືທາງສາດສະໜາ, ພິທີກຳ ແລະ ການສັກກາລະບູຊາ, ກິດຈະກຳທາງກິລາຕ່າງໆ, ຂະບວນການຜະລິດ ຫຼື ທາງດ້ານເທັກໂນໂລຍີ, ສະພາບແວດລ້ອມທາງທຳມະຊາດ ແລະ ແບບຈຳລອງ, ອາຫານ, ເຄື່ອງນຸ່ງຮົ່ມ ແລະ ທີ່ພັກອາໃສ ແລະ ສິນລະປະ, ຮີດຄອງປະເພນີທີ່ຖືກສະແດງອອກຈາກບຸກຄົນ, ກຸ່ມຄົນ, ຊຸມຊົນເຊິ່ງມັນເປັນການບອກເຖິງແນວທາງແບບແຜນຂອງຊີວິດການເປັນຢູ່ຂອງເຂົາເຈົ້າທີ່ປະຕິບັດກັນມາ, ແລະ ການສ້າງຄວາມເປັນເອກະລັກທີ່ສະແດງເຖິງຄວາມເປັນຕົວເອງທີ່ກ່ຽວພັນເຖິງຄວາມເປັນຈິງທີ່ກຳລັງປະເຊີນໜ້າກັບໄພຮຸກຮານໃນດ້ານຊີວິດການເປັນຢູ່ຕ່າງໆ" (ວັກທີ 13). ຄະນະ**ກຳ**ມະທິການຍັງອະທິບາຍແຈ້ງກ່ຽວກັບການເຂົ້າເຖິງຊີວິດທາງດ້ານວັດທະນະທຳວ່າເປັນພື້ນຖານຂອງສິດໃນການມີສ່ວນຮ່ວມໃນກິດຈະກຳທາງວັດທະນະທຳເຊິ່ງລວມມີສິດໃນການດຳລົງຊີວິດຕາມແບບແຜນທາງວັດທະນະທຳ ແລະ ຕາມຊັບສິນທີ່ມີເຊັ່ນ: ທີ່ດິນ, ນ້ຳ, ຊີວະນາໆພັນ, ພາສາ ຫຼື ສະຖາບັນສະເພາະໃດໜຶ່ງ, ແລະ ສິດໃນການໄດ້ປະໂຫຍດຈາກມໍລະດົກທາງວັດທະນະທຳ (ວັກທີ 15 (b)).

ນອກນີ້, ອີງຕາມການໃຊ້ສິດທາງວັດທະນະທຳຂອງຊົນເຜົ່າທີ່ຖືກປົກປ້ອງຈາກມາດຕາທີ 27 ຂອງສົນທິສັນຍາວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ, ຄະນະກຳມະທິການສິດທິມະນຸດໄດ້ກ່າວໃນບົດຄຳເຫັນແນະນຳທົ່ວໄປເລກທີ 23 (1—4) ກ່ຽວກັບຄົນຊົນເຜົ່າວ່າ "ວັດທະນະທຳທີ່ສະແດງອອກໃນຫຼາຍຮູບແບບລວມມີແບບແຜນການດຳລົງຊີວິດສະເພາະໃດໜຶ່ງທີ່ມັນພົວພັນກັບການນຳໃຊ້ຊັບພະຍາກອນໃນທີ່ດິນ ໂດຍສະເພາະແມ່ນໃນກໍລະນີຂອງຄົນພື້ນເມືອງ", ພ້ອມນັ້ນ "ຄະນະກຳມະທິການຍັງກ່າວເພີ່ມອີກວ່າສິດທີ່ກ່າວມານີ້ແມ່ນອາດຈະລວມມີກິດຈະກຳທາງຮີດຄອງວ່າດ້ວຍການຫາປາ ຫຼື ການລ່າສັດ ແລະ ສິດໃນການດຳລົງຊີວິດແບບທີ່ໄດ້ຮັບການປົກປ້ອງຈາກກົດໝາຍ " (ວັກທີ 7).

ເພື່ອເປັນການປົກປ້ອງ ແລະ ສົ່ງເສີມສິດໃນການມີສ່ວນຮ່ວມໃນກິດຈະກຳທາງວັດທະນະທຳ, ກົນໄກສິດທິມະນຸດ ສປຊ ໄດ້ອອກໜັງສືແນະນຳກ່ຽວກັບປະເທດໃດໜຶ່ງສະເພາະ. ໃນບົດສັງເກດການກ່ຽວກັບປະເທດມາດາກາສກາ (2009), ຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ສະແດງຄວາມເປັນຫ່ວງກ່ຽວກັບການໃຊ້ປະໂຫຍດໃນທີ່ດິນ ແລະ ຊັບພະຍາກອນໃນທີ່ດິນແບບເປັນລະບົບທີ່ມີລັກສະນະກິດກັນຊາວມາລາກາສຊີ້ ແລະ ຊຸມຊົນທີ່ມີຄວາມຕ່າງທາງຊົນເຜົ່າຈາກການຮັກສາຄວາມສຳພັນທາງວັດທະນະທຳ-ສັງຄົມກັບສະພາບທາງສິ່ງແວດລ້ອມໃນທຳມະຊາດ ແລະ ທີ່ດິນດັ້ງເດີມທີ່ຢູ່ກັນມາແຕ່ເດີມ. ອີງຕາມການສັງເກດການເຫັນວ່າ ປະເທດມາດາກາສກາໄດ້ຮັບຮອງມາດຕະການພິເສດ ແລະ ນິຕິກຳບາງຢ່າງເພື່ອປົກປ້ອງທີ່ດິນບັນພະບູລຸດ ແລະ ວັດທະນະທຳທີ່ດີງາມຂອງຊົນເຜົ່າຕ່າງໆໄວ້ແລ້ວ.[86]

ຄະນະກຳມະທິການວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດໄດ້ກ່າວໃນບົດສັງເກດການກ່ຽວກັບ ສປປ ລາວ (2002) ໃນບັຫາການປະຕິບັດທາງຮີດຄອງປະເພນີຂອງຊົນເຜົ່າຕ່າງໆທີ່ອາໃສໃນເຂດພູເຂົາຕ່າງໆນັ້ນ, ທາງຄະນະກຳມະທິການໄດ້ສະແດງຄວາມເປັນຫ່ວງວ່າລະບົບການນຳໃຊ້ທີ່ດິນໃນ ສປປ ລາວ ໃນບ່ອນທີ່ມີຄົນອາໃສຢູ່ເພື່ອການທຳມາຫາກິນຕ່າງໆນັ້ນ ທາງລັດຖະບານແມ່ນຍັງບໍ່ສາມາດຮັບຮູ້ເຖິງສາຍພົວພັນລະຫວ່າງຄວາມດີງາມທາງວັດທະນະທຳທີ່ມີຢູ່ຂອງຊົນເຜົ່າໃນຜືນແຜ່ນດິນທີ່ອາໃສຢູ່ນັ້ນມັນມີລັກສະນະແບບໃດ. ສະນັ້ນ ທາງຄະນະກຳມະທິການຈຶ່ງຮຽກຮ້ອງໃຫ້ລັດຖະບານຕ້ອງດຳເນີນການທົບທວນລະບົບການນຳໃຊ້ທີ່ດິນຄືນໃໝ່ໃນດ້ານທີ່ກ່ຽວກັບປັດໃຈທາງວັດທະນະທຳທີ່ກ່ຽວຂ້ອງກັບທີ່ຢູ່ອາໃສຂອງຊົນເຜົ່າທີ່ມັນເປັນເອກະລັກອັນດີງາມຂອງເຂົາເຈົ້າ.[87]

*ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບສິດໃນການມີອາຫານທີ່ພໍພຽງ, ກ່ຽວກັບສິດໃນການມີສ່ວນຮ່ວມ, ກ່ຽວກັບສິດໃນການເຂົ້າເຖິງຂໍ້ມູນຂ່າວສານ ແລະ ກ່ຽວກັບສິດເສລີພາບໃນດ້ານສາດສະໜາ*

[86] E/C.12/MDG/CO/2, para. 33.
[87] CERD/C/LAO/CO/16-18, para. 16.

## ສິດທິຂອງຄົນພື້ນເມືອງໃນການມີສ່ວນຮ່ວມໃນກິດຈະກຳທາງວັດທະນະທຳ

ກ່ຽວກັບສິດຂອງຄົນພື້ນເມືອງ, ກົນໄກ ແລະ ເຄື່ອງມືສິດທິມະນຸດສາກົນໄດ້ຮັບຮູ້ເຖິງສິດທີ່ມັນກ່ຽວຂ້ອງກັບທີ່ດິນ, ອານາເຂດ ແລະ ຊັບສິນທີ່ຕົກທອດຈາກບັນພະບູລຸດນັ້ນຖືວ່າເປັນປັດໃຈພື້ນຖານທີ່ສຳຄັນສຳລັບວົງຈອນທາງວັດທະນະທຳ. ຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ກ່າວໃນບົດຄຳເຫັນທົ່ວໄປເລກທີ 21 (2009) ວ່າ ຖະແຫຼງການ ສປຊ ກ່ຽວກັບສິດຂອງຄົນພື້ນເມືອງ (ມາດຕາ 26 (a)), ຕາມທີ່ໄດ້ສັງເກດ "ລັກສະນະຂອງກິດຈະກຳທາງວັດທະນະທຳຂອງຊຸມຊົນຄົນພື້ນເມືອງແມ່ນເປັນເລື່ອງທີ່ກ່ຽວກັບການມີຕົວຕົນ, ການເປັນຢູ່ ແລະ ການພັດທະນາຂອງເຂົາເຈົ້າເຊິ່ງລວມມີສິດໃນທີ່ດິນ, ອານາເຂດ, ແລະ ຊັບພະຍາກອນທີ່ພວກເຂົາເປັນເຈົ້າຂອງ, ຄອບຄອງ ແລະ ນຳໃຊ້ມາແຕ່ດັ້ງເດີມແລ້ວ" (ວັກທີ 36).

ນອກນີ້, ສານສິດທິມະນຸດລະຫວ່າງລັດແຫ່ງອາເມລິກາໄດ້ລົງຄຳເຫັນວ່າຄວາມລົ້ມເຫຼວໃນການຮັບປະກັນສິດແກ່ຄົນພື້ນເມືອງໃນການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງທີ່ດິນບັນພະບູລຸດແມ່ນຈະຖືວ່າເປັນການລະເມີດສິດທີ່ພື້ນຖານໃນການພັດທະນາດ້ານວັດທະນະທຳ.[88] ໃນການພິຈາລະນາທີ່ຄ້າຍໆກັນນີ້, ສານໄດ້ລົງຄຳເຫັນວ່າ "ກຸ່ມຄົນພື້ນເມືອງຈາກຄວາມເປັນຈິງຂອງການມີຕົວຕົນຂອງເຂົາເຈົ້າແມ່ນມີສິດໃນການດຳລົງຊີວິດໃນດິນແດນທີ່ຕົກທອດໄດ້ຢ່າງອິດສະຫຼະ, ສາຍພົວພັນທີ່ກົມກຽວລະຫວ່າງທີ່ດິນ ແລະ ວັດທະນະທຳຂອງຄົນພື້ນເມືອງແມ່ນຕ້ອງໄດ້ຮັບການຮັບຮອງ ແລະ ຮັບຮູ້ໃຫ້ເປັນປັດໃຈພື້ນຖານຂອງວັດທະນະທຳ, ຄວາມເຊື່ອຖືໃນສິ່ງສັກສິດ, ແບບແຜນການດຳລົງຊີວິດ ແລະ ຄວາມຢູ່ລອດທາງເສດຖະກິດຂອງເຂົາເຈົ້າ. ສຳລັບຄົນພື້ນເມືອງແລ້ວ, ສາຍພົວພັນທີ່ກ່ຽວກັບທີ່ດິນນັ້ນມັນບໍ່ແມ່ນເປັນພຽງແຕ່ເລື່ອງຂອງການຄອບຄອງ ແລະ ການໃຊ້ປະໂຫຍດໃນທີ່ດິນ, ແຕ່ມັນເປັນປັດໃຈທາງຈິດວິນຍານ ແລະ ບັນພະບູລຸດທີ່ເຂົາເຈົ້າເລົ່ານັ້ນໄດ້ດຳລົງຊີວິດແບບມີຄວາມຜາສຸກ, ຈົນກ້າວໄປເຖິງດ້ານການປົກປ້ອງຄວາມເປັນເອກະລັກທາງວັດທະນະທຳ ແລະ ການຖ່າຍທອດສິ່ງທີ່ມີໄປໃຫ້ແກ່ຄົນລຸ້ນຕໍ່ໄປ."[89]

ຄະນະກຳມະທິການດ້ານການລົບລ້າງການຈຳແນກເຊື້ອຊາດໄດ້ກ່າວໃນບົດຄຳເຫັນທົ່ວໄປເລກທີ 23 (1997) ວ່າ ຕາມຄວາມເປັນ ຈິງໃນຫຼາຍໆພາກພື້ນໃນໂລກ, ຄົນພື້ນເມືອງແມ່ນໄດ້ສູນເສຍຊັບພະຍາກອນ ແລະ ທີ່ດິນໃນເວລາຕົກເປັນຫົວເມືອງຂຶ້ນ, ສູນເສຍໃຫ້ແກ່ບໍລິສັດ ແລະ ວິສະຫະກິດລັດ ແລະ ເອກະຊົນ, ຈາກສິ່ງທີ່ກ່າວມານີ້ ການສະຫງວນຮັກສາວັດທະນະທຳ ແລະ ເອກະລັກທາງປະຫວັດສາດແມ່ນໄດ້ຕົກ ຫຼື ຢູ່ໃນຄວາມສ່ຽງ.

ອີງຕາມຄວາມເຂົ້າໃຈ, ກົນໄກສິດທິມະນຸດ ສປຊ ໄດ້ວາງຫຼັກການພັນທະຄວາມຮັບຜິດຊອບໃຫ້ແກ່ລັດພາຄີຕ່າງໆເພື່ອໃຫ້ການຮັບຮອງສິດແກ່ຄົນພື້ນເມືອງໃນການມີສ່ວນຮ່ວມໃນວັດທະນະທຳ. ໃນບົດຄຳເຫັນທົ່ວໄປເລກທີ 21 (2009), ຄະນະກຳມະທິການດ້ານສິດໃນເສດຖະກິດ ສັງຄົມ ແລະ ວັດທະນະທຳ ໄດ້ຮຽກຮ້ອງບັນດາລັດຕ່າງໆໃຫ້ "ໃຊ້ມາດຕະການເພື່ອຮັບຮອງ ແລະ ປົກປ້ອງສິດຂອງຄົນພື້ນເມືອງໃນການເປັນເຈົ້າຂອງ, ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ທີ່ດິນ"ໃນຊຸມຊົນ, ດິນແດນ ແລະ ຊັບພະຍາກອນຕ່າງໆ, ພ້ອມທັງສ້າງເງື່ອນໄຂໃນການສົ່ງທີ່ດິນ ແລະ ດິນແດນທີ່ພວກເຂົາເຄີຍນຳໃຊ້, ແລະ ສືບທອດກັນມາເຫຼົ່ານັ້ນຄືນໃຫ້ແກ່ພວກເຂົາ" (ມາດຕາທີ 36). ໃນບົດ**ຄຳ**ເຫັນທົ່ວໄປ ເລກທີ 23 (1997), ຄະນະກຳມະທິການດ້ານການລົບລ້າງການຈຳແນກເຊື້ອຊາດໄດ້ຮຽກຮ້ອງໃຫ້ທຸກລັດ "ຕ້ອງຮັບຮູ້ ແລະ ເຄົາລົບພາສາ, ປະຫວັດສາດ, ວັດທະນະທຳ ແລະ ແບບແຜນກາ**ນດຳລົງ**ຊີວິດຂອງຄົນພື້ນ ເມືອງທີ່ຫາຍາກນັ້ນໃຫ້ເປັນຄວາມອຸດົມຮັ່ງມີຂອງຄວາມຫຼາກຫຼາຍດ້ານວັດທະນະທຳຂອງລັດຕົນ ແລະ ຕ້ອງໃຫ້ການສົ່ງເສີມການປົກປ້ອງໄປນຳ" (ວັກທີ 4 (a)). ຄະນະກຳມະທິການຍັງຮຽກຮ້ອງເປັນພິເສດແກ່ລັດຕ່າງໆໃຫ້ "ຮັບຮູ້ ແລະ ປົກປ້ອງສິດຂອງຄົນພື້ນເມືອງໃນການເປັນເຈົ້າຂອງ, ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ທີ່ດິນ, ດິນແດນ ແລະ ຊັບສິນຂອງຊຸມຊົນ" (ວັກທີ 5). ໃນບົ**ດຄຳ**ເຫັນທົ່ວໄປເລກທີ 23 (1994), ຄະນະກຳມະທິການສິດທິມະນຸດໄດ້ໃຫ້ລາຍລະອຽດວ່າຄວາມຜາສຸກຂອງສິດທິທາງວັດທະນະທຳຂອງຄົນພື້ນເມືອງນັ້ນແມ່ນອາດ "ຈະຕ້ອງມີມາດຕະການທາງກົດໝາຍທີ່ເໝາະສົມເພື່ອປົກປ້ອງ ແລະ ນຳໃຊ້ເຂົ້າໃນການຮັບປະກັນ-

---

[88] Inter-American Court of Human Rights: *Case of the Yakye Axa Indigenous Community* v. *Paraguay*, Series C, No. 125 (17 June 2005), para. 131. See *Land and Human Rights: Annotated Compilation of Case Law*.
[89] Inter-American Court of Human Rights, *Case of the Mayagna (Sumo) Awas Tingni Community* v. *Nicaragua*, Series C, No. 79 (31 August 2001), para. 149. See *Land and Human Rights: Annotated Compilation of Case Law*.

ການມີສ່ວນຮ່ວມຂອງຊຸມຊົນທີ່ເປັນຊົນເຜົ່າໃນບັນຫາການຕັດສິນໃຈທີ່ມັນອາດມີຜົນກະທົບໃນຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ໄດ້ຢ່າງມີປະສິດທິຜົນ" (ວັກທີ 7).

ນອກຈາກນີ້ ກົນໄກສິດທິມະນຸດຍັງໄດ້ອອກຄຳເຫັນແນະນຳແກ່ປະເທດໃດໜຶ່ງສະເພາະກ່ຽວກັບສິດທາງວັດທະນະທຳຂອງຄົນພື້ນເມືອງ. ຕາມການລາຍງານຂອງນັກລາຍງານພິເສດໄດ້ລາຍງານສະພາບການຂອງຄົນພື້ນເມືອງໃນປະເທດບອດສວານ້ຳ (2010) ວ່າລັດຖະບານຄວນສ້າງໂຄງການການພັດທະນາເຊິ່ງລວມມີການພັດທະນາເພື່ອຄົນພື້ນເມືອງທີ່ບໍ່ມີທີ່ຢູ່ອາໃສ ແລະ ເພື່ອອຳນວຍຄວາມສະດວກໃນການຮັບຮູ້ຄວາມຫຼາກຫຼາຍທາງວັດທະນະນຳຂອງເຂົາເຈົ້າ. ນັກລາຍງານພິເສດຍັງໄດ້ໃຫ້ຄຳເຫັນແນະນຳ ວ່າໂຄງການການພັດທະນາທີ່ກ່າວມານັ້ນແມ່ນຄວນສົ່ງເສີມກິດຈະກຳທາງເສດຖະກິດ ແລະ ການພັດທະນາໂດຍຜ່ານຂະບວນ ການປຶກສາຫາລືກັນກັບຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ໃຫ້ການເຄົາລົບທາງດ້ານວັດທະນະທຳຂອງຊຸມຊົນທີ່ຢູ່ໃນເປົ້າໝາຍ.[90] ໃນບົດລາຍງານການສັງເກດການກ່ຽວກັບສະຫະພັນລັດເຊຍ (2001), ຄະນະກຳມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ແນະນຳວ່າລັດຖະບານຕ້ອງເອົາສິດທິຂອງຄົນພື້ນເມືອງເຂົ້າໃນກົດໝາຍພາຍໃນຂອງຕົນເພື່ອຮັບຮູ້ສິດທີ່ກ່ຽວ ຂ້ອງກັບທີ່ດິນ, ປ່າໄມ້, ແລະ ນ້ຳ, ນອກຈາກນີ້ ກົດໝາຍຕ້ອງບັນຈຸເອົາເລື່ອງທີ່ກ່ຽວຂ້ອງກັບສິດຂອງຄົນພື້ນເມືອງທີ່ມີຕໍ່ທີ່ດິນ ແລະ ຊັບສິນທີ່ສືບທອດກັນມາຈາກບັນພະບູລຸດເຊິ່ງວ່າຊັບສິນເຫຼົ່ານັ້ນມັນເປັນສິ່ງທີ່ຈຳເປັນເພື່ອຄວາມຢູ່ລອດໃນການດຳລົງຊີວິດຂອງເຂົາເຈົ້າ.[91]

ກ່ຽວກັບການເຂົ້າເຖິງທີ່ດິນ ແລະ ອານາເຂດ ຂອງບັນພະບູລຸດຂອງຄົນພື້ນເມືອງ ແມ່ນໃຫ້ເບິ່ງບົດສະຫຼຸບກ່ຽວກັບສິດຂອງຄົນພື້ນເມືອງທີ່ກ່ຽວກັບຊັບສິນ, ອານາເຂດ ແລະ ທີ່ດິນດັ້ງເດີມຂອງເຂົາເຈົ້າເຊິ່ງລວມມີບັນຫານ້ຳດື່ມນຳ.

## ຄະດີຕົວຢ່າງ

**ສານສິດທິມະນຸດລະຫວ່າງລັດອາເມລິກາ: ຄົນພື້ນເມືອງກິດສວ້າ ໃນເມືອງ ຊາຣາຢາກູ ກັບ ປະເທດເອວສະວາດໍ, ເອກະສານ C, ເລກທີ 245 (27 ມິຖຸນາ 2012).** ໃນຄະດີດັ່ງກ່າວແມ່ນກ່ຽວກັບການໃຫ້ອານຸຍາດໂດຍລັດຖະບານແກ່ບໍລິສັດນ້ຳມັນເອກະຊົນເພື່ອດຳເນີນການຂຸດຄົ້ນ ແລະ ໃຊ້ປະໂຫຍດຈາກທີ່ດິນທາງບັນພະບູລຸດຂອງຊາວກິດສວ້າໂດຍບໍ່ໄດ້ມີການປຶກສາຫາລືໃດໆກັບພວກເຂົາ. ການບັງຄັບໃຫ້ຍົກຍ້າຍແມ່ນເກີດມີການຮື້ທຳລາຍສະຖານທີ່ສັກກະລະບູຊາຕ່າງໆ, ເກີດມີການຂັບໄລ່ປະຊາຊົນ ແລະ ນຳໄປສູ່ຄວາມວຸ້ນວາຍລະຫວ່າງຊຸມຊົນພື້ນເມືອງ ແລະ ບໍລິສັດທີ່ຮ່ວມມືກັນກັບທາງກອງກຳລັງລັດຖະບານ. ສານໄດ້ພິຈາລະນາວ່າເອວສະວາດໍຕ້ອງຮັບຜິຊອບຕໍ່ສິ່ງທີ່ເກີດຂື້ນຕ່າງໆໃນການລະເມີດສິດຂອງຄົນພື້ນເມືອງເຫຼົ່ານັ້ນຕາມລັດຖະທຳມະນູນ, ຮັບຜິຊອບຕໍ່ຄວາມເສຍຫາຍໃນຊັບສິນ ແລະ ຄວາມເປັນເອກະລັກດ້ານວັດທະນະທຳຂອງເຂົາເຈົ້າ. ສານໄດ້ຮຽກຮ້ອງໃຫ້ລັດຖະບານຕ້ອງດຳເນີນການປຶກສາຫາລືໂດຍບໍ່ຕ້ອງໂຍນເລື່ອງໄປໃຫ້ຝ່າຍອື່ນຮັບຜິຊອບ.[92]

### ຫຼັກການ ແລະ ຄູ່ມືຕ່າງໆທີ່ກ່ຽວຂ້ອງ

- ຄູ່ມືອາສາກ່ຽວກັບຄວາມຮັບຜິຊອບໃນການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງໃນສະບຽງອາຫານ (Rome, FAO, 2012), ຄຳແນະນຳທີ 9.1, 9.7, 16.2, 18.2
- ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຂາດທີ່ຢູ່ອາໃສ (A/HRC/4/18, annex I).

[90] A/HRC/15/37/Add.2, paras. 31 and 79.
[91] E/C.12/RUS/CO/5, para. 7.
[92] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ

## ປ. ສິດໃນດ້ານນ້ຳກິນ ແລະ ໂພສະນາການ

### ບົດສະເໜີ

ການເຂົ້າເຖິງນ້ຳດື່ມທີ່ສະອາດ ແລະ ໂພສະນາການທີ່ພໍພຽງແມ່ນເປັນສາຍພົວພັນທີ່ບໍ່ສາມາດຕັດແຍກອອກຈາກເລື່ອງທີ່ດິນ ແລະ ບ້ານຢູ່, ພ້ອມທັງເລື່ອງການນຳໃຊ້ຊັບພະຍາກອນທຳມະຊາດ. ການກຳຈັດສິ່ງເສດເຫຼືອ ແລະ ຂອງເສຍທີ່ກະທົບຕໍ່ທຳມະຊາດ ແລະ ສິ່ງແວດລ້ອມ. ການຮັກສາສິດການຄອບຄອງສ່ວນຫຼາຍແລ້ວແມ່ນຈະກ່ຽວກັບເລື່ອງການເຂົ້າເຖິງນ້ຳດື່ມ, ໂພສະນາການ ແລະ ການບໍລິການທີ່ກ່ຽວກັບບ້ານ ຢູ່ໃນເຂດຊົນນະບົດ ແລະ ໃນເມືອງ.

> "ຕົວຢ່າງ: ການວິເຄາະສິດໃນດ້ານນ້ຳດື່ມ ແລະ ໂພສະນາການ ແມ່ນໄດ້ເປີດເຜີຍບັນຫາການຂາດຄວາມໝັ້ນຄົງໃນການຄອບຄອງທີ່ດິນວ່າເປັນອຸປະສັກຕົ້ນຕໍຕໍ່ຄົນທີ່ຢູ່ໃນສະລຳ ໂດຍສະເພາະ"
>
> *ທີ່ມາຂໍ້ມູນ:* ບົດລາຍງານຂອງຜູ້ຊ່ຽວຊານອິດສະຫຼະກ່ຽວກັບນ້ຳດື່ມທີ່ປອດໄພ

ການຂາດການຮັບປະກັນດ້ານການຄອບຄອງແມ່ນອາດເປັນການກີດຂວາງການລົງທຶນຈາກໜ່ວຍງານບໍລິການ ແລະ ຜູ້ຢູ່ອາໃສໃນການທີ່ຈະລົງທຶນໃສ່ດ້ານນ້ຳກິນ ແລະ ໂພສະນາການທີ່ມັນພົວພັນເຖິງການຕັ້ງຖິ່ນຖານທີ່ຍັງບໍ່ທັນໄດ້ຮັບອານຸຍາດເຊິ່ງມັນສ່ຽງທີ່ຈະຖືກຍົກຍ້າຍໄປບ່ອນອື່ນໄດ້. ນອກນີ້, ເລື່ອງການຖືກບັງຄັບໃຫ້ຍົກຍ້າຍຈາກທີ່ດິນ ແລະ ບ້ານຢູ່ກໍ່ຄືກ່ຽວຂ້ອງກັບບັນຫາການຕັດແຍກ ຄົນອອກຈາກການເຂົ້າເຖິງນ້ຳດື່ມນັ້ນແມ່ນອາດຈະເກີດຈາກບັນຫາການຂັດແຍ່ງລະຫວ່າງຜູ້ທີ່ຢູ່ອາໃສ ແລະ ເຈົ້າຂອງທີ່ດິນ ຫຼື ຜູ້ຄອບຄອງທີ່ດິນຕອນດັ່ງກ່າວ.

ໃນເຂດຊົນນະບົດ, ເຂດທີ່ມີການປ່ຽນແປງ, ເຂດທີ່ມີການທຳລາຍ ແລະ ມີມົນລະພິດໃນນ້ຳແມ່ນເປັນສາຍເຫດຈາກໂຄງການການພັດທະນາຂະໜາດໃຫຍ່ ຫຼື ຈາກຂະແໜງອຸດສະຫະກຳເຊັ່ນ:ການຂຸດຄົ້ນບໍ່ແຮ່, ນ້ຳມັນ ຫຼື ທາງດ້ານຂະແໜງອຸດສະຫະກຳການກະເສດ, ເຊິ່ງວ່າໂຄງການເຫຼົ່ານັ້ນແມ່ນຈະບຸກລຸກແມ່ນ້ຳ ແລະ ທຳລາຍຄຸນນະພາບຂອງນ້ຳທີ່ໃກ້ຄຽງແລ້ວນຳໄປສູ່ບັນຫາການຈຳກັດສິດຂອງຄົນໃນການເຂົ້າເຖິງນ້ຳດື່ມ. ນອກນີ້ ໃນເວລາທີ່ຊຸມຊົນໄດ້ຖືກກີດກັນຈາກການເຂົ້າເຖິງນ້ຳໃນເຂດທີ່ຢູ່ອາໃສ, ແມ່ຍິງ ແລະ ເດັກນ້ອຍແມ່ນອາດຈະໄດ້ຮັບຜົນກະທົບຄວາມສ່ຽງໃນດ້ານສຸກຂະພາບໃນລະດັບທີ່ສູງອັນເນື່ອງມາຈາກເຂົາເຈົ້າເຫຼົ່ານັ້ນແມ່ນມີພາລະໃນການເອົານ້ຳໄປໃຊ້ໃນຄອບຄົວ. ແມ່ຍິງ ແລະ ເດັກນ້ອຍຍັງໄດ້ປະເຊີນກັບຄວາມຮຸນແຮງໃນເວລາທີ່ພະຍາຍາມຈະເຂົ້າຫານ້ຳທີ່ຫ່າງໄກອອກໄປ ຫຼື ເຂົ້າຫາທາງດ້ານໂພສະນາການ. ຄວາມສ່ຽງທີ່ມີຕໍ່ແມ່ຍິງ ແລະ ເດັກນ້ອຍທີ່ກ່າວມານັ້ນແມ່ນຖືວ່າຈະເປັນການຂັດຂວາງສິດເສລີພາບໃນການເຂົ້າເຖິງນ້ຳ ແລະ ໂພສະນາການຂອງເຂົາເຈົ້າ ແລະ ຄອບຄົວຂອງເຂົາເຈົ້າອີກດ້ວຍ.

### ຫຼັກການສາກົນທີ່ສາມາດນຳໃຊ້ກັບບັນຫາທີ່ດິນ

ທຸກຄົນແມ່ນມີສິດໃນການໄດ້ຮັບມາດຖານຂອງຊີວິການເປັນຢູ່ທີ່ພໍພຽງຂອງຕົນເອງ ແລະ ຄອບຄົວ ເຊິ່ງລວມມີການມີອາຫານ, ມີເສື້ອຜ້າ, ມີບ້ານ, ແລະ ໄດ້ຮັບການພັດທະນາໃນເງື່ອນໄຂການດຳລົງຊີວິດທີ່ພໍພຽງ.

(ຖະແຫຼງການສິດທິມະນຸດສາກົນ ມາດຕາ 25, ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະ**ທຳ** ມາດຕາ 11.1, ໃຫ້ອ່ານປັ້ນກັນກັບມະຕິຂອງສະພາຄວາມໝັ້ນຄົງ 15/9 ວັກທີ 2 ແລະ 3)

ທຸກລັດແມ່ນຕ້ອງເຮັດທຸກວິທີທາງໃນການລົບລ້າງບັນຫາການຈຳແນກຕໍ່ແມ່ຍິງໃນເຂດຊົນນະບົດເພື່ອເປັນການຮັບປະກັນພື້ນຖານຄວາມເທົ່າທຽມລະຫວ່າງເພດ, ໃຫ້ໂອກາດໃນການມີສ່ວນຮ່ວມ ແລະ ໄດ້ປະໂຫຍດຈາກໂຄງການການພັດທະນາຊົນນະບົດ ແລະ ຕ້ອງໃຫ້ການຮັບປະກັນເປັນພິເສດແກ່ແມ່ຍິງໃນດ້ານສິດທີ່ຈະໄດ້ຮັບເງື່ອນໄຂການດຳລົງຊີວິດທີ່ພໍພຽງໂດຍສະເພາະແມ່ນເລື່ອງທີ່ກ່ຽວກັບການຈັດແບ່ງບ້ານຢູ່ອາໃສ, ໂພສະນາການ, ໄຟຟ້າ ແລະ ນ້ຳດື່ມ, ການຂົນສົ່ງ ແລະ ສື່ສານ.

(ສົນທິສັນຍາກ່ຽວກັບການລົບລ້າງບັນຫາການຈຳແນກຕໍ່ແມ່ຍິງ ມາດຕາທີ 14 (2) (h))

## ຕົວຢ່າງການນຳໃຊ້

ການຍອມຮັບຄວາມສຳຄັນຂອງການເຂົ້າເຖິງນ້ຳດື່ມທີ່ປອດໄພ ແລະ ສະອາດ ແລະ ເຂົ້າເຖິງໂພສະນາການທີ່ເທົ່າທຽມຖືວ່າເປັນປັດໃຈທີ່ສຳຄັນໃນການຮັບຮູ້ສິດທິມະນຸດຫຼາຍຢ່າງ, ສະມັດຊາໃຫຍ່ ແລະ ສະພາສິດທິມະນຸດໄດ້ຮັບຮູ້ວ່າສິດທິໃນນ້ຳດື່ມ ແລະ ໂພສະນາການວ່າເປັນປັດໃຈພື້ນຖານຂອງສິດທິມະນຸດໃນການມີຊີວິດການເປັນຢູ່ທີ່ມີມາດຕະຖານທີ່ເໝາະສົມ.[93]

ໃນບົດຄຳເຫັນທົ່ວໄປເລກທີ 15 (2002) ທາງຄະນະກຳມະທິການສິດທິທາງ ເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ທົບທວນວ່າມາດຕາ 11.1 ຂອງສົນທິສັນຍາວ່າດ້ວຍສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ໃຫ້ລາຍລະອຽດສິດທິມະນຸດຫຼາຍຢ່າງວ່າມັນເກີດຂຶ້ນມາ (ບໍ່ສາມາດຕັດແຍກໄປຈາກຄົນໄດ້) ຈາກການຮັບຮູ້ສິດໃນການມີມາດຕະຖານໃນການດຳລົງຊີວິດທີ່ພໍພຽງ "ລວມມີອາຫານ, **ນ້ຳ** ແລະ ເຄື່ອງນຸ່ງຮົ່ມ ແລະ ບ້ານຢູ່". ຄະນະກຳມະທິການໄດ້ຊີ້ແຈງວ່າ "ການໃຊ້ຄຳສັບວ່າ 'ລວມມີ' ແມ່ນສະແດງໃຫ້ເຫັນວ່າປະເພດຂອງສິດນີ້ແມ່ນມີຫຼາຍຢ່າງປະກອບກັນ. ສິດໃນການມີນ້ຳດື່ມແມ່ນຖືກຈັດໃນປະເພດຂອງສິດທີ່ໄດ້ຖືກຮັບປະກັນໃນມາດຕະຖານການດຳລົງຊີວິດທີ່ສຳຄັນຢ່າງຈະແຈ້ງແລ້ວ ໂດຍສະເພາະຕັ້ງແຕ່ມັນຖືກຮັບຮູ້ວ່າມັນເປັນເງື່ອນໄຂພື້ນຖານທີ່ສຳຄັນທີ່ສຸດສຳລັບການດຳລົງຊີວິດ." ຄະນະກຳມະທິການຍັງໄດ້ເນັ້ນວ່າສິດທິໃນການມີນ້ຳດື່ມນັ້ນແມ່ນເປັນສິ່ງທີ່ສຳຄັນສຳລັບຊີວິດທີ່ມີກຽດສັກສີຂອງມະນຸດ, ແລະ ເປັນສ່ວນປະກອບໜຶ່ງໃນການຮັບຮູ້ສິດທິຕ່າງໆໄປນຳ. ຄະນະກຳມະທິການໄດ້ຮຽກຮ້ອງໃຫ້ທຸກລັດພາຄີໃຫ້ເຮັດທຸກວິທີທາງເພື່ອຮັບປະກັນວ່າເຂດຊົນນະບົດ ແລະ ຕົວເມືອງແມ່ນໄດ້ຮັບໂອກາດການເຂົ້າເຖິງສິ່ງອຳນວຍຄວາມສະດວກໃນການຮັກສານ້ຳທີ່ເໝາະສົມ, ໃນນັ້ນຍັງໄດ້ເນັ້ນວ່າບໍ່ມີບຸກຄົນໃດທີ່ຈະຖືກປະຕິເສດສິດໃນການເຂົ້າເຖິງນ້ຳໃນພື້ນຖານທີ່ພົວພັນກັບບ້ານຢູ່ ຫຼື ໃນທີ່ດິນໄດ້. ລັດຕ່າງໆຄວນຈະຮັບປະກັນໃຫ້ຄົນພື້ນເມືອງມີໂອກາດໃນການເຂົ້າເຖິງຊັບພະຍາກອນນ້ຳທີ່ມີໃນທີ່ດິນບັນພະບູລຸດໃຫ້ໄດ້ຮັບການປົກປ້ອງຈາກກິດຈະກຳຕ່າງໆ ແລະ ບັນຫາມົນລະພິດທີ່ຜິດກົດໝາຍ (ວັກທີ 16)(c) ແລະ d()).

ທາງບັນດາຜູ້ຊ່ຽວຊານກ່ຽວກັບເລື່ອງພັນທະໃນສິດທິມະນຸດທີ່ກ່ຽວກັບນ້ຳດື່ມທີ່ປອດໄພ ແລະ ໂພສະນາການໄດ້ເນັ້ນວ່າການຂາດໂອກາດໃນການເຂົ້າເຖິງນ້ຳດື່ມ ແລະ ໂພສະນາການນັ້ນມັນບໍ່ແມ່ນພຽງແຕ່ເປັນບັນຫາທີ່ມາຈາກຄວາມຂາດແຄນທາງເທັກໂນໂລຍີ ແລະ ຊັບພະຍາກອນຕ່າງໆ. ແຕ່ມັນເປັນເລື່ອງຂອງການໃຫ້ບູລິມະສິດ ແລະ "ເລື່ອງລະບົບຂອງສາຍພົວພັນທາງອຳນາດໃນສັງຄົມ ແລະ ບັນຫາຂອງຄວາມທຸກຍາກ ພ້ອມກັບບັນຫາຄວາມບໍ່ເທົ່າທຽມທີ່ຝັງຮາກມາແຕ່ຍາວນານແລ້ວ".[94] ຕໍ່ມານັກລາຍງານພິເສດກ່ຽວກັບສິດທິໃນນ້ຳດື່ມທີ່ປອດໄພ ແລະ ໂພສະນາການຕ່າງໆແມ່ນໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດທີ່ເປັນຕົວຢ່າງທີ່ດີໃນການຈັດຕັ້ງປະຕິບັດສິດໃນການມີນ້ຳ ແລະ ໂພສະນາການວ່າການຂາດໂພສະນາການທີ່ເໝາະສົມໃນຕົວເມືອງຕ່າງໆແມ່ນຖືວ່າເກີດຈາກການຂາດຫຼັກປະກັນໃນການຄອບຄອງທີ່ດິນ, ພ້ອມນັ້ນນັກລາຍງານພິເສດຍັງເນັ້ນເລື່ອງການປັບປຸງເຊັ່ນ: ການສ້າງຫ້ອງວິດ ແມ່ນອາດຈະຕ້ອງໄດ້ອອກລະບຽບ ແລະ ບັງຄັບໃຫ້ເຈົ້າຂອງທີ່ດິນຕ້ອງໄດ້ກໍ່ສ້າງສິ່ງທີ່ວ່ານີ້. ແນວໃດກໍ່ດີ ນັກລາຍງານພິເສດກໍໄດ້ໃຫ້ການແນະນຳວ່າ "ຖ້າຫາກບໍ່ມີການຮັບປະກັນໃນຄວາມໝັ້ນຄົງຂອງສິດໃນການຄອບຄອງທີ່ດິນ, ບຸກຄົນຕ່າງໆກໍຈະບໍ່ເຕັມໃຈໃນການລົງທຶນກໍ່ສ້າງໃນເລື່ອງສຸກຂະອານາໄມເພາະວ່າພວກເຂົາອາດຈະຖືກບັງຄັບໃຫ້ຍົກຍ້າຍໜີໃນມື້ໃດມື້ໜຶ່ງກໍ່ເປັນໄດ້, ນອກນັ້ນຜູ້ທີ່ຈະມາລົງທຶນໃຫ້ບໍລິການດ້ານນີ້ກໍແມ່ນມີຄວາມລັງເລທີ່ຈະຂະຫຍາຍກິດຈະກຳຂອງຕົນເອງໄປໃນເຂດທີ່ມີລາຍໄດ້ຕ່ຳເພາະວ່າມັນມີຄວາມສ່ຽງໃນການລົງທຶນ"[95]

ໃຫ້ເບິ່ງບົດສະລຸບສງລວມກ່ຽວກັບສິດໃນການມີບ້ານຢູ່ທີ່ພໍພຽງ

[93] General Assembly resolution 64/292, preamble and para. 1. Note that water for agriculture is not included in the right to water.
[94] A/65/254, para. 50.
[95] A/HRC/18/33/Add.1, para. 49.

ໃນບົດສະຫຼຸບສັງເກດການກ່ຽວກັບປະເທດເອວສະວາດໍ (2010), ທາງຄະນະກຳມະທິການກ່ຽວກັບການລົບລ້າງບັນຫາການຈຳແນກເຊື້ອຊາດໄດ້ໃຫ້ຄຳເຫັນວ່າລັດທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີທາງໃນການໃຊ້ຄວາມສາມາດເພື່ອປັບປຸງຄວາມຜາສຸກໃນການໃຊ້ສິດຂອງຄົນພື້ນເມືອງທີ່ມີໃນດ້ານເສດຖະກິດ ສັງຄົມ ແລະ ວັດທະນະທຳເຊິ່ງລວມມີການເຂົ້າເຖິງນ້ຳດື່ມທີ່ສະອາດ ແລະ ຮັບປະກັນສິດໃນທີ່ດິນທີ່ເຂົາເຈົ້າໄດ້ຄອບຄອງ ນຳໃຊ້ມາເປັນເວລາດົນນານແລ້ວ.[96]

ໃຫ້ເບິ່ງບົດສະຫຼຸບສັງລວມກ່ຽວກັບສິດຂອງຄົນພື້ນເມືອງທີ່ມີໃນທີ່ດິນ, ອານາເຂດ ແລະ ຊັບພະຍາກອນຕ່າງໆທີ່ສືບທອດກັນມາເຊິ່ງລວມທັງນ້ຳ.

## ຄະດີຕົວຢ່າງ:

**ຄະນະກຳມະທິການສິດທິມະນຸດ ແລະ ສິດທິຂອງປະຊາຊົນອັບຟຣິກາ: ອົງການສິດທິມະນຸດຊູດານ ແລະ ສູນເພື່ອສິດໃນທີ່ຢູ່ອາໃສ ແລະ ການຖືກຍົກຍ້າຍ *(COHRE) ກັບ ປະເທດຊູດານ, ເອກະສານເລກທີ* 279/03–296/05 (27 ພຶດສະພາ 2009).** ຄະດີດັ່ງກ່າວແມ່ນກ່ຽວກັບການລະເມີດສິດທິມະນຸດເຊິ່ງກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ການຮື້ທຳລາຍຊັບສິນທາງອາຫານ ແລະ ນ້ຳອັນເນື່ອງມາຈາກການຖືກຍົກຍ້າຍຈາກທີ່ດິນເພາະບັນຫາການຂັດແຍ່ງໃນເຂດດາໂຟ້. ຄະນະກຳມະທິການໄດ້ພົບເຫັນວ່າຊຸມຊົນຕ່າງໆແມ່ນໄດ້ຮັບຜົນກະທົບຈາກການຖືກຈຳກັດສິດໃນຊີວິດການເປັນຢູ່ ແລະ ຜູ້ທີ່ກ່ຽວຂ້ອງຕ້ອງໃຫ້ຄວາມຮັບຜິດຊອບ, ໃນນັ້ນຈະລວມມີການສ້າງທີ່ຢູ່ອາໃສພື້ນຖານໂຄງລ່າງທາງເສດຖະກິດ ສັງຄົມຄືນໃໝ່ເຊັ່ນ: ລະບົບການສຶກສາ, ສາທາລະນະສຸກ, ການບໍລິການທາງດ້ານກະຊິກຳ ແລະ ແຫຼ່ງນ້ຳ, ສິ່ງທີ່ກ່າວມານີ້ແມ່ນຖືວ່າເປັນການສ້າງເງື່ອນໄຂແກ່ຜູ້ທີ່ກັບຄືນຖິ່ນຖານ ຢ່າງມີຄວາມ ປອດໄພ ແລະ ມີກຽດສັກສີໃນດ້ານການເປັນຜູ້ອົບພະຍົບ ແລະ ຂາດທີ່ຢູ່ອາໃສ.[97]

---

[96] CERD/C/SLV/CO/14-15, para. 19.
[97] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ

## ຜ. ສິດຂອງຄົນພື້ນເມືອງໃນທີ່ດິນດັ້ງເດີມ, ອານາເຂດ ແລະ ຊັບພະຍາກອນຕ່າງໆເຊິ່ງລວມມີແຫຼ່ງນ້ຳ

## ບົດສະເໜີ

> "ກິດຈະກຳທີ່ດຶງດູດ, ພຶດເສດຖະກິດ ແລະ ແບບຢ່າງການບໍລິໂພກທີ່ຟຸມເຟືອຍ, ມົນລະພິດທີ່ແຜ່ກະຈາຍ ແລະ ການທຳລາຍສິ່ງແວດລ້ອມແມ່ນໄດ້ເຮັດໃຫ້ບັນຫາການປ່ຽນແປງສະພາບອາກາດເກີດຂື້ນ. ປະກົດການເຫຼົ່ານັ້ນແມ່ນໄດ້ເຮັດໃຫ້ມີຜົນກະທົບຕໍ່ຄົນພື້ນເມືອງໂດຍສະເພາະອັນທີ່ກ່ຽວກັບແບບແຜນການດຳລົງຊີວິດທີ່ຕິດພັນກັບທີ່ດິນບັນພະບູລຸດ ແລະ ຊັບພະຍາກອນທາງທຳມະຊາດຂອງເຂົາເຈົ້າ, ພ້ອມນັ້ນ ມັນຍັງໄດ້ເກີດປະກົດການໃໝ່ຂອງການບັງ ຄັບໃຫ້ຍົກຍ້າຍແກ່ຄົນພື້ນເມືອງໃຫ້ອອກຈາກທີ່ດິນບັນພະບູລຸດທີ່ມີ ເຊິ່ງວ່າບັນຫາທີ່ກ່າວມານີ້ມັນຈະເຮັດໃຫ້ເກີດ ຄວາມທຸກຍາກ ແລະ ເກີດພະຍາດຕ່າງໆຫຼາຍຂື້ນ"
>
> ທີ່ມາຂໍ້ມູນ: ບົດລາຍງານຂອງນັກລາຍງານພິເສດກ່ຽວກັບສິດຂອງຄົນພື້ນເມືອງ (A/HRC/4/32), ວັກທີ 49.

ຄົນພື້ນເມືອງໃນທຸກພາກຂອງໂລກແມ່ນມີຄວາມຜາສຸກໃນສາຍພົວພັນກ່ຽວກັບທີ່ດິນບັນພະບູລຸດທາງຈິດວິນຍານທີ່ໂດດເດັ່ນ, ທີ່ດິນດັ່ງກ່າວແມ່ນໄດ້ໃຫ້ຄວາມໝາຍໃນດ້ານການດຳລົງຊີວິດ, ຄວາມຢູ່ດີກິນດີ ແລະ ຄວາມຢູ່ລອດດ້ານວັດທະນະທຳ. ເພາະສະນັ້ນ ສິດທີ່ທີ່ມັນພົວພັນເປັນສ່ວນໃຫຍ່ກັບການເຂົ້າເຖິງ, ການນຳໃຊ້ ແລະ ການຄຸ້ມຄອງທີ່ດິນແມ່ນຖືກນຳໃຊ້ກັບທຸກຄົນ ຫຼື ກຸ່ມຄົນໂດຍບໍ່ມີການຈຳແນກ, ຄົນພື້ນເມືອງແມ່ນຈະມີສິດທິພິເສດທີ່ກ່ຽວຂ້ອງກັບທີ່ດິນບັນພະບູລຸດຂອງເຂົາເຈົ້າແມ່ນຕ້ອງໄດ້ຮັບການຄຸ້ມຄອງ.

ຄົນພື້ນເມືອງທີ່ຕົກຢູ່ໃນສະພາບທີ່ດ້ອຍໂອກາດໃນອາດີດ ແລະ ໃນສັງຄົມແມ່ນກຳລັງຕົກໃນໄພຄຸກຄາມໃນປະຈຸບັນໃນດ້ານທີ່ກ່ຽວກັບແບບແຜນຊີວິດການເປັນຢູ່ຕາມຮີດຄອງທີ່ເຄີຍປະຕິບັດ . ການລະເມີດໃນທີ່ດິນຊາຍຝັ່ງຈາກພາກລັດ ແລະ ເອກະຊົນທີ່ລົງທືນເຂົ້າໃນການສ້າງເຂດຖະກິດພິເສດ ຫຼື ການສ້າງສະຖານທີ່ຢູ່ອາໃສ ແລະ ສະຖານທີ່ພັກຜ່ອນແບບທັນ ສະໃໝເພື່ອການທ່ອງທ່ຽວ, ສິ່ງເຫຼົ່ານີ້ແມ່ນເປັນສາຍເຫດຂອງການຖືກບັງຄັບໃຫ້ຍົກຍ້າຍແກ່ຄົນພື້ນເມືອງຈາກທີ່ຢູ່ອາໃສທີ່ມີມາແຕ່ດັ້ງເດີມຂອງເຂົາເຈົ້າ. ສິ່ງທີ່ຄ້າຍໆກັນນີ້ ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ໂຄງການພັດທະນາຕ່າງໆແມ່ນຈະກະທົບຕໍ່ທີ່ດິນບັນພະບູລຸດຂອງຄົນພື້ນເມືອງ ແລ ມັນເປັນເລື່ອງທີ່ປົກກະຕິທີ່ເກີດຂື້ນໃນທົ່ວໂລກ. ໂຄງການເຫຼົ່ານີ້ແມ່ນເປັນທີ່ຮູ້ກັນດີວ່າມັນຈະກ່ຽວຂ້ອງກັບການຮື້ທຳລາຍລະບົບນິເວດທັງໝົດທີ່ຄົນພື້ນເມືອງອາໃສເປັນປັດໃຈໃນການດຳລົງຊີວິດຂອງເຂົາເຈົ້າ.

ການບໍ່ໃຫ້ການຄຸມຄອງສິດໃນຊັບສິນຂອງຊຸມຊົນທີ່ອາໃສໃນທີ່ດິນບັນພະບູລຸດ, ການຂາດການອອກໃບຕາດິນທີ່ເໝາະສົມ, ແລະ ການອອກໃບອານຸຍາດ ຫຼື ອອກໃບຕາດິນແກ່ຜູ້ສຳປະທານເອກະຊົນທີ່ມັນໄປແຕະຕ້ອງເຖິງທີ່ດິນທາງບັນພະບູລຸດຂອງຄົນພື້ນເມືອງນັ້ນແມ່ນເປັນບັນຫາທີ່ເກີດຂື້ນໃນທົ່ວໂລກ. ຍິ່ງໄປກວ່ານີ້ ການຂາດການຊົດເຊີຍ ຫຼື ການທົດແທນຄືນທີ່ເໝາະສົມໃຫ້ແກ່ກຸ່ມຄົນທີ່ໄດ້ຮັບຜົນກະທົບທີ່ບໍ່ຖືກກຸ່ມເປົ້າໝາຍໃນອາດີດນັ້ນແມ່ນເປັນສາຍເຫດຂອງຄວາມຂັດແຍ່ງທີ່ເກີດຂື້ນຢ່າງຕໍ່ເນື່ອງເຊັ່ນວ່າບັນຫາການເວນຄືນທີ່ດິນບັນພະບູລຸດຂອງຄົນພື້ນເມືອງເປັນຕົ້ນ.

**ຫຼັກການສາກົນທີ່ມາສາມາດໃຊ້ກັບບັນຫາທີ່ດິນໄດ້**

ຄົນພື້ນເມືອງແມ່ນມີສິດໃນການຄອບຄອງ ແລະ ເປັນເຈົ້າຂອງທີ່ດິນ, ອານາເຂດ ແລະ ຊັບພະຍາກອນຕ່າງໆໄດ້, ຊັບສິນທີ່ວ່ານານີ້ແມ່ນຊັບທີ່ເຂົາເຈົ້າໄດ້ຄອບຄອງມາແລ້ວ, ເປັນເຈົ້າຂອງມາກ່ອນແລ້ວ, ຫຼື ໄດ້ນຳໃຊ້ຢູ່. ຄົນເຫຼົ່ານີ້ແມ່ນມີສິດເປັນເຈົ້າຂອງ, ຄອບຄອງ, ນຳໃຊ້, ພັດທະນາ ແລະ ຄຸ້ມຄອງທີ່ດິນ, ອານາເຂດ ແລະ ຊັບພະຍາກອນຕ່າງໆເຊິ່ງວ່າລັດຕ້ອງໃຫ້ການຄຸ້ມຄອງ ແລະ ປົກປ້ອງຊັບສິນເຫຼົ່ານີໄວ້. ການປົກປ້ອງນັ້ນແມ່ນຈະຕ້ອງເຮັດຕາມຮູບແບບທາງປະເພນີ, ຮີດຄອງ ແລະ ລະບົບການ ຄອບຄອງທີ່ດິນທີ່ຄົນພື້ນເມືອງໄດ້ປະຕິບັດກັນມາ. ສິດທີ່ກ່າວມານີ້ຍັງລວມໄປເຖິງສິດໃນການມີສ່ວນຮ່ວມໃນການນຳໃຊ້, ບໍລິຫານ ຈັດການ, ແລະ ສະຫງວນຮັກສາຊັບພະຍາກອນທຳມະຊາດເຫຼົ່ານັ້ນໄວ້ ກໍ່ຄື ເລື່ອງການເຂົ້າເຖິງການປົກປ້ອງ ແລະ ຢຽວຢາທີ່ມີປະສິດທິພາບໃນດ້ານທີ່ກ່ຽວກັບສິດໃນທີ່ດິນ ແລະ ຊັບສິນຕ່າງໆ.

(ສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນພື້ນເມືອງ ແລະ ຄົນຊົນເຜົ່າທີ່ອາໃສໃນປະເທດເອກະລາດຕ່າງໆ)
(ເລກທີ 169), 1989, ມາດຕາ 14 ແລະ 15, ຖະແຫຼງການ ສປຊ ກ່ຽວກັບສິດຂອງຄົນພື້ນເມືອງ ມາດຕາ 26)

ຄົນພື້ນເມືອງແມ່ນມີສິດໃນການຕັດສິນໃຈ ແລະ ພັດທະນາຕາມແນວທາງຍຸດທະສາດ ແລະ ບູລິມະສິດໃນການພັດທະນາ ແລະ ນຳໃຊ້ທີ່ດິນ ຫຼື ອານາເຂດ ແລະ ຊັບພະຍາກອນຕ່າງໆຂອງເຂົາເຈົ້າດ້ວຍຕົວເອງ. ລັດຕ້ອງໃຫ້ການຄຸ້ມຄອງ ແລະ ຮ່ວມມືດ້ວຍຄວາມຈິງໃຈກັບເຂົາເຈົ້າໂດຍມີຕາງໜ້າເຂົ້າຮ່ວມເພື່ອສະແດງຈຸດຢືນ ແລະ ການຕົກລົງເຫັນດີໃນການປຶກສາຫາລືກ່ຽວກັບໂຄງການທີ່ມັນອາດມີຜົນກະທົບຕໍ່ກັບທີ່ດິນ, ອານາເຂດ ແລະ ຊັບສິນຕ່າງໆ ໂດຍສະເພາະແມ່ນອັນທີ່ກ່ຽວກັບເລື່ອງການພັດທະນາ, ການນຳໃຊ້ ຫຼື ການຂຸດຄົ້ນບໍ່ແຮ່, ນໍ້າ ຫຼື ຊັບພະຍາກອນອື່ນໆ. ລັດທີ່ກ່ຽວຂ້ອງຕ້ອງໃຫ້ການຊ່ວຍເຫຼືອທາງກົນໄກທີ່ເປັນທຳ ແລະ ຍຸດຕິທຳໃນການແກ້ໄຂບັນຫາທີ່ຈະເກີດຈາກກິດຈະກຳຕ່າງໆ, ນອກນີ້ລັດຕ້ອງໃຊ້ວິທີການທີ່ເໝາະສົມໃນການລຸດຜ່ອນຜົນທີ່ຈະກະທົບໃສ່ທາງທຳມະຊາດ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳອັນດີງາມຂອງຄົນພື້ນເມືອງ.

(ຖະແຫຼງການ ສປຊ ກ່ຽວກັບສິດຂອງຄົນພື້ນເມືອງ ມາດຕາ 32)

ຄົນພື້ນເມືອງແມ່ນມີສິດໃນການສະຫງວນ ແລະ ປົກປ້ອງສະພາບແວດລ້ອມ ແລະ ຄຸນະປະໂຫຍດທີ່ມີໃນທີ່ດິນ, ອານາເຂດ ແລະ ຊັບພະຍາກອນຕ່າງໆຂອງເຂົາເຈົ້າ. ລັດຕ່າງໆຈະສ້າງ ແລະ ຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອແກ່ຄົນພື້ນເມືອງໃນການປົກປ້ອງ ແລະ ສະຫງວນສິ່ງທີ່ກ່າວມານັ້ນໂດຍບໍ່ຕ້ອງມີການຈຳແນກ. ກິດຈະກຳທາງການທະຫານຈະຕ້ອງບໍ່ໄປຕັ້ງໃນທີ່ດິນ ຫຼື ອານາເຂດຂອງຄົນພື້ນເມືອງ ນອກຈາກວ່າໃນກໍລະນີທີ່ມີການຕົກລົງເຫັນດີ ຫຼື ໄດ້ຮັບການຮ້ອງຂໍຈາກຄົນພື້ນເມືອງທີ່ກ່ຽວຂ້ອງ.

( ຖະແຫຼງການ ສປຊ ກ່ຽວກັບສິດຂອງຄົນພື້ນເມືອງ ມາດຕາ 29 ແລະ 30)

ຄົນພື້ນເມືອງແມ່ນມີສິດທີ່ຈະບໍ່ມີໃຜມາບັງຄັບໃຫ້ຍົກຍ້າຍຈາກທີ່ດິນ ຫຼື ອານາເຂດຂອງຕົນ. ຈະບໍ່ມີການຊົດເຊີຍ ຫຼື ທົດແທນຄືນໃດໆຖ້າຫາກວ່າເລື່ອງການຍົກຍ້າຍນັ້ນຍັງບໍ່ທັນໄດ້ຮັບການຕົກລົງເຫັນດີໃນບັນຫາຕ່າງໆທີ່ກ່ຽວຂ້ອງເສຍກ່ອນ, ຖ້າຫາກເປັນໄປໄດ້, ຢ່າງໜ້ອຍຕ້ອງມີເງື່ອນໄຂທີ່ສາມາດເລືອກທີ່ຈະກັບຄືນຖິ່ນຖານເກົ່າໄດ້. ຄົນພື້ນເມືອງແມ່ນມີສິດໃນການເຂົ້າແກ້ໄຂບັນຫາດ້ວຍວິທີການຂໍຊົດເຊີຍທີ່ເປັນທຳ, ເປັນກາງ ແລະ ເທົ່າທຽມ ຖ້າຫາກເຂົາເຈົ້າຕົກໃນກໍລະນີທີ່ເລືອກບໍ່ໄດ້ນອກຈາກທີ່ຈະຍົກຍ້າຍອອກຈາກສະຖານທີ່ບ້ານເກີດເມືອງ ນອນຂອງຕົນເນື່ອງມາຈາກການເວນຄືນ, ຍຶດ, ຫຼື ຖືກທຳລາຍໂດຍບໍ່ໄດ້ຮັບການເຫັນຈາກເຂົາເຈົ້າມາກ່ອນ. ຖ້າໃນກໍລະນີທີ່ມີການຕົກລົງເຫັນດີລະຫວ່າງກັນ, ການຊົດເຊີຍແມ່ນອາດຈະຖືກທົດແທນດ້ວຍທີ່ດິນຄືເກົ່າ, ແບ່ງເຂດນຳໃຊ້ ແລະ ຊັບພະຍາກອນຕ່າງໆຢ່າງເທົ່າທຽມດ້ວຍຂະໜາດ, ເນື້ອທີ່, ແລະ ພາຍໃຕ້ການຄຸ້ມຄອງທາງກົດໝາຍ ຫຼື ໃຫ້ການຊົດເຊີຍເປັນເງິນ ຫຼື ແລ້ວແຕ່ຄວາມເໝາະສົມກໍ່ແມ່ນເປັນໄປໄດ້.

(ສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນພື້ນເມືອງ ແລະ ຄົນຊົນເຜົ່າທີ່ອາໃສໃນປະເທດເອກະລາດຕ່າງໆ (ເລກທີ 169), 1989 ມາດຕາ 16, ຖະແຫຼງການ ສປຊ ວ່າດ້ວຍສິດຂອງຄົນພື້ນເມືອງ ມາດຕາ 10 ແລະ 28)

ຂະບວນການແກ້ໄຂທີ່ພຽງພໍແມ່ນຕ້ອງໃຫ້ມີພາຍໃຕ້ກົດໝາຍພາຍໃນເພື່ອແກ້ໄຂບັນຫາການຮຽກຮ້ອງສິດໃນທີ່ດິນຈາກຄົນພື້ນເມືອງ.
(ສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນພື້ນເມືອງ ແລະ ຊົນເຜົ່າທີ່ອາໃສໃນປະເທດເອກະລາດຕ່າງໆ (ເລກທີ 169) 1989, ມາດຕາ 14).

ຂະບວນການທີ່ຖືກສ້າງໂດຍຄົນພື້ນເມືອງເພື່ອການຖ່າຍໂອນກຳມະສິດໃນທີ່ດິນລະຫວ່າງຄົນພື້ນເມືອງຕ້ອງໄດ້ຮັບການຮັບຮອງ
(ສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນພື້ນເມືອງ ແລະ ຊົນເຜົ່າທີ່ອາໃສໃນປະເທດເອກະລາດຕ່າງໆ (ເລກທີ 169), 1989 ມາດຕາ 17)

## ຕົວຢ່າງການນຳໃຊ້

ອີງຕາມສິດຂອງຄົນພື້ນເມືອງທີ່ຖືກກຳນົດໃນບົດສະຫຼຸບສັງລວມ, ສິດໃນທີ່ດິນສະເພາະຄົນພື້ນເມືອງທີ່ຖືກກຳນົດໃນສົນທິສັນຍາອົງການແຮງງານສາກົນ ເລກທີ 169, 1989 ແລະ ໃນຖະແຫຼງການ ສປຊ ກ່ຽວກັບສິດຂອງຄົນພື້ນເມືອງ.

ບັນດາອົງກອນເຫຼົ່ານີ້ແມ່ນໄດ້ເປັນອົງການນຳໃນການຕີຄວາມໝາຍບັນຫາກ່ຽວກັບສິດທິຂອງຄົນພື້ນເມືອງໃຫ້ແກ່ອົງກອນສິດທິມະນຸດ ສປຊ. ໃນບົດຄຳເຫັນແນະນຳທົ່ວໄປ ເລກທີ 23 (1997), ຄະນະກຳມະທິການວ່າດ້ວຍການລົບລ້າງບັນຫາການຈຳແນກເຊື້ອຊາດໄດ້ຮຽກຮ້ອງໃຫ້ລັດພາຄີຕ່າງໆຕ້ອງ “ຮັບຮູ້ ແລະ ປົກປ້ອງສິດທິຂອງຄົນພື້ນເມືອງໃນການເປັນເຈົ້າຂອງ, ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນຊຸມຊົນຂອງເຂົາເຈົ້າ, ອານາເຂດ ແລະ ຊັບສິນຕ່າງໆ ພ້ອມທັງຕ້ອງເຮັດທຸກວິທີທາງໃນການຄືນທີ່ດິນ ແລະ ເຂດແດນທີ່ພວກເຂົານັ້ນເປັນເຈົ້າໃນເວລາທີ່ດິນ ແລະ ເຂດແດນຂອງພວກເຂົາຖືກເວນຄືນໂດຍບໍ່ໄດ້ຮັບການຕົກລົງ ຫຼື ຜ່ານຂະບວນການປຶກສາຕ່າງໆ” (ວັກທີ 5).

ຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ກ່າວໃນບົດຄຳເຫັນແນະນຳທົ່ວໄປເລກທີ 14 (2000) ກ່ຽວກັບສິດທີ່ຈະໄດ້ຮັບໃນດ້ານສຸກຂະພາບໃນລະດັບມາດຕະຖານທີ່ສູງສຸດວ່າ ຕາມການສັງເກດເຫັນບັນຫາສຸກຂະພາບຂອງຄົນພື້ນເມືອງນັ້ນ “ກິດຈະກຳການພັດທະນາທີ່ກ່ຽວຂ້ອງຕ່າງໆທີ່ນຳໄປສູ່ບັນຫາການຂາດທີ່ຢູ່ອາໃສຂອງຄົນພື້ນເມືອງໂດຍບໍ່ມີການສົມຍອມໃຫ້ອອກຈາກຖິ່ນຖານທີ່ອາໃສຢູ່ ແລະ ສະພາບແວດລ້ອມທີ່ມີມາແຕ່ດັ້ງເດີມ, ການປະຕິເສດຮັບຮູ້ເຖິງແຫຼ່ງທີ່ມາຂອງອາຫານການກິນຂອງ ຄົນພື້ນເມືອງ ແລະ ການລະເມີດສາຍພົວພັນທີ່ເປັນລະບົບທີ່ມີຕໍ່ທີ່ຢູ່ອາໃສມາແຕ່ດັ້ງເດີມນັ້ນຖືວ່າເປັນການສ້າງຜົນກະທົບ ຕໍ່ສຸກກະພາບແກເຂົາເຈົ້າ” (ວັກທີ 27).

ໃນບົດຄຳເຫັນທົ່ວໄປເລກທີ 15 (2002), ຄະນະກຳມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳຍັງໄດ້ໃຫ້ລາຍລະອຽດວ່າໃນບໍລິບົດຂອງການຮັບປະກັນຄວາມຜາສຸກໃນການນຳໃຊ້ສິດເພື່ອເຂົ້າເຖິງຊັບພະຍາກອນນ້ຳໂດຍບໍ່ມີການຈຳແນກ, ລັດທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີທາງໃນການຮັບປະກັນວ່າ “ສິດໃນການເຂົ້າເຖິງຊັບພະຍາກອນນ້ຳທີ່ມີໃນດິນແດນບັນພະບູລຸດນັ້ນຕ້ອງໄດ້ຮັບການປົກປ້ອງຈາກໄພຄຸກຄາມ ແລະ ບັນຫາມົນລະພິດຕ່າງໆ” (ວັກທີ 16 (d)).

ໃນບົດຄຳເຫັນທົ່ວໄປເລກທີ 21 (2009), ຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ເນັ້ນວ່າລະດັບຂອງການມີສ່ວນຮ່ວມໃນກິດຈະກຳທາງວັດທະນະທຳຂອງຊຸມຊົນຄົນພື້ນເມືອງທີ່ມີຄວາມເຂັ້ມແຂງນັ້ນແມ່ນບໍ່ສາມາດຖືກຕັດແຍກອອກຈາກຊີວິດການເປັນຢູ່, ຄວາມມີຕົວຕົນ ແລະ ການພັດທະນາຢ່າງເຕັມທີ່ຂອງເຂົາເຈົ້າໄດ້, ໃນນັ້ນລວມມີສິດໃນທີ່ດິນ, ເຂດແດນ ແລະ ຊັບພະຍາກອນຕ່າງໆທີ່ເຂົາເຈົ້າເຫຼົ່ານັ້ນໄດ້ເປັນເຈົ້າຂອງ, ຄອບຄອງ ຫຼື ນຳໃຊ້ມາແຕ່ດຶກດຳບັນ. ຄະນະກຳມະທິການຍັງໄດ້ເນັ້ນອີກວ່າ “ຄຸນຄ່າທາງວັດທະນະທຳ ແລະ ສິດທິຂອງຄົນພື້ນເມືອງແມ່ນມີສ່ວນພົວພັນກັບທີ່ດິນທາງບັນພະບູລຸດ ແລະ ສາຍພົວພັນທີ່ມີຕໍ່ທຳມະຊາດແມ່ນຄວນໄດ້ຮັບການນັບຖື ແລະ ປົກປ້ອງ, ເພື່ອໃຫ້ການປົກປ້ອງຕາມທີ່ກ່າວມານັ້ນແມ່ນຄວນເນັ້ນດ້ານແບບແຜນການດຳລົງຊີວິດທີ່ລວມມີດ້ານຄຸນຄ່າໃນດ້ານການທຳມາຫາກິນ, ປ້ອງກັນການສູນເສຍຊັບພະຍາກອນທຳມະຊາດ ແລະ ອັນສຸດທ້າຍກໍ່ແມ່ນປົກປ້ອງຄຸນຄ່າທາງວັດທະນະທຳຂອງເຂົາເຈົ້າໄປນຳ” (ວັກທີ 36).

ສິ່ງທີ່ຄ້າຍໆກັນນີ້, ໃນບົດຄຳເຫັນທົ່ວໄປເລກທີ 11 (2009) ກ່ຽວກັບເດັກ ແລະ ສິດທິຂອງເດັກນ້ອຍພື້ນເມືອງພາຍໃຕ້ສົນທິສັນຍາ, ຄະນະກຳມະທິການສິດທິເດັກໄດ້ໃຫ້ຂໍ້ສັງເກດມາດຕາທີ່ 6 (ສິດທິຂອງເດັກໃນການມີຊີວິດລອດ, ດຳລົງຊີວິດ ແລະ ໄດ້ຮັບການພັດທະນາ) ຂອງສົນທິສັນຍາວ່າດ້ວຍສິດທິເດັກວ່າ "ໃນກໍລະນີຂອງເດັກພື້ນເມືອງທີ່ດຳລົງຊີວິດໃນຊຸມຊົນທີ່ຍັງຮັກສາເອກະລັກທາງຮີດຄອງຢູ່, ການນຳໃຊ້ທີ່ດິນຈາກບັນພະບູລຸດແມ່ນຖືວ່າມີຄວາມສຳຄັນສຳລັບເລື່ອງຂອງການພັດທະນາ ແລະ ຄວາມຜາສຸກຂອງເດັກ". ຕໍ່ກັບບັນຫາທີ່ກ່າວມານີ້, ຄະນະກຳມະທິການໄດ້ພິຈາລະນາວ່າ "ລັດພາຄີທີ່ກ່ຽວຂ້ອງຕ້ອງໃຫ້ການພິຈາລະນາເຖິງຄວາມສຳຄັນຂອງທີ່ຢູ່ອາໃສທີ່ສຳຄັນດ້ານຮີດຄອງປະເພນີ ແລະ ຄຸນນະພາບຂອງສິ່ງແວດລ້ອມທາງທຳມະຊາດໃຫ້ໄດ້ດີທີ່ສຸດເທົ່າທີ່ຈະເຮັດໄດ້" (ວັກທີ 35). ໃນບົດສະຫຼຸບສັງເກດການກ່ຽວກັບປະເທດ ກົວເຕມາລາ (2010), ຄະນະ**ກຳ**ມະທິການກ່ຽວກັບສິດທິຂອງເດັກໄດ້ສະແດງຄວາມເປັນຫ່ວງຕໍ່ກັບບັນຫາທີ່ບໍ່ເອົາເດັກນ້ອຍພື້ນເມືອງເຂົ້າໃນນະໂຍບາຍຂອງການເຂົ້າເຖິງການບໍລິການຂັ້ນພື້ນຖານໃນສັງຄົມທີ່ມັນຈຳເປັນສຳລັບການພັດທະນາຄວາມສະຫຼາດຂອງເດັກ, ໃນນັ້ນລວມມີບັນຫາຄວາມຫຍຸ້ງຍາກໃນການເຂົ້າເຖິງທີ່ຢູ່ອາໃສ ແລະ ການຂາດຄວາມເຄົາລົບຕໍ່ກັບເຂດທີ່ຢູ່ອາໃສຂອງເຂົາເຈົ້າ.[98]

ສິ່ງທີ່ສຳຄັນກໍຄື ຄົນພື້ນເມືອງຄວນໄດ້ມີສ່ວນຮ່ວມໃນເລື່ອງການຕັດສິນໃຈທີ່ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດທີ່ພວກເຂົາເປັນເຈົ້າຂອງ ແລະ ນຳໃຊ້ມາເປັນເວລາດົນນານນັ້ນໄດ້ຢ່າງເຕັມທີ່ ແລະ ມີຄວາມໝາຍ. ຕໍ່ກັບບັນຫານີ້, ຫຼັກກາສາກົນໄດ້ຊີ້ແຈງໃຫ້ເຫັນວ່າສິດຂອງຄົນພື້ນເມືອງແມ່ນເປັນສິດອິດສະຫຼະ, ມີບູລິມະສິດ ແລະ ໄດ້ຮັບການຄຸ້ມຄອງ.

[98] CRC/C/GTM/CO/3-4, para. 101.

## ຄະດີຕົວຢ່າງ

**ສານສູງການາດາ:** *Tsilhqot'in Nation ກັບ ເມືອງ British Columbia* 2014 SCC 44 (26 **ມິຖຸນາ 2014). ຊຸມຊົນ** Tsilhqot'in Nation ເປັນຊຸມຊົນເລ້ລ້ອນແບບເຄິ່ງໆກາງໆທີ່ມີ 6 ຂໍ້ຫ້າມໃນດ້ານວັດທະນະທຳ ແລະ ປະຫວັດສາດ ແມ່ນໄດ້ພະຍາຍາມອອກຂໍ້ກຳນົດບໍ່ໃຫ້ມີການຕັດຕົ້ນໄມ້ຢູ່ພາຍໃນດິນແດນຂອງເຂົາເຈົ້າ. ການຕັດໄມ້ແມ່ນໄດ້ຮັບອານຸຍາດຈາກຜູ້ນຳແຂວງ British Columbia ໃນປີ 1983. ສານສູງການາດາໄດ້ພິຈາລະນາຮັບເອົາຂໍ້**ກຳ**ນົດທີ່ຫ້າມຕັດໄມ້ນັ້ນ ແລະ ພິຈາລະນາວ່າ British Columbia ໄດ້ລະເມີດພັນທະກໍລະນີໃນການທີ່ບໍ່ໄດ້**ດຳ**ເນີນການປຶກສາຫາລືຕົກລົງກັນກ່ອນທີ່ຈະອອກໃບອານຸຍາດໃຫ້ຕັດໄມ້. ສານກ່າວວ່າສິ່ງທີ່ເປັນເລື່ອງກ່ຽວກັບຄົນພື້ນເມືອງ ແລະ ກ່ຽວຂ້ອງກັບຊຸມຊົນທີ່ຍຶດຖືສິ່ງທີ່ປະຕິບັດກັນມາແມ່ນມັນເປັນສິດຂອງເຂົາເຈົ້າໃນການຕັດສິນໃຈບໍລິຫານຈັດການທີ່ດິນຂອງຕົນ ແລະ ມີສິດໃນການສ້າງປະໂຫຍດຈາກທີ່ດິນທີ່ອາໃສຢູ່ນັ້ນ, ສ່ວນບັນຫາທີ່ກ່ຽວກັບຂໍ້ຫ້າມຕໍ່ຜູ້ທີ່ຈະໃຊ້ປະໂຫຍດໃນທີ່ດິນດັ່ງກ່າວນັ້ນກໍ່ຕ້ອງແມ່ນໃຫ້ສອດຄ່ອງຄວາມເປັນຈິງຂອງຊຸມຊົນໃນດ້ານສິດຜົນປະໂຫຍດ ແລະ ການນຳໃຊ້ທີ່ດິນເພື່ອຄົນໃນຍຸກຕໍ່ໄປ.[99]

## ຫຼັກການ ແລະ ຄູ່ມືສາກົນທີ່ກ່ຽວຂ້ອງຕ່າງໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງ ໃນບໍລິບົດຂອງຄວາມໝັ້ນດ້ານອາຫານ (Rome, FAO, 2012), ພາກທີ 3.
- ການໃຫ້ສຳປະທານ ແລະ ການເວນຄືນທີ່ດິນຂະໜາດໃຫຍ່: ຊຸດເອກະສານຫຼັກການ ແລະ ມາດຕະການໃນການແກ້ໄຂບັນຫາສິດທິມະນຸດ (A/HRC/13/33/Add.2), ຫຼັກການ 2 ແລະ 10.

### ຂໍ້ມູນເພີ່ມເຕີມ

ສຳລັບສິດຂອງຄົນພື້ນເມືອງແມ່ນໃຫ້ເບິ່ງ:

- ກຸ່ມພັດທະນາ ສປຊ,ຄູ່ມືຂອງ ກຸ່ມພັດທະນາ ສປຊ ກ່ຽວກັບ ບັນຫາຂອງຄົນພື້ນເມືອງ (2008)
- ຄະນະກຳມະທິການລະຫວ່າງລັດອາເມລິກາກ່ຍວກັບສິດທິ ມະນຸດ, ສິດທິຂອງຄົນພື້ນເມືອງ ແລະ ຊົນເຜົ່າທີ່ມີຕໍ່ທີ່ດິນ ແລະ ຊັບພະຍາກອນທາງທຳມະຊາດຕົກທອດຈາກບັນພະບູລຸດ: ກົນໄກ ແລະ ຫຼັກການກົດໝາຍຂອງລະບົບສິດທິມະນຸດລະຫວ່າງລັດໃນອາເມລິກາ (OEA/Ser.L/V/II. Doc. 56/09) (2009).

---

[99] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ

### ຝ. ສິດທິຂອງນັກເຄື່ອນປົກປ້ອງສິດທິມະນຸດໃນບັນຫາທີ່ດິນ

### ບົດສະເໜີ

ນັກເຄື່ອນໄຫວປົກປ້ອງສິດທິມະນຸດ-ແມ່ນຜູ້ທີ່ເຮັດໜ້າທີ່ໃນການປົກປ້ອງ ແລະ ສົ່ງເສີມສິດທິມະນຸດເຊິ່ງມີບົດບາດສຳຄັນໃນການສົ່ງເສີມສິດທິມະນຸດທີ່ເຂົາເຈົ້າເຫຼົ່ານັ້ນແມ່ນໄດ້ປະເຊີນກັບການຖືກຂົ່ມຂູ່ທຸກຮູບແບບໃນເວລາເຄື່ອນໄຫວວຽກງານ. ສິ່ງທີ່ວ່າມານີ້ແມ່ນຄວາມຈິງທຸກປະການໃນເວລາທີ່ພວກເຂົາເຄື່ອນໄຫວວຽກງານທີ່ກ່ຽວຂ້ອງກັບທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ບັນຫາສະພາບແວດລ້ອມຕ່າງໆ. ມັນເປັນເລື່ອງປົກກະຕິທີ່ພວກເຂົາຖືກລັກລອບທຳຮ້າຍທີ່ມັນເປັນຄວາມສ່ຽງໃນດ້ານຊີວິດ ແລະ ຊັບສິນຂອງເຂົາເຈົ້າ.

ໃນບັນຫາທີ່ຊຸມຊົນໄດ້ດຳເນີນການຂັດຂວາງຜົນກະທົບຈາກກິດຈະກຳດ້ານອຸດສະຫະກຳແມ່ນຈະປະເຊີນໜ້າກັບການຮຸກຮານໃນຊີວິດ, ການຖືກຂົ່ມຂູ່ ແລະ ປອງຮ້າຍຈາກກຸ່ມຄົນທີ່ຖືກຮັບຈ້າງຈາກພາກເອກະຊົນໃຫ້ຕາມລ້າ. ນັກເຄື່ອນໄຫວທີ່ເປັນແມ່ຍິງສ່ວນຫຼາຍແລ້ວຈະຕົກເປັນເປົ້າໝາຍໃນການຖືກປອງຮ້າຍທາງດ້ານຮ່າງກາຍ ແລະ ມີຄວາມສ່ຽງໃນການຖືກຄວາມຮຸນແຮງທາງເພດ.

“…ກຸ່ມທີສອງທີ່ຈະຕົກໃນຄວາມສ່ຽງຫຼາຍທີ່ສຸດທີ່ຈະຖືກປອງຮ້າຍເອົາຊີວິດແມ່ນຜູ້ທີ່ເຮັດວຽກການປົກປ້ອງສິດທິມະນຸດໃນດ້ານທີ່ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ”.

*ທີ່ມາ:* ບົດລາຍງານຂອງຜູ້ແທນຈາກສຳນັກງານເລຂາທິການ ໃຫຍ່ກ່ຽວກັບນັກເຄື່ອນໄຫວປົກປ້ອງສິດທິມະນຸດ (A/HRC/4/37), ວັກທີ 45.

“ລັດຖະບານຕ້ອງໃຊ້ມາດຕະການທີ່ຮີບດ່ວນ ແລະ ມີປະສິດທິພາບໃນການປົກປ້ອງຄວາມປອດໄພໃຫ້ແກ່ຜູ້ນຳຂອງຊາວໂຄລຳເບຍອັບຟຣິກາ, ອົງການ ແລະ ອົງກອນສິດທິມະນຸດພາກເອກະຊົນຕ່າງໆທີ່ເຄື່ອນໄຫວວຽກງານສິດທິມະນຸດ.
ສິ່ງທີ່ວ່ານີ້ແມ່ນມີຄວາມສຳຄັນເປັນພິເສດທີ່ຈະໃຫ້ການເຄົາລົບສະມາຊິກຂອງສະພາໃນຊຸມຊົນ ແລະ ໜ່ວຍງານອື່ນໆທີ່ເຄື່ອນໄຫວເພື່ອຮຽກຮ້ອງການຊົດເຊີຍຈາກບັນຫາທີ່ດິນ.”

*ທີ່ມາ:* ບົດລາຍງານຂອງຜູ້ຊ່ຽວຊານເອກະລາດກ່ຽວກັບບັນຫາຂອງຊົນເຜົ່າ: ການປະຕິບັດງານໃນໂຄລຳເບຍ (A/HRC/16/45/Add.1), ວັກທີ 91.

|

ນັກຂ່າວ ແລະ ນັກກົດໝາຍທີ່ເຮັດວຽກກ່ຽວກັບບັນຫາທີ່ດິນທີ່ກ່ຽວກັບເລື່ອງການບັງຄັບໃຫ້ຍົກຍ້າຍ, ອາດສະຍາກຳ, ການສໍ້ລາດບັງຫຼວງ, ແລະ ສິດຂອງຄົນຊົນເຜົ່ານັ້ນ ແມ່ນຈະຖືກປອງຮ້າຍ, ຂົ່ມຂູ່, ທໍລະມານ ແລະ ຖືກຂ້າໃນບາງຄັ້ງເພື່ອເປັນການກຳຈັດ, ຍຸດການອອກຄຳຄິດເຫັນຂອງສາທາລະນະ ແລະ ຂັດຂວາງການເຂົ້າເຖິງຄວາມຍຸຕິທຳ ແລະ ການຂະບວນການຍຽວຍາຕ່າງໆ.

ໃຫ້ເບິ່ງບົດສະຫຼຸບກ່ຽວກັບສິດໃນຊີວິດ

**ຫຼັກການສາກົນທີ່ສາມາດໃຊ້ກັບບັນຫາທີ່ດິນ**

ທຸກຄົນທີ່ເຄື່ອນໄຫວບໍ່ວ່າສ່ວນບຸກຄົນ ຫຼື ເປັນກຸ່ມໃນການປົກປ້ອງ ແລະ ສົ່ງເສີມສິດທິມະນຸດທີ່ລວມມີບັນຫາທີ່ກ່ຽວພັນກັບເລື່ອງທີ່ດິນແມ່ນມີສິດ:

- ຊອກຫາການປົກປ້ອງ ແລະ ການຮັບຮອງສິດທິມະນຸດໃນລະດັບສາກົນ ແລະ ພາຍໃນ
- ດຳເນີນວຽກງານສິດທິມະນຸດ
- ສ້າງຕັ້ງສະມາຄົມ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ

- ພົບປະ ຫຼື ຮ່ວມຊຸມນຸມຢ່າງສັນຕິ
- ຊອກຫາ, ໄດ້ຮັບ, ຮັບເອົາ ແລະ ຮັກສາຂໍ້ມູນຂ່າວສານ
- ພັດທະນາ ແລະ ສົນທະນາບັນຫາສິດທິມະນຸດ, ຫຼັກການໃໝ່ໆ ແລະ ໃຫ້ການຊຸກຍູ້ການຍອມຮັບຕ່າງໆ
- ສົ່ງຂໍ້ມູນດ້ານຂໍ້ສະເໜີ ແລະ ການຕໍານິຕ່າງໆໃຫ້ແກ່ອົງ ພາກລັດ, ສໍານັກງານ ແລະ ອົງການຕ່າງໆເພື່ອປັບປຸງໜ້າທີ່ ແລະ ໃສ່ໃຈດ້ານການເຮັດວຽກທີ່ມັນອາດເປັນການກີດຂວາງການຮັບຮູ້ສິດທິມະນຸດກໍ່ເປັນໄດ້.
- ສົ່ງເອກະສານຮ້ອງຟ້ອງກ່ຽວກັບນະໂຍບາຍ ແລະ ການປະຕິບັດໜ້າທີ່ທາງການ ພ້ອມທັງໃຫ້ການທົບທວນສິ່ງກ່າວມານີ້ໄປພ້ອມໆກັນ
- ສະເໜີ ແລະ ໃຫ້ການຊ່ວຍເຫຼືອທາງກົດໝາຍທີ່ມີປະສິດທິພາບ ຫຼື ໃຫ້ການແນະນໍາ ແລະ ຊ່ວຍເຫຼືອໃນການປົກປ້ອງສິດທິມະນຸດ
- ເຂົ້າຮ່ວມໃນການໄຕ່ສວນ, ການດໍາເນີນງານ ແລະ ການພິຈາລະນາຄະດີເພື່ອປະເມີນການປະຕິບັດຕາມລະບຽບກົດໝາຍພາຍໃນ ແລະ ພັນທະສິດທິມະນຸດສາກົນ
- ເຂົ້າຮ່ວມ ແລະ ສື່ສານກັບອົງການລະຫວ່າງລັດຖະບານ ແລະ ປະຊາສັງຄົມຢ່າງອິດລະຫຼະ
- ໄດ້ປະໂຫຍດຈາກຂະບວນການຢຽວຢາ
- ເປັນຜູ້ເຄື່ອນໄຫວປົກປ້ອງສິດທິມະນຸດແບບມືອາຊີບ ຫຼື ແບບວິຊາການຢ່າງຖືກຕ້ອງຕາມກົດໝາຍ
- ໄດ້ຮັບການປົກປ້ອງພາຍໃຕ້ກົດໝາຍພາຍໃນໃນເວລາທີ່ດໍາເນີນງານຕ້ານກັບການກະທໍາ ຫຼື ການເມີນເສີຍຂອງລັດທີ່ພາໃຫ້ເກີດບັນຫາການລະເມີດ ແລະ
- ສອບຖາມ, ຮັບເອົາ ແລະ ນໍາໃຊ້ຊັບພະຍາກອນຕ່າງໆເພື່ອວັດຖຸປະສົງໃນການປົກປ້ອງສິດທິມະນຸດ

(ຖະແຫຼງການກ່ຽວກັບສິດ ແລະ ຄວາມຮັບຜິດຊອບຂອງບຸກຄົນ, ກຸ່ມຄົນ ແລະ ອົງການໃນສັງຄົມເພື່ອສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານລະດັບສາກົນ (ຖະແລງການສິດທິຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດ) ມາດຕາ *1, 5, 6, 7, 8, 9, 11, 12 and 13; ສົນທິສັນຍາສາກົນວ່າດ້ວຍ ສິດທິທາງການເມືອງ ແລະ ພົນລະເຮືອນ ມາດຕາ 19 ແລະ 21)*

## ຕົວຢ່າງການນໍາໃຊ້

"ນັກເຄື່ອນໄຫວປົກປ້ອງສິດທິມະນຸດ" ແມ່ນຄໍາສັບທີ່ໃຊ້ເພື່ອອະທິບາຍກ່ຽວກັບຄົນທີ່ເຮັດວຽກໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດບໍ່ວ່າຈະເປັນສ່ວນບຸກຄົນ ຫຼື ໃນຮູບແບບອື່ນ.[100] ນິຍາມທີ່ວ່ານີ້ແມ່ນກວມເອົາຜູ້ທີ່ປົກປ້ອງສິດທິຂອງຊຸມຊົນໃນບັນຫາທີ່ດິນ, ສະພາບແວດລ້ອມ ແລະ ຊັບພະຍາກອນຕ່າງໆ. ໃນບົດລາຍງານປີ 2011 ນັກລາຍງານພິເສດກ່ຽວກັບສະພາບການຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດໄດ້ຮຽກຮ້ອງໃຫ້ລັດພາຄີຕ້ອງໃຫ້ການຮັບຮອງສິດຂອງນັກເຄື່ອນໄຫວເຫຼົ່ານັ້ນໃຫ້ໄດ້ຢ່າງເຕັມທີ່. ນັກເຄື່ອນໄຫວທີ່ວ່ານັ້ນເປັນຜູ້ທີ່ພະຍາຍາມປົກປ້ອງບັນຫາທາງສິ່ງແວດລ້ອມ ແລະ ທີ່ດິນເພື່ອຊອກຫາທາງອອກລະຫວ່າງການພັດທະນາທາງເສດຖະກິດ ແລະ ການເຄົາລົບສິ່ງແວດລ້ອມທີ່ລວມມີສິດໃນການນໍາໃຊ້ທີ່ດິນ, ຊັບພະຍາກອນອັນອຸດົມຮັ່ງມີໃນທໍາມະຊາດ ແລະ ສິດຂອງກຸ່ມຄົນໃດໜຶ່ງທີ່ລວມມີຄົນພື້ນເມືອງ ແລະ ຊົນເຜົ່າ.[101]

ນັກລາຍງານພິເສດຍັງເນັ້ນວ່າລັດທີ່ກ່ຽວຂ້ອງຄວນຈະບໍ່ຂັດຂວາງການດໍາເນີນງານຂອງນັກເຄື່ອນໄຫວທີ່ກ່າວມານັ້ນບໍ່ວ່າຈະໃນຮູບແບບທາງການ ຫຼື ສື່ມວນຊົນຕ່າງໆ, ໂດຍສະເພາະໃນບໍລິບົດຂອງຄວາມແຕກແຍກທາງສັງຄົມທີ່ມັນສາມາດກະຕຸ້ນໃຫ້ເກີດການຕໍ່ຕ້ານ ແລະ ການປອງຮ້າຍຕ່າງໆ. ລັດທີ່ກ່ຽວຂ້ອງຕ້ອງກໍາຈັດບັນຫາທີ່ຈະມີການປອງຮ້າຍ ແລະ ຄວາມຮຸນແຮງທີ່ຈະເກີດກັບນັກເຄື່ອນໄຫວຈາກການກະທໍາຂອງພາກເອກະຊົນ ແລະ

[100] OHCHR *Fact Sheet No. 29: Human Rights Defenders: Protecting the Right to Defend Human Rights*, p. 2.
[101] A/HRC/19/55, paras. 124 and ff.

ຜູ້ອື່ນໆທີ່ເຮັດໜ້າທີ່ຮ່ວມກັບເຂົາເຈົ້າ, ລັດຖະບານຕ້ອງຮັບປະກັນການສືບສວນສອບສວນທີ່ທັນການ ແລະ ເປັນກາງຕໍ່ກັບບັນຫາທີ່ເກີດຂຶ້ນ ແລະ ທໍາການແກ້ໄຂຢ່າງມີຄວາມເໝາະສົມ ແລະ ໃຫ້ການປຽວຢາຜູ້ເຄາະຮ້າຍ.

ສິດໃນການປະທ້ວງແບບສະຫງົບ, ການສະແດງຄວາມເຫັນ, ແລະ ການເຕົ້າໂຮມປະຊຸມໃນຖານທີ່ຕ່າງໆຂອງນັກເຄື່ອນໄຫວທີ່ລົງເລິກໃນບັນ ຫາທີ່ດິນແມ່ນຕ້ອງໄດ້ການປົກປ້ອງພາຍໃຕ້ກົດມາຍສາກົນ ແລະ ເປັນປັດໃຈພື້ນຖານໃນການເຄົາລົບ, ປົກປ້ອງ ແລະ ສົ່ງເສີມສິດທິມະນຸດ

ໃຫ້ເບິ່ງບົດສະຫຼຸບກ່ຽວກັບເສລີພາບຂອງຄວາມຄິດເຫັນ, ປາກເວົ້າ, ໂຮມຊຸມນຸມ ແລະ ຕັ້ງສະມາຄົມ

ໃນບົດສັງເກດການກ່ຽວກັບປະເທດອາເຈນຕິນ້າ (2011), ຄະນະກໍາມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາໄດ້ສະແດງຄວາມເປັນຫວ່ງໃນບັນຫາທີ່ໜ່ວຍງານຮັກສາຄວາມປອດໄພ ແລະ ສໍານັກງານຕ່າງຂອງພາກລັດ ແລະ ເອກະຊົນທີ່ໄດ້ໃຊ້ກໍາລັງແບບແກ້ເຄັດ ແລະ ບໍ່ເໝາະສົມໃນການຕ້ານຜູ້ເຂົ້າຮ່ວມໃນກິດຈະກໍາການປົກປ້ອງສິດໃນທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາໂດຍສະເພາະແມ່ນໃນບໍລິບົດດ້ານຄວາມຂັດແຍ່ງໃນທີ່ດິນ.[102] ໃນບົດສັງເກດການກ່ຽວກັບປະເທດກໍາປູເຈຍ (2009), ຄະນະກໍາມະທິການຍັງໄດ້ແນະນໍາວ່າລັດທີ່ກ່ຽວຂ້ອງຕ້ອງເຮັດທຸກວິທີທາງໃນການປ້ອງກັນຜູ້ທີ່ເຄື່ອນໄຫວປົກປ້ອງສິດທິມະນຸດເຊິ່ງລວມມີຜູ້ນໍາຄົນພື້ນເມືອງ ແລະ ແກນນໍາຊາວນາທີ່ຮ່ວມໃນການປົກປ້ອງສິດທາງດ້ານເສດຖະກິດ ສັງຄົມ ແລະ ວັດທະນະທໍາຂອງຊຸມຊົນ ແລະ ຕ້ອງຮັບປະກັນການສືບສວນສອບສວນບັນຫາທີ່ໄດ້ຖືກລາຍງານຢ່າງວ່ອງໄວ ແລະ ລົງໂທດຜູ້ທີ່ກະທໍາຜິດຕາມກົດໝາຍ.[103]

ໃນບົດລາຍງານປີ 2011 ນັກລາຍງານພິເສດກ່ຽວກັບສະພາບການສິດທິມະນຸດໃນກໍາປູເຈຍໄດ້ກ່າວວ່າການສະແດງຄວາມຄິດເຫັນແບບສະຫງົບແມ່ນຄວນບໍ່ຖືເປັນຄວາມຜິດໃນກົດໝາຍອາຍາ. ນັກລາຍງານແມ່ນໄດ້ສະແດງຄວາມເປັນຫ່ວງຕໍ່ກັບບັນຫາດັ່ງກ່າວທີ່ມີການລົງໂທດ ແລະ ຮ້ອງຟ້ອງການປຸລະດົມ, ການໝິ່ນປະມາດແລະການເຜີຍແຜ່ຂໍ້ມູນຂ່າວສານຂອງນັກເຄື່ອນໄຫວສິດທິຕ່າງໆ, ນັກເຄື່ອນໄຫວປົກປ້ອງສິດທິມະນຸດ ແລະ ຄົນໃນຊຸມຊົນທີ່ເຄື່ອນໄຫວຕ້ານການຈໍາກັດສິດໃນທີ່ດິນ ແລະ ບ້ານຢູ່ຂອງເຂົາເຈົ້າຈາກບັນຫາທີ່ຖືກຄັບໄລ່ອອກຈາກພື້ນທີ່. ນັກລາຍງານພິເສດຍັງເນັ້ນວ່າລັດຖະບານຄວນມີສ່ວນຮ່ວມກັບຄົນທີ່ໄດ້ຮັບຜົນກະທົບຈາກບັນຫາຄວາມຂັດແຍ່ງໃນທີ່ດິນໃນການແກ້ໄຂຢ່າງສັນຕິວິທີຕໍ່ກັບການຊົດເຊີຍທີ່ເໝາະສົມ ຫຼື ໃຫ້ທາງເລືອກໃນທີ່ຢູ່ອາໃສແບບພໍພຽງຖ້າຫາກສາມາດເຮັດໄດ້. ເຈົ້າໜ້າທີ່ຄວນໃຫ້ການເຄົາລົບ ແລະ ປົກປ້ອງສິດຂອງຄົນທີ່ຖືກກະທົບຈາກຄວາມຂັດແຍ່ງທີ່ດິນເຊິ່ງລວມມີການຮັບປະກັນບໍ່ໃຫ້ເກີດບັນຫາການທໍາຮ້າຍຈາກການໃຊ້ອໍານາດເກີນຂອບເຂດ. ການທາລຸນ ແລະ ການຖືກດູມິ່ນປະໝາດ ຈາກການທີ່ພວກເຂົາໄດ້ນໍາໃຊ້ສິດໃນການປະທ້ວງແບບສະຫງົບ, ແລະ ບໍ່ຄວນເອົາໂທດເຂົາເຈົ້າໃນກໍລະນີມີການສະແດງຄວາມຄິດເຫັນ ແລະ ກະຈາຍຂໍ້ມູນຂ່າວສານຕ່າງໆ.[104]

ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບຂອງການຄອບຄອງທີ່ດິນ ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດໄດ້ອະທິບາຍແຈ້ງກ່ຽວກັບວຽກງານຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດໂດຍໃຫ້ເຫດຜົນວ່າ
“ລັດຕ່າງໆຕ້ອງໃຫ້ການເຄົາລົບ ແລະ ປົກປ້ອງສິດທິທາງການເມືອງ ແລະ ພົນລະເຮືອນຂອງນັກເຄື່ອນໄຫວເຊິ່ງລວມມີສິດທິຂອງຊາວນາ, ຄົນພື້ນເມືອງ, ຊາວປາມົງ, ກໍາມະກອນທີ່ເລື່ອນລອຍ ແລະ ໃນເຂດຊົນນະບົດ, ພ້ອມນັ້ນ ລັດຖະບານຕ້ອງໃຫ້ການລະວັດລະວັງໃນພັນທະທີ່ມີກ່ຽວກັບສິດທິມະນຸດໃນເວລາທີ່ດໍາເນີນການກັບບຸກຄົນ ແລະ ໜ່ວຍງານຕ່າງໆທີ່ເຄື່ອນໄຫວເພື່ອປົກປ້ອງສິດທິມະນຸດທີ່ພົວພັນໃນບັນຫາທີ່ກິນ, ການປາມົງ ແລະ ປ່າໄມ້.’ (ວັກທີ 4.8)

[102] E/C.12/ARG/CO/3, para. 13.
[103] E/C.12/KHM/CO/1, para. 31.
[104] A/HRC/18/46, paras. 8–24 and 90.

## ຄະດີຕົວຢ່າງ

**ສານສິດທິມະນຸດລະຫວ່າງລັດອາເມລິກາ: ຄະດີຂອງ *Nor'n Catrimán et al. (ຜູ້ນຳ, ສະມາຊິກ ແລະ ນັກເຄື່ອນໄຫວຂອງຄົນພື້ນເມືອງຊາວ Mapuche) ກັບ ປະເທດຊິລີ, ເອກະສານ ເລກທີ 279 (29 ພຶດສະພາ* 2014).** ການພິຈາລະນາແມ່ນໄດ້ລົງເລິກກ່ຽວກັບດ້ານການກະທຳຜິດຂອງຜູ້ນຳຄົນພື້ນເມືອງ ແລະ ນັກເຄື່ອນໄຫວທີ່ຮຽກຮ້ອງສິດຂອງຄົນພື້ນເມືອງທີ່ມີຕໍ່ທີ່ດິນບັນພະບູລຸດ. ນັກເຄື່ອນໄຫວຄົນພື້ນເມືອງທີ່ໄດ້ພົບວ່າມີຄວາມຜິດຈາກຄຳຕັດສິນຂອງສານປະເທດ ຊິລີພາຍໃຕ້ນິຕິກຳວ່າດ້ວຍການຕ້ານການກໍການຮ້າຍແມ່ນໄດ້ຂໍຕໍ່ສູ້ໃນສານສິດທິມະນຸດລະຫວ່າງລັດອາເມລິກາ. ສານຊິລີໄດ້ພິຈາລະນາວ່າການຕັດສິນແມ່ນເປັນໄປຕາມ ນິຕິກຳພາຍໃນທີ່ມີ, ອີງຕາມການລະເມີດສິດທິໃນຄວາມເທົ່າທຽມ ແລະ ຫຼັກການຫ້າມບໍ່ໃຫ້ຈຳແນກ, ອີງຕາມການລະເມີດລະບົບກົດໝາຍ ແລະ ສິດທິໃນການສະແດງ ຄຳຄິດເຫັນຈຶ່ງລົງໂທດຕັດອິດສະຫຼະພາບ 15 ປີ ຫ້າມບໍ່ໃຫ້ເຄື່ອນໄຫວທາງສື່ມວນຊົນ ຫຼື ບໍ່ໃຫ້ເຄື່ອນໄຫວອັນທີ່ມັນເປັນການ ເຜີຍແຜ່ຂ່າວສານ ແລະ ປຸກລະດົມການສະແດງຄານຄິດເຫັນ. ຕໍ່ກັບບັນຫາດັ່ງກ່າວ, ສານສິດທິມະນຸດໄດ້ລົງຄຳເຫັນວ່າການຕັດສິນດັ່ງກ່າວນັ້ນບໍ່ພຽງແຕ່ໄດ້ລະເມີດສິດເສລີພາບໃນ ການສະແດງຄວາມຄິດເຫັນຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດແລ້ວ, ແຕ່ຍັງໄດ້ສົ່ງຜົນກະທົບແກ່ການໃຊ້ສິດເສລີພາບໃນການ ສະແດງຄວາມຄິດເຫັນຂອງຄົນຊາວ Mapuche ອີກດ້ວຍ, ສິ່ງທີ່ ຖືກຕັດສິນນີ້ແມ່ນມັນອາດສ້າງຄວາມຫວາດກົວໃຫ້ແກ່ສະມາຊິກໃນຊຸມ ຊົນທີ່ກ່ຽວຂ້ອງ ແລະ ຕັ້ງໃຈທີ່ຈະປະກອບສ່ວນໃນ ກິດຈະກຳຮຽກຮ້ອງສິດໃນທີ່ຢູ່ອາໃສຂອງຕົນ.[105]

### ຫຼັກການສາກົນທີ່ກ່ຽວຂ້ອງອື່ນໆ

ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງໃນສະບຽງອາຫານແຫ່ງຊາດ (Rome, FAO, 2012), ຄຳແນະນຳ 4.8.

[105] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ
## ພ. ການປ້ອງກັນບັນຫາການຈຳກັດສິດທິໃນສິດແລະຜົນປະໂຫຍດໃນສາທາລະນະ ບົດສະເໜີ

ໃນສະຖານະການທີ່ຖືກຍົກເວັ້ນ, ລັດທີ່ກ່ຽວຂ້ອງແມ່ນອາດຈະຈຳກັດ ຫຼື ລົບລ້າງສິດໃນການຄອບຄອງທີ່ດິນຂອງສ່ວນບຸກຄົນ ຫຼື ສ່ວນລວມອັນເນື່ອງມາຈາກຄວາມຈຳເປັນໃນການສ້າງຜົນປະໂຫຍດສ່ວນລວມ. ຕົວຢ່າງ: ການສ້າງໂຮງຮຽນ, ໂຮງໝໍ ຫຼື ຖະໜົນຫົນທາງທີ່ອາດຕ້ອງການການຖອນສິດຄອບຄອງໃນທີ່ດິນທີ່ກ່ຽວຂ້ອງ. ການຈຳກັດສິດທີ່ກ່າວມານັ້ນແມ່ນຖືວ່າກະທຳພາຍໃຕ້ແນວຄວາມຄິດຂອງຜົນປະໂຫຍດສ່ວນລວມ, ຫຼື ເປັນທີ່ຮູ້ກັນວ່າແມ່ນຄວາມຍຸດຕິທຳເພື່ອສ່ວນລວມ.[106] ແນວຄວາມຄິດທີ່ວ່ານີ້ແມ່ນເປັນການອານຸຍາດໃຫ້ມີການເວນຄືນທີ່ດິນ, ການຂໍຄືນທີ່ດິນແບບບັງຄັບ, ຫຼື ການປ່ຽນຮູບແບບການນຳໃຊ້ທີ່ດິນຕາມກົດໝາຍ ແລະ ເປັນການບໍລິຫານຈັດການການຄອບຄອງທີ່ດິນ. ນອກນີ້ ແນວຄວາມຄິດ "ການພັນທະນາເພື່ອສັງຄົມ" ທີ່ກ່ຽວກັບຊັບສິນ ຫຼື ທີ່ດິນໄດ້ຖືກນຳໃຊ້ໃນບາງປະເທດເພື່ອອານຸຍາດໃຫ້ມີການແບ່ງປັນທີ່ດິນຄືນໃໝ່ເພື່ອການປະຕິຮູບທາງກະເສດ.[107]

"ເພື່ອສະໜັບສະໜຸນຂະບວນການກະຊິກຳຂະໜາດນ້ອຍ, ນັກລາຍງານພິເສດໄດ້ແນະນຳວ່າລັດຖະບານຂອງປະເທດຈີນຄວນພິຈາລະນາຮັບຮອງເອົາມາດຕະການໃດໜຶ່ງເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມໝັ້ນຄົງຂອງການຄອບຄອງທີ່ດິນໃນເຂດຊົນນະບົດສຳລັບຜູ້ທີ່ອາໃສການກະຊິກຳເປັນອັນລ້ຽງຊີບ…ການຈຳກັດທີ່ມີຄວາມເປັນໄປໄດ້ເພື່ອການຮ່ວມມືໃນການສ້າງຄວາມປ່ຽນແປງກໍ່ຄືຄວາມເປັນໄປໄດ້ຂອງລັດໃນການເວນຄືນທີ່ດິນຈາກປະຊາຊົນເພື່ອຜົນປະໂຫຍດສ່ວນລວມເຊິ່ງລວມມີການໃຫ້ສານກວດສອບຢ່າງເຂັ້ມງວດກັບເຈົ້າໜ້າທີ່ທີ່ອາໃສຂໍ້ຍົກເວັ້ນໃນການສ້າງປະໂຫຍດກັບຜູ້ຄອບຄອງທີ່ດິນ."

*ທີ່ມາຂໍ້ມູນ:* ບົດລາຍງານຂອງນັກລາຍງານພິເສດກ່ຽວກັບສິດໃນດ້ານອາຫານ: ພາລະກິດທີ່ປະເທດຈີນ (A/HRC/19/59/Add.1), ວັກທີ 41.

ການເວນຄືນທີ່ດິນພາຍໃຕ້ເງື່ອນໄຂເພື່ອສິດ ແລະ ຜົນປະໂຫຍດສ່ວນລວມແມ່ນສາມາດເປັນເຄື່ອງມືທີ່ເຂັ້ມແຂງໄດ້ສຳລັບເລື່ອງການຊົດເຊີຍຊັບສິນ ຫຼື ສຳລັບການປະຕິບັດທີ່ຖືກຕ້ອງໃນການຮັບຮູ້ສິດທິມະນຸດ. ໃນເວລາດຽວກັນ ການເວນຄືນຈະຖືກດຳເນີນໄປແນວໃດກໍ່ຕາມ, ມັນອາດມີຜົນກະທົບດ້ານການຈຳກັດການໃຊ້ສິດອັນເນື່ອງມາຈາກການບັງຄັບໃຫ້ຍົກຍ້າຍ ຫຼື ການຂັດຂວາງການເຂົ້າເຖິງທີ່ຢູ່ອາໃສ, ແບບແຜນການດຳລົງຊີວິດ ແລະ ການບໍລິການທາງສັງຄົມ. ຄວາມຖືກຕ້ອງຂອງການເວນຄືນແມ່ນເປັນເລື່ອງທີ່ກຳລັງຖືກສອບຖາມເປັນປະຈຳ, ມີຫຼາຍໆກໍລະນີຂອງການເວນຄືນທີ່ດິນວ່າເພື່ອເປັນການສ້າງປະໂຫຍດ ໃຫ້ສັງຄົມແທ້ບໍ, ເພາະທີ່ດິນນັ້ນສ່ວນຫຼາຍແລ້ວແມ່ນມອບກຳມະສິດການຄອບຄອງໃຫ້ແກ່ພາກເອກະຊົນ (ເອີ້ນກັນວ່າການຫັນທີ່ດິນເປັນເອກະຊົນ).

ເວທີເພື່ອການສົນທະນາຂອງສາທາລະນະ ຫຼື ການປະທ້ວງທີ່ສັນຕິກ່ຽວກັບບັນຫາທີ່ດິນແມ່ນສາມາດຖືກຈຳກັດພາຍໃຕ້ຂໍ້ກຳນົດທີ່ຈຳກັດເສລີພາບໃນການສະແດງຄວາມຄິດເຫັນ ຫຼື ການໂຮມຊຸມນຸມເພື່ອປົກປ້ອງຄວາມໝັ້ນຄົງແຫ່ງຊາດ.

---

[106] Article 1 of Protocol No. 1 to the European Convention on Human Rights mentions "public interest" and article 21.2 of the American Convention on Human Rights mentions "public utility or social interest" as reasons for deprivation of property

[107] For instance, according to article 21.1 of the American Convention on Human Rights, "the law may subordinate … the use and enjoyment [of property] to the interest of society". In Brazil, the Constitution allows land expropriation for land redistribution where the "social function" of land is not being fulfilled, e.g., where land is not being actively cultivated (E/CN.4/2003/54/Add.1, para. 18).

ເພາະສະນັ້ນ, ລັດທີ່ກ່ຽວຂ້ອງທີ່ຈະປ່ຽນຮູບແບບສິດໃນການຄອບຄອງທີ່ດິນ ຫຼື ໃຊ້ມາດຕະການໃດໜຶ່ງທີ່ມັນອາດສົ່ງ ຜົນສະທ້ອນຕໍ່ສິດທິມະນຸດແມ່ນຕ້ອງໃຫ້ສອດຄ່ອງກັບການປົກປ້ອງທີ່ກໍານົດໃນກົນໄກສິດທິມະນຸດສາກົນນໍາ.

## ຫຼັກການສາກົນຕ່າງໆທີ່ກ່ຽວຂ້ອງກັບບັນຫາທີ່ດິນ

ໃນການນໍາໃຊ້ສິດ ແລະ ເສລີພາບຂອງປະຊາຊົນ, ຄົນທຸກຄົນແມ່ນຈະຖືກຈໍາກັດສິດພຽງແຕ່ໃນກໍລະນີທີ່ກໍານົດໃນກົດໝາຍວ່າເພື່ອສິດ ແລະ ຜົນປະໂຫຍດສ່ວນລວມເທົ່ານັ້ນ, ແລະ ຕ້ອງໃຫ້ສອດຄ່ອງກັບຄວາມເປັນທໍາ, ລະບຽບສັງຄົມ ແລະ ສອດຄ່ອງກັບສະຫວັດດີການສັງຄົມທົ່ວໄປໃນຮູບແບບສັງຄົມປະຊາທິປະໄຕ.

(ຖະແຫຼງການສິດທິມນຸດສາກົນ ມາດຕາ 29, ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະ**ທໍາ** ມາດຕາ 4)

ການຈໍາກັດທີ່ວ່ານັ້ນແມ່ນຕ້ອງບໍ່ຂັດກັບຄວາມຜາສຸກ ຫຼື ການນໍາໃຊ້ສິດເສລີພາບຂອງຄົນ ແຕ່ຍົກເວັ້ນຖ້າໄດ້ກໍາ ນົດໃນກົດໝາຍທີ່ອອກມາເພື່ອຜົນປະໂຫຍດສ່ວນລວມ ແລະ ການອອກຂໍ້ກໍານົດດັ່ງກ່າວມາກໍແມ່ນເພື່ອໃຊ້ກັບບັນຫາທີ່ກ່ຽວຂ້ອງນີ້ເທົ່ານັ້ນ.
(ສົນທິສັນຍາວ່າດ້ວຍສິດທິມະນຸດແຫ່ງລັດອາເມລິກາ ມາດຕາ 30)

ທຸກຄົນແມ່ນມີສິດໃນການນໍາໃຊ້ ແລະ ໄດ້ປະໂຫຍດຈາກຊັບສິນຂອງຕົນເອງ. ກົດໝາຍອາດຈະຢູ່ພາຍໃຕ້ການນໍາໃຊ້ ແລະ ການໃຊ້ປະໂຫຍດຂອງຊັບສິນດັ່ງກ່າວ. ບໍ່ມີໃຜທີ່ຈະສາມາດຕັດແຍກສິດດັ່ງກ່າວອອກໄປໄດ້ນອກຈາກໄດ້ຮັບການຊົດເຊີຍທີ່ເໝາະສົມ ແລະ ເພື່ອສິດແລະຜົນປະໂຫຍດຂອງສັງຄົມ ແລະ ຕ້ອງປະຕິບັດໄປຕາມກົດໝາຍທີ່ກໍານົດໄວ້.

(ສົນທິສັນຍາສິດທິມະນຸດແຫ່ງອາເມລິກາ ມາດຕາ 21, ກົດບັດອັບຟຣິກາກ່ຽວກັບສິດທິມະນຸດ ແລະ ສິດທິຂອງປະຊາຊົນ ມາດຕາ 21.1)

## ຕົວຢ່າງຂອງການນໍາໃຊ້

ໃນເວລາທີ່ການດໍາເນີນງານເພື່ອຜົນປະໂຫຍດຂອງສັງຄົມໄດ້ເລີ່ມຕົ້ນແລ້ວ, ສິດທິໃນການຄອບຄອງທີ່ດິນ ແລະ ສິດທິຕ່າງໆອາດໄດ້ຮັບຜົນກະທົບ, ການດໍາເນີນງານທີ່ວ່ານັ້ນແມ່ນຈະຖືວ່າເປັນກິດຈະກໍາທີ່ຖືກຕ້ອງກໍ່ຕໍ່ເມື່ອ:

- ມີຂໍ້ກໍານົດໃນກົດໝາຍ
- ປະຕິບັດສອດຄ່ອງກັບສິດທິມະນຸດທີ່ລັດພາຄີມີພັນທະໃນການປະຕິບັດຕາມ
- ມີຄວາມຈໍາເປັນໃນການສົ່ງເສີມຊີວິດການເປັນຢູ່ໃນສັງຄົມແບບປະຊາທິປະໄຕ
- ມີຄວາມເໝາະສົມ ແລະ ຈັດຕັ້ງປະຕິບັດຕາມເງື່ອນໄຂຄວາມຮຽກຮ້ອງຕ້ອງການໃນສັງຄົມ
- ບໍ່ມີການເລືອກປະຕິບັດ
- ມີລະບຽບເພື່ອຮັບປະກັນການຊົດເຊີຍ ແລະ ການທົດແທນຄືນທີ່ເປັນທໍາ ແລະ ເໝາະສົມ

ການຕົກລົງໃຫ້ຍົກຍ້າຍ ແລະ ເວນຄືນທີ່ດິນແມ່ນອີງໃສ່ສິດ ແລະ ຜົນປະໂຫຍດຂອງສັງຄົມທີ່ສອດຄ່ອງກັບເງື່ອນໄຂຫຼາຍຢ່າງເພື່ອເປັນການສົ່ງເສີມສິດທິມະນຸດ ແລະ ລະບຽບກົດໝາຍເຊັ່ນ:

- ມີພຽງກໍລະນີພິເສດທີ່ຈຳເປັນຕ້ອງຍົກເວັ້ນແມ່ນຈະຖືວ່າມີເຫດຜົນໃນການອ້າງວ່າ "ເພື່ອສິດ ແລະ ຜົນປະໂຫຍດຂອງສັງຄົມ"
- ການໃຫ້ຍົກຍ້າຍ ແລະ ເວນຄືນນັ້ນຕ້ອງ "ມີເຫດຜົນ" ແລະ ດຳເນີນໄປຍ້ອນບໍ່ມີທາງເລືອກອື່ນອີກແລ້ວ
- ການໃຫ້ຍົກຍ້າຍ ແລະ ເວນຄືນນັ້ນຕ້ອງ "ສົມສ່ວນ" (ປະເມີນຜົນກະທົບ ແລະ ຜົນທີ່ຈະໄດ້ເພື່ອຄົນໃນຫຼາຍຊຸມຊົນຫຼາຍແຫ່ງ, ຕ້ອງປະເມີນເບິ່ງຜົນກະທົບຈາກການຍົກຍ້າຍທີ່ຈະເກີດນັ້ນ)
- ການໃຫ້ຍົກຍ້າຍ ແລະ ເວນຄືນນັ້ນຕ້ອງຕອບສະໜອງສະຫວັດດີການສັງຄົມທົ່ວໄປ ແລະ ຕ້ອງສາມາດສະແດງຜົນທີ່ຈະເກີດ
- ການໃຫ້ຍົກຍ້າຍ ແລະ ເວນຄືນນັ້ນຕ້ອງມີຂໍ້ກຳນົດໃນກົດໝາຍ ແລະ "ແຈ້ງໃຫ້ຮັບຊາບລ່ວງໜ້າ"
- ການໃຫ້ຍົກຍ້າຍ ແລະ ເວນຄືນນັ້ນຕ້ອງມີການຄອບຄຸມເພື່ອປະເມີນການຈັດຕັ້ງປະຕິບັດຕາມກົດໝາຍ ແລະ ພັນທະທາງສາກົນຂອງລັດ
- ຂໍ້ມູນກ່ຽວກັບການຕົກລົງ ແລະ ເງື່ອນໄຂສຳລັບໂຄງການແມ່ນຕ້ອງເປີດເຜີຍ ແລະ ມີຄວາມໂປ່ງໃສ
- ການໃຫ້ຍົກຍ້າຍ ແລະ ເວນຄືນນັ້ນຕ້ອງມີການປຶກສາຫາລື ແລະ ມີສ່ວນຮ່ວມໃນການຕັດສິນໃຈ
- ກົນໄກທີ່ມີປະສິດທິພາບໃນການປຽວຍາຕ້ອງມີໄວ້ເພື່ອຊ່ວຍຜູ້ທີ່ໄດ້ຜົນກະທົບທາງກົງ ແລະ ອ້ອມ

ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງແມ່ນໄດ້ເນັ້ນການປົກປ້ອງບັນຫາທີ່ກ່າວມານີ້. ເນື້ອໃນຄູ່ມືໄດ້ເນັ້ນວ່າໃນຂະນະທີ່ສິດໃນການຄອບຄອງທີ່ດິນສາມາດຖືກຈຳກັດໄດ້ຈາກຄົນອື່ນ ແລະ ຈາກມາດຕະການທີ່ອອກໂດຍລັດນັ້ນກໍ່ແມ່ນເພື່ອສິດ ແລະ ຜົນປະໂຫຍດທາງສັງຄົມເທົ່ານັ້ນ, "ມາດຕະການທີ່ວ່ານີ້ແມ່ນຄວນຖືກກຳນົດໂດຍ ກົດໝາຍ, ເປົ້າໝາຍທີ່ແນໃສ່ການສົ່ງເສີມທາງດ້ານສະຫວັດດີການສັງຄົມທົ່ວໄປທີ່ລວມມີການປົກປ້ອງສະພາບແວດລ້ອມ ແລະ ການປະ ຕິບັດທີ່ສອດຄ່ອງກັບພັນທະສິດທິມະນຸດຂອງລັດ" (ຄູ່ມື 4.3).

ສຳລັບເງື່ອນໄຂທີ່ມີຄວາມເປັນໄປໄດ້, ການປົກປ້ອງທີ່ກ່າວມານັ້ນແມ່ນຕ້ອງໃຫ້ລັດຖະບານນຳໃຊ້ມາດຕະການຫຼາຍຢ່າງເຊັ່ນ:

- ຮັບປະກັນມາດຕະການທີ່ນຳໃຊ້ວ່າມັນມີຢູ່ພາຍໃຕ້ກົດໝາຍພາຍໃນ ແລະ ສອດຄ່ອງກັບກົດໝາຍສິດທິມະນຸດສາກົນ
- ສະເໜີ ແລະ ໃຫ້ຂໍ້ພິສູດຢ່າງຈະແຈ້ງວ່າມາດຕະການທີ່ນຳໃຊ້ນັ້ນຈະນຳຜົນປະໂຫຍດມາໃຫ້ຕາມວັດຖຸປະສົງໃນດ້ານສະຫວັດດີການທົ່ວໄປ
- ດຳເນີນການປະເມີນຜົນກະທົບທາງບວກ ແລະ ທາງລົບທີ່ມັນອາດຈະເກີດຈາກການປະຕິບັດໂຄງການເຊັ່ນວ່າບັນຫາການຖືກ ຈຳແນກລະຫວ່າງຊຸມຊົນ
- ຮັບປະກັນໃຫ້ມີການສົນທະນາຢ່າງເປີດກວ້າງ ແລະ ໂປ່ງໃສໃນບັນຫາຂອງໂຄງການ ໂດຍສະເພາະການດຳເນີນການປຶກສາຫາລື ແລະ ໃຫ້ສາທາລະນະມີສ່ວນຮ່ວມນຳ
- ໃຫ້ອົງກອນອິດສະລະທຳການປະເມີນກ່ຽວກັບຜົນໄດ້ຜົນເສຍທີ່ຈະເກີດຈາກໂຄງການ

- ໃຫ້ກົນໄກການຮ້ອງທຸກ ແລະ ໃຫ້ການຊ່ວຍເຫຼືອທາງກົດໝາຍ ແລະ ພັກດັນໃຫ້ມີການປຽວຍາຈາກໂຄງການທີ່ຈະເກີດຂື້ນນັ້ນ

## ຫຼັກການ ແລະ ຄູ່ມືທີ່ກ່ຽວຂ້ອງອື່ນໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານຈັດການການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (Rome, FAO, 2012), ຄູ່ມື 4.3.
- ການໃຫ້ສໍາປະທານ ແລະ ການເວນຄືນທີ່ດິນຂະໜາດໃຫຍ່: ເອກະສານຫຼັກການ ແລະ ມາດຕະການເພື່ອແກ້ໄຂບັນຫາສິດທິມະນຸດ (A/HRC/13/33/Add.2).
- ຄູ່ມື ແລະ ຫຼັກການພື້ນຖານກ່ຽວກັບການຖືກບັງຄັບໃຫ້ຍົກຍ້າຍ ແລະ ຂາດທີ່ຢູ່ອາໄສອັນເນື່ອງມາຈາກບັນຫາການພັດທະນາ (A/HRC/4/18, annex I), paras. 21 and 22.

## ບົດສະຫຼຸບສັງລວມ
## ຝ. ຄວາມຮັບຜິດຊອບຂອງວິສະຫະກິດ ແລະ ພັນທະໜ້າທີ່ຂອງລັດ
## ບົດສະເໜີ

ການດຳເນີນທຸລະກິດຕ່າງໆແມ່ນຕົວຂັບເຄື່ອນທາງເສດຖະກິດພາຍໃນ ແລະ ສາກົນ. ແນວໃດກໍດີ ການດຳເນີນທຸລະກິດທີ່ວ່ານັ້ນມັນກໍເປັນສາຍເຫດຂອງຄວາມຂັດແຍ່ງໃນທີ່ດິນ (ໃນບັນດາຫຼາຍໆເລື່ອງທີ່ກ່ຽວຂ້ອງ), ແລະ ນຳຜົນກະທົບທາງລົບມາສູ່ການນຳໃຊ້ສິດຂອງຄົນ.

ໃນເຂດຊົນນະບົດກໍເປັນຕົວຢ່າງໜຶ່ງຂອງການຂຸດຄົ້ນຊັບພະຍາກອນທຳມະຊາດເພື່ອໃຊ້ເຂົ້າໃນດ້ານອຸດສະຫະກຳເຊັ່ນ: ການຕັດໄມ້ ແລະ ບໍ່ທ່ານຫີນ, ສິ່ງເຫຼົ່ານີ້ແມ່ນນຳມາຊຶ່ງຄວາມເສຍຫາຍທາງທຳມະຊາດໃນດ້ານມົນລະພິດໃນແມ່ນ້ຳ ແລະ ທີ່ດິນ ແລ້ວມັນກະທົບໃສ່ຊີວິດການເປັນຢູ່ ແລະ ສຸກຂະພາບຂອງຄົນໃນຊຸມຊົນ. ຈາກສິ່ງທີ່ກ່າວມານີ້ ໂດຍສະເພາະແມ່ນຕັ້ງແຕ່ປີ 2008 ທີ່ມີບັນຫາດ້ານວິກິດການທາງອາຫານໃນໂລກ, ຜົນກໍຄືວ່າທາງບໍລິສັດການກະເສດຕ່າງໆຈຶ່ງພາກັນຟ້າວຟັ່ງໃນການຂະຫຍາຍທີ່ດິນເພື່ອການກະເສດອອກໄປຕື່ມເພື່ອແນໃສ່ການຜະລິດອາຫານທີ່ພໍພຽງ ແລ້ວສົ່ງອອກໄປຍັງປະເທດຕ່າງໆທີ່ຂາດແຄນດ້ານສະບຽງອາຫານ. ໃນຂະນະດຽວກັນມີຫຼາຍໆໂຄງການທີ່ຮັບປາກກັບທ້ອງຖິ່ນວ່າຈະແກ້ໄຂວຽກເຮັດງານທຳ, ໄຟຟ້າ, ສາທາລະນະສຸກ ແລະ ການ ສຶກສາ, ແຕ່ສ່ວນຫຼາຍແລ້ວແມ່ນບໍ່ສາມາດເຮັດໄດ້ຕາມທີ່ສັນຍາ, ສຸດທ້າຍຊຸມຊົນກໍຕົກໃນສະພາບທຸກຍາກ.

ໃນບໍລິບົດຂອງຕົວເມືອງ, ບັນດາທຸລະກິດຕ່າງໆແມ່ນໄດ້ສຸມໃສ່ການສ້າງສະຖານທີ່ຊອບປິ້ງ ແລະ ທີ່ຢູ່ແບບທັນສະໄໝ ເຊິ່ງວ່າມັນເປັນການບັງຄັບຄົນໃຫ້ຍົກຍ້າຍອອກຈາກເຂດດັ່ງກ່າວ ແລະ ເກີດການຮື້ທຳລາຍສວນສາທາ ແລະ ສະຖານທີ່ທາສາຕ່າງໆຕາມແຜນໂຄງການວ່າດ້ວຍການ "ສ້າງເມືອງໃໝ່".

ບັນດາຄວາມສ່ຽງອື່ນໆກໍແມ່ນໃນເຂດອຸດສະຫະກຳທີ່ຫຼາກຫຼາຍເຊິ່ງລວມມີເລື່ອງຂອງການຖິ້ມຂີ້ເຫຍື້ອສານພິດເຊິ່ງມັນຈະໄປຕົກຄ້າງໃນທີ່ດິນ ແລະ ນ້ຳ, ສິ່ງທີ່ວ່າມານີ້ແມ່ນມັນຈະກະທົບໃສ່ສຸກຂະພາບຂອງຜູ້ທີ່ອາໃສໃນເຂດໃກ້ຄຽງ.

"ມີການລາຍງານຫຼາຍຢ່າງແກ່ຜູ້ຊ່ຽວຊານກ່ຽວກັບບັນຫາການຄົ້ນຫາ ແລະ ຂຸດຄົ້ນແຮ່ທາດວ່າມັນໄດ້ກະທົບຕໍ່ຝູງສັດເພາະວ່າສັດເຫຼົ່ານັ້ນແມ່ນບໍ່ສາມາດເຂົ້າຫາບ່ອນທີ່ເຄີຍອາໃສຢູ່, ນອກນີ້ທົ່ງຫຍ້າ ແລະ ສາຍນ້ຳກໍແມ່ນໄດ້ຖືກທຳລາຍ. ບັນຫາທີ່ກ່າວມານັ້ນແມ່ນຍັງໄດ້ກະທົບຕໍ່ຄົນລ້ຽງສັດທີ່ອາໃສທົ່ງຫຍ້າ ແລະ ແມ່ນ້ຳໃນການລ້ຽງສັດ ເຊິ່ງວ່າສິດໃນການມີມາດຖານທີ່ພໍພຽງໃນການດຳລົງຊີວິດ ແລະ ມີສ່ວນຮ່ວມໃນຊີວິດທາງວັດທະນະທຳໃນດ້ານການປູກຝັງລ້ຽງສັດກໍແມ່ນໄດ້ຖືກທຳລາຍໄປ.
ກ່ຽວກັບບັນຫາທີ່ວ່ານີ້ ຜູ້ຊ່ຽວຊານກໍແມ່ນໄດ້ສະແດງຄວາມເປັນຫ່ວງໃນດ້ານສິດທີ່ມີຕໍ່ຊັບພະຍາກອນນ້ຳທີ່ມັນສຳຄັນສຳລັບຊີວິດຂອງເຂົາເຈົ້າທີ່ເຂົາເຄີຍມີວັດທະນະທຳໃນການປູກຝັງລ້ຽງສັດແບບພະເນຈອນ, ນອກນີ ຄົນທີ່ອາໃສໃນຕົວເມືອງອື່ນໆຍັງໄດ້ຮັບຜົນກະທົບໄປນຳອີກ.
ສຸດທ້າຍ, ຜູ້ຊ່ຽວຊານຍັງໄດ້ຮັບຮູ້ວ່າບັນຫາຂອງການຂຸດຄົ້ນແຮ່ທາດແມ່ນໄດ້ເຮັດໃຫ້ຄົນລ້ຽງສັດຕ້ອງໄດ້ອົບພະຍົບໜີໄປໃນບ່ອນທີ່ຫ່າງໄກສອກຫຼີກອອກໄປອີກ, ບັນຫານີ້ແມ່ນມັນກະທົບໃສ່ການເຂົ້າສູ່ການສຶກສາ, ສາທາ ແລະ ການບໍລິການທາງສັງຄົມຕ່າງໆໃນໄລຍະຍາວຂອງເຂົາເຈົ້າອີກດ້ວຍ."

*ທີ່ມາ:* ບົດລາຍງານຂອງໜ່ວຍງານກ່ຽວກັບບັນຫາສິດທິມະນຸດ ແລະ ບໍລິສັດຂ້າມຊາດ ແລະ ວິສະຫະກິດຕ່າງໆ: ພາລະກິດຢ້ຽມຢາມມົງໂກເລຍ (A/HRC/23/32/Add.1), ວັກທີ 60.

ໃນການຮ່າງນິຕິກຳ ແລະ ນະໂຍບາຍຕ່າງໆຂອງລັດ, ນັກລາຍງານພິເສດໄດ້ທົບທວນວ່າ "ມັນມີຄວາມສຳຄັນທາງກົດໝາຍຫຼາຍສຳລັບລັດທີ່ກ່ຽວຂ້ອງທີ່ຕ້ອງທົບທວນຄືນວ່ານິຕິກຳທີ່ອອກມານັ້ນແມ່ນໄດ້ກຳນົດເອົາບັນຫາທີ່ກ່ຽວກັບການລົງທຶນ ແລະ ການປົກປ້ອງສະພາບແວດລ້ອມຂອງການລົງທຶນຕ່າງໆເພື່ອໃຫ້ສອດຄ່ອງກັບເລື່ອງການປົກປ້ອງ ແລະ ເຄົາລົບສິດທິມະນຸດ. ຕົວຢ່າງ: ໃນກໍລະນີທີ່ກົດໝາຍ ແລະ ນະໂຍບາຍມີຄວາມຈະແຈ້ງເຊັ່ນວ່າບັນຫາການເຂົ້າເຖິງທີ່ດິນທີ່ພົວພັນກັບເລື່ອງການອອກໃບຕາດິນເພື່ອຢັ້ງຢືນສິດໃນການຄອບຄອງ ແລະ ນຳໃຊ້, ສິ່ງທີ່ກ່າວມານີ້ແມ່ນມີຄວາມຈຳເປັນທັງໃນການປົກປ້ອງສິດຂອງຜູ້ມີອາຊີບລ້ຽງສັດ ແລະ ຜູ້ທີ່ເຂົ້າມາລົງທຶນ."

*ທີ່ມາ:* ບົດລາຍງານສຸດທ້າຍຂອງຜູ້ແທນພິເສດຈາກສະມັດຊາໃຫຍ່ກ່ຽວກັບບັນຫາສິດທິມະນຸດ ແລະ ບໍລິສັດຂ້າມຊາດ (A/HRC/17/31), ເພີ່ມເຕີມໃສ່ ມາດຕາທີ 3.

### ຫຼັກການສາກົນທີ່ສາມາດນຳໃຊ້ກັບທີ່ດິນ

ລັດທີ່ກ່ຽວຂ້ອງແມ່ນມີພັນທະໜ້າທີ່ໃນການເຄົາລົບ, ປົກປ້ອງ ແລະ ຈັດຕັ້ງປະຕິບັດສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານແກ່ບຸກຄົນ ແລະ ມຸ່ມຄົນຕ່າງໆເຊັ່ນວ່າ ບັນດາທຸລະກິດຕ່າງໆ, ວິສະຫະກິດທີ່ສຳຄັນພິເສດໃນສັງຄົມທີ່ມີໜ້າທີ່ສະ ເພາະແມ່ນຕ້ອງປະຕິບັດຕາມກົດໝາຍທີ່ມີ ແລະ ເຄົາລົບດ້ານສິດທິມະນຸດ, ຜູ້ເຄາະຮ້າຍຈາກບັນຫາສິດທິມະນຸດແມ່ນມີສິດໃນການເຂົ້າເຖິງຂະບວນການປຽວຢາທາງກົດໝາຍ ແລະ ທາງອື່ນໆທີ່ມີປະສິດທິພາບ.

(ຫຼັກການແນະ**ນຳ**ກ່ຽວກັບທຸລະກິດ ແລະ ສິດທິມະນຸດ: ການຈັດຕັ້ງປະຕິບັດຕາມກອບຂອງ ສປຊ “ການປົກປ້ອງ, ເຄົາລົບ, ແລະ ປຽວຢາ” ຫຼັກການທົ່ວໄປ 108

## ຕົວຢ່າງການນຳໃຊ້

ຄູ່ມືແນະນຳກ່ຽວກັບທຸລະກິດ ກັບ ສິດທິມະນຸດ: ການຈັດຕັ້ງປະຕິບັດຕາມກອບຂອງ ສປຊ “ການປົກປ້ອງ, ເຄົາລົບ, ແລະ ປຽວຢາ” (A/HRC/17/31) ແມ່ນໄດ້ຖືກສະເໜີໃຫ້ແກ່ສະພາສິດທິມະນຸດຈາກຜູ້ແທນພິເສດຂອງສະມັດຊາໃຫຍ່ກ່ຽວກັບບັນຫາສິດທິມະນຸດ ແລະ ບໍລິສັດຂ້າມຊາດລວມມີບັນດາວິສະຫະກິດຕ່າງໆ, ຄູ່ມືນີ້ແມ່ນໄດ້ຮັບການຮັບຮອງໂດຍສະພາສິດທິມະນຸດ ເດືອນ ມີນາ 2001. ເອກະສານຫຼັກການວ່າດ້ວຍການດຳເນີນງານ ແລະ ຫຼັກການພື້ນຖານແມ່ນໄດ້ໃຫ້ກອບການວິເຄາະທີ່ມີລາຍລະອຽດ ແລະ ຄຳເຫັນກ່ຽວກັບສາມເສົາຫຼັກຂອງກອບການດຳເນີນງານເຊັ່ນວ່າ “ພັນທະໜ້າທີ່ຂອງລັດໃນການປົກປ້ອງສິດທິມະນຸດ”, “ຄວາມຮັບຜິດຊອບຂອງສະຫະບໍລິສັດໃນການເຄົາລົບສິດທິມະນຸດ” ແລະ “ການເຂົ້າເຖິງຂະບວນການປຽວຢາ”. ກອບຫຼັກການທີ່ກ່າວມານັ້ນຍັງຖືກຮັບຮອງເຂົ້າໃນຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານຈັດການ ການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດຈາກຄະນະກຳມະທິການວ່າດ້ວຍຄວາມໝັ້ນຄົງທາງສະບຽງອາຫານ ຂອງໂລກ (ຫຼັກການແນະ**ນຳ** 3.2).

ໃນເວລາປະຕິບັດໜ້າທີ່ຢູ່ໃນມົງໂກເລຍປີ 2012, ໜ່ວຍງານກ່ຽວກັບບັນຫາສິດທິມະນຸດ ແລະ ບໍລິສັດຂ້າມຊາດພ້ອມທັງວິສະຫະກິດອື່ນໆແມ່ນໄດ້ຮັບການລາຍງານວ່າບັນຫາການຄົ້ນຫາ ແລະ ຂຸດຄົ້ນແຮ່ທາດມັນໄດ້ກະທົບຕໍ່ຝູງສັດເພາະວ່າສັດເຫຼົ່ານັ້ນແມ່ນບໍ່ສາມາດເຂົ້າຫາບ່ອນທີ່ເຄີຍອາໃສຢູ່, ນອກນີ້ ທົ່ງຫຍ້າ ແລະ ສາຍນໍ້າກໍ່ແມ່ນໄດ້ຖືກທຳລາຍ. ບັນຫາທີ່ກ່າວມານັ້ນ ແມ່ນຍັງໄດ້ກະທົບຕໍ່ຄົນລ້ຽງສັດທີ່ອາໃສທົ່ງຫຍ້າ ແລະ ແມ່ນໍ້າໃນ ການລ້ຽງສັດ ເຊິ່ງວ່າສິດໃນການມີມາດຖານທີ່ພໍພຽງໃນການດຳ ລົງຊີວິດ ແລະ ມີສ່ວນຮ່ວມໃນຊີວິດທາງວັດທະນະທຳໃນດ້ານ ການປູກຝັງລ້ຽງສັດກໍ່ແມ່ນໄດ້ຖືກທຳລາຍໄປ. ຕໍ່ກັບບັນຫາດັ່ງກ່າວນີ້, ທາງໜ່ວຍງານແມ່ນໄດ້ຮຽກຮ້ອງໃຫ້ວິສະຫະກິດທີ່ກ່ຽວຂ້ອງກັບການຂຸດຄົ້ນແຮ່ທາດເຫຼົ່ານັ້ນຕ້ອງປະຕິບັດຕາມພັນທະພາຍໃຕ້ກົດໝາຍຂອງມົງໂກເລຍໃນການດັດປັບສະພາບຂອງດິນພາຍຫຼັງໄດ້ສິ້ນສຸດກິດຈະກຳແລ້ວ, ນອກນັ້ນລັດຖະບານມົງໂກເລຍກໍ່ຕ້ອງຮັບປະກັນການຊ່ອຍເຫຼືອທາງການເງິນ ແລະ ເຕັກນິກຕ່າງໆທີ່ພໍພຽງໃນການປະເມີນກວດສອບບັນຫາທີ່ມີໃນໂຄງການທີ່ກ່າວມານັ້ນ.

ນອກນີ້ ທາງໜ່ວຍງານຍັງໄດ້ໃຫ້ຄຳເຫັນຕໍ່ໄປອີກວ່າລັດຖະບານຕ້ອງອອກນະໂຍບາຍທີ່ເໝາະສົມເພື່ອໃຫ້ສອດຄ່ອງກັບພັນທະທາງສິດທິມະນຸດໃນເວລາທີ່ເຮັດສັນຍາທາງດ້ານການລົງທຶນ ຫຼື ໃບອານຸຍາດການລົງທຶນກັບບັນດາວິສະຫະກິດຕ່າງໆ, ພ້ອມນັ້ນຕ້ອງເຈລະຈາເອົາເລື່ອງການບໍລິຫານຈັດການຄວາມສ່ຽງດ້ານສິດທິມນຸດເຂົ້າໃນສັນຍາການລົງທຶນລະຫວ່າງເອກະຊົນກັບລັດອີກນຳ.[109]

[108] United Nations publication, Sales No. 13.XIV.5.
[109] A/HRC/23/32/Add.1, paras. 59–65.

ໃນບົດຄົ້ນຄ້ວາປີ 2009 ກ່ຽວກັບການສຳປະທານ ແລະ ການເວນຄືນທີ່ດິນຂະໜາດໃຫຍ່, ນັກລາຍງານພິເສດກ່ຽວກັບສິດໃນອາຫານໄດ້ສະເໜີຫຼັກການ ແລະ ມາດຕະການຢູ່ 11 ຂໍ້ ໃຫ້ແກ່ປະເທດທີ່ມີການສຳປະທານ ແລະ ເວນຄືນທີ່ດິນ. ບົດຄົ້ນຄ້ວາໄດ້ເນັ້ນວ່າໃນການລົງທຶນທີ່ມີຂະໜາດໃຫຍ່ນັ້ນ ຜົນປະໂຫຍດທີ່ໄດ້ໃນການລົງທຶນນັ້ນແມ່ນບໍ່ມີບັນຫາ ແຕ່ຕ້ອງພະຍາຍາມຮັກສາສິດທີ່ມີຕໍ່ທີ່ດິນຄືເກົ່າ ແລະ ມີເງື່ອນໄຂຫຼາກຫຼາຍໃນທາງເລືອກເພື່ອທີ່ຈະປ່ຽນສິດການຄອບຄອງທີ່ດິນເຫຼົ່ານັ້ນ. ແນວໃດກໍ່ດີ, ໃນກໍລະນີຂອງການສຳປະທານ ແລະ ເວນຄືນທີ່ດິນຂະໜາດໃຫຍ່ນັ້ນ ທາງນັກລາຍງານພິເສດໄດ້ສະເໜີວ່າໃຫ້ໃຊ້ບັນດາຫຼັກການຕາມທີ່ຮ່າງຂ້າງລຸ່ມນີ້:

1. ການເຈລະຈາເລື່ອງການລົງທຶນແມ່ນຄວນມີຄວາມໂປ່ງໃສ ແລະ ມີສ່ວນຮ່ວມຈາກພາກສ່ວນອື່ນໆ
2. ກໍລະນີທີ່ມີການຍົກຍ້າຍກໍ່ແມ່ນຕ້ອງໄດ້ຜ່ານການປຶກສາຫາລືແບບເອກະລາດ, ມີການແຈ້ງລ່ວງໜ້າ ແລະ ມີການຕົກລົງເຫັນດີກັນເສຍກ່ອນ
3. ເງື່ອນໄຂໃນການຍົກຍ້າຍນັ້ນແມ່ນຕ້ອງປະຕິບັດຢູ່ພາຍໃຕ້ກົດໝາຍທີ່ມັນສອດຄ່ອງກັບມາດຕະຖານສິດທິມະນຸດສາກົນທີ່ກ່ຽວຂ້ອງ
4. ປະຊາຊົນໃນທ້ອງຖິ່ນແມ່ນຄວນໄດ້ປະໂຫຍດຈາກລາຍຮັບທີ່ໄດ້ຈາກການລົງທຶນ
5. ໃນປະເທດທີ່ປະເຊີນກັບກັບບັນຫາຄວາມທຸກຍາກໃນລະດັບສູງ ແລະ ຂາດວຽກເຮັດງານທຳ, ລັດຖະບານທີ່ກ່ຽວຂ້ອງນັ້ນຕ້ອງສົ່ງເສີມການລົງທຶນໃນລະບົບກະເສດທີ່ຕ້ອງການແຮງງານຈຳນວນຫຼາຍ
6. ປະເທດທີ່ຮັບເອົາການລົງທຶນແມ່ນຄວນຮ່ວມມືກັນກັບຜູ້ລົງທຶນເພື່ອຄົ້ນຫາແນວທາງໃນການຮັບປະກັນຂະບວນການຜະລິດການກະເສດທີ່ສາມາດປົກປ້ອງສະພາບແລດລ້ອມໄປນຳ
7. ພັນທະຂອງຜູ້ລົງທຶນແມ່ນຄວນຮ່າງອອກມາຢ່າງຈະແຈ້ງ ແລະ ຕ້ອງປະຕິບັດຕາມສິ່ງທີ່ຮ່າງນັ້ນ
8. ສັນຍາການລົງທຶນດ້ານການນຳເຂົ້າສະບຽງອາຫານແມ່ນຄວນເອົາຂໍ້ກຳນົດກ່ຽວກັບການຂາຍໃນຕະຫຼາດທ້ອງຖິ່ນ (ໃຫ້ສົມດຸນລະຫວ່າງລາຄາໃນທ້ອງຕະຫຼາດ ແລະ ໃນສາກົນ)
9. ການປະເມີນຜົນກະທົບແບບມີສ່ວນຮ່ວມກັບຄົນພື້ນເມືອງເພື່ອໄດ້ການຕົກລົງເຫັນດີກ່ອນທີ່ຈະມີການລົງທຶນໃດໆເກີດຂຶ້ນ
10. ຄວນມີການປຶກສາຫາລືກັບຄົນພື້ນເມືອງກ່ອນທີ່ຈະອານຸມັດຮັບເອົາໂຄງການລົງທຶນຕ່າງໆ
11. ສິດທິມະນຸດ ແລະ ສິດດ້ານແຮງງານຂອງຄົນງານທີ່ຮັບຈ້າງໃນການກະເສດແມ່ນຄວນໄດ້ຮັບການປົກປ້ອງຈາກກົດໝາຍ, ແລະ ສອດຄ່ອງກັບກົນໄກຂອງອົງການແຮງງານສາກົນ.[110]

**ຄະດີຕົວຢ່າງ**

**ປະເທດເອວສະວາດໍ, ສານລັດຖະທຳມະນູນ:** *Federaci—n Independiente del Pueblo Shuar del Ecuador (FIPSE)* **ກັບ** *Arco Oriente Inc.*, **ຄະດີເລກທີ 994-99-RA (16 ມີນາ 2000).** ຄະດີດັ່ງກ່າວແມ່ນກ່ຽວກັບການຂັດແຍ່ງໃນທີ່ດິນຄົນພື້ນເມືອງຈາກບໍລິສັດເອກະຊົນ ແລະ ຄວາມລົ້ມເຫຼວຂອງລັດໃນການປົຕິບັດຕາມສົນທິສັນຍາອົງການແຮງງານສາກົນກ່ຽວກັບຄົນພື້ນເມືອງ ແລະ ຊົນເຜົ່າທີ່ອາໄສໃນປະເທດເອກະລາດຕ່າງໆ (ເລກທີ 169) 1989. ບໍລິສັດນ້ຳມັນເອກະຊົນ (Arco Oriente Inc.) ໄດ້ເຈລະຈາເຮັດສັນຍາກັບສ່ວນບຸກຄົນກ່ຽວກັບທີ່ດິນເພື່ອຫຼີກລ່ຽງການປຶກສາຫາລືກັບຊຸມຊົນຄົນພື້ນເມືອງ. ສານໄດ້ພິຈາລະນາວ່າການກະທຳຂອງບໍລິສັດນັ້ນແມ່ນຖືວ່າຂັດກັບສົນທິສັນຍາເລກທີ 169 ແລະ ລັດຖະທຳມະນູນຂອງເອວສະວາດໍ. ການຕົກລົງສຸດທ້າຍກໍໄດ້ຮັບການກຳນົດເອົາການປົກປ້ອງແບບແຜນການດຳລົງຊີວິດຂອງຄົນພື້ນເມືອງພາຍໃຕ້ກົດໝາຍ

[110] A/HRC/13/33/Add.2, annex.

ຕາມທີ່ໄດ້ປະຕິບັດກັນມາ ແລະ ຮຽກຮ້ອງໃຫ້ມີການປຶກສາຫາລືກັບຕົວແທນຂອງຄົນພື້ນເມືອງໃນຊຸມຊົນຢ່າງມີຄວາມເໝາະສົມ.[111]

**ຫຼັກການ ແລະ ຄູ່ມືສາກົນທີ່ກ່ຽວຂ້ອງຕ່າງໆ**

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານຈັດການ ການຄອບຄອງທີ່ດິນ ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງໃນດ້ານສະບຽງອາຫານແຫ່ງຊາດ (Rome, FAO, 2012), ຫຼັກການຄູ່ມື 3.2.
- ຫຼັກການແນະນຳກ່ຽວກັບການປະເມີນຜົນກະທົບດ້ານສິດທິມະນຸດຈາກການລົງທຶນ ແລະ ການຄ້າ (A/HRC/19/59/Add.5), ຄູ່ມື 2.1.
- ຄູ່ມືແນະນຳກ່ຽວກັບສິດທິມະນຸດ ກັບ ການດຳເນີນທຸລະກິດ: ການຈັດຕັ້ງປະຕິບັດຕາມກອບຫຼັກການ ສປຊ "ການປົກປ້ອງ, ເຄົາລົບ, ແລະ ການປຽວຢາ" (United Nations publication, Sales No. E.13.XIV.5)
- ຫຼັກການຄວາມຮັບຜິດຊອບຕາມສັນຍາ: ການນຳເອົາການບໍລິຫານຄວາມສ່ຽງທາງດ້ານສິດທິມະນຸດເຂົ້າໃນການເຈລະຈາເຮັດສັນຍາການລົງທຶນລະຫວ່າງລັດກັບຜູ້ລົງທຶນ (United Nations publication, Sales No. E.15.XIV.5).
- ການໃຫ້ສຳປະທານ ແລະ ເວນຄືນທີ່ດິນຂະໜາດໃຫຍ່: ເອກະສານຫຼັກການ ແລະ ມາດຕະການໃນການແກ້ໄຂບັນຫາສິດທິມະນຸດ (A/HRC/13/33/Add.2).
- ຄູ່ມືແນະນຳອາສາກ່ຽວກັບກາສະໜັບສະໜຸນການຮັບຮູ້ສິດໃນດ້ານການມີອາຫານມີພໍພຽງໃນບໍລິບົດຂອງຄວາມໝັ້ນຄົງໃນສະບຽງອາຫານແຫ່ງຊາດ (Rome, FAO, 2005), ຫຼັກການ 4.3.

[111] See *Land and Human Rights: Annotated Compilation of Case Law.*

## ບົດສະຫຼຸບສັງລວມ
## ມ. ກົດໝາຍອາຍາ ແລະ ກົດໝາຍມະນຸດສະທຳສາກົນ
## ບົດສະເໜີ

ບັນຫາທີ່ດິນກໍ່ແມ່ນເລື່ອງໜຶ່ງທີ່ເກີດໃນຍາມສົງຄາມ ແລະ ກົດໝາຍມະນຸດສະທຳສາກົນແມ່ນໄດ້ຖືກນຳໃຊ້ໃນເວລາດັ່ງ ກ່າວນອກເໜືອຈາກກົດໝາຍສິດທິມະນຸດ. ບັນຫາສົງຄາມ ແມ່ນສ້າງຄວາມເສຍຫາຍແກ່ທີ່ດິນ ແລະ ເຮັດໃຫ້ຄົນ ຂາດທີ່ຢູ່ອາໃສເນື່ອງຈາກທີ່ດິນ ແລະ ຊັບສິນຕ່າງໆຖືກ ທຳລາຍໃນນັ້ນມີຊັບພະຍາກອນນ້ຳ, ເຮືອນ, ສັດລ້ຽງ ແລະ ພືນລະປູກ. ສົງຄາມເຮັດໃຫ້ການດຳລົງຊີວິດຂອງຄົນມີບັນຫາ ແລະ ເກີດມີອາດສະຍາກຳສົງຄາມ. ຝ່າຍທີ່ໄດ້ໄຊຊະນະ ແມ່ນຈະຄອບຄຸມທີ່ດິນຂອງຊາວບ້ານ. ການກະທຳທີ່ວ່ານີ້ຖື ວ່າເປັນການລະເມີດກົດໝາຍມະນຸດສະທຳ ແລະ ກົດອາຍາ ສາກົນ. ເນື້ອໃນກົດໝາຍທັງສອງຢ່າງນີ້ໄດ້ໃຫ້ແນວທາງທີ່ ເປັນປະໂຫຍດທີ່ກ່ຽວຂ້ອງກັບທີ່ດິນ ແລະ ການນຳໃຊ້ຊັບ ພະຍາກອນທຳມະຊາດຕ່າງໆ.

"ຄະນະກຳມະທິການໄດ້ຮັບການລາຍງານຫຼາຍຢ່າງ...ເລື່ອງ ການທຳລາຍຊັບສິນທີ່ຈຳເປັນຂອງປະຊາຊົນໃນການດຳລົງຊີ ວິດຂອງເຂົາເຈົ້າ. ໃນບາງກໍລະນີ, ກໍ່ມີການລາຍງານວ່າມີ ການ ທຳລາຍຈົນໝົດກ້ຽງ. ນອກນີ້ ສະຖານທີ່ໄກ້ຄຽງຍັງໄດ້ ຖືກທຳ ລາຍໄປນຳ. ມີພະຍານຜູ້ໜຶ່ງໄດ້ລາຍງານວ່າ ສັດລ້ຽງ ແລະ ທີ່ດິນການກະເສດໄດ້ຖືກທຳລາຍ ແລະ ຖືກຂ້າ ຈາກອາວຸດ ສົງຄາມ. ນອກນີ້ຍັງມີຜູ້ລາຍງານຕື່ມອີກວ່າສະ ຖານທີ່ເກັບຮັກສາສັດ ແລະ ທີ່ດິນກະຊິກຳແມ່ນໄດ້ຖືກເຜົາ ແລະ ຂ້າສັດລ້ຽງ ທີ່ຮັກສາໄວ້ຈົນໝົດ. ຜູ້ທີ່ລາຍງານຍັງສະ ແດງໃຫ້ເຫັນຫຼັກຖານວ່າສັດລ້ຽງ, ໄຮ່ນາຕາກ້າ, ພືດພັກທີ່ປູກ ນັ້ນແມ່ນຖືກທຳລາຍຢ່າງຕັ້ງໃຈ...ເຖິງຢ່າງໃດກໍ່ດີຄົນທີ່ຕົກ ພາຍໃຕ້ການຄຸມຄອງຂອງຝ່າຍທີ່ຊະນະສົງຄາມຈະກາຍເປັນ ຄົນທີ່ຂາດດ້ານໂພສະນາການ ແລະ ກາຍເປັນຄົນອຶດຫິວ. ຕາມທີ່ໄດ້ຮັບລາຍງານມາກໍ່ຄືໃນຊ່ວງທ່ານ ກັດດາຟີຂຶ້ນກຳ ອຳນາດ, ທະຫານຂອງທ່ານໄດ້ບຸກເຂົ້າໄປໃນໝູ່ບ້ານແລ້ວ ປົ້ນສະດົມ ແລະ ເຜົາໝູ່ບ້ານພາຍຫຼັງໄດ້ຂ້າປະຊາຊົນ ແລະ ສັດລ້ຽງແລ້ວ. ມີພະຍານສອງຄົນໄດ້ກ່າວວ່າລັດຖະບານຍັງໄດ້ ເອົາສານເຄມີໃສ່ໃນນ້ຳສ້າງຂອງປະຊາຊົນ.

*ທີ່ມາ:* ບົດລາຍງານຂອງຄະນະກຳມະທິການສືບສວນສອບສວນສາກົນໄດ້ ດຳເນີນການອອບສວນບັນຫາການລະເມີດກົດມາຍສິດທິມະນຸດສາກົນໃນ ເມືອງ Libyan Arab Jamahiriya (A/HRC/17/44), ວັກທີ 159 ແລະ 160.

### ຫຼັກການສາກົນທີ່ສາມາດນຳໃຊ້ກັບບັນຫາທີ່ດິນ

### ກົດໝາຍມະນຸດສະທຳສາກົນ (112)

ການໂຈມຕີພົນລະເຮືອນ: ມັນເປັນຂໍ້ຫ້າມໃນຍາມສົງຄາມ ທີ່ຈະໂຈມຕີພົນລະເຮືອນ, ທຳລາຍ, ຍົກຍ້າຍ ຫຼື ກະທຳຢ່າງ ໃດໜຶ່ງຕໍ່ຊັບສິນທີ່ພົນລະເຮືອນທີ່ຈຳເປັນໃນ ການດຳລົງ ຊີວິດຂອງເຂົາເຈົ້າເຊັ່ນ:

*ສະບຽງອາຫານ, ທີ່ດິນການກະເສດ, ພືດພົນຕ່າງໆ, ສັດລ້ຽງ, ໂຮງງານນ້ຳດື່ມ ແລະ ນ້ຳປະປາ, ແລະ ລະບົບຊົນລະປະທານ, ບໍ່ວ່າຈະຕົກໃນກໍລະນີໃດກໍ່ຕາມແມ່ນຫ້າມລົງມືກະທຳອັນເນື່ອງມາຈາກເຫດຜົນທີ່ຕ້ອງການທຳລາຍຝ່າຍກົງກັນຂ້າມກໍ່ຕາມ, ການຕັ້ງໃຈເຮັດ ໃຫ້ປະ ຊາຊົນອົດຢາກ, ການຕັ້ງໃຈເຮັດໃຫ້ເຂົາເຈົ້າອົບພະຍົບໜີ ຫຼື ອື່ນໆ ເປັນຕົ້ນ.*

*(ອານຸສັນຍາເພີ່ມຂອງສົນທິສັນຍາເຈນີວາ 12 ສິງຫາ 1949 ວ່າດ້ວຍການປົກປ້ອງຜູ້ເຄາະຮ້າຍ ໃນສົງ ຄາມລະຫວ່າງປະເທດ (ອານຸສັນຍາ I), ມາດຕາ 54 (2); ອານຸສັນຍາເພີ່ມເຕີມຂອງສົນທິສັນຍາເຈນີວາ ທີ 12 ສິງຫາ 1949 ວ່າດ້ວຍການປົກປ້ອງຜູ້ເຄາະຮ້າຍ ໃນສົງ ຄາມພາຍໃນ (ອານຸສັນຍາ II) ມາດຕາ 14.*

[112] Each treaty cited in this sheet has a different scope of application. For example, the Second Additional Protocol to the Geneva Conventions of 1949 applies to internal or civil wars, while others apply to international armed conflicts. Some articles cited have specific limitation clauses. Readers are strongly encouraged to consult the original text of the instruments when applying them.

### *ຂໍ້ຫ້າມໃນການບັງຄັບໃຫ້ຍົກຍ້າຍ ຫຼື ການຖ່າຍໂອນ*

ໃນສະຖານະການຂອງການຍຶດຄອງ, ການຖ່າຍໂອນບຸກຄົນ ຫຼື ກຸ່ມຄົນກໍ່ຄືການສົ່ງພົນລະເຮືອນຈາກເຂດທີ່ຍຶດຄອງໄປບ່ອນອື່ນ ແມ່ນເປັນ ຂໍ້ຫ້າມ ບໍ່ວ່າຈະໃນກໍລະນີໃດກໍ່ຕາມ, ແຕ່ກໍ່ມີຂໍ້ຍົດເວັ້ນຖ້າຫາກການກະທໍານັ້ນເປັນເພາະວ່າເພື່ອເປັນການຮັກສາຄວາມປອດໄພແກ່ປະຊາຊົນໃຫ້ອອກຈາກເຂດທີ່ມີການປະທະກັນທາງການທະຫານ. ພາຍຫຼັງສົງຄາມສິ້ນສຸດລົງ ຜູ້ທີ່ຖືກຖ່າຍໂອນໄປນັ້ນຕ້ອງຖືກສົ່ງກັບຖິ່ນຖານເກົ່າ.
ໃນການຖ່າຍໂອນນັ້ນແມ່ນຕ້ອງຮັບປະກັນວ່າຜູ້ທີ່ຖືກຖ່າຍໂອນໄປນັ້ນຈະໄດ້ຮັບທີ່ພັກອາໃສທີ່ເໝາະສົມ ຫຼື ໄດ້ຮັບການປົກປ້ອງເຊິ່ງມີຫຼັກປະກັນໃນດ້ານສຸກຂະອານາໄມ, ຄວາມປອດໄພ, ໂພສະນາການ ແລະ ສະມາຊິກຄອບຄົວຂອງເຂົາຈະຕ້ອງບໍ່ໄດ້ຖືກພັດພາກ. ຝ່າຍທີ່ຍຶດຄອງຕ້ອງບໍ່ຖ່າຍໂອນພົນລະເມືອງຂອງຕົນໄປຍັງເຂດທີ່ຕົນຍຶດຄອງນັ້ນ.

(ສົນທິສັນຍາເຈນນີວາວ່າດ້ວຍການປົກປ້ອງພົນລະເຮືອນໃນເວລາສົງຄາມ (ພາກທີ II) ມາດຕາ 19)

ການຖ່າຍໂອນທີ່ຜິດກົດໝາຍ ຫຼື ການໂອນຄົນທີ່ຢູ່ໃນການປົກປ້ອງແມ່ນຖືວ່າເປັນການລະເມີດສົນທິສັນຍາ
(ສົນທິສັນຍາເຈນນີວາວ່າດ້ວຍການປົກປ້ອງພົນລະເຮືອນໃນຍາມສົງຄາມ (ພາກທີ 2) ມາດຕາ 147)

ການເຄື່ອນຍ້າຍພົນລະເຮືອນແມ່ນເປັນຂໍ້ຫ້າມໃນຍາມສົງຄາມ ຍົກເວັ້ນເພື່ອຄວາມປອດໄພຂອງເຂົາເຈົ້າ ຫຼື ຍ້ອນຄວາມຈໍາເປັນທາງການທະຫານ. ໃນກໍລະນີທີ່ເຄື່ອນຍ້າຍພົນລະເຮືອນນັ້ນ, ການດໍາເນີນການຕ້ອງເປັນໄປດ້ວຍຄວາມລະມັດລະວັງເພື່ອໃຫ້ພົນລະເຮືອນນັ້ນໄດ້ຮັບຄວາມປອດໄພດ້ານສະຖານທີ່ຫຼົບໄພ, ສຸກຂະອານາໄມ, ສຸກຂະພາບ, ແລະ ໂພສະນາການ. ພົນລະເຮືອນຈະຕ້ອງບໍ່ຖືກຂັບໄລ່ໃຫ້ອອກຈາກເຂດແດນຂອງຕົນຍ້ອນເຫດຜົນທາງດ້ານສົງຄາມ

(ອານຸສັນຍາ II ຂອງສົນທິສັນຍາເຈນນີວາ, ທີ 12 ສິງຫາ 1949 ມາດຕາ 17)

### ການປົກປ້ອງຊັບສິນຄົງທີ່ໃນສະຖານະການທີ່ຖືກຍຶດຄອງ

ໃນສະພາບທີ່ຖືກຍຶດຄອງ, ຝ່າຍທີ່ຍຶດຄອງຕ້ອງເຮັດໜ້າທີ່ເປັນຜູ້ຄຸ້ມຄອງ ແລະ ຕ້ອງບໍ່ທໍາລາຍຕຶກອາຄານ, ຊັບສິນຕ່າງໆ, ປ່າໄມ້ ແລະ ຊັບສິນທາງການກະເສດທີ່ເປັນຂອງຝ່າຍທີ່ຖືກຍຶດ ແລະ ຈະຄົງໄວ້ຕາມສະພາບທີ່ເຄີຍເປັນ. ຝ່າຍທີ່ຍຶດຄອງຕ້ອງຮັກສາຊັບສິນທີ່ກ່ອນມານັ້ນທັງໝົດ ແລະ ຕ້ອງຄຸ້ມຄອງຕາມຫຼັກການຫ້າມມ້າງເພທໍາລາຍ.

(ລະບຽບການວ່າດ້ວຍການເຄົາລົບກົດໝາຍ ແລະ ປະເພນີການເຮັດສົງຄາມເທິງບົກ ມາດຕາ 55 (ເອກະສານຊ້ອນທ້າຍສົນທິສັນຍາສະບັບທີ (IV) ວ່າດ້ວຍການເຄົາລົບກົໝາຍ ແລະ ປະເພນີການເຮັດສົງຄາມເທິງບົກ); ຄະນະກໍາມະທິການກາແດງສາກົນ (ICRC), ສຶກສາກ່ຽວກັບປະເພນີກດໝາຍມະນຸດສະທໍາລະຫວ່າງປະເທດ ຫຼັກການທີ 51 (b)[113] )

ທຸກການທໍາລາຍທີ່ເກີດຂຶ້ນຈາກສີມືຂອງຝ່າຍທີ່ຢຶດຄອງທີ່ທໍາລາຍຊັບສິນສ່ວນບຸກຄົນ ຫຼື ສ່ວນລວມ ຫຼື ຂອງສັງຄົມແມ່ນຕ້ອງມີຄວາມຮັບຜິດຊອບຕໍ່ສິ່ງທີ່ເກີດຂຶ້ນ ຍົກເວັ້ນແຕ່ໃນກໍລະນີທີ່ຈໍາເປັນທາງການທະຫານ.

(ສົນທິສັນຍາເຈນນີວາ (IV) ວ່າດ້ວຍການປົກປ້ອງພົນລະເຮືອນໃນຍາມສົງຄາມ ມາດຕາທີ 53, ສຶກສາໃນກໍລະນີປະເພນີກົດໝາຍມະນຸດ ສະທໍາສາກົນ ຫຼັກການ 51 (c))

### ການປັກປ້ອງສະພາບແວດລ້ອມ

ໃນຍາມສົງຄາມຕ້ອງໃຊ້ຄວາມລະມັດລະວັງໃນການປົກປ້ອງສະພາບທາງທໍາມະຊາດບໍ່ໃຫ້ມີຄວາມເສຍຫາຍແຜ່ກະຈາຍໄປກວ້າງ, ຍືດເຍື້ອຍາວນານ ແລະ ຮຸນແຮງເກີນໄປ. ການປົກປ້ອງນີ້ແມ່ນມີການຫ້າມໃຊ້ວິທີການເຮັດສົງຄາມທີ່ຈະສ້າງຄວາມເສຍຫາຍແກ່

[113] According to ICRC, each of these rules is a norm of customary international law applicable in both international and non- international armed conflicts. See www.icrc.org/customary-ihl.

ສະພາບແວດລ້ອມທາງທຳມະຊາດທີ່ມັນຈະກໍ່ຄວາມບໍ່ດີໃຫ້ແກ່ສຸຂະພາບ ຫຼື ການດຳລົງຊີວິດຂອງຄົນ. ການໂຈມຕີໃສ່ສະພາບແວດລ້ອມທາງທຳມະຊາດທີ່ເປັນການຕອບໂຕ້ນັ້ນແມ່ນຖືວ່າຜິດ.

(ອານຸສັນຍາ I ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 35 (3) ແລະ 55)

ສະຖານທີ່ ຫຼື ໂຮງງານທີ່ມີຄວາມອັນຕະລາຍເຊັ່ນ: ເຂື່ອນໄຟຟ້າ, ອ່າງເກັບນ້ຳ ແລະ ໂຮງງານໄຟຟ້າທີ່ຜະລິດຈາກນິວເຄຍຈະຕ້ອງບໍ່ຖືກທຳລາຍເຖິງແມ່ນວ່າສະຖານທີ່ດັ່ງກ່າວຖືກໃຊ້ເປັນສະຖານທີ່ທາງການທະຫານກໍ່ຕາມ, ເພາະວ່າຖ້າຫາກມັນຖືກທຳລາຍ ແລ້ວພົນ ກະທົບນັ້ນມັນກໍ່ຈະເກີດຢ່າງຫຼວງຫຼາຍແກ່ປະຊາຊົນ.

(ອານຸສັນຍາ I ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 56 (1); ອານຸສັນຍາ II ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 15)

**ການປົກປ້ອງວັດຖຸ ແລະ ສະຖານທີ່ທາງວັດທະນະທຳ**

ມັນເປັນສິ່ງທີ່ຜິດກົດໝາຍທີ່ໂຈມຕີສະຖານທີ່ທາງປະຫວັດສາດດ້ວຍຄວາມຈົງໃຈ, ໂຈມຕີສະຖານທີ່ທາງສິນລະປະວັດທະນະທຳທີ່ມີການສັກກາລະບູຊາຂອງຄົນ ແລະ ໄດ້ຮັບການຍອມຮັບເປັນສະຖານທີ່ສັກສິດທີ່ເຄົາລົບນັບຖື ແລະ ຫ້າມໃຊ້ສະຖານທີ່ດັ່ງກ່າວເປັນບ່ອນທາງການທະຫານເດັດຂາດ.

(ອານຸສັນຍາ I ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 53 (1); ອານຸສັນຍາ II ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 16)

***ຫຼັກການຈຳແນກ***

ຊັບສິນຂອງພົນລະເຮືອນແມ່ນຫ້າມໂຈມຕີ ຍົກເວັ້ນໃນກໍລະນີທີ່ມັນຖືກໃຊ້ເຂົ້າໃນທາງການທະຫານ.

(ອານຸສັນຍາ I ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 52 (1); ICRC, ການຄົ້ນຄ້ວາກ່ຽວກັບປະເພນີກົດໝາຍມະນຸດສະທຳສາກົນ, ຫຼັກການທີ 10)

***ຫຼັກການຊັ່ງຊາ***

ການໂຈມຕີທີ່ເປັນການສ້າງຄວາມເສຍຫາຍເກີນຄວາມຈຳເປັນແກ່ພົນລະເຮືອນ, ສ້າງຄວາມບາດເຈັບ, ທຳລາຍຊັບສິນ, ຫຼື ສ້າງຄວາມເສຍຫາຍດ້ານຕ່າງໆທີ່ເຮັດໄປຍ້ອນຢາກໄດ້ປຽບທາງການທະຫານນັ້ນຖືວ່າເປັນຂໍ້ຫ້າມກະທຳ.

(ICRC, ການຄົ້ນຄ້ວາກ່ຽວກັບປະເພນີກົດ ໝາຍມະນຸດສະທຳສາກົນ, ຫຼັກການທີ 14; ອານຸສັນຍາ I ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 51 (4 ແລະ (5) (b))

***ຫຼັກການແຈ້ງເຕືອນ***

ໃນການໂຈມຕີທາງການທະຫານນັ້ນແມ່ນຕ້ອງໃສ່ໃຈຢ່າງເຕັມທີ່ເພື່ອບໍ່ໃຫ້ພົນລະເຮືອນໄດ້ຮັບຄວາມເສຍຫາຍທາງດ້ານຮ່າງກາຍ ແລະ ຊັບສິນ. ໃນການໂຈມຕີແມ່ນຄວນມີການແຈ້ງເຕືອນລ່ວງໜ້າເພື່ອລຸດຜ່ອນຄວາມເສຍຫາຍທີ່ຈະເກີດ ແລະ ລຸດຜ່ອນການສູນເສຍຂອງພົນລະເຮືອນທາງດ້ານຮ່າງກາຍ ແລະ ຊັບສິນ. ທຸກຝ່າຍທີ່ເຮັດສົງຄາມກັນແມ່ນຕ້ອງແຈ້ງເຕືອນປະຊາຊົນລາວງໜ້າເພື່ອລຸດຜ່ອນການສູນເສຍແກ່ພົນລະເຮືອນໃນເວລາທີ່ຈະເກີດການຕໍ່ສູ້ລະຫວ່າງກັນ.

(ICRC, ການຄົ້ນຄ້ວາກ່ຽວກັບປະເພນີກົດໝາຍມະນຸດສະທຳສາກົນ, ຫຼັກການທີ 15 ແລະ 22; ອານຸສັນຍາ I ຂອງສົນທິສັນຍາເຈນນີວາ 12 ສິງຫາ 1949 ມາດຕາ 57 ແລະ 58)

**ກົດໝາຍອາຍາສາກົນ**

***ອາດສະຍາກຳສົງຄາມ***

ການກະທຳດັ່ງຕໍ່ໄປນີ້ແມ່ນຖືວ່າເປັນອາດສະຍາກຳສົງຄາມໃນເວລາທີ່ມີສົງຄາມພາຍໃນ ແລະ ສາກົນຄື:

ມີການລະເມີດສົນທິສັນຍາເຈນນີວາ 12 ສິງຫາ 1949, ລວມມີບັນຫາການທຳລາຍຊັບສິນຢ່າງກວ້າງຂວາງ ແລະ ເສຍຫາຍຢ່າງໜັກເຊິ່ງວ່າ ສະຖານທີ່ ແລະ ວັດຖຸທີ່ຖືກສັ່ງໃຫ້ໂຈມຕີນັ້ນບໍ່ໄດ້ຖືວ່າເປັນຄວາມຈຳເປັນທາງການໃຊ້ກຳລັງ ແລະ

ທີການໂຈມຕີທີ່ບໍ່ຖືກຕ້ອງ ແລະ ໂຫຍດຮ້າຍ, ມີການຖ່າຍໂອນ ຫຼື ກັກຂັງພົນລະເຮືອນໂດຍບໍ່ຖືກຕ້ອງຕາມກົດໝາຍ,

ມີການລະເມີດກົດໝາຍ ແລະ ຈາຮີດປະເພນີອື່ນໆທີ່ຖືກນໍາໃຊ້ໃນເວລາມີສົງລະຫວ່າງປະເທດເຊິ່ງລວມມີ: ການຈົງໃຈໂຈມຕີຊັບສິນພົນລະເຮືອນ, ຈົງໃຈໂຈມຕີສະຖານທີ່ຕ່າງໆທັງທີ່ຮູ້ດີວ່າການໂຈມຕີມັນຈະສ້າງຄວາມເສຍເຫຍໃຫ້ແກ່ພົນລະເຮືອນຂະໜາດໃຫຍ່ ຫຼື ຈະເຮັດໃຫ້ບາດເຈັບ ຫຼື ສູນເສຍຊັບສິນຕ່າງໆ ຫຼື ມີຄວາມເສຍຫາຍທີ່ເປັນວົງກວ້າງ, ໄລຍະຍາວ ແລະ ຮຸນແຮງກະທົບໃສ່ສິ່ງແວດລ້ອມທາງທໍາມະຊາດທີ່ເຫັນໄດ້ຢ່າງຈະແຈ້ງວ່າການໂຈມຕີນັ້ນມັນຈະມີຜົນເສຍຫຼາຍຢ່າງ, ການໂຈມຕີ ຫຼື ການຖິ້ມລະເບີດບໍ່ວ່າຈະຖິ້ມໃສ່ຕົວເມືອງ, ໝູ່ບ້ານ, ສະຖານທີ່ຢູ່ອາໃສ ຫຼື ອາຄານຕ່າງໆທີ່ບໍ່ໄດ້ມີການປ້ອງກັນ ແລະ ບໍ່ແມ່ນເປົ້າໝາຍທາງການທະຫານ, ການໂອນຄົນຂອງຝ່າຍຕົນເອງເຂົ້າໄປໃນເຂດຍຶດຄອງ ຫຼື ໄກ້ຄຽງກັບສະຖານທີ່ດັ່ງກ່າວບໍ່ວ່າຊິເປັນທາງກົງ ຫຼື ທາງອ້ອມ, ຫຼື ມີການຖ່າຍໂອນຄົນໃນເຂດທີ່ຍຶດຄອງອອກໄປບ່ອນອື່ນ, ຕັ້ງໃຈໂຈມຕີສະຖານທີ່ທາງສາດສະໜາ, ທາງການສຶກສາ, ສິນລະປະ, ວິທະຍາສາດ ຫຼື ອົງການການກຸສົນ, ສະຖານທີ່ທາງປະຫວັດສາດ, ໂຮງໝໍ ແລະ ສະຖານທີ່ອື່ນໆທີ່ມີການເກັບຮັກສາຄົນບາດເຈັບ ແລະ ເຈັບປ່ວຍ, ສະຖານທີ່ທີ່ບໍ່ກ່ຽວຂ້ອງທາງການທະຫານ, ມີການທໍາລາຍ ຫຼື ຍຶດຊັບສິນຂອງຝ່າຍກົງກັນຂ້າມ ຍົກເວັ້ນແຕ່ການຍຶດ ຫຼື ທໍາລາຍນັ້ນແມ່ນຍ້ອນຄວາມຈໍາເປັນໃນຍາມສົງຄາມ, ມີການໂຈມຕີເມືອງ ຫຼື ສະຖານທີ່ຕ່າງໆດ້ວຍຄວາມຕັ້ງໃຈເຮັດໃຫ້ເກີດໄພອຶດຫິວແກ່ພົນລະເຮືອນເພື່ອໃຊ້ເປັນເຄື່ອງມືໃນການສູ້ຮົບເຊິ່ງລວມມີການທໍາລາຍຊັບພະຍາກອນຕ່າງໆທີ່ມັນເປັນປັດໃຈພື້ນຖານໃນການດໍາລົງຊີວິດຂອງປະຊາຊົນ.

ການລະເມີດທີ່ຮຸນແຮງຕໍ່ກົດໝາຍ ແລະ ຈາຮີດປະເພນີທີ່ນໍາໃຊ້ໃນຍາມສົງຄາມພາຍໃນແມ່ນສາມາດຕົກເປັນອາດສະຍາກໍາສົງ ຄາມໄດ້ຄືກັນເຊັ່ນ: ຕັ້ງໃຈໂຈມຕີສະຖານທີ່ສາດສະໜາ, ການສຶກສາ, ສິນລະປະ, ວິທະຍາສາດ ຫຼື ສະຖານທີ່ທາງປະຫວັດສາດ ແລະ ບ່ອນທໍາບຸນຕ່າງໆ, ມີການໂຈມຕີເມືອງ ຫຼື ສະຖານທີ່ທີ່ລວມມີການທໍາຮ້າຍທາງຮ່າງກາຍ, ການສັ່ງໃຫ້ຍົກຍ້າຍພົນລະເຮືອນດ້ວຍການອ້າງເຫດຜົນຂອງສົງຄາມ ແຕ່ວ່າການຍົກຍ້ານັ້ນແມ່ນມີຄວາມເປັນໄດ້ຖ້າຫາກວ່າເພື່ອຄວາມປອດໄພຂອງເຂົາເຈົ້າ, ມີການທໍາລາຍ ຫຼື ຍຶດຊັບສິນຂອງຝ່າຍກົງກັນຂ້າມ ແຕ່ການຍຶດ ຫຼື ທໍາລາຍສິ່ງທີ່ກ່າວມານັ້ນແມ່ນອາດເປັນໄປໄດ້ຖ້າຕົກໃນກໍລະນີຂອງຄວາມຈໍາເປັນທີ່ຫຼີກລ່ຽງບໍ່ໄດ້.

(**ທໍາ**ມະນູນໂລມຂອງສານອາຍາລະຫວ່າງປະເທດ ມາດຕາ 8)

### *ອາດສະຍາກໍາຕ້ານມວນມະນຸດ*

ການກະດັ່ງຕໍ່ໄປນີ້ແມ່ນຖືວ່າເປັນ “ອາດສະຍາກໍາຕ້ານມວນມະນຸດ” ຖ້າມີການກະທໍາທີ່ເປັນວົງກວ້າງ ຫຼື ເປັນລະບົບຕໍ່ພົນລະເຮືອນ ແລະ ຮູ້ດີວ່າຈະມີຜົນເສຍຫາຍຕາມມາ: ມີການຄາດຕະກໍາ, ການປະຫານຊີວິດ, ການເອົາຄົນມາເປັນທາດ, ກນຖ່າຍໂອນຄົນ ຫຼື ການຖ່າຍໂອນຄົນແບບບັງຄັບ, ການກັກຂັງ ຫຼື ການຕັດອິດສະຫຼະພາບທີ່ຮຸນແຮງທາງດ້ານຮ່າງກາຍເຊິ່ງເປັນການລະເມີດລະບຽບກົດໝາຍສາກົນ, ມີການທໍລະມານ, ມີການເອົາຄົນມາເປັນທາດທາງເພດ, ມີການບັງຄັບໃຫ້ເປັນໂສເພນີ, ມີການບັງຄັບໃຫ້ຖືພາມານ, ມີການບັງຄັບໃຫ້ເປັນໝັນ, ຫຼື ມີການກະທໍາທາລຸນທາງເພດແບບອື່ນໆ, ມີການແບ່ງແຍກຜູ້ທີ່ມີຄວາມແຕກຕ່າງທາງການເມືອງ, ສັນຊາດ, ສາດສະໜາ, ວັດທະນະທໍາ, ຊົນເຜົ່າ, ຫຼື ປັດໃຈອື່ນໆທີ່ໄດ້ຖືຮັບຮູ້ວ່າເປັນຂໍ້ຫ້າມພາຍໃຕ້ກົດໝາຍສາກົນ, ມີການບັງຄັບໃຫ້ຫາຍສາບສູນ, ມີການແບ່ງແຍກສີຜິວ, ມີການກະທໍາອື່ນໆທີ່ໄຮ້ມະນຸດສະທໍາທີ່ຕັ້ງໃນໃຫ້ເກີດການທໍລະມານ, ບາດເຈັບເກີນຄວາມຈໍາເປັນທາງຮ່າງກາຍ ແລະ ຈິດໃຈ.

(**ທໍາ**ມະນູນໂລມຂອງສານອາຍາສາກົນ ມາດຕາ 7 (1)).

*ການຂ້າລ້າງເຜົ່າພັນ*

ການກະທຳດັ່ງຕໍ່ໄປນີ້ແມ່ນຈະຖືວ່າເປັນການ "ຂ້າລ້າງເຜົ່າພັນ" ຖ້າຫາກມີຄວາມຈົງໃຈທີ່ຈະທຳລາຍທັງໝົດ ຫຼື ບາງສ່ວນຂອງກຸ່ມທີ່ມີຄວາມຕ່າງທາງສາດສະໜາ, ເຊື້ອຊາດ, ສັນຊາດ, ຫຼື ວັດທະນະທຳເຊັ່ນ: ການຂ້າສະມາຊິກຂອງກຸ່ມທີ່ກ່າວມານີ້, ການສ້າງຄວາມບາດເຈັບລົ້ມຕາຍທາງຮ່າງກາຍ ແລະ ຈິດໃຈ, ການສ້າງເງື່ອນໄຂໃນການດຳລົງຊີວິດເພື່ອໃຊ້ເປັນເຄື່ອງມືໃນການກຳຈັດ, ສ້າງມາດຕະການຄຸມກຳເນີດ, ແລະ ການບັງຄັບຖ່າຍໂອນເດັກນ້ອຍໄປຍັງກຸ່ມອື່ນ.

(**ທຳ**ມະນູນໂຣມຂອງສານອາຍາລະຫວ່າງເທດ ມາດຕາ 6)

## ຕົວຢ່າງການນຳໃຊ້

ໃນບໍລິບົດຂອງການເກີດສົງຄາມ, ກົດໝາຍມະນຸດສະທຳ ແລະ ກົດໝາຍສິດທິມະນຸດສາກົນແມ່ນໄດ້ໃຫ້ກົນໄກການປົກປ້ອງ ແລະ ນຳໃຊ້ຮ່ວມກັນ.[114] ນອກນີ້, ກົດໝາຍອາຍາສາກົນຍັງໄດ້ກຳນົດໃຫ້ມີຄວາມຮັບຜິດຊອບຂອງສ່ວນບຸກຄົນໃນຖານະເປັນອາດສະຍາກອນສົງຄາມ. ໃນກົດໝາຍອາຍາສາກົນແມ່ນໄດ້ກຳນົດຖານຄວາມຜິດຂອງສ່ວນບຸກຄົນໄວ້ໃນຖານະທີ່ກະທຳຜິດໃນຂໍ້ຫາເປັນອາດສະຍາ ກອນທາງການຂ້າລ້າງເຜົ່າພັນ ແລະ ການຕ້ານມວນມະນຸດທີ່ເກີດຂື້ນໃນຍາມສົງຄາມ ແລະ ໃນຍາມສະຫງົບ. ກົນໄກສິດທິມະນຸດ ສປຊ ແມ່ນໄດ້ໃຫ້ລາຍລະອຽດກ່ຽວກັບການບັງຄັບໃຊ້ກົດໝາຍທັງສອງຢ່າງນີ້ແລ້ວ.

ໃນບົດຄຳເຫັນທົ່ວໄປເລກທີ 15 (2002) ຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລ ວັດທະນະທຳໄດ້ກ່າວວ່າ "ໃນຍາມສົງຄາມ, ໃນສະພາບການທີ່ວຸ້ນວາຍ ແລະ ໃນວິກິດການທາງທຳມະຊາດ, ສິດໃນການເຂົ້າຫານ້ຳດື່ມແມ່ນຖືວ່າເປັນພັນທະຂອງທຸກຝ່າຍທີ່ກ່ຽວຂ້ອງໃນຍາມສູ້ຮົບຕາມການກຳນົດໃນກົດໝາຍມະນຸດສະທຳສາກົນ." ຄະນະ**ກຳ**ມະທິການໄດ້ເນັ້ນວ່າ "ພັນທະໃນການປົກປ້ອງນັ້ນລວມມີຊັບພະຍາກອນຕ່າງໆທີ່ມັນເປັນປັດໃຈພື້ນຖານໃນການດຳລົງຊີວິດຂອງປະຊາຊົນໄດ້ແກ່ນ້ຳປະປາ ຫຼື ບ່ອນຜະລິດນ້ຳກິນ, ຄອງຊົນລະປະທານ, ສິ່ງແວດລ້ອມທາງທຳມະຊາດທີ່ສຳຄັນແມ່ນຕ້ອງບໍ່ໃຫ້ມີຜົນກະທົບໃນວົງກວ້າງ, ຍາວນານ ແລະ ເສຍຫາຍຢ່າງໜັກ, ນອກນີ້ ລັດທີ່ກ່ຽວຂ້ອງຕ້ອງຮັບປະກັນວ່າພົນລະເຮືອ, ຜູ້ທີ່ຖືກກັກຕົວ ແລະ ນັກໂທດແມ່ນຈະມີນ້ຳກິນທີ່ພໍພຽງ" (ວັກທີ 22).

ອີງຕາມນັກລາຍງານພິເສດກ່ຽວກັບສິດໃນດ້ານອາຫານ, ການປົກປ້ອງພາຍໃຕ້ກົດໝາຍມະນຸດສະທຳສາກົນແມ່ນໄດ້ກຳນົດເພີ່ມການປົກປ້ອງສິດ ໃນດ້ານອາຫານ. ໃນບໍລິບົດທີ່ວ່ານີ້, ນັກລາຍງານແມ່ນໄດ້ກວດສອບຂໍ້ຫ້າມໃນການຮື້ທຳລາຍຊັບສິນຂອງພົນລະເຮືອນທີ່ມັນເປັດປັດໃຈສຳຄັນໃນການດຳລົງຊີວິດ, ນັກລາຍງານຍັງໄດ້ແນະນຳຕື່ມອີກວ່າການທຳລາຍພືນລະປູກດ້ວຍວິທີການໃສ່ສານເຄມີ, ສ້າງມົນລະພິດທາງນ້ຳ ແລະ ວາງກັບດັກລະເບີດທີ່ເປັນການຂັດຂວາງການກະເສດ ແມ່ນຖືວ່າເປັນຄວາມຜິດໃນການລະເມີດກົດໝາຍມະນຸດສະທຳສາກົນ.[115]

ນັກລາຍງານພິເສດກ່ຽວກັບສານພິດໄດ້ອະທິບາຍແຈ້ງກ່ຽວກັບການນຳໃຊ້ກົດໝາຍມະນຸດສະທຳສາກົນຕໍ່ກັບບັນຫາການປ່ອຍຂອງເສຍທີ່ມີສານພິດ ແລະ ວັດຖຸທີ່ອັນຕະລາຍໃນຍາມສົງຄາມວ່າລັກການທີ່ກ່ຽວຂ້ອງໃນກົດໝາຍມະນຸດສະທຳສາກົນແມ່ນສາມາດໃຊ້ໄດ້ທັງໃນຍາມສົງຄາມພາຍໃນ ແລະ ລະຫວ່າງປະເທດ, ລັກການເຫຼົ່ານັ້ນແມ່ນຖືກກຳນົດໃນສົນທິສັນຍາເຈນນີວາ ແລະ ອານຸສັນຍາທີ່ກ່ຽວຂ້ອງຕ່າງໆ.[116]

ກ່ຽວກັບຫຼັກການຂອງການຈຳແນກ, ນັກລາຍງານໄດ້ກ່າວວ່າການໂຈມຕີສະຖານທີ່ທາງອຸດສະຫະກຳແມ່ນຖືວ່າເປັນຄວາມຜິດຖ້າສະຖານທີ່ດັ່ງກ່າວນັ້ນ "ບໍ່ໄດ້ມີສ່ວນກ່ຽວຂ້ອງຫຍັງກັບສົງຄາມ ແລະ ການໂຈມຕີດັ່ງກ່າວແມ່ນພຽງແຕ່ຕ້ອງການທຳລາຍຝ່າຍກົງກັນຂ້າມເທົ່ານັ້ນ". ນັນລາຍງານຍັງອະທິບາຍເພີ່ມອີກວ່າ

---

[114] See *International Legal Protection of Human Rights in Armed Conflict* (United Nations publication, Sales No. E.11.XIV.3).
[115] A/56/210, paras. 37–57. See also the Report of the Special Rapporteur on toxic waste (A/HRC/5/5), para. 53.
[116] A/HRC/5/5, paras. 48–53.

"ສະພາບແວດລ້ອມ ແລະ ສະຖານທີ່ຕ່າງໆເຊັ່ນ (ທີ່ດິນ, ປ່າໄມ້ ແລະ ມະຫາສະມຸດ) ແມ່ນຖືວ່າເປັນຂອງພົນລະເຮືອນທຸກຄົນ. ສິ່ງທີ່ມີໃນສິ່ງແວດລ້ອມເຊັ່ນ: ປ່າໄມ້ຂະໜາດໃຫຍ່ແມ່ນສາມາດຖືກໂຈມຕີໄດ້ຖ້າຫາກວ່າມີການໃຊ້ເປັນສະຖານທີ່ທາງການທະຫານໃນຍາມສູ້ຮົບ"

ກ່ຽວກັບຫຼັກການຊັ່ງຊາຄວາມດຸ່ນດ່ຽງ, ນັກລາຍງານພິເສດກ່າວວ່າ "ການໂຈມຕີທີ່ມັນອາດເຮັດໃຫ້ເກີດມີການຮົ່ວໄຫຼຂອງສານພິດ ແລະ ສານອັນຕະລາຍຕ່າງໆແມ່ນຖືວ່າເປັນການລະເມີດກົດໝາຍໃນເວລາທີ່ສານເຫຼົ່ານັ້ນໄດ້ສ້າງຄວາມສູນເສຍທາງຮ່າງກາຍ ແລະ ຈິດໃນໃຫ້ແກ່ພົນລະເຮືອນໂດຍສະເພາະບັນຫາການຮົ່ວໄລນັ້ນມັນໄປກະທົບກັບສິ່ງແວດລ້ອມທາງທຳມະຊາດທີ່ຝ່າຍກົງກັນຂ້າມນັ້ນກະທຳໄປເພື່ອເປັນການໄດ້ປຽບຄູ່ຕໍ່ສູ້ນັ້ນເອງ".

ຫຼັກການຂອງການແຈ້ງເຕືອນແມ່ນເປັນພັນທະຂອງທຸກຝ່າຍໃນຍາມສົງຄາມເຊິ່ງມັນເປັນມາດຕະການເຕືອນລ່ວງໜ້າກ່ອນທີ່ຈະມີການໂຈມຕີເພື່ອລຸດຜ່ອນການສູນເສຍຕ່າງໆ. ນັກລາຍງານພິເສດໄດ້ຮ່າງຕົວຢ່າງມາດຕະການທີ່ກ່ຽວຂ້ອງໄວ້ຄື: ຕ້ອງພິຈາລະນາເຖິງຜົນເສຍຫາຍທີ່ມັນຈະເກີດກ່ອນການສັ່ງໂຈມຕີ ແລະ ຕ້ອງພິຈາລະນາເບິ່ງວ່າເປົ້າໝາຍໃດທີ່ຄວນໂຈມຕີ, ສິ່ງທີ່ກ່າວມານີ້ມັນຈະຊ່ວຍໃນການຊັ່ງຊາວ່າການທີ່ຈະໄດ້ປຽບທາງການຕໍ່ສູ້ນັ້ນແມ່ນຕ້ອງຄຳນຶງເຖິງຜົນເສຍຫາຍທີ່ຕາມນັ້ນພ້ອມ, ຖ້າເປັນໄປໄດ້ແມ່ນບໍ່ຄວນຕັ້ງກອງກຳລັງໄກ້ກັບສະຖານທີ່ມີຄົນຢູ່ໜາແໜ້ນ, ແລະ ຕ້ອງໃຫ້ການແຈ້ງເຕືອນລ່ວງໜ້າຂອງການຕໍ່ສູ້ທີ່ມັນອາດເຮັດໃຫ້ພົນລະເຮືອນມີຜົນກະທົບ, ຍົກເວັ້ນແຕ່ໃນກໍລະນີທີ່ບໍ່ສາມາດແຈ້ງລ່ວງໜ້າໄດ້ເພາະມັນສຸດເສີນ.

ນກລາຍງານພິເສດຍັງໃຫ້ທັດສະນະຕໍ່ໄປອີກກ່ຽວກັບຂໍ້ຫ້າມໃນການສ້າງຄວາມເສຍຫາຍທີ່ເປັນວົງກວ້າງ, ຍາວນານ ແລະ ຮຸນແຮງຕໍ່ກັບທຳມະຊາດ. ໃນຄຳເຫັນດັ່ງກ່າວແມ່ນເລື່ອງການຫ້າມໃຊ້ສານພິດ ແລະ ຢາຂ້າພືດຕ່າງໆໃນລັກສະນະເປັນວົງກວ້າງກໍ່ຄືການນຳໃຊ້ສານດັ່ງກ່າວໃສ່ເປົ້າໝາຍທີ່ຫວັງຢາກເຮັດໃຫ້ເກີດຜົນກະທົບໃນວົງກວ້າງ ແລະ ຍາວນານ. ນັກລາຍງານໄດ້ເນັ້ນວ່າຂໍ້ຫ້າມນີ້ແມ່ນເປັນການຢັບຢັ້ງບັນຫາທີ່ມັນບໍ່ສາມາດວັດເຂົ້າໃນຄວາມຈຳເປັນທາງການທະຫານໄດ້.

ກຽວກັບການຫ້າມໂຈມຕີສະຖານທີ່ ແລະ ໂຮງງານທີ່ມີສານອັນຕະລາຍ, ນັກລາຍງານພິເສດແມ່ນໄດ້ອ້າງອີງມາຈາກຜົນບົດຄົ້ນຄ້ວາວິໄຈກ່ຽວກັບຈາຣີດປະເພນີຂອງກົດໝາຍມະນຸດສະທຳສາກົນ (ສະພາກາແດງສາກົນ) ທີ່ໃຫ້ຄຳແນະນຳວ່າໂຮງງານເຄມີ ແລະ ໂຮງງານ້ຳມັນແມ່ນຄວນໄດ້ຮັບການປົກປ້ອງເປັນຂໍ້ຫ້າມໃນການໂຈມຕີ.

ສຸດທ້າຍ, ນັກລາຍງານພິເສດໄດ້ຊີ້ແຈງໃຫ້ເຫັນວ່າຂໍ້ຫ້າມກ່ຽວກັບຊັບສິນທີ່ຈຳເປັນສຳລັບການດຳລົງຊີວິດຂອງປະຊາຊົນແມ່ນຫ້າມໃຫ້ມີການວາງສານອັນຕະລາຍຕ່າງໆບໍ່ວ່າຈະເປັນສານເຄມີ ຫຼື ສານພິດຕ່າງໆໃສ່ໃນນ້ຳ, ໃສ່ໃນເຂດການຜະລິດທາງການກະເສດຕ່າງໆເປັນຕົ້ນ.

ກຸ່ມ G7 ຂອງ ສປຊ ທີ່ໄດ້ຮັບພັນທະໜ້າທີ່ພິເສດໄດ້ທົບທວນບົດລາຍງານສະຖານະການສິດທິມະນຸດໃນເຂດດາໂຟ ປະເທດຊູດານ (2007) ວ່າ "ມັນເປັນຂໍ້ຫ້າມທີ່ຈະເຮັດໃຫ້ພົນລະເຮືອນ ຫຼື ຊັບສິນຂອງເຂົາເຈົ້າ (ລວມມີສັດລ້ຽງ ແລະ ທີ່ດິນການກະເສດ) ເປັນເປົ້າໝາຍຂອງການໂຈມຕີ ຫຼື ມີການໂຈມຕີແບບເລືອກປະຕິບັດ (ການເຜົາໝູ່ບ້ານ ແລະ ການຍິງອາວຸດເຂົ້າໃສ່), ການກະທຳດັ່ງກ່າວແມ່ນຖືວ່າເປັນການກໍ່ອາດສະຍາກຳສົງຄາມ ແລະ ອາດສະຍາກຳການຕ້ານມວນມະນຸດ, ຜູ້ທີ່ຕົກເປັນຜູ້ຕ້ອງສົງໄສໃນນີ້ແມ່ນຜູ້ທີ່ສັ່ງການທີ່ຈະຕ້ອງໄດ້ຮັບການສືບສວນສອບສວນ ແລະ ນຳຕົວໄປຂຶ້ນສານ ແລະ ຈະບໍ່ມີສິດໄດ້ຮັບສິດການຄຸ້ມກັນ"[117]

[117] Final report on the situation of human rights in Darfur prepared by the group of experts mandated by the Human Rights Council in its resolution 4/8, presided by the Special Rapporteur on the situation of human rights in the Sudan and composed of the Special Rapporteur on extrajudicial, summary or arbitrary executions, the Special Representative of the Secretary-General for children and armed conflict, the Special Rapporteur on violence against women, its causes and consequences, the Special Representative of the Secretary-General on the situation of human rights defenders, the Representative of the

ຄະນະກຳມະທິການຄົ້ນຫາຄວາມຈິງ ສປຊ ກ່ຽວກັບຄວາມຂັດແຍ່ງໃນເຂດກາຊ້າ (2009) ໄດ້ພົບວ່າມີການລະເມີດສົນທິສັນຍາເຈນນີວາຢ່າງຫຼວງຫຼາຍຈາກທະຫານລັດຖະບານອິດສລາເອວໃນເຂດກາຊ້າເຊິ່ງມີ "ການຮື້ທຳລາຍຊັບສິນຕ່າງໆຂອງປະຊາຊົນ, ການກະທຳດັ່ງກ່າວທັງບໍ່ໄດ້ຢູ່ໃນເງື່ອນໄຂຄວາມຈຳເປັນທາງການທະຫານ ແລະ ກະທຳໄປດ້ວຍຄວາມຈົງໃຈ ແລະ ໃຊ້ອຳນາດເກີນຂອບເຂດ". ຄະນະກຳມະທິການໄດ້ພິຈາລະນາວ່າ "ການກະທຳໃນເຂດກາຊ້າທີ່ເປັນການບັນທອນສິດຂອງຄົນໃນເຂດດັ່ງກ່າວແມ່ນມີຫຼາຍຢ່າງທີ່ເກີດຂື້ນກ່ຽວກັບການສ້າງບັນຫາໃນການດຳລົງຊີວິດ ໃນການຊອກວຽກເຮັດງານທຳ, ການມີບ້ານຢູ່ອາ ໃສ ແລະ ມີນ້ຳກິນ, ການະທຳນັ້ນຖືວ່າເປັນການບໍ່ຮັບຮູ້ສິດເສລີພາບໃນການເຄື່ອນຍ້າຍ ແລະ ສິດໃນການເຂົ້າອອກໃນດິນແດນຂອງຕົນເອງ, ນອກນັ້ນ ການກະທຳດັ່ງກ່າວຍັງຖືວ່າເປັນການຈຳກັດສິດໃນການເຂົ້າເຖິງຄວາມຍຸດຕິທຳໃນສານ ແລະ ການປຽວຢາທີ່ມີປະສິດທິພາບ, ສິ່ງທີ່ວ່ານັ້ນແມ່ນເປັນການກະທຳຜິດທາງອາດສະຍາກຳຕ້ານມວນມະນຸດ ແລະ ຄວນເອົາຜູ້ທີ່ກ່ຽວຂ້ອງມາຮັບຜິດຊອບ.[118]

ໃນເວລາດຽວກັນ ມັນມີຄວາສຳຄັນທີ່ຕ້ອງມີຄວາມຕື່ນຕົວກ່ຽວກັບບົດບາດ ແລະ ການນຳໃຊ້ກົດໝາຍມະນຸດສະທຳສາກົນ ແລະກົດໝານອາຍາທີ່ກ່ຽວຂ້ອງກັບບັນຫາທີ່ດິນໃນຍາມສົງຄາມ, ແນວໃດກໍ່ດີສິ່ງທີ່ຄວນໃສ່ໃຈກໍ່ຄືວ່າການນຳໃຊ້ກົດໝາຍທີ່ກ່າວມາຂ້າງເທິງນັ້ນແມ່ນບໍ່ມີຫຍັງທີ່ຈະຈຳກັດການນຳໃຊ້ກົດໝາຍສິດທິມະນຸດໄປພ້ອມໆກັນ. ນັບລາຍງານພິເສດກ່ຽວກັບສານອັນຕະລາຍໄດ້ເນັ້ນຄວາມສຳຄັນໃນການນຳໃຊ້ກົດໝາຍມະນຸດສະທຳ ແລະ ສິດທິມະນຸດສາກົນຄື: "ກົດໝາຍມະນຸດສະທຳສາກົນແມ່ນຈະຖືກນຳໃຊ້ໃນຍາມສົງຄາມ [ເພື່ອປ້ອງກັນຄວາມສູນເສຍ], ສ່ວນກົດໝາຍສິດທິມະນຸດນັ້ນຈະຖືກໃຊ້ໃນຍາມທີ່ເຫດການສະຫງົບລົງແລ້ວ [ມີຄວາມເສຍຫາຍເກີດຂື້ນແລ້ວ]".

ນອກນີ້ນັກລາຍງານຍັງອະທິບາຍແຈ້ງກ່ຽວກັບຈຸດດີໃນການນຳໃຊ້ກົດໝາຍສິດທິມະນຸດຮ່ວມກັບກົດໝາຍມະນຸດສະທຳສາກົນໃນບັນຫາທີ່ກ່ຽວກັບການເຂົ້າເຖິງຂະບວນການປຽວຢາເຊັ່ນ:

"ໃນເວລາທີ່ນຳໃຊ້ກົດໝາຍມະນຸດສະທຳສິ້ນສຸດໃນຕອນທີ່ສົງຄາມສະຫງົບລົງແລ້ວ, ພັນທະທາງສິດທິມະນຸດແມ່ນຍັງຈະຖືກດຳເນີນຕໍ່ໄປ. ສິ່ງທີ່ວ່າມານີ້ແມ່ນມີຄວາມສຳຄັນໃນດ້ານການຫ້າມບໍ່ໃຫ້ປ່ອຍສານອັນຕະລາຍໃນສະຖານທີ່ຕ່າງໆເພາະມັນເປັນອັນຕະລາຍໃນໄລຍະຍາວເຖິງວ່າສົງຄາມຈະສິ້ນສຸດລົງແລ້ວ. ນອກນີ້ ການນຳເອົາຜູ້ທີ່ຈະມາຮັບຜິດຊອບນັ້ນມັນກໍ່ອາດຈະງ່າຍກ່ວາການນຳໃຊ້ກົດ ໝາຍມະນຸດສະທຳ. ຕາມຄວາມເປັນຈິງກໍ່ຄືວ່າຄວາມຮັບຜິດຊອບນັ້ນແມ່ນຈະແນໃສ່ລັດທີ່ມີພັນທະທາງດ້ານສິດທິມະນຸດໃຫ້ຮັບຜິດຊອບ ຕາມສິ່ງທີ່ເກີດໃນເຂດແດນ ຫຼື ອານາເຂດທີ່ຕົນນັ້ນເປັນເຈົ້າຂອງຢູ່. ການຄວບຄຸມອານາເຂດທີ່ມີຄວາມຮຸນແຮງເກີດຂື້ນນັ້ນ ລັດທີ່ກ່ຽວຂ້ອງແມ່ນຈະມີຄວາມສະດວກກ່ວາໃນການຫາທາງແກ້ໄຂບັນຫາການລະເມີດສິດທິມະນຸດ. ການລະເມີດກົດໝາຍມະນຸດສະທຳ ແມ່ນອາດເກີດຈາກການກະທຳຂອງຝ່າຍກົງກັນຂ້າມ ຫຼື ລັດທີ່ກົງກັນຂ້າມ. ສຳລັບເຫດຜົນທີ່ກ່າວມານີ້ ມັນມີຄວາມເປັນໄປໄດ້ທີ່ຈະໄດ້ຮັບ ການແກ້ໄຂ ແລະ ຊອກຫາວິການຊົດເຊີຍແມ່ນອາດເປັນເລື່ອງທີ່ຍາກຖ້າເບິ່ງໃນດ້ານຫຼັກກົດໝາຍ ແລະ ການແກ້ໄຂຄຳຮ້ອງທຸກເພື່ອຕົກລົງສັນຕິພາບລະຫວ່າງລັດ. ຕາມຄວາມເປັນຈິງແລ້ວບັນຫາການລະເມີດກົດໝາຍມະນຸດສະທຳສາກົນແມ່ນເປັນເລື່ອງທີ່ສັບສົນຫຼາຍກ່ວາບັນຫາການລະເມີດສິດທິມະນຸດ. ມັນແມ່ນຄວາມຈິງທີ່ການລະເມີດ ໂດຍສະເພາະແມ່ນຫຼັກການທີ່ກ່ຽວຂ້ອງກັບການໂຈມຕີແມ່ນເປັນເລື່ອງທີ່ສັບສົນເຊັ່ນ: ຈະມີໃຜສາມາດບອກໄດ້ວ່າການໂຈມຕີນັ້ນເກີດຂື້ນຍ້ອນມີການຊັ່ງຊາຄວາມເສຍຫາຍແລ້ວ ຫຼື ການນຳໃຊ້ສະຖານທີ່ໃດໜຶ່ງ ເພື່ອຫຼາຍວັດຖຸປະສົງແມ່ນຈະຕົກເປັນເປົ້າໝາຍໃນການຖືກໂຈມຕີ? ໃນບາງກໍລະນີແມ່ນມີຄວາມຈະແຈ້ງ ແຕ່ວ່າສ່ວນຫຼາຍແລ້ວແມ່ນ ຈະບໍ່ສາມາດພິສູດໄດ້. ອີກດ້ານໜຶ່ງ ການລະເມີດສິດທິມະນຸດແມ່ນເປັນເລື່ອງທີ່ຕົງໄປຕົງມາ ແລະ ສາມາດພິສູດໄດ້ຢ່າງງ່າຍກ່ວາ.[119]

---

Secretary-General on the human rights of internally displaced persons and the Special Rapporteur on the question of torture and other cruel, inhuman or degrading treatment or punishment (A/HRC/6/19), recommendation 1.1.1.

118 A/HRC/12/48, paras. 1935–1936.

119 A/HRC/5/5, paras. 56–57.

## ຄະດີຕົວຢ່າງ

**ສານຍຸດຕິທຳສາກົນ: ຜົນທາງກົດໝາຍໃນການກໍ່ສ້າງກຳແພງໃນເຂດປາເລສໄຕ່ (ການຕີຄວາມໝາຍ) (9 ກໍລະກົດ 2004).** T ສານໄດ້ຕີຄວາມໝາຍກ່ຽວກັບບັນຫາການກໍ່ກຳແພງຂັ້ນຂອງປະເທດອິດສະລາເອວໃນເຂດປາເລສໄຕ່ທີ່ເປັນບັນຫາການຈຳກັດການເຂົ້າອອກຂອງຊາວປາເລສໄຕ່ໃນທີ່ດິນຂອງຕົນໃນເຂດເວສແບ້ງ, ກຳແພງໄດ້ກີດກັນຄົນໃນການທຳມາຫາກິນໃນທີ່ດິນຂອງຕົນເພື່ອການປູກຝັງລ້ຽງສັດ ແລະ ນຳໃຊ້ຊັບພະຍາກອນໃນທີ່ດິນ. ສານໄດ້ພິຈາລະນາວ່າການກໍ່ສ້າງກຳແພງແມ່ນເປັນການລະເມີດກົດໝາຍ ແລະ ລະເມີດພັນທະຕາມກົດໝາຍລະຫວ່າງປະເທດວ່າດ້ວຍມະນຸດສະທຳ ແລະ ສິດທິມະນຸດຕາມທີ່ກຳນົດໃນມາດຕາທີ 49 (ຂໍ້ຫ້າມບໍ່ໃຫ້ມີການຖ່າຍໂອນ ແລະ ສິ່ງພົນລະເຮືອນ) ແລະ ຕາມມາດຕາທີ 53 (ຂໍ້ຫ້າມບໍ່ໃຫ້ມີການຮື້**ທຳ**ລາຍຊັບສິນຕ່າງໆໃນເຂດທີ່ຕົນຍຶດຄອງ) ຂອງສົນທິສັນຍາເຈນີວາສະບັບທີ 4.[120]

## ຫຼັກການ ແລະ ຄູ່ມືທີ່ກ່ຽວຂ້ອງຕ່າງໆ

- ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານຈັດການໃນການຄອບຄອງທີ່ດິນ, ປ່າໄມ້ ແລະ ການປານົງໃນບໍລິບົດຂອງຄວາມໝັ້ນຄົງໃນສະບຽງອາຫານແຫ່ງຊາດ (Rome, FAO, 2012), ຄູ່ມື 25.

[120] See *Land and Human Rights: Annotated Compilation of Case Law.*

## IV. ເອກະສານອ້າງອີງ ແລະ ຄູ່ມືທີ່ເລືອກເອົາມາ

### ກ. ບົດລາຍງານ

ນີ້ແມ່ນລາຍລະອຽດຂອງບັນດາບົດລາຍງານຂອງໜ່ວຍປະຕິບັດງານພິເສດທີ່ກ່ຽວຂ້ອງກັບບັນຫາທີ່ດິນ ແລະ ສິດທິມະນຸດທີ່ຍັງບໍ່ໄດ້ຄົບທຸກບົດລາຍງານເທື່ອ.

| | |
|---|---|
| ນັກລາຍງານພິເສດກ່ຽວກັບການມີບ້ານຢູ່ທີ່ພໍພຽງຖືວ່າເປັນສິດຂັ້ນພື້ນຖານໃນການມີມາດຕະຖານຊີວິດການເປັນຢູ່ທີ່ສົມບູນ, ແລະ ເປັນສິດທີ່ຈະບໍ່ ໄດ້ຖືກແບ່ງແຍກຕາມຫຼັກການທີ່ວ່ານີ້. | ບົດລາຍງານກ່ຽວກັບການມີບ້ານຢູ່ທີ່ພໍພຽງທີ່ເປັນປັດໃຈພື້ນຖານຂອງສິດໃນການມີມາດຕະຖານການດໍາລົງຊີວິດ, ແລະ ກ່ຽວກັບສິດໃນການຈະບໍ່ຖືກຈໍາແນກ (A/HRC/7/16)<br><br>ພາກທີ V ໄດ້ອະທິບາຍກ່ຽວກັບບັນຫາທີ່ກ່ຽວຂ້ອງກັບສາຍພົວພັນລະຫວ່າງການເຂົ້າເຖິງທີ່ດິນ ແລະ ສິດທິໃນການມີບ້ານທີ່ພໍພຽງ. ພາກທີ III ແມ່ນໄດ້ບັນຍາຍກ່ຽວກັບການຮັບຮູ້ສິດໃນການມີບ້ານຢູ່ທີ່ພໍພຽງຂອງກຸ່ມຄົນສະເພາະໃດໜຶ່ງ, ລວມມີແມ່ຍິງ ແລະ ຄົນພື້ນເມືອງ. ໃນນີ້ແມ່ນໄດ້ເນັ້ນກ່ຽວກັບລັກສະນະຂອງເພດທີ່ມີສິດໃນການມີບ້ານຢູ່ທີ່ພໍພຽງ, ນັກລາຍງານພິເສດໄດ້ກ່າວ ແລະ ຢໍ້າບັນດາຄໍາແນະນໍາກ່ຽວກັບສິດຂອງແມ່ຍິງໃນການມີບ້ານຢູ່, ມີທີ່ດິນ, ມີຊັບສິນ ແລະ ມີສິດສືບທອດ. |
| ນັກລາຍງານພິເສດກ່ຽວກັບສິດໃນການມີອາຫານທີ່ພໍພຽງ | **ບົດລາຍງານກ່ຽວກັບອາຫານ (A/65/281)**<br>ບົດລາຍງານໄດ້ຊີ້ແຈງກ່ຽວກັບທີ່ດິນ ແລະ ຄວາມໝັ້ນຄົງຂອງການຄອບຄອງວ່າເປັນປັດໃຈພື້ນຖານສໍາລັບຄວາມສຸກໃນການໃຊ້ສິດໃນດ້ານອາຫານ. ບົດລາຍງານໄດ້ສະແດງໃຫ້ເຫັນໄພຄຸກຄາມຕ່າງໆທີ່ມີຕໍ່ບັນຫາທີ່ດິນເຊິ່ງມັນກ່ຽວຂ້ອງ ກັບສາມປະເພດຂອງຜູ້ນໍາໃຊ້ທີ່ດິນ: ຄົນພື້ນເມືອງ, ຜູ້ຄອງຄອງຂະໜາດນ້ອຍ ແລະ ກຸ່ມຄົນພິ ເສດເຊັ່ນ ຜູ້ລ້ຽງສັດແບບພະເນຈອນ, ຄົນລ້ຽງສັດ ແລະ ຊາວປາມົງ. ນັກລາຍງານໄດ້ຄົ້ນພົບວິທີ ການທີ່ລັດ ແລະ ປະຊາຄົມສາກົນຕ່າງໆສາມາດສົ່ງເສີມການເຄົາລົບ, ການປກປ້ອງ ແລະ ເຮັດໃຫ້ ສໍາເລັດໃນດ້ານສິດກ່ຽວກັບອາຫານດ້ວຍການເພີ່ມການຮັບຮູ້ສິດໃນທີ່ດິນເປັນເລື່ອງ ຂອງສິດທິມະນຸດ. |
| ນັກລາຍງານພິເສດກ່ຽວກັບສະພາບການຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດ | **ບົດລາຍງານກ່ຽວກັບສະພາບຂອງສິດທິຂອງນັກເຄື່ອນໄຫວປົກປ້ອງສິດທິມະນຸດ** (A/HRC/19/55)<br><br>ໝວດທີ III ແມ່ນເນັ້ນກ່ຽວກັບຄວາມສ່ຽງ ແລະ ບັນຫາທີ່ນັກເຄື່ອນໄຫວໄດ້ປະເຊີນໜ້າ, ລວມມີນັກເຄື່ອນໄຫວທີ່ເຮັດວຽກດ້ານສິດໃນທີ່ດິນ |
| ນັກລາຍງານພິເສດກ່ຽວກັບສະພາບການຂອງສິດທິມະນຸດ ແລະ ເສລີ ພາບຂັ້ນພື້ນຖານຂອງ ຄົນພື້ນເມືອງ | **ບົດລາຍງານກ່ຽວກັບສະພາບສິດທິ ແລະ ເສລີພາບຂັ້ນພື້ນຖານຂອງຄົນພື້ນເມືອງ** (A/HRC/12/34)<br><br>ໝວດທີ II ໄດ້ໃຫ້ຄໍາແນະນໍາກ່ຽວກັບພັນທະຂອງລັດໃນການປຶກສາຫາລືກັບຄົນພື້ນເມືອງກ່ຽວກັບບັນຫາທີ່ຈະກະທົບກັບພວກເຂົາເຈົ້າ. ນັກລາຍງານພິເສດໄດ້ເນັ້ນຄວາມສໍາຄັນຂອງການມີສ່ວນຮ່ວມຂອງ ຄົນພື້ນເມືອງກ່ອນທີ່ຈະມີການອານຸມັດ ແລະ ເລີ່ມດໍາເນີນໂຄງການພັດທະນາຕ່າງໆ. |

| | |
|---|---|
| ຊຸ່ງວຊານເອກະລາດກ່ຽວກັບບັນຫາຂອງພັນທະສິດທິມະນຸດທີ່ກ່ຽວກັບການເຂົ້າເຖິງນ້ຳດື່ມທີ່ປອດໄພ ແລະ ໂພສະນາການ/ນັກລາຍງານພິເສດກ່ຽວກັບສິດທິໃນການມີນ້ຳດື່ມທີ່ສະອາດ ແລະ ມີໂພສະນາການ | **ບົດລາຍງານຂອງຜູ້ຊ່ຽວຊານເອກະລາດກ່ຽວກັບບັນຫາຂອງພັນທະສິດທິມະນຸດທີ່ກ່ຽວຂ້ອງກັບການເຂົ້າເຖິງນ້ຳດື່ມທີ່ສະອາດ ແລະ ມີໂພສະນາການ** (A/65/254)<br>ບົດລາຍງານແມ່ນເນັ້ນກ່ຽວກັບການປະກອບສ່ວນໃນສິດທິມະນຸດໂດຍສະເພາະແມ່ນສິດໃນການມີນ້ຳ ແລະ ໂພສະນາການ, ການຮັບຮູ້ເປົ້າໝາຍຂອງແຜນການພັດທະນາສະຫະສະວັດ. ຕົວຢ່າງ: ການຂາດຄວາມໝັ້ນຄົງໃນການຄອບຄອງທີ່ດິນທີ່ໄດ້ຮັບການສຶກສາມາແລ້ວວ່າເປັນອຸປະສັກອັນສຳຄັນໂດຍສະເພາະຕໍ່ກັບເຂດສະລຳທີ່ຢູ່ໃນເມືອງ. |
| ນັກລາຍງານພິເສດກ່ຽວກັບຄວາມຮຸນແຮງທີ່ມີຕໍ່ແມ່ຍິງ, ສາຍເຫດ ແລະ ຜົນທີ່ໄດ້ຮັບ | **ບົດລາຍງານກ່ຽວກັບນະໂຍບາຍທາງເສດຖະກິດ ແລະ ສັງຄົມ ແລະ ຜົນກະທົບຈາກຄວາມຮຸນແຮງຕໍ່ແມ່ຍິງ** (E/CN.4/2000/68/Add.5)<br>ບົດລາຍງານໄດ້ວິເຄາະຜົນກະທົບຂອງນະໂຍບາຍທາງເສດຖະກິດ ແລະ ສັງຄົມວ່າມັນໄດ້ເປັນໂຕກະຕຸ້ນໃຫ້ມີການສ້າງຄວາມຮຸນແຮງຕໍ່ແມ່ຍິງ, ໃນນັ້ນມີສາຍພົວພັນທາງສະຖານະທາງກົດໝາຍຂອງແມ່ຍິງ, ການເກັບກ່ຽວພືດຜົນ, ການທ່ອງທ່ຽວ, ການຈັດຕັ້ງຖິ່ນຖານຄືນໃໝ່ ແລະ ການບັງຄັບໃຫ້ຍົກຍ້າຍ. |

## ຂ. ຄຳເຫັນຕ່າງໆ

ຄຳແນະນຳທີ່ມີໃນເອກະສານນີ້ແມ່ນຍັງບໍ່ທັນຄົບທຸກຢ່າງ-ທີ່ສຳຄັນແມ່ນຈາກອົງກອນສິດທິມະນຸດ-ທີ່ໄດ້ອະທິບາຍແຈ້ງກ່ຽວກັບສາຍພົວພັນລະຫວ່າງບັນຫາທີ່ດິນ ແລະ ສິດທິມະນຸດ

| | |
|---|---|
| ຄະນະກຳມະທິການສິດທິມະນຸດ | **ຄຳເຫັນທົ່ວໄປເລກທີ 28 (2000)** ກ່ຽວກັບສິດສະເໝີພາບລະຫວ່າງຍິງ-ຊາຍ<br>ຄະນະກຳມະທິການສິດທິມະນຸດກ່າວວ່າ "ຄວາມສາມາດຂອງແມ່ຍິງໃນການເປັນເຈົ້າຂອງຊັບສິນ, ໃນການເຂົ້າເຖິງການເຮັດສັນຍາ ຫຼື ໃນການນຳໃຊ້ສິດທາງດ້ານພົນລະເຮືອນທີ່ຈະບໍ່ມີການຈຳກັດກ່ຽວກັບສະຖານະການແຕ່ງງານ ຫຼື ປັດໃຈການຈຳແນກຕ່າງໆ" (ວັກທີ 19).<br>**ຄຳເຫັນທົ່ວໄປ ເລກທີ 23 (19948 ກ່ຽວກັບສິດຂອງຄົນຊົນເຜົ່າ**<br>ຄະນະກຳມະທິການສິດທິມະນຸດໄດ້ສັງເກດເຫັນວ່າວັດທະນະທຳທີ່ສະແດງອອກໃນຫຼາຍຮູບແບບເຊິ່ງລວມມີແບບແຜນການດຳລົງຊີວິດສະເພາະທີ່ພົວພັນເຖິງການນຳໃຊ້ທີ່ດິນໂດຍສະເພາະແມ່ນໃນກໍລະນີຂອງຄົນພື້ນເມືອງ. ມາດຕະການທາງກົດໝາຍແມ່ນອາດຕ້ອງໄດ້ຮັບປະກັນໃຫ້ສະມາຊິກຂອງຄົນຊົນເຜົ່າໃຫ້ສາມາດມີສ່ວນຮ່ວມຢ່າງເຕັມທີ່ໃນການຕັດສິນໃຈທີ່ມັນອາດມີຜົນກະທົບໃສ່ເຂົາເຈົ້າ. ໃນນັ້ນມີສິດໃນການຮ່ວມໃນກິດຈະກຳທາງວັດທະນະທຳເຊັ່ນການຫາປາ ຫຼື ການລ່າສັດ ແລະ ສິດໃນການດຳລົງຊີວິດແບບສືບທອດທີ່ໄດ້ຮັບການປົກປ້ອງຕາມກົດໝາຍ (ວັກທີ 7) |

**ຄະນະກຳມະທິການວ່າດ້ວຍສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳ**

ຄຳເຫັນແນະນຳທົ່ວໄປເລກທີ 21 (2009) ກ່ຽວກັບສິດຂອງທຸກຄົນໃນການມີສ່ວນຮ່ວມໃນຊີວິດວັດທະນະທຳ

ຄະນະກຳມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳໄດ້ເນັ້ນວ່າລະດັບຄວາມເຂັ້ມແຂງທາງວັດທະນະທຳໃນຊຸມຊົນຄົນພື້ນເມືອງແມ່ນເປັນສິ່ງທີ່ຢຶດໜ່ຽວຄວາມມີຕົວຕົນ, ຄວາມຢູ່ດີກິນດີ ແລະ ການພັດທະນາທີ່ສົມບູນເຊິ່ງລວມມີສິດໃນ ທີ່ດິນ, ອານາເຂດ ແລະ ຊັບສິນຕ່າງໆທີ່ພວກເຂົາໄດ້ຄອບຄອງ, ນຳໃຊ້ ແລະ ໄດ້ມາເປັນເວລາດົນນານ. ຄະນະກຳມະທິການຍັງໄດ້ເນັ້ນວ່າຄຸນຄ່າຂອງວັດທະນະທຳຂອງຄົນພື້ນເມືອງ ແລະ ສິດທີ່ພົວພັນກັບ ທີ່ດິນບັນພະບູລຸດ ແລະ ສາຍສຳພັນທີ່ມີກັບທຳມະຊາດແມ່ນຄວນຖືໃຫ້ເປັນສິ່ງທີ່ຕ້ອງ ເຄົາລົບ ແລະ ປົກປ້ອງ, ເພື່ອປ້ອງກັນການຖືກທຳລາຍຂອງແບບແຜນການດຳລົງຊີວິດສະເພາະເຊິ່ງລວມມີວິຖີການຢູ່ລອດ, ການສູນເສຍຊັບພະຍາກອນທາງທຳມະຊາດ ແລະ ອັນທີ່ສຳຄັນກໍແມ່ນເອກະລັກທາງວັດທະນະທຳ. ລັດທີ່ກ່ຽວຂ້ອງຕ້ອງຮັບຮູ້ ແລະ ໃຫ້ການປົກປ້ອງສິດຂອງຄົນພື້ນເມືອງໃນການເປັນເຈົ້າຂອງ, ພັດທະນາ, ຄຸ້ມຄອງ, ຄອບຄຸມ ແລະ ນຳໃຊ້ທີ່ດິນໃນຊຸມຊົນ, ເຂດແດນ ແລະ ຊັບພະຍາກອນຕ່າງໆ, ພ້ອມທັງຕ້ອງສົ່ງຄືນເຂົາເຈົ້າກັບຄືນພູມລຳເນົາໃນເວລາທີ່ພວກເຂົາຖືກຍົກຍ້າຍໄປໂດຍບໍ່ໄດ້ຮັບການຕົກລົງ ຫຼື ປຶກສາຫາລືກັນມາກ່ອນ (ມາດຕາ 36).

---

**ຄຳເຫັນແນະນຳເລກທີ 20 (2009)** ກ່ຽວກັບການບໍ່**ຈຳ**ແນກສິດໃນທາງເສດຖະກິດ ສັງຄົມ ແລະ ວັດທະນະທຳ ຄະນະກຳມະທິການວ່າດ້ວຍສິດທາງເສດຖະກິດ ສັງຄົມ ແລະ ວັດທະນະທຳສະມີຄຳເຫັນກ່ຽວກັບສະຖານະພາບ ທາງຊັບສິນ-ເຊັ່ນວ່າເຈົ້າຂອງ ຫຼື ຜູ້ຄອບຄອງທີ່ດິນ, ຫຼື ການຂາດເງື່ອນ ໄຂໃດໜຶ່ງໃນການຄອບຄອງ (ວັກທີ 25)

---

**ຄຳເຫັນທົ່ວໄປເລກທີ 16 (2005)** ສິດເທົ່າທຽມຍິງ-ຊາຍໃນການໃຊ້ສິດທາງດ້ານເສດຖະກິດ ສັງຄົມ ແລະ ວັດທະນະທຳ

ຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳຮຽກຮ້ອງໃຫ້ແມ່ຍິງຕ້ອງໄດ້ຮັບສິດໃນການເປັນເຈົ້າຂອງ, ນຳໃຊ້ ແລະ ຄຸ້ມຄອງບ້ານຢູ່ອາໃສ, ທີ່ດິນ ແລະ ຊັບສິນຕ່າງໆເທົ່າທຽມກັບເພດຊາຍ ແລະ ສາມາດເຂົ້າເຖິງຊັບສິນຕ່າງໆທີ່ຈຳເປັນຖ້າຫາກມີຄວາມຕ້ອງການ (ວັກທີ 28).

---

**ຄຳເຫັນທົ່ວໄປເລກທີ 15 (2002)** ກ່ຽວກັບສິດໃນຊັບພະຍາກອນ**ນ້ຳ**

ຄະນະກຳມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທຳຮຽກຮ້ອງໃຫ້ລັດຕ່າງໆຕ້ອງເຮັດທຸກວິທີທາງໃນການຮັບປະກັນເຂດໃນເມືອງ ແລະ ຊົນນະບົດເພື່ອສາມາດເຂົ້າເຖິງການບໍລິການທາງນ້ຳ. ບໍ່ມີຄອບຄົວໃດທີ່ຈະຖືກຕັດແຍກສິດໃນການເຂົ້າເຖິງນ້ຳທີ່ຢູ່ໃນເຂດທີ່ຢູ່ອາໃສໄດ້. ລັດຄວນຮັບປະກັນວ່າການເຂົ້າເຖິງນ້ຳຂອງຄົນພື້ນເມືອງທີ່ຢູ່ໃນທີ່ດິນບັນພະບູລຸດແມ່ນຈະໄດ້ຮັບການປົກປ້ອງຈາກບັນຫາການສ້າງມົນລະພິດ ແລະ ການທຳລາຍນ້ຳ (ວັກທີ 16).

**ຄໍາເຫັນທົ່ວໄປເລກທີ 14 (2000)** ກ່ຽວກັບສິດໃນການໄດ້ຮັບມາດຕະຖານດ້ານສຸຂະພາບລະດັບສູງ

ຕາມການສັງລວມບັນຫາສຸຂະພາບຂອງຄົນພື້ນເມືອງ, ຄະນະກໍາມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາເຫັນວ່າ "ກິດຈະກໍາການພັດທະນາທີ່ເປັນສາຍເຫດໃຫ້ຄົນພື້ນເມືອງຕ້ອງອົບພະຍົບໜີຈາກຖິ່ນຖານໂດຍບໍ່ໄດ້ມີການສົມຍອມ, ບັນຫາທີ່ກ່າວມານີ້ແມ່ນເທົ່າກັນກັບການປະຕິເສດພວກເຂົາອອກຈາກບ່ອນທໍາມາຫາກິນ ແລະ ເປັນການລະເມີດສາຍພົວພັນທີ່ພວກເຂົາມີໃນທີ່ດິນທີ່ຢູ່ອາໃສ, ດັ່ງນັ້ນ ສິ່ງທີ່ກ່າວມານີ້ມັນຈະສົ່ງຜົນສະທ້ອນໃຫ້ເຂົາເຫຼົ່ານັ້ນມີບັນຫາສຸຂະພາບ" (ວັກທີ 27)

**ຄໍາເຫັນທົ່ວໄປເລກທີ 12 (1999)** ກ່ຽວກັບສິດໃນການມີອາຫານທີ່ພໍພຽງ

ຄະນະກໍາມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາໄດ້ເນັ້ນເງື່ອນໄຂທີ່ເປັນພື້ນຖານຂອງສິດໃນການມີອາຫານທີ່ພໍພຽງ. ເງື່ອນໄຂທີ່ວ່າແມ່ນໝາຍເຖິງຄວາມເປັນໄປໄດ້ບໍ່ວ່າຈະເປັນຄວາມສາມາດໃນການລ້ຽງຕົນເອງຈາກຜົນຜະລິດທີ່ໄດ້ຈາກທີ່ດິນ ຫຼື ໄດ້ຈາກຊັບພະຍາກອນທໍາມະຊາດອື່ນໆ, ຫຼື ໄດ້ຈາກການແຈກຢາຍອາຫານທີ່ມີປະສິດທິພາບ, ໄດ້ຈາກລະບົບການຕະຫຼາດ ແລະ ຂະບວນການຜະລິດທີ່ສາມາດສົ່ງອາຫານໄປສະຖານທີ່ຕ່າງໆທີ່ຕ້ອງການ (ວັກທີ 8 ແລະ 12)

**ຄໍາເຫັນທົ່ວໄປເລກທີ 7 (1997)** ກ່ຽວກັບສິດໃນການມີບ້ານຢູ່ທີ່ພໍພຽງ: ການບັງຄັບໃຫ້ຍົກຍ້າຍ

ຄະນະກໍາມະທິການກ່ຽວກັບສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາສັງເກດວ່າ "ເນື່ອງຈາກສາຍສໍາພັນ ແລະ ຂໍ້ຜູກພັນທີ່ມີຢູ່ກັບສິດທິມະນຸດ, ການຖືກບັງຄັບໃຫ້ຍົກຍ້າຍແມ່ນຖືວ່າເປັນການລະເມີດສິດທິມະນຸດ. ສະນັ້ນ ໃນເມື່ອສິດໄດ້ຖືກກໍານົດຫ້າມລະເມີດໃນສົນທິສັນຍາ, ປະກົດການບັງຄັບໃຫ້ຍົກຍ້າຍກໍ່ແມ່ນຖືວ່າເປັນການລະເມີດສິດທາງດ້ານການເມືອງ ແລະ ພົນລະເຮືອນເຊັ່ນ: ສິດໃນຊີວິດ, ສິດໃນການໄດ້ຮັບຄວາມປອດໄພ, ສິດທີ່ຈະບໍ່ມີໃຜເຂົ້າມາແຊກແຊງໃນຊີວິດສ່ວນຕົວ, ຄອບຄົວ ແລະ ບ້ານຢູ່ອາໃສ ແລະ ສິດໃນການຄອບຄອງຊັບສິນຢ່າງສະຫງົບ" (ວັກທີ 4).

**ຄໍາເຫັນທົ່ວໄປເລກທີ 4 (1991)** ກ່ຽວກັບສິດໃນການມີບ້ານຢູ່ທີ່ພໍພຽງ

ຄະນະກໍາມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາໄດ້ອ້າງເຖິງຄວາມໝັ້ນຄົງທາງກົດໝາຍໃນການຄອບຄອງເຊິ່ງລວມມີການຄອບຄອງທີ່ດິນເຊິ່ງມັນເປັນປັດໃຈພື້ນຖານໃນການມີບ້ານຢູ່ທີ່ພໍພຽງທີ່ຄວນໄດ້ຮັບການໃສ່ໃຈບໍ່ວ່າຈະຢູ່ໃນກໍລະນີໃດກໍ່ຕາມ. ຄະນະກໍາມະທິການສິດທິທາງເສດຖະກິດ ສັງຄົມ ແລະ ວັດທະນະທໍາຍັງໄດ້ພິຈາລະນາວ່າທຸກຄົນແມ່ນໄດ້ຮັບຄວາມປອດໄພໃນລະດັບໃດໜຶ່ງໃນການຄອບຄອງເຊິ່ງມັນຈະເປັນການຮັບປະກັນການປົກປ້ອງທາງກົດໝາຍຈາກການຖືກບັງຄັບໃຫ້ຍົກຍ້າຍ, ການຮຸກຮານ ແລະ ການຂົ່ມຂູ່ຕ່າງໆ (ວັກທີ 8 (a)). ຄະນະກໍາມະທິການຍັງໃຫ້ຄໍາເຫັນຕໍ່ໄປອີກວ່າ " ການເຂົ້າເຖິງທີ່ດິນຂອງຜູ້ທີ່ບໍ່ມີທີ່ດິນ ຫຼື ຜູ້ທີ່ແລ່ລ້ອນໄປມາໃນສັງຄົມແມ່ນຄວນພິຈາລະນາເອົາເຂົ້າໃນເປົ້າໝາຍຂອງນະໂຍບາຍ. ພັນທະຂອງລັດຖະບານທີ່ເຫັນໄດ້ຢ່າງຊັດເຈນແມ່ນຕ້ອງພັດທະນາໃຫ້ໄດ້ເງື່ອນໄຂທີ່ສາມາດເຮັດໃຫ້ທຸກຄົນມີທີ່ຢູ່ທີ່ປອດໄພ, ມີຄວາມສະຫງົບ ແລະ ຢູ່ຢ່າງມີກຽດ, ເງື່ອນໄຂທີ່ວ່າລວມມີການເຂົ້າເຖິງ

| | |
|---|---|
| | ທີ່ດິນໃຫ້ເປັນບູລິມະສິດແລກ" (ວັກທີ 8 (e)).<br>ຄວາມອິດສະຫຼະໃນການໃຊ້ສິດອື່ນໆຢ່າງເຕັມທີ່-ເຊັ່ນ: ສິດເສລີພາບໃນການສະແດງຄວາມຄິດເຫັນ, ສິດເສລີພາບໃນການຕັ້ງສະມາຄົມ, ສິດເສລີພາບໃນດ້ານທີ່ຢູ່ອາໃສ ແລະ ສິດໃນການມີສ່ວນຮ່ວມໃນບັນຫາການຕັດສິນໃຈສາທາລະນະ-ແມ່ນຖືວ່າເປັນປັດໃຈທີ່ຂາດບໍ່ໄດ້ຖ້າຫາກວ່າສິດໃນການມີບ້ານຢູ່ທີ່ພໍພຽງໄດ້ຮັບການຮັບຮອງ ແລະ ເຄົາລົບຈາກທຸກກຸ່ມຄົນໃນສັງຄົມ (ວັກທີ 9). |
| ຄະນະກຳມະທິການວ່າດ້ວຍການລົບລ້າງບັນຫາການຈຳແນກເຊື້ອຊາດ | **ຄຳແນະນຳທົ່ວໄປເລກທີ 23 (1997)** ກ່ຽວກັບຄົນພື້ນເມືອງ<br><br>ຄະນະກຳມະທິການກ່ຽວກັບການລົບລ້າງບັນຫາການຈຳແນກເຊື້ອຊາດໄດ້ຮຽກຮ້ອງໃຫ້ທຸກລັດຕ້ອງ "ຮັບຮູ້ ແລະ ປົກປ້ອງສິດທິຂອງຄົນພື້ນເມືອງໃນການເປັນເຈົ້າຂອງ, ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ທີ່ດິນ, ເຂດແດນ ແລະ ຊັບສິນຕ່າງໆຂອງຊຸມຊົນເຂົາເຈົ້າ, ພ້ອມນັ້ນ ຕ້ອງພະຍາຍາມສົ່ງເຂົາເຈົ້າກັບຄືນຖິ່ນຖານເດີມໃນກໍລະນີທີ່ມີການຍຶດ ຫຼື ເວນຄືນທີ່ດິນຂອງເຂົາເຈົ້າໂດຍບໍ່ໄດ້ມີການຕົກລົງ ແລະ ປຶກສາຫາລືກັນມາກ່ອນ" (ວັກທີ 5). ຄະນະກຳມະທິການຍັງໄດ້ໃຫ້ທັດສະນະຕໍ່ໄປອີກວ່າ ສິດໃນການໄດ້ຮັບຄ່າຊົດເຊີຍນັ້ນແມ່ນຕ້ອງໃຫ້ໄດ້ຢ່າງເປັນທຳ, ເໝາະສົມ, ແລະ ວ່ອງໄວຖ້າຫາກໃນກໍລະນີທີ່ບໍ່ສາມາດສົ່ງຄືນທີ່ດິນ ແລະ ຊັບສິນທີ່ເວນຄືນຈາກເຂົາເຈົ້າໄດ້. ສິ່ງສຳຄັນ ການຊົດເຊີຍນັ້ນຄວນໃຫ້ເປັນທີ່ດິນ ແລະ ເຂດແດນຖ້າຫາກສາມາດເຮັດໄດ້. |
| ຄະນະກຳມະທິການວ່າດ້ວຍການລົບລ້າງບັນຫາການຈຳແນກແມ່ຍິງ | **ຄຳເຫັນທົ່ວໄປເລກທີ 21 (1994)** ກ່ຽວກັບຄວາມເທົ່າທຽມໃນການແຕ່ງງານ ແລະ ໃນຖານະທາງຄອບຄົວ<br><br>ຄະນະກຳມະທິການຢັ້ງຢືນວ່າ "ໃນເວລາທີ່ແມ່ຍິງບໍ່ສາມາດເຮັດສັນຍາໃດໜຶ່ງໄດ້ ຫຼື ບໍ່ສາມາດເຂົ້າເຖິງການບໍລິການທາງການເງິນ, ຫຼື ສາມາດເຮັດໄດ້ແຕ່ຕ້ອງໃຫ້ສາມີ ຫຼື ຍາດພີ່ນ້ອງທາງຜົວເປັນຜູ້ຄ້ຳປະກັນ, ອັນນີ້ໝາຍຄວາມວ່າແມ່ຍິງໄດ້ຖືກປະຕິເສດສິດທາງກົດໝາຍແລ້ວ" (ມາດຕາ 15 ວັກທີ 7). |
| ຄະນະກຳມະທິການກ່ຽວກັບສິດທິຂອງເດັກ | **ຄຳເຫັນທົ່ວໄປເລກທີ 11 (2009)** ກ່ຽວກັບເດັກນ້ອຍພື້ນເມືອງ ແລະ ສິດທິຂອງເດັກພາຍໃຕ້ສົນທິສັນຍາ<br><br>ຄະນະກຳມະທິການກ່ຽວກັບສິດທິເດັກກ່າວວ່າ ໃນກໍລະນີເດັກນ້ອຍພື້ນເມືອງທີ່ອາໃສໃນຊຸມຊົນທີ່ຍັງມີການດຳລົງຊີວິດແບບດັ້ງເດີ, ການນຳໃຊ້ທີ່ດິນທີ່ເຂົາໄດ້ອາໃສຢູ່ເປັນເວລາຍາວນານນັ້ນແມ່ນມີຄວາມສຳຄັນທີ່ສຸດໃນການຊ່ວຍພັດທະນາ ແລະ ສ້າງຄວາມຜາສຸກໃນການສະແດງອອກດ້ານວັດທະນາທຳ. ກ່ຽວກັບບັນຫານີ້, ຄະນະກຳມະທິການໄດ້ລົງຄຳເຫັນວ່າລັດທີ່ກ່ຽວຂ້ອງຕ້ອງພິຈາລະນາຄວາມສຳຄັນດ້ານວັດທະນະທຳທີ່ກ່ຽວຂ້ອງກັບທີ່ດິນດັ້ງເດີມ ແລະ ຄຸນນະພາບຂອງສິ່ງແວດລ້ອມທາງທຳມະຊາດເພື່ອເປັນການຮັບປະກັນສິດຂອງເດັກໃນດ້ານຊີວິດການເປັນຢູ່, ການມີຊີວິດລອດ ແລະ ການພັດທະນາເພື່ອ ໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ສາມາດເຮັດໄດ້ (ວັກທີ 35). |

*ສຳລັບຂໍ້ມູນເພີ່ເຕີມແມ່ນສາມາດເບິ່ງໄດ້ທີ່ກົນໄກສິດທິມະນຸດຂອງ ສປຊ (ກົນໄກພິເສດ, ອົງກອນສິດທິມະນຸດ ແລະ ກົນໄກທົບທວນແຕ່ລະໄລຍະ) ຕາມທີ່ມີໃນເອກະສານຊ້ອນທ້າຍວ່າດ້ວຍຖະແຫຼງການສິດທິມະນຸດ.*

## ຄ. ເຄື່ອງມື ແລະ ຄູ່ມື

### ຄູ່ມື ແລະ ເຄື່ອງມືຕໍ່ໄປນີ້ແມ່ນມີປະໂຫຍດສໍາລັບບັນຫາທີ່ດິນ

| | |
|---|---|
| ເອກະສານການເຈລະຈາຂອງລັດ | **ຄູ່ມືອາສາກ່ຽວກັບຄວາມຮັບຜິດຊອບໃນການບໍລິຫານການຄຸ້ມຄອງທີ່ດິນ, ປ່າໄມ້ ແລະ ການປາມົງໃນບໍລິບົດຂອງຄວາມໝັ້ນຄົງທາງສະບຽງອາຫານແຫ່ງຊາດ** (Rome, FAO, 2012)<br><br>ຄູ່ມືການເຈລະຈາຂອງລັດນີ້ແມ່ນມີຈຸດປະສົງເພື່ອສົ່ງເສີມຄວາມໝັ້ນຄົງໃນສິດ ແລະ ການເຂົ້າເຖິງການຄອບຄອງທີ່ດິນ, ປ່າໄມ້ ແລະ ການປາມົງທີ່ເທົ່າທຽມ. ຄູ່ມືນີ້ແມ່ນໄດ້ຮັບການຮັບຮອງຈາກຄະນະກໍາມະທິການດ້ານຄວາມໝັ້ນຄົງດ້ານອາຫານໃນໂລກ ໃນວັນທີ 11 ພຶດສະພາ 2012. ສ້າງເປັນພາສາທາງການຂອງ ສປຊ ແລະ ສ້າງເປັນຮູບແບບ ເອກະສານຕ່າງໆຕາມເວບໄຊລຸ່ມນີ້ www.fao.org/nr/tenure/voluntary-guidelines/en/ |
| ນັກລາຍງານພິເສດກ່ຽວກັບການມີບ້ານຢູ່ທີ່ພໍພຽງທີ່ເປັນປັດໃຈພື້ນຖານຂອງສິດທິໃນການມີມາດຕະຖານຊີວິດການເປັນຢູ່ທີ່ພໍພຽງ | **ຫຼັກການ ແລະ ຄູ່ມືພື້ນຖານນີ້ແມ່ນກ່ຽວກັບບັນຫາການຂາດທີ່ຢູ່ອາໃສ ແລະ ການຖືກບັງຄັບໃຫ້ຍົກຍ້າຍ** (A/HRC/4/18, annex I)<br><br>ຫຼັກການ ແລະ ຄູ່ມືພື້ນຖານນີ້ແມ່ນໄດ້ໃຫ້ຄໍາແນະນໍາ ແລະ ຄໍາເຫັນກ່ຽວກັບວິທີເອົາເອກະສານທີ່ກ່າວມານີ້ໄປຈັດຕັ້ງປະຕິບັດເພື່ອໃຫ້ໄດ້ມາເຊິ່ງການເຄົາລົບສິດຕາມມາດຕະຖານສິດທິມະນຸດສາກົນຢ່າງສົມບູນ. ໃນນັ້ນມີຄໍາແນະນໍາກ່ຽວກັບມາດຕະການທີ່ຄວນປະຕິບັດ ແລະ ມາດຕະຖານສິດທິມະນຸດໂຕໃດທີ່ຄວນໄດ້ຮັບການປົກປ້ອງກ່ອນ, ພາຍລັງ, ຫຼື ລະຫວ່າງການໃຫ້ຍົກຍ້າຍ, ເຊັ່ນດຽວກັນກັບບັນດາຂໍ້ກໍານົດທີ່ກ່ຽວກັບສິດໃນການໄດ້ຮັບການປຽວຢາ ແລະ ໄດ້ຮັບການຊົດເຊີຍຕາມຄວາມເປັນຈິງແກ່ຄົນທີ່ໄດ້ຮັບຜົນກະທົບ.<br><br>ຫຼັກການແນະນໍາກ່ຽວກັບຄວາມໝັ້ນຄົງໃນການຄອບຄອງຂອງຄົນທຸກຍາກໃນເຂດຕົວເມືອງ (A/HRC/25/54)<br><br>ເອກະສານນີ້ແມ່ນໄດ້ໃຫ້ຄໍາແນະນໍາກ່ຽວກັບມາດຕະຖານສິດທິມະນຸດທີ່ມີຢູ່ແລະມັນກ່ຽວຂ້ອງກັນກັບຫາການຄອບຄອງທີ່ດິນ ແລະ ບ້ານຢູ່. ນອກນັ້ນມັນຍັງໃຫ້ຄໍາແນະນໍາແກ່ລັດ ແລະ ອົງການອື່ນໆໃນການແກ້ໄຂບັນຫາເພື່ອຮັບປະກັນການມີບ້ານຢູ່ທີ່ພໍພຽງແກ່ຄົນທຸກຍາກ ແລະ ຄົນດ້ອຍໂອກາດໃນເຂດຕົວເມືອງ ແລະ ຊານເມືອງ. |
| ຜູ້ແທນຂອງສະມັດຊາໃຫຍ່ກ່ຽວກັບສິດທິຂອງຄົນທີ່ຂາດທີ່ຢູ່ອາໃສພາຍໃນ/ນັກາຍງານພິເສດກ່ຽວກັບສິດຂອງຄົນທີ່ຂາດທີ່ຢູ່ອາໃສພາຍໃນ | **ຫຼັກການແນະນໍາກ່ຽວກັບບັນຫາການຂາດທີ່ຢູ່ອາໃສພາຍໃນ** (E/CN.4/1998/53/Add.2)<br><br>ຄູ່ມືແນະນໍາໄດ້ໃຫ້ຄວາມກະຈ່າງແຈ້ງວ່າ “ລັດທີ່ກ່ຽວຂ້ອງແມ່ນຢູ່ພາຍໃຕ້ພັນທະສະເພາະໃນການປົກປ້ອງຄົນພື້ນເມືອງ, ຊົນເຜົ່າ, ຊາວນາ, ຄົນລ້ຽງສັດພະເນຈອນ, ແລະ ກຸ່ມຄົນຕ່າງໆທີ່ບໍ່ມີທີ່ຢູ່ອາໃສນັ້ນໃຫ້ໄດ້ຮັບໂອກາດໃນການມີທີ່ດິນເພື່ອການຢູ່ອາໃສທີ່ພໍພຽງ” (ຫຼັກການທີ 9) |

**ອານຸຄະນະກຳມະທິການກ່ຽວກັບການສົ່ງເສີມ ແລະ ການປົກປ້ອງສິດທິມະນຸດ**

ຫຼັກການກ່ຽວກັບການຊົດເຊີຍຊັບສິນ ແລະ ບ້ານຢູ່ອາໃສແກ່ຜູ້ທີ່ຂາດທີ່ຢູ່ອາໃສ ແລະ ຜູ້ອົບພະຍົບ

("ຫຼັກການ Pinheiro")

ຫຼັກການດັ່ງກ່າວແມ່ນໄດ້ໃຫ້ຄຳແນະນຳທາງນະໂຍບາຍທີ່ກ່ຽວຂ້ອງກັບວິທີເພື່ອຮັບປະກັນສິດໃນການໄດ້ຮັບການຊົດເຊີຍໃນຊັບສິນ ແລະ ບ້ານຢູ່. ພາຍໃຕ້ຫຼັກການນີ້, ທຸກຄົນທີ່ຂາດທີ່ຢູ່ອາໃສ ແລະ ຜູ້ອົບພະຍົບແມ່ນຈະໄດ້ຮັບການປົກປ້ອງຈາກການຖືກບັງຄັບໃຫ້ຍ້າຍອອກຈາກບ້ານຢູ່, ທີ່ດິນ ແລະ/ຫຼື ຊັບສິນຕ່າງໆທີ່ບໍ່ເປັນທຳ ແລະ ຜິດກົດໝາຍ, ພ້ອມນັ້ນ ບຸກຄົນທີ່ກ່າວມາຂ້າງເທິງນັ້ນແມ່ນຍັງຈະໄດ້ຮັບສິດໃນການທົດແທນຊັບສິນ ຫຼື ໄດ້ຮັບການຊົດເຊີນທີ່ເໝາະສົມບໍ່ວ່າຈະຕົກໃນກໍລະນີທີ່ພວກເຂົາໄດ້ເດີນທາງກັບເຂດພູມລຳເນົາເດີມຫຼືບໍ່. ໃນຫຼັກການແມ່ນໄດ້ຮຽກຮ້ອງໃຫ້ລັດ ແລະ ອົງການຈັດຕັ້ງສາກົນ ແລະ ພາຍໃນຕ້ອງຮັບປະກັນການອໍກັບຄືນຖິ່ນຖານແບບສະມັດໃຈ ແລະ ມີການຊົດເຊີຍບ້ານ, ທີ່ດິນ ແລະ ຊັບສິນແບບເປັນທຳແກ່ເຂົາເຈົ້າໂດຍ ຜ່ານການປຶກສາຫາລືແບບມີສ່ວນຮ່ວມກັບຜູ້ທີ່ໄດ້ຮັບຜົນກະທົບ, ກຸ່ມຄົນ ແລະ ຊຸມຊົນທີ່ມີທັງແມ່ຍິງ, ຄົນພື້ນເມືອງ, ຊົນເຜົ່າ, ຜູ້ເຖົ້າ, ຄົນພິການ ແລະ ເດັກນ້ອຍ (ຫຼັກການທີ 14)

**ນັກລາຍງານພິເສດກ່ຽວກັບສິດໃນດ້ານການມີອາຫານທີ່ພໍພຽງ**

**ຫຼັກການແນະນຳກ່ຽວກັບການປະເມີນຜົນກະທົບໃນສິດທິມະນຸດຈາກບັນຫາການລົງທຶນ ແລະ ການຄ້າ** (A/HRC/19/59/Add.5)

ຫຼັກການທີ່ກ່າວມານີ້ແມ່ນໄດ້ໃຫ້ຄຳແນະນຳແກ່ລັດກ່ຽວກັບວິທີການໃນການຈັດຕັ້ງປະຕິບັດທີ່ດີທີ່ສຸດເພື່ອຮັບປະກັນວ່າການຄ້າ ແລະ ການລົງທຶນແມ່ນເປັນໄປຕາມພັນທະພາຍໃຕ້ກົນໄກສິດທິມະນຸດ.

**ການສຳປະທານ ແລະ ການເວນຄືນທີ່ດິນຂະໜາດໃຫຍ່: ເອກະສານລັກການ ແລະ ມາດຕະການລະດັບນ້ອຍໃນການແກ້ໄຂບັນຫາສິດທິມະນຸດ** (A/HRC/13/33/Add.2)

ນັກລາຍງານພິເສດກ່ຽວກັບສິດໃນດ້ານອາຫານໄດ້ກວດສອບຜົນກະທົບທີ່ເປັນໄປໄດ້ຕໍ່ກັບສິດໃນດ້ານອາຫານທີ່ພໍພຽງຈາກບັນຫາການສຳປະທານ ແລະ ເວນຄືນທີ່ດິນຂະໜາດໃຫຍ່ ພ້ອມທັງທົບທວນພັນທະທີ່ລັດຕ່າງໆມີພາຍໃຕ້ກົດໝາຍສິດທິມະນຸດສາກົນ. ນັກລາຍງານສະເໜີມາດຕະການ ແລະ ຫຼັກການໃຫ້ 11 ຂໍ້ທີ່ສຳຄັນເພື່ອຮັບປະກັນບັນຫາການເຈລະຈາທີ່ກ່ຽວຂ້ອງກັບການສຳປະທານທີ່ດິນ ແລະ ການເວນຄືນຕ່າງໆເຊິ່ງໃນນັ້ນລວມມີບັນຫາເລື່ອງຂອງການມີສ່ວນຮ່ວມຂອງຊຸມຊົນ.

**ຜູ້ແທນຂອງສະມັດຊາໃຫ້ກ່ຽວກັບສິດທິມະນຸດ ກັບ ບໍລິສັດຂ້າມຊາດ ແລະ ອື່ນໆ**

**ຫຼັກການແນະນຳກ່ຽວກັບທຸລະກິດ ແລະ ສິດທິມະນຸດ: ການຈັດຕັ້ງປະຕິບັດກອບຂອງ ສປຊ ວ່າດ້ວຍ "ການປົກປ້ອງ, ການເຄົາລົບ ແລະ ການປຽວຢາ"**

ຫຼັກການແນະນຳແມ່ນກ່ຽວຂ້ອງກັບສາມເສົາຫຼັກທີ່ສຳຄັນ: (1) ພັນທະຂອງລັດໃນການປ້ອງກັນການລະເມີດສິດທິມະນຸດຈາກບຸກຄົນທີສາມເຊິ່ງລວມມີບັນດາວິສະຫະກິດຕ່າງໆ, (2) ຄວາມຮັບຜິດຊອບຂອງບໍລິສັດໃນການເຄົາລົບສິດທິມະນຸດ ແລະ (3) ຄວາມຈຳເປັນໃນການເຂົ້າເຖິງຂະບວນການຍຸດຕິທຳ ແລະ ຂະບວນການປຽວຢາທົ່ວໄປຂອງຜູ້ທີ່ໄດ້ຮັບຜົນກະທົບຕ່າງໆ.

| | |
|---|---|
| **ວິສະຫະກິດທາງທຸລະກິດ** | ຜູ້ແທນພິເສດໄດ້ທົບທວນວ່າ "ຄວາມຈະແຈ້ງຂອງກົດໝາຍ ແລະ ນະໂຍບາຍໃນບາງດ້ານຕ້ອງມີ: ມີການກຳນົດບັນຫາການເຂົ້າເຖິງທີ່ດິນເຊິ່ງລວມມີສິດໃນການເປັນເຈົ້າຂອງ ຫຼື ນຳໃຊ້ທີ່ດິນ, ສິ່ງເຫຼົ່ານີ້ແມ່ນມີຄວາມສຳຄັນໃນການປົກປ້ອງທັງສິດຜູ້ເປັນເຈົ້າຂອງ ແລະ ສິດຂອງຜູ້ລົງທຶນຕ່າງໆ"<br><br>ໃນປີ 2011, ສະພາສິດທິມະນຸດໄດ້ກໍ່ຕັ້ງໜ່ວຍງານກ່ຽວກັບບັນຫາສິດທິມະນຸດ ກັບ ບໍລິສັດຂ້າມຊາດ ແລະ ບັນດາວິສະຫະກິດອື່ນໆເພື່ອໃຫ້ການສົ່ງເສີມການຈັດຕັ້ງປະຕິບັດ ແລະ ການເຜີຍແຜ່ຫຼັກການແນະນຳກ່ຽວກັບທຸລະກິດ ກັບບັນຫາສິດທິມະນຸດໃຫ້ມີຄວາມເຂົ້າໃຈ ແລະ ໄດ້ຮັບປະສິດທິພາບ. |

໑. ເອກະສານອື່ນໆ

ເອກະສານສະຫຼຸບຫຍໍ້

*No. 25 (Rev.1): Forced Evictions* (2014) (OHCHR and UN-Habitat).

*No. 21 (Rev.1): The Right to Adequate Housing* (2009) (OHCHR and UN-Habitat).

*No. 35: The Right to Water* (2010) (OHCHR, UN-Habitat and WHO).

*No. 34: The Right to Adequate Food* (2010) (OHCHR and FAO).

*No. 29: Human Rights Defenders: Protecting the Right to Defend Human Rights* (2004) (OHCHR).

ຂໍ້ມູນເພີ່ມເຕີມແມ່ນສາມາດເບິ່ງໄດ້ທີ່:

## Web-based toolkits

The Right to Adequate Housing Toolkit (OHCHR).

Toolkit on the Right to Food (OHCHR).

Governance of Tenure, Information Resources (FAO).

ເອກະສານອື່ນໆທີ່ກ່ຽວຂ້ອງ

*Respecting Free, Prior and Informed Consent: Practical Guidance for Governments, Companies, NGOs, Indigenous Peoples and Local Communities in Relation to Land Acquisition*, Governance of Tenure Technical Guide No. 3 (Rome, FAO, 2014).

*Realizing Women's Rights to Land and Other Productive Resources* (Geneva and New York, OHCHR and UN-Women, 2013).

*Governing Land for Women and Men: A Technical Guide to Support the Achievement of Responsible Gender-equitable Governance of land Tenure*, Governance of Tenure Technical Guide No. 1 (Rome, FAO, 2013).

*Improving Governance of Forest Tenure: A Practical Guide*, Governance of Tenure Technical Guide No. 2 (Rome, FAO, 2013).

*Implementing Improved Tenure Governance in Fisheries: A Practical Guide to Support the Implementation of the Voluntary Guidelines on the Responsible Governance of Tenure of Land, Fisheries and Forests in the Context of National Food Security* (preliminary version) (Rome, FAO, 2013).

Catarina de Albuquerque with Virginia Roaf, *On the Right Track: Good Practices in Realising the Rights to Water and Sanitation* (Lisbon, Special Rapporteur on the human right to safe drinking water and sanitation, 2012).

*Forced Evictions Assessment Questionnaire* (Geneva, OHCHR, 2011).

*Losing Your Home: Assessing the Impact of Eviction* (Nairobi, UN-Habitat and OHCHR, 2011).

*Monitoring Security of Tenure in Cities: People, Land and Policies* (Nairobi, UN-Habitat and Global Land Tool Network, 2011).

*IASC Operational Guidelines on the Protection of Persons in Situations of Natural Disasters* (Washington, D.C., Brookings–Bern Project on Internal Displacement, 2011).

*IASC Framework on Durable Solutions for Internally Displaced Persons* (Washington, D.C., Brookings Institution–University of Bern Project on Internal Displacement, 2010).

*Housing the Poor in Asian Cities: Land: A Crucial Element in Housing the Urban Poor*, Quick guides for policy-makers, No. 3 (Bangkok and Nairobi, Economic and Social Commission for Asia and the Pacific and UN-Habitat, 2008).

Global Land Tool Network, *Gendering Land Tools: Achieving Secure Tenure for Women and Men* (Nairobi, UN-Habitat, 2008).